# 1. ພາກສະເໜີ

## 1.1. ເປັນຫຍັງຈຶ່ງດຳເນີນການສຳຫຼວດສະຖິຕິກະສິກຳ ຢູ່ ສ.ປ.ປ.ລາວ

ຢູ່ ສ.ປ.ປ.ລາວ ປະຊາຊົນ ສ່ວນໃຫຍ່ ອາໄສຢູ່ຕາມຊົນນະບົດ ແລະ ການທຳມາຫາກິນ ກໍອາໄສການກະສິກຳ ເປັນຫຼັກ. ປັດຈຸບັນນີ້ລັດຖະບານ ຕ້ອງການຂໍ້ມູນສະຖິຕິລະອຽດ ແລະ ທັນສະພາບການ ຫຼາຍກວ່າທີ່ຜ່ານມາ ເພື່ອຊ່ວຍ ວາງແຜນພັດທະນາ ຂະແໜງ ກະສິກຳ ແລະ ປັບປຸງ ສະຫວັດດີການ ຂອງປະຊາຊົນໃຫ້ດີຂຶ້ນ.

ສະຖິຕິ ກະສິກຳ ທີ່ມີຢູ່ ປະຈຸບັນ ແມ່ນຂໍ້ມູນ ດ້ານເນື້ອທີ່, ຜົນຜະລິດເຂົາ ແລະບາງພືດຕົນຕໍ, ລວມທັງຈຳນວນສັດລ້ຽງ. ເຖິງແນວໃດກໍຕາມ, ຂໍ້ມູນຂ່າວສານ ດັ່ງກ່າວຍັງມີໜ້ອຍຫຼາຍເຊັ່ນ: ຈຳນວນຜູ້ປູກເຂົາແຕ່ລະຊະນິດ, ຈຳນວນ ຜູ້ປູກເຂົາ, ເນື້ອທີ່ ປູກພືດ ອື່ນໆ, ການນຳໃຊ້ ປັດໄຈການຜະລິດຕ່າງໆ, ການນຳໃຊ້ກົນຈັກກະສິກຳ, ຂະໜາດຂອງຟາມ, ແຮງງານເຮັດຟາມ ແລະ ໂຄງປະກອບອາຍຸຂອງສັດລ້ຽງ. ການສຳຫຼວດ ສະຖິຕິກະສິກຳໃນສົກປີ 1998/99 ຈະຊ່ວຍ ໃຫ້ ຂໍ້ມູນຂ່າວສານເຫຼົ່ານີ້.

ການສຳຫຼວດນີ້ແມ່ນພາກສ່ວນນຶ່ງຂອງໂຄງການສຳຫຼວດສະຖິຕິກະສິກຳຂອງໂລກ, ເຊິ່ງເລີ້ມມາແຕ່ປີ 1930. ໃນ ປະຈຸບັນມີ 120 ປະເທດເປັນສະມາຊິກຂອງໂຄງການນີ້; ມີຫຼາຍປະເທດສະມາຊິກ ທຸກໆ 10 ປີຈະຕ້ອງໄດ້ ດຳເນີນ ການ ສຳຫຼວດສະຖິຕິ ກະສິກຳ ຕໍ່ນຶ່ງຄັ້ງ. ການສຳຫຼວດ ສະຖິຕິກະສິກຳ ແມ່ນຄັ້ງທຳອິດ ໃນ ສປປ ລາວ. ເຊິ່ງກວມເອົາ ທຸກເມືອງ, ທຸກໆ ພືດ ແລະ ສັດລ້ຽງໃນຂອບເຂດທົ່ວປະເທດ ແລະເປັນວຽກງານນຶ່ງທີ່ກ້ວາງຂວາງ ແລະ ສຳຄັນທີ່ສຸດ ຂອງການເກັບກຳສະຖິຕິທີ່ບໍ່ເຄີຍມີມາກ່ອນ.

## 1.2. ໃຜເປັນຜູ້ດຳເນີນການສຳຫຼວດ

ການສຳຫຼວດ ສະຖິຕິກະສິກຳ ເປັນໂຄງການຮ່ວມ ລະຫວ່າງ ສູນສະຖິຕິແຫ່ງຊາດ ແລະ ກະຊວງກະສິກຳ-ປ່າໄມ້. ຄະນະຊີ້ນຳ ການສຳຫຼວດ ສະຖິຕິກະສິກຳ ປະກອບດ້ວຍຜູ້ຕາງໜ້າຂັ້ນສູງ ຂອງຄະນະກຳມະການແຜນການແຫ່ງລັດ ແລະກະຊວງ ກະສິກຳ-ປ່າໄມ້, ມີໜ້າທີ່ຊີ້ນຳລວມ. ຫ້ອງການສຳຫຼວດສະຖິຕິປະກອບດ້ວຍພະນັກງານວິຊາການຈາກ ສູນສະຖິຕິ ແຫ່ງຊາດ ແລະ ສະຖິຕິ ຂອງກະຊວງກະສິກຳ-ປ່າໄມ້ ຖືກສ້າງຕັ້ງຂຶ້ນເພື່ອຮັບຜິດຊອບໂຄງການ. ອົງການຊີດາ(ປະເທດ ສະວີເດັນ) ເປັນຜູ້ໃຫ້ທຶນ ແລະໃຫ້ການສະໜັບສະໜູນດ້ານ ວິຊາການ.

## 2. ໜ້າທີ່ ຂອງ ນັກເດີນສຳຫຼວດ

### 2.1. ການສຳຫຼວດຈະດຳເນີນແນວໃດ?.

ການສຳຫຼວດສະຖິຕິກະສິກຳ ໄດ້ລວບລວມຂໍ້ມູນກ່ຽວກັບພືດຕ່າງໆ ແລະ ສັດລ້ຽງ ຈາກ 800.000 ຄົວເຮືອນໃນຂອບເຂດ ທົ່ວປະເທດ.

ການເກັບກຳຂໍ້ມູນ ໄດ້ນຳໃຊ້ ສອງ ວິທີການ ໄປພ້ອມໆກັນ:

(ກ) ເກັບກຳຢູ່ບາງບ້ານ (ຊຶ່ງ ເອີ້ນວ່າ <u>ບ້ານຕົວແທນ),</u> ນັກເດີນສຳຫຼວດຈະໄດ້ເກັບກຳຂໍ້ມູນລະອຽດກ່ຽວກັບການປູກພືດ ແລະລ້ຽງສັດ ຈາກ<u>ບາງ ຄົວເຮືອນຕົວແທນ</u> ແລະ ພ້ອມດຽວກັນ ເກັບກຳບາງຂໍ້ມູນພື້ນຖານກ່ຽວກັບ ພືດ ແລະສັດລ້ຽງ ຈາກຄົວເຮືອນ ອື່ນໆ ທີ່ບໍ່ຖືກເລືອກເປັນຕົວແທນໃນບ້ານດຽວກັນ.

(ຂ) <u>ຢູ່ທຸກໆບ້ານທີ່ບໍ່ຖືກເລືອກເປັນຕົວແທນ,</u> ນັກເດີນສຳຫຼວດຈະໄດ້ເກັບກຳຂໍ້ມູນພື້ນຖານ ກ່ຽວກັບພືດ ແລະສັດລ້ຽງຈາກທຸກຄົວເຮືອນ, ຈະບໍ່ໄດ້ເກັບກຳຂໍ້ມູນຍ່ອຍລະອຽດ.

ການສຳຫຼວດເກັບກຳຂໍ້ມູນພວກເຮົາໄດ້ແບ່ງ ນັກເດີນສຳຫຼວດອອກເປັນ 2 ຈຸ. ຈຸທີ່ 1ຈະໄດ້ລົງໄປເກັບກຳຂໍ້ມູນສະເພາະ ບ້ານທີ່ຖືກເລືອກເປັນຕົວແທນຂອງການສຳຫຼວດ; ສ່ວນ ຈຸທີ່ 2 ນັ້ນ, ຈະໄດ້ລົງໄປເກັບກຳຂໍ້ມູນນຳທຸກ ໆ ບ້ານທີ່ບໍ່ຖືກເລືອກເປັນຕົວແທນ . ສົມມຸດວ່າ **<u>ທ່ານໄດ້ຖືກ ເລືອກເປັນນັກເດີນສຳຫຼວດ ເກັບກຳຂໍ້ມູນ ສະເພາະບ້ານຕົວແທນ.</u>**

ການສຳພາດເກັບກຳຂໍ້ມູນໃນບ້ານຕົວແທນຈະໄດ້ນຳໃຊ້ 2 ຕາຕະລາງຕນຕໍ: ໃບສອບຖາມລະອຽດ ( <u>ຕາຕະລາງ 5)</u> ບັນທຶກເອົາຂໍ້ມູນຍ່ອຍລະອຽດຈາກຄົວເຮືອນຕົວແທນ; ສ່ວນ <u>ໃບສອບຖາມລວມ (ຕາຕະລາງ 4)</u> ບັນທຶກເອົາຂໍ້ມູນພື້ນຖານ ຈາກຄົວເຮືອນອື່ນ ທີ່ບໍ່ຖືກເລືອກເປັນຕົວແທນພາຍໃນບ້ານດຽວກັນ.

### 2.2. ໜ້າວຽກຂອງນັກເດີນສຳຫຼວດ

ແຕ່ ລະ ຈຸ ເດີນສຳຫຼວດ ປະກອບດ້ວຍ 2 ຄົນ ແລະແຕ່ລະທີມງານຈະມີຜູ້ນຶ່ງເປັນຜູ້ຮັບຜິດຊອບ ແລະບັນຊາ ຈຸ. ຈຸຂອງ ທ່ານ ຈະໄດ້ຮັບຜິດຊອບເດີນສຳຫຼວດ ບ້ານຕ່າງໆ ແລະຈະໄດ້ລົງໄປເກັບກຳຂໍ້ມູນຢູ່ບ້ານຕ່າງໆເລົ່ານັ້ນ, ໜ້າທີ່ ຂອງ ທ່ານ ຕ້ອງກະກຽມໜ້າວຽກຕາມລຳດັບດັ່ງນີ້:

- ກະກຽມບັນຊີລາຍຊື່ຄົວເຮືອນທັງໝົດໃນບ້ານ, ໂດຍການຊ່ວຍເຫຼືອຂອງ ນາຍບ້ານ ຫຼືຄະນະບ້ານ.
- ເລືອກເອົາຄົວເຮືອນຕົວແທນ ມາສຳພາດດ້ວຍໃບສອບຖາມລະອຽດ.
- ລົງໄປສຳພາດຕົວຈິງແຕ່ລະຄົວເຮືອນຕົວແທນໂດຍໃຊ້ໃບສອບຖາມລະອຽດ (ຕາຕະລາງ 5)
- ໄປສຳພາດແຕ່ລະຄົວເຮືອນອື່ນໆທີ່ບໍ່ໄດ້ຖືກເລືອກເປັນຕົວແທນໂດຍໃຊ້ແບບສອບຖາມລວມ(ຕາຕະລາງ 4).

ບາງທີ ບາງບ້ານ ທ່ານ ອາດຈະໄດ້ເຮັດການວັດແທກເນື້ອທີ່. ຖ້າຫາກໄດ້ເຮັດ ທ່ານ ຕ້ອງໄດ້ຄັດເລືອກ ເອົາຄົວເຮືອນຕົວແທນ ແລະຈະໄດ້ໄປແທກແຕ່ລະຕອນດິນຂອງຄົວເຮືອນເຫຼົ່ານັ້ນ. ລາຍລະອຽດນັກກວດກາຂອງ ທ່ານຈະເປັນຜູ້ ບອກ ແລະແນະນຳຕື່ມ ວ່າບ້ານໃດຈະໄດ້ວັດແທກເນື້ອທີ່.

## 2.3 ແຕ່ລະ ຈຸ ເກັບກຳຂໍ້ມູນຈະເຮັດຫຍັງແດ່

ນັກເດີນສຳຫຼວດ 2 ຄົນ ຈະໄດ້ເຮັດວຽກຮ່ວມກັນໃນຈຸນີ້ງ. ພວກເຂົາຈະໄດ້ໄປແຕ່ລະບ້ານຮ່ວມກັນເພື່ອເຮັດວຽກລຸ່ມນີ້:

- ສ້າງບັນຊີລາຍຊື່ຄົວເຮືອນ ແລະ ຄັດເລືອກເອົາຄົວເຮືອນຕົວແທນ.
- ການສຳພາດຄົວເຮືອນອາດແຍກກັນເຮັດ:ບາງ ຈຸ ອາດ ມອບໝາຍ ໃຫ້ຜູ້ນື່ງສຳພາດຄົວເຮືອນ ດ້ວຍໃບສອບຖາມລະອຽດ(ຕາຕະລາງ 5) ສ່ວນຜູ້ນື່ງໃນຄະນະດຽວກັນອາດສຳພາດດ້ວຍໃບສອບຖາມລວມ (ຕາຕະລາງ 4). ຢູ່ບາງ ຈຸ ນັກເດີນສຳຫຼວດ ແຕ່ລະຄົນອາດຮັບຜິດຊອບ ທັງສອງໃບສອບຖາມ (ຕາຕະລາງເບີ 4 ແລະ5). ນຳໃຊ້ ທຸກ ວິທີທາງທີ່ເຫັນວ່າ ເໝາະສົມສຳລັບທີມງານຂອງໃຜລາວ.
- ຖ້າມີການວັດແທກເນື້ອທີ່ ນັກເດີນສຳຫຼວດ 2 ຄົນ ຕ້ອງຮ່ວມກັນເຮັດ (ການວັດແທກເນື້ອທີ່ ຕ້ອງໃຊ້ 2 ຄົນ).

ຢູ່ ພາກ ສະໜາມ, ສຳຄັນທີ່ສຸດຕ້ອງເຮັດວຽກເປັນທີມງານ. ຊ່ວຍເຫຼືອເຊິ່ງກັນ ແລະກັນ. ຖ້າຫາກ ມີ ຜູ້ໃດນື່ງໃນ ຈຸ ປະສົບບັນຫາຫຍຸ້ງຍາກ ຄວນຊ່ວຍເຫຼືອກັນ. ຖ້າຫາກທ່ານພົບບັນຫາບໍ່ເຂົາໃຈ ຄວນຖາມ ເພື່ອນນັກເດີນສຳຫຼວດ ຈຸ ດຽວ ກັນ. ເວລາແກ້ໄຂບັນຫາ 2 ຄົນ 2 ຫົວ ຈະດີກ່ວາ ຜູ້ດຽວເຮັດ.

## 2.4 ການຝຶກອົບຮົມໃຫ້ນັກເດີນສຳຫຼວດ :

ທ່ານ ເອງຈະໄດ້ເຂົາຮ່ວມ ການຝຶກອົບຮົມ 6 ມື້ ຢູ່ແຂວງ ກ່ອນ ດຳເນີນ ການສຳຫຼວດ ເກັບກຳ ຂໍ້ມູນ. ການ ຝຶກອົບຮົມ ຊຸດນີ້ ຈະ ແນະນຳໃຫ້ ທ່ານຮູ້ຈັກ ວິທີຂອງການເກັບກຳຂໍ້ມູນ. ສອງມື້ ຕໍ່ມາ ຈັດຝຶກອົບຮົມ ກ່ຽວກັບ ວິທີເຮັດການວັດແທກເນື້ອທີ່ ໃຫ້ ນັກເດີນສຳຫຼວດທີ່ຮັບຜິດຊອບໄປວັດແທກເນື້ອທີ່.

ການຝຶກອົບຮົມ ປະກອບດ້ວຍ: ການຝຶກອົບຮົມ ດ້ານທິດສະດີໃນຫ້ອງຮຽນ, ຝຶກຫັດການສຳພາດໃນຫ້ອງຮຽນ ແລະ ລົງຝຶກຫັດພາກສະໜາມ. ການຝຶກອົບຮົມຈະອີງໃສ່ປື້ມຄູ່ມືແນະນຳເປັນພື້ນຖານຝຶກສອນຕະຫຼອດໄລຍະການຝຶກອົບຮົມ.

## 2.5 ການກວດກາ ນັກເດີນສຳຫຼວດ

ຖ້າ ທ່ານ ເປັນ ນັກເດີນສຳຫຼວດ, ທ່ານ ຕ້ອງໄດ້ລາຍງານໃຫ້ນັກກວດກາ, ເຊິ່ງແມ່ນພະນັກງານຂອງພະແນກແຜນການ ແລະການຮ່ວມມື ແຂວງ (ສູນສະຖິຕິ) ຫຼື ພະແນກກະສິກຳ-ປ່າໄມ້ແຂວງ. ນັກກວດກາ ຂອງ ທ່ານ ຈະໄດ້ :

- ຊ່ວຍແນະນຳ ແລະຝຶກສອນໃນໄລຍະຝຶກອົບຮົມ;
- ບັນຊາ ທີມງານເດີນສຳຫຼວດຂອງທ່ານ;
- ແນະນຳລາຍຊື່ບ້ານ ສຳລັບທີມງານເດີນສຳຫຼວດຂອງທ່ານ;
- ສະໜອງເອກກະສານອັນຈຳເປັນໃຫ້ແກ່ການສຳຫຼວດ, ເຊັ່ນ:ແບບໃບສອບຖາມ, ອຸປະກອນພາກສະໜາມ..

- ຊ່ວຍເຫຼືອນັກເດີນສຳຫຼວດໃນເວລາການສຳຫຼວດມີບັນຫາ;
- ສັງລວມ ແລະມອບຮັບບັນດາໃບສອບຖາມທີ່ໄດ້ສຳພາດແລ້ວ;
- ກວດຄືນທຸກໆໃບສອບຖາມທີ່ໄດ້ສຳພາດແລ້ວ;
- ຈັດສົ່ງໃບສອບຖາມທີ່ໄດ້ສຳພາດແລ້ວຄືນໃຫ້ຫ້ອງການສຳຫຼວດສະຖິຕິ ທີ່ ວຽງຈັນ.

ນັກເດີນສຳຫຼວດ ຈະຕ້ອງພົບນັກກວດກາໃນໄລຍະອາທິດທຳອິດຂອງການເດີນສຳຫຼວດຢ່າງໜ້ອຍ 1ຄັ້ງເພື່ອສະເໜີ ຫຼືຂໍຄຳແນະນຳ ກ່ຽວກັບບັນຫາທີ່ພົບພໍ້. ຫຼັງຈາກນັ້ນ, ນັກເດີນສຳຫຼວດຈະຕ້ອງພົບກັບນັກກວດກາ ຢ່າງເປັນ ປົກກະຕິ ເພື່ອລາຍງານຜົນການຄືບໜ້າ ຂອງການສຳຫຼວດຂອງຕົນແລະພ້ອມກັນລົງໄປ ກວດເບິ່ງຕົວຈິງ.

ທຸກໆຄັ້ງ, ຖ້າຫາກມີບັນຫາໃນເວລາສຳຫຼວດ ນັກເດີນສຳຫຼວດຈະຕ້ອງຕິດຕໍ່ຫານັກກວດກາຂອງທ່ານທັນທີ ເພື່ອ ຂໍ ຄຳແນະນຳ ແລະຊ່ວຍເຫຼືອທ່ານໄດ້ທັນການ.

## 2.6 ຕາຕະລາງເວລາ ເຄື່ອນໄຫວ ຂອງການສຳຫຼວດ:

- 3 - 10 ກຸມພາ ປີ 1999 : ຝຶກອົບຮົມນັກເດີນສຳຫຼວດເກັບກຳຂໍ້ມູນ
- 11-12 ກຸມພາ ປີ1999 : ຝຶກອົບຮົມ ກ່ຽວກັບ ການວັດແທກເນື້ອທີ່ດິນ
- 22 ກຸມພາ -19 ມີນາ ປີ 1999 : ເກັບກຳຂໍ້ມູນ ຢູ່ພາກສະໜາມ.
- 22 ມີນາ ປີ 1999 : ມື້ກຳນົດສົ່ງຄືນ ໃບສອບຖາມ ເຖິງ ນັກກວດກາຂອງ ທ່ານ

ທ່ານເອງຄວນຍຶດໝັ້ນຕາຕະລາງ ເວລາ ຂ້າງ ເທິງນີ້. ຖ້າຫາກ ມີ ການ ຊັກຊ້າເວລາ ທີ່ກຳນົດໄວ້ຂ້າງເທິງນັ້ນ ອາດຈະເຮັດໃຫ້ການສຳຫຼວດບໍ່ທັນສະພາບການ.

## 2.7 ຕາຕະລາງ ແລະອຸປະກອນຮັບໃຊ້ການສຳຫຼວດຢູ່ພາກສະໜາມ

ນັກກວດກາຂອງທ່ານຈະເປັນຜູ້ມອບ ຕາຕະລາງ ແລະອຸປະກອນຮັບໃຊ້ ທີ່ຈຳເປັນສຳລັບການສຳຫຼວດດັ່ງຕໍ່ໄປນີ້ :

- ແຜນວາດຂອງແຕ່ລະບ້ານ ( ຖ້າຫາກມີ );
- ຕາຕະລາງຈົດກ່າຍບັນຊີຄົວເຮືອນ (ຕາຕະລາງ 2) ທີ່ຂຽນລະຫັດທີ່ຕັ້ງ ໄວ້ ຂ້າງເທິງ ຂອງແຕ່ລະບ້ານ;
- ມອບຕາຕະລາງ ການສຳຫຼວດ ເຊັ່ນ:
    - ຕາຕະລາງ 4 : ໃບສອບຖາມລວມ
    - ຕາຕະລາງ 5 : ໃບສອບຖາມລະອຽດ
    - ຕາຕະລາງ 8 : ພາກ (ຂ) ຄຳຖາມສືບຕໍ່
    - ຕາຕະລາງ 9 : ພາກ (ຄ) ຄຳຖາມສືບຕໍ່
    - ຕາຕະລາງ10 : ພາກ (ງ) ຄຳຖາມສືບຕໍ່
    - ຕາຕະລາງ11 : ພາກ (ຊ) ຄຳຖາມສືບຕໍ່
    - ຕາຕະລາງ 12: ພາກ (ຕ) ຄຳຖາມສືບຕໍ່

- ບິກຂຽນ, ເຈັ້ຍ ແລະກະດານຮອງຂຽນ

ຖ້າກໍລະນີ ທ່ານໄດ້ເຮັດການວັດແທກເນື້ອທີ່, ທ່ານຈະໄດ້ຮັບອຸປະກອນ ຕື່ມດັ່ງລຸ່ມນີ້:

- ມອບ ຕາຕະລາງ ເບີ 7 ເພື່ອບັນທຶກຂໍ້ມູນດ້ານເນື້ອທີ່
- ເຂັມຊີ້ທິດ
- ໄມ້ຫຼາວັດແທກ (ເຊືອກແມັດກໍ້)
- ຈັກຄິດໄລ່
- ຫຼັກໄມ້ໄຜ່
- ເຄື່ອງວັດແທກຄວາມຄ້ອຍຊັນ

## 2.8 ການສ້າງແຜນການເກັບກຳຂໍ້ມູນ:

ໃນໄລຍະການຝຶກອົບຮົມໃຫ້ນັກເດີນສຳຫຼວດ, ນັກກວດກາຂອງທ່ານຈະກຳນົດແຜນວຽກໃຫ້ແຕ່ລະທີມງານເດີນສຳຫຼວດ. ແຜນວຽກນີ້ປະກອບດ້ວຍລາຍຊື່ບ້ານຕ່າງໆ.ກ່ອນຈະລົງພາກສະໜາມ, ນັກເດີນສຳຫຼວດຈະຕ້ອງໄດ້ສ້າງແຜນການດຳເນີນງານຂອງຕົນ ເພື່ອໃຫ້ແນ່ໃຈວ່າຕົນເອງຈະເຮັດໄດ້ທັນກັບເວລາທີ່ໄດ້ກຳນົດໄວ້. ຊອກທີ່ຕັ້ງ ຂອງບ້ານ, ທ່ານຈະເດີນທາງໄປ ດ້ວຍ ວິທີໃດ, ຈຳນວນຄົວເຮືອນມີຫຼາຍປານໃດໃນແຕ່ລະບ້ານ, ແລະໃຊ້ເວລາສຳຫຼັບການເດີນທາງເທົ່າໃດສຳລັບໄປຫາແຕ່ລະບ້ານ. ສິ່ງສຳຄັນຄວນເຂົາໃຈວ່າ, ການໄປພົບຄົວເຮືອນແຕ່ລະບ້ານ ເປັນສິ່ງທີ່ບໍ່ງ່າຍ ໂດຍສະເພາະບ້ານທ່າງໄກສອກຫຼີກ. ອີກອັນນຶ່ງ, ການວັດແທກເນື້ອທີ່ດິນໃຊ້ເວລາດົນ, ໂດຍສະເພາະ ໄລຍະທ່າງຂອງແຕ່ລະຕອນດິນ ຢູ່ຫ່າງໄກກັນ. ອັນນີ້ຕ້ອງກະກຽມລະອຽດໃນການ ປະຕິບັດວຽກໃນແຕ່ລະວັນ ແລະຕ້ອງປຶກສາຫາລື ແລະສ້າງແຜນຮ່ວມກັບນັກກວດກາ ຂອງທ່ານເພື່ອນັດໝາຍວັນເວລາພົບປະກັນ.

## 2.9 ການສົ່ງຄືນ ອຸປະກອນ ແລະຕາຕະລາງ ການສຳຫຼວດ:

ທຸກຕາຕະລາງສອບຖາມທີ່ໄດ້ສຳພາດຄົບຖ້ວນແລ້ວ ຕ້ອງສົ່ງໃຫ້ ນັກກວດກາ ຂອງທ່ານໄວເທົ່າທີ່ຈະໄວໄດ້. ເຖີງແນວໃດກໍຕາມ, ຕາຕະລາງສອບຖາມທີ່ສຳພາດໃນແຕ່ລະບ້ານແລ້ວຈະຕ້ອງຢູ່ໃນຊຸດດຽວກັນ. ບໍ່ຄວນສົ່ງເອກະສານທີ່ສຳພາດແລ້ວສ່ວນໃດສ່ວນນຶ່ງຂອງບ້ານໃຫ້ນັກກວດກາ.

ອີກບັນຫານຶ່ງ, ຫຼັງຈາກນັກເດີນສຳຫຼວດສຳເລັດການສຳຫຼວດແລ້ວ, ທ່ານຈະຕ້ອງສົ່ງຄືນທຸກໆອຸປະກອນແລະຕາຕະລາງຕ່າງໆທີ່ຈັດກ່າຍຄົບຖ້ວນ(ລວມທັງຕາຕະລາງເປົ່າ) ທີ່ນັກກວດກາເອົາໃຫ້ນັ້ນຄືນໃຫ້ແກ່ນັກກວດກາຄົບຕາມຈຳນວນເດີມ. ຖ້າຕົກເຮັ່ຍເສຍຫາຍຈະຕ້ອງໄດ້ຮັບຜິດຊອບທຸກປະການ.

## 3. ຄຳສັບ ແລະ ນິຍາມ ທີ່ສຳຄັນ

### 3.1 ຄົວເຮືອນ

ຫົວໜ່ວຍຄົວເຮືອນ ມີຄວາມສຳຄັນ ສຳລັບການສຳຫຼວດ ຍ້ອນສອງເຫດຜົນ: ເຫດຜົນທີ່ນຶ່ງ, ລາຍຊື່ ຄົວເຮືອນ ທີ່ກຽມໄວ້ ແລ້ວໃນແຕ່ລະບ້ານ ແມ່ນໃຊ້ສຳລັບຈຳແນກໃຫ້ຮູ້ ຜູ້ຄອບຄອງເຮັດກະສິກຳ ເພື່ອມາສຳພາດ. ເຫດຜົນທີ່ສອງ, ຂໍ້ມູນທີ່ສຳຄັນ ກ່ຽວກັບ ລັກສະນະຂອງຄົວເຮືອນ ຈະໄດ້ເກັບກຳໃນການສຳຫຼວດ.

<u>**ຄົວເຮືອນ**</u> ແມ່ນຄົນນຶ່ງ ຫຼືຫຼາຍຄົນອາໄສ ແລະຢູ່ຮ່ວມກັນເປັນຫຼັກ, ຈັດແຈງຊອກຫາອາຫານຮ່ວມກັນ, ໃຊ້ສອຍສິ່ງຂອງທີ່ຈຳເປັນຮ່ວມກັນ ແລະກິດຈະກຳເຄື່ອນໄຫວຮ່ວມກັນໃນຊີວິດປະຈຳວັນ. ໂດຍປົກກະຕິແລ້ວ, ຄົວເຮືອນປະກອບດ້ວຍບຸກຄົນທີ່ມີລາຍຊື່ໃນປື້ມສຳມະໂນຄົວ. ຄົວເຮືອນມີຄວາມໝາຍຕາງຈາກ ຄອບຄົວ; ສົມມຸດວ່າ ລູກສາວ/ລູກຊາຍອາໄສຢູ່ຢ່າງເອກະລາດຈາກພໍ່ແມ່ ໃຫ້ຖືວ່າໄດ້ແຍກເປັນຄົວເຮືອນນຶ່ງແລ້ວ.

ໂດຍປົກກະຕິແລ້ວ ສາມະຊິກຄົວເຮືອນທຸກຄົນ ຈະອາໄສຢູ່ ເຮືອນຫຼັງດຽວກັນ, ແຕ່ບາງຄັ້ງອາດອາໄສຢູ່ຫຼາຍຫຼັງຄາ ເຮືອນກໍໄດ້. ໂດຍທົ່ວໄປ ແລ້ວ ຄົວເຮືອນ ປະກອບດ້ວຍຍາດຕິພີ່ນ້ອງ(ຜົວ, ເມຍ, ລູກ, ຜູ້ອື່ນໆ)ແຕ່ບາງຄັ້ງ ລວມມີ ບຸກຄົນອື່ນ ທີ່ບໍ່ແມ່ນຍາດຕິພີ່ນ້ອງ (ເຊັ່ນ ຂໍອາໄສຢູ່ເຮືອນ ຫຼື ແຮງງານມາຮັບຈ້າງ...) ສາມາດເອີ້ນເປັນຄົວເຮືອນດຽວ.

**ຄົວເຮືອນລວມໝູ່ຈະບໍ່ໄດ້ຈົດນັບເຂົາໃນການສຳຫຼວດ.** ຄົວເຮືອນລວມໝູ່ ແມ່ນ ຄົວເຮືອນ ທີ່ອາໄສຢູ່ຫໍພັກລວມ ຂອງ ບໍລິສັດ, ໂຮງງານ, ໂຮງຮຽນ, ວັດ, ໂຮງໝໍ ແລະ ອື່ນໆ.

ຂໍ້ມູນອື່ນໆກ່ຽວກັບການກຳນົດຄົວເຮືອນ ເພື່ອຂື້ນບັນຊີລາຍຊື່ ໃນການສຳຫຼວດ ຈະເວົາລະອຽດ ຢູ່ໃນຂໍ້ 4.4.ຂໍ້ມູນອື່ນໆ ກ່ຽວກັບ ລັກສະນະຂອງຄົວເຮືອນ ຈະເວົາໃນຂໍ້ 6.4 ແລະ 7.12.

### 3.2 ການຄອບຄອງເຮັດກະສິກຳ:

ຢູ່ໃນການສຳຫຼວດສະຖິຕິກະສິກຳ, ທ່ານຈະໄດ້ຈົດບັນຊີ<u>ລາຍຊື່ຄົວເຮືອນ</u>ທັງໝົດພາຍໃນບ້ານ ໃນຕາຕະລາງ 2, ແຕ່ວ່າ ທ່ານ ຈະໄດ້ຈົດກ່າຍຂໍ້ມູນ ໃສ່ໃບສອບຖາມ (ຕາຕະລາງ 4 ຫຼື ຕາຕະລາງ 5) ສະເພາະ ແຕ່ຫົວໜ່ວຍການຄອບຄອງເຮັດກະສິກຳ.

ການຄອບຄອງເຮັດ ກະສິກຳ ( ມັກເອີ້ນສັ້ນວ່າ - ການຄອບຄອງ) ຊຶ່ງໃຫ້ຄຳນິຍາມວ່າ :

<u>ແມ່ນຫົວໜ່ວຍເສດຖະກິດ ຂອງການຜະລິດ ກະສິກຳ ພາຍໃຕ້ການຈັດການ/ຄຸ້ມຄອງດ່ຽວ, ແລະ ປະກອບດ້ວຍ ການລ້ຽງສັດ ແລະການນຳໃຊ້ດິນກະສິກຳ ໂດຍບໍ່ຄຳນຶ່ງເຖິງຮູບແບບການເປັນເຈາຂອງ.</u>

ໂດຍທົ່ວໄປແລ້ວ, ການຄອບຄອງເຮັດກະສິກຳ ແມ່ນ ຄົວເຮືອນ, ແຕ່ບາງຄັ້ງມັນອາດ ແມ່ນ ກິດຈະກຳສ່ວນນຶ່ງ ຂອງ ຄົວເຮືອນ ຫຼື ຫຸ້ນສ່ວນລະຫວ່າງຄົວເຮືອນ. ( ການຄອບຄອງເຮັດກະສິກຳ ມີຫຼາຍຮູບແບບເຊັ່ນ: ບໍລິສັດ ຕ່າງ ໆ, ນິຄົມ ຫຼື ສະຖານີ ຄນຄວ້າທົດລອງ ທີ່ຂື້ນກັບ ລັດຖະບານ - ວຽກງານເດີນສຳຫຼວດບັນຫານີ້ ຈະແມ່ນ ນັກກວດກາຂອງ ທ່ານ ຈະເປັນຜູ້ຮັບຜິດຊອບ).

ມັນອາດມີ ສອງກໍລະນີ ຊຶ່ງວ່າ ການຄອບຄອງເຮັດກະສິກຳ ມີຄວາມໝາຍແຕກຕ່າງຈາກ ຄົວເຮືອນ.

(ກ) <u>ຖ້າວ່າ ມີສາມະຊິກໃນຄົວເຮືອນຜູ້ໃດຜູ້ນຶ່ງ ໄດ້ນຳໃຊ້ດິນປູກຝັງ ຫຼືລ້ຽງສັດ ຢ່າງເອກະລາດ ໂດຍບໍ່ມີ ສ່ວນ ກ່ຽວຂ້ອງ ກັບ ຄົວເຮືອນ.</u>

ກໍລະນີນີ້, ມີ ສອງການຄອບຄອງເຮັດກະສິກຳໃນຄົວເຮືອນ. ບັນຫານີ້ອາດພົບເຫັນ ຄື:

- ລູກຊາຍ ຫຼື ລູກສາວ ອາໄສຢູ່ໃນຄົວເຮືອນໄດ້ນຳໃຊ້ດິນກະສິກຳ ຢ່າງເອກະລາດ ຈາກພໍ່ແມ່( ກິດຈະກຳການເຄື່ອນໄຫວກະສິກຳຂອງພໍ່ແມ່ ຕໍ່ດິນປູກຝັງ ຖືເປັນ ການຄອບຄອງນຶ່ງ, ແລະກິດຈະກຳເຄື່ອນໄຫວດ້ານກະສິກຳ ຂອງ ລູກຊາຍ/ລູກສາວ ຖືເປັນການຄອບຄອງນຶ່ງອີກຕ່າງຫາກ).
- ຊາວກະສິກອນຮັບຈ້າງເຮັດວຽກກະສິກຳໃນດິນຂອງຄົວເຮືອນນຶ່ງໃນລະດູຝົນ, ແຕ່ໃນລະດູແລ້ງລາວພັດໄດ້ປູກພືດບາງຢ່າງ ຂອງລາວເອງໃນດິນຂອງຄົວເຮືອນນັ້ນ. (ຄົວເຮືອນທີ່ມີດິນນີ້ແມ່ນຖືວ່າເປັນການຄອບຄອງ ເຮັດກະສິກຳອັນນຶ່ງ. ສ່ວນຊາວກະສິກອນຮັບຈ້າງທີ່ນຳໃຊ້ດິນຂອງຄົວເຮືອນໃນລະດູແລ້ງ ຖືເປັນ ການຄອບຄອງ ອັນນຶ່ງຕື່ມອີກ).

<u>ຕົວຢ່າງ:</u>

ຄອບຄົວທິບສະຫວັນມີສາມະຊິກນຳກັນທັງໝົດ 9 ຄົນ ລວມ ທັງລູກຊາຍທີ່ມີຊື່ວ່າ ໂອແກ້ວ, ເມັຍຂອງໂອແກ້ວມີລູກ 2 ຄົນ. ຄອບຄົວທິບສະຫວັນ ໄດ້ນຳໃຊ້ດິນກະສິກຳ 2 ເຮັກຕາ ແລະລ້ຽງໝູ 10 ໂຕ. ສ່ວນໂອແກ້ວຊຶ່ງເປັນລູກຊາຍ ມີດິນຂອງຕົນເອງ 0,5 ເຮັກຕາ ຊຶ່ງບໍ່ແມ່ນຂອງພໍ່ແມ່ລາວ ແລະໂອແກ້ວບໍ່ໄດ້ລ້ຽງສັດ. ກໍລະນີນີ້, ຕາຕະລາງສອບຖາມ ຕ້ອງໄດ້ນຳໃຊ້ 2 ຊຸດ: ຕາຕະລາງຂອງ ຄອບຄົວທິບສະຫວັນ ຈະມີສາມະຊິກໃນຄົວເຮືອນ 5 ຄົນ (ບໍ່ໄດ້ນັບເອົາຄົວເຮືອນ ໂອແກ້ວ ພ້ອມດ້ວຍຄອບຄົວ), ໄດ້ລ້ຽງໝູ 10 ໂຕ, ແລະລາຍການປູກພືດຊະນິດຕ່າງໆໃນເນື້ອທີ່ 2 ເຮັກຕາ; ຕາຕະລາງສອບຖາມ ຂອງ ໂອແກ້ວ ຈະມີສາມະຊິກ 4 ຄົນ, ບໍ່ມີສັດລ້ຽງ, ແລະ ມີພືດປູກໃນເນື້ອທີ່ 0,5 ເຮັກຕາ.

(ຂ) <u>ຖ້າຄົວເຮືອນຫາກໄດ້ນຳໃຊ້ດິນກະສິກຳ ຫຼືລ້ຽງສັດ ໃນຮູບແບບ ຮ່ວມກັບຄົວເຮືອນອື່ນ (ມີຫຸ້ນສ່ວນຮ່ວມກັບຄົວເຮືອນອື່ນ).</u>

ກໍລະນີນີ້, ການເຮັດຮ່ວມກັນ (ມີຫຸ້ນສ່ວນຮ່ວມກັນ) ຖືວ່າ ແມ່ນ ນຶ່ງ ການຄອບຄອງເຮັດກະສິກຳ. ຄົວເຮືອນເລົ່ານັ້ນ ຫາກນຳໃຊ້ດິນ ຫຼື ລ້ຽງສັດໃຫ້ຕົນເອງ ຖືວ່າເປັນການຄອບຄອງເຮັດກະສິກຳ ນຶ່ງ ຕ່າງຫາກອີກ.

<u>ການເຮັດຮ່ວມກັນ(ຫຸ້ນສ່ວນຮ່ວມກັນ) ກັບ ຄົວເຮືອນ</u> ອື່ນ ແມ່ນການຕົກລົງລະຫວ່າງ ສອງ (ຫຼືຫຼາຍ) ຄົວເຮືອນທີ່ເອົາດິນ ແລະ/ຫຼື ສັດລ້ຽງມາເຮັດຮ່ວມກັນ ບັນຊາ ແລະນຳໃຊ້ໂດຍຄົວເຮືອນ. ມັນມີຄວາມໝາຍວ່າ ແຕ່ລະຄົວເຮືອນ ໄດ້ເຂົ້າຮ່ວມໃນການຕັດສິນບັນຫາ ກ່ຽວກັບການນຳໃຊ້ດິນ/ລ້ຽງສັດ, ບາງຄັ້ງຄາວອາດຈ້າງຄົນມາຄຸ້ມຄອງບັນຊາການຜະລິດ. ປົກກະຕິແລ້ວ, ທັງສອງກໍລະນີ ມີຫຸ້ນສ່ວນຮ່ວມກັນ ເປັນຂອງຕົນເອງ/ເຊົ່າ ດິນ/ສັດລ້ຽງ ຫຼື ການເອົາດິນ/ສັດລ້ຽງ ມາຫຸ້ນສ່ວນນຳກັນ ຖືວ່າ ເປັນ ການເຮັດຮ່ວມກັນ.

ການເຮັດຮ່ວມກັນ ອາດຈະບໍ່ຄ່ອຍມີຫຼາຍປານໃດ. ການຈັດແຈງ/ຈັດຕັ້ງ ຊ່ວຍເຫຼືອຮ່ວມກັນຂອງສາມະຊິກໃນຄົວເຮືອນ ບໍ່ແມ່ນ ການເຮັດຮ່ວມກັນ (ມີຫຸ້ນສ່ວນຮ່ວມກັນເຮັດ) (Partnership). ຖ້າສົມມຸດວ່າ ມີລູກທີ່ອາໄສຢູ່ຕ່າງຫາກ ມາຊ່ວຍເປັນແຮງງານ ເຮັດການຜະລິດ ກະສິກຳ ກໍລະນີ ນີ້ຖືວ່າ ເປັນແຮງງານຂ້າງນອກ. ກໍລະນີທີ່ສາມາດເອີ້ນວ່າ ເຮັດຮ່ວມກັນ ຕ້ອງແມ່ນ ຊາວກະສິກອນ ແລະລູກຊາຍ/ລູກສາວຂອງລາວ ເອົາດິນມາຮ່ວມກັນເຮັດ ແລະບັນຊາການຜະລິດຮ່ວມກັນ.

**ຍົກຕົວຢ່າງ:**

ທ້າວບຸນມີ ຫຸ້ນສ່ວນເຮັດຮ່ວມກັບ ນາງ ສຸກສີ ໃນເນື້ອທີ່ 2 ເຮັກຕາ. ນາງສຸກສີ ບໍ່ມີດິນອື່ນ ຫຼືບໍ່ມີສັດລ້ຽງ, ແຕ່

ທ້າວບຸນມີ ໄດ້ລ້ຽງໄກ່50 ໂຕ ຊຶ່ງເປັນຂອງສ່ວນຕົວລາວເອງ ແລະບໍ່ມີດິນອື່ນອີກ. ກໍລະນີນີ້ ການສຳພາດ ຕ້ອງນຳໃຊ້ 3 ຕາຕະລາງ ສອບຖາມ: ຕາຕະລາງສຳລັບຄົວເຮືອນ ທ້າວບຸນມີ ຈະເຫັນວ່າມີໄກ່ 50 ໂຕ ແຕ່ບໍ່ມີດິນອື່ນ; ຕາຕະລາງສຳລັບນາງສຸກສີ ຈະເຫັນວ່າ ບໍ່ມີດິນອື່ນ ແລະບໍ່ມີສັດລ້ຽງ; ແລະສຳລັບການເຮັດຮ່ວມກັນ ໃນຕາຕະລາງສອບຖາມຈະເຫັນລາຍການພືດຊະນິດຕ່າງໆ ທີ່ປູກ ໃນເນື້ອທີ່ດິນ 2 ເຮັກຕາ.

ບ່ອນອີງໃຫ້ເບິ່ງ ຂໍ້ 6.2 ແລະ 7.2 ສຳລັບລາຍລະອຽດຕ່າງໆ ກ່ຽວກັບ ສະພາບຄົວເຮືອນຕ່າງໆຈາກ ການຄອບຄອງເຮັດກະສິກຳ.

ສະໂນດທີ່ດິນ ທີ່ບັນທຶກ ອອກຊື່ ຫຼາຍຄົນ ຂອງສາມະຊິກໃນຄົວເຮືອນບໍ່ມີຄວາມໝາຍສະເໝີໄປວ່າ ມີ ຫຼາຍກ່ວານຶ່ງການຄອບຄອງເຮັດກະສິກຳໃນຄົວເຮືອນ. ມັກເກີດມີກໍລະນີທົ່ວໄປ, ດິນຂອງຄົວເຮືອນທັງໝົດໄດ້ຖືກນຳໃຊ້ພາຍໄຕ້ ຫົວໜ່ວຍດ່ຽວ, ເຮົາເອີ້ນວ່າ ນຶ່ງຫົວໜ່ວຍການຄອບຄອງເຮັດກະສິກຳ. ການຄຸ້ມຄອງບັນຊາດ່ຽວ ໝາຍວ່າ ຄຸ້ມນຳໃຊ້ດິນເປັນອັນດຽວ ມີການຜະລິດອັນດຽວກັນ ເຊັ່ນ ແຮງງານ, ກົນຈັກກະສິກຳ, ເຄື່ອງມື ແລະສັດລາກແກ່.

ສຳລັບເປົາໝາຍຂອງການສຳຫຼວດສະຖິຕິກະສິກຳຂອງລາວເຮົາ, ການຄອບຄອງເຮັດກະສິກຳໄດ້ກຳນົດ ເງື່ອນໄຂຢ່າງໜ້ອຍ 1 ໃນ 2 ເງື່ອນໄຂ ຄື:

- ໄດ້ນຳໃຊ້ດິນກະສິກຳ ແຕ່ 0,02 ຮຕ ຫຼື ຫຼາຍກ່ວານັ້ນ; ຫຼື
- ໄດ້ລ້ຽງ ງົວ/ຄວາຍ 2 ໂຕຂຶ້ນໄປ, ຫຼື ໝູ/ແກະ/ແບ້ 5 ໂຕຂຶ້ນໄປ, ຫຼື ສັດປີກ 20 ໂຕຂຶ້ນໄປ.

ການຄອບຄອງເຮັດກະສິກຳປົກກະຕິປະກອບດ້ວຍ ຕອນດິນ 1 ຕອນ ຫຼືຫຼາຍກ່ວາ (ໃຫ້ເບິ່ງຂໍ້ 3.5). ດິນທັງໝົດອາດຢູ່ບ້ານດຽວ, ຫຼື ອາດມີຢູ່ຫຼາຍກ່ວາ 1ບ້ານ. ບາງຄັ້ງຜູ້ຄອບຄອງເຮັດກະສິກຳອາດມີແຕ່ສັດລ້ຽງ ພັດບໍ່ມີດິນກໍ່ໄດ້.

ນຳໃຊ້ດິນ ມີຄວາມໝາຍວ່າ ມີການກວດກາຄຸ້ມຄອງ ການປູກພືດ ໃນດິນເລົ່ານັ້ນ. ດ້ວຍເຫດນີ້, ການຄອບຄອງໄດ້ກຳນົດ ນິຍາມ ກ່ຽວຂ້ອງວ່າ ໃຜ ເປັນປູກພືດໃນດິນ, ແທນທີ່ຈະຖາມວ່າ ໃຜເປັນກຳມະສິດທີ່ດິນ. ສົມມຸດວ່າ ທ້າວ ສົມບູນມີດິນເປັນຂອງຕົນເອງ 1,25 ເຮັກຕາ ໃນດິນນີ້ ສົມບູນ ເອົາໃຫ້ ນາງ ວິວັນ ເຊົ່າ, ໝາຍວ່າ ນາງວິວັນເປັນຜູ້ນຳໃຊ້ດິນ ຂອງ ທ້າວ ສົມບູນ. ຖ້າ ທ້າວສົມບູນ ໄດ້ປູກພືດໃນ ເນື້ອທີ່ 0,85 ເຮັກຕາ ແລະສ່ວນເຫຼືອ 0,50 ເຮັກຕາ ໃຫ້ ນາງວິວັນເຊົ່າ, ສະຫຼຸບວ່າ ທ້າວສົມບູນໄດ້ນຳໃຊ້ດິນ 0,85 ແລະນາງວິວັນນຳໃຊ້ດິນ 0,50 ເຮັກຕາ, ໃນນີ້ ການຄອບຄອງເຮັດກະສິກຳ ປະກົດມີ 2 ການຄອບຄອງ. ຕ້ອງລະມັດລະວັງ ກໍລະນີທີ່ວ່າ ມີຄົນມາຮັບໃຊ້ເຮັດວຽກ, ແຕ່ພາຍໄຕ້ການຄຸ້ມຄອງຂອງເຈົາຂອງດິນ; ບັນຫານີ້, ຜູ້ເຈົາຂອງດິນ ເປັນຜູ້ຄອບຄອງ ແລະຜູ້ມາຮັບໃຊ້ວຽກງານການຜະລິດໃນດິນ ຖືເປັນ ແຮງງານ.

## 3.3 ດິນກະສິກຳ:

ດິນກະສິກຳ ແມ່ນດິນທັງໝົດ ທີ່ນຳໃຊ້ໂດຍ ຫົວໜ່ວຍການຄອບຄອງ ໃນເງື່ອນໄຂໃດນຶ່ງລຸ່ມນີ້:

- ນຳໃຊ້ປູກພືດໃນລະດູຝົນປີ 1998 ແລະ ລະດູແລ້ງປີ 1998/1999 ຫຼື
- ດິນ ປະເປັນເຮື້ອ ຊົ່ວຄາວ(ເປົ່າຫວ່າງຊົ່ວຄ່າວ) ລະຫວ່າງລະດູຝົນປີ 1998 ແລະ ລະດູແລ້ງປີ 1998/1999

ດິນກະສິກຳ ລວມເອົາດິນ ທີ່ນຳໃຊ້ ເພື່ອປະໂຫຍດໃນວຽກງານກະສິກຳ, ເຊັ່ນດິນນຳໃຊ້ປູກພືດຕ່າງໆ, ເຊັ່ນວ່າ ເນື້ອທີ່ສວນຜັກໃນຂອບເຂດບ້ານ, ລຽບຕາມແມ່ນ້ຳລຳເຊ, ດິນເຂດນ້ຳຖ້ວມ, ອື່ນໆ. ມັນລວມທັງດິນປູກຕົ້ນໄມ້ໃຫ້ໝາກ ແລະພືດຢືນຕົ້ນອື່ນໆ.

<u>**ດິນປະເປັນເຮື້ອ ຊົ່ວຄາວ:**</u> ໝາຍຄວາມວ່າ ການຄອບຄອງ ນີ້ໄດ້ ປູກພືດ ໃນດິນຕອນ ນັ້ນຢ່າງເປັນປົກກະຕິ, ແຕ່ວ່າໃນລະຫວ່າງ ລະດູຝົນປີ 1998 ແລະ ລະດູແລ້ງປີ1998/1999 ຫຼື ດິນນີ້ບໍ່ໄດ້ທຳການເພາະປູກ ປະເປັນເຮື້ອຍ້ອນວ່າ ຊາວນາບໍ່ສາມາດປູກໄດ້ໃນເງື່ອນໄຂນ້ຳຖ້ວມ, ແຫ້ງແລ້ງ, ບໍ່ມີຄວາມສາມາດຊື້ແນວປູກ, ຫຼື ຂາດແຄນແຮງງານ. ດິນທີ່ປະປ່ອຍບໍ່ນຳໃຊ້ໄດ້ຫຼາຍປີຜ່ານມາແລ້ວ ຫຼື ຍົກເລີກການຖາງປ່າເຮັດໄຮ່ຢ່າງຖາວອນ ບໍ່ໃຫ້ ຖືເອົາດິນໄຮ່ນັ້ນ ເປັນ ດິນປະເປັນເຮື້ອ (ຖ້າປະເປັນເຮື້ອ ບໍ່ໃຫ້ກາຍ 5ປີ).

## 3.4 ຜູ້ຄອບຄອງເຮັດກະສິກຳ:

ຜູ້ຄອບຄອງເຮັດກະສິກຳ ແມ່ນຄົນທີ່ ຊີ້ນຳ , ບັນຊາ ແລະກວດກາ ທຸກການເຄື່ອນໄຫວ ຂອງ ຫົວໜ່ວຍການ ຄອບຄອງ. ລາວອາດຈະຄອບຄອງ ດ້ວຍຕົວລາວເອງ ຫຼື ເປັນຕົວແທນຂອງວຽກງານນີ້ດ້ວຍຮູບການຖືກຈ້າງມາເປັນ ຜູ້ບໍລິຫານ. ສຳລັບຜູ້ຄອບຄອງ ເຮັດ ກະສິກຳ ຕາມປົກກະຕິ ບໍ່ແມ່ນຫົວໜ້າຄົວເຮືອນສະເໝີໄປ.

1. ຄົນເຝົ້າສວນ ທີ່ໄດ້ເຮັດການຜະລິດໃຫ້ຕົນເອງ ໃຫ້ພິຈາລະນາວ່າ ເປັນຜູ້ຄອບຄອງເຮັດກະສິກຳ
2. ຄົນເຝົ້າສວນ ທີ່ດຳເນີນການຜະລິດດ້ວຍຕົນເອງ ແຕ່ໄດ້ແບ່ງປັນຜົນຜະລິດໃຫ້ເຈົ້າຂອງດິນ ຫຼືຈ່າຍເປັນເງິນ ໃຫ້ຖືວ່າ ເປັນ ຜູ້ຄອບຄອງເຮັດກະສິກຳ
3. ຄົນເຝົ້າສວນທີ່ດູແລສວນ ໄດ້ຮັບຄ່າຈ້າງຈາກເຈົ້າຂອງດິນໃຫ້ເຮັດການຜະລິດ, ຫຼື ຄົນເຝົ້າສວນເບິ່ງແຍງດິນຊື່ໆ ບໍ່ໄດ້ເຮັດການຜະລິດ ໃຫ້ ຖືວ່າ ບໍ່ ແມ່ນ ເປັນຜູ້ຄອບຄອງເຮັດກະສິກຳ

## 3.5 ຕອນດິນ:

ສຳລັບ ຄວາມໝາຍ ໃນການຄອບຄອງ, ຕອນດິນໝາຍເຖິງທີ່ດິນຜືນນຶ່ງ, ເປັນຂອງຜູ້ຄອບຄອງຜູ້ດຽວ, ຊຶ່ງມີດິນ ຂອງ ຜູ້ອື່ນ , ແມ່ນ້ຳ, ປ່າໄມ້, ຖະໜົນ ແລະ ອື່ນ ໆ (ທີ່ບໍ່ແມ່ນ ໃນການຄອບຄອງ ຂອງຕົນ) ອອ້ມຮອບ. ຕອນດິນອາດ ປະກອບ ດ້ວຍ ນຶ່ງ ຫຼື ຫຼາຍໄຮ່ (ຫຼາຍແປງ). ລັກສະນະຂອງການຄອບຄອງດິນ ມີຄວາມໝາຍວ່າ ມັນເປັນຂອງຕົນເອງ ຫຼື ເຊົ່າກໍໄດ້. ໃນກໍລະນີ ດິນ ດັ່ງກ່າວນີ້ ຫາກ ຕິດກັນ ໂດຍ ກຳມະສິດຄອບຄອງຕ່າງກັນ ຂອງ ຜູ້ຄອບຄອງເຮັດກະສິກຳ ຄວນຖື ວ່າ ເປັນດິນ ສອງຕອນ. ສາມາດເອີ້ນເປັນຕອນດິນດຽວ ຫຼື ຫຼາຍຕອນ ຖ້າຫາກມີການປູກພືດທີ່ແຕກຕ່າງກັນ; ບາງທີ່ອາດຈະມີການນຳໃຊ້ປະໂຫຍດຂອງດິນຕ່າງກັນ ເຊັ່ນ ດິນປູກພືດ ແລະດິນປ່າໄມ້.

## 3.6 ພືດລົມລຸກ:

<u>ພືດລົມລຸກ</u> ແມ່ນພືດທີ່ມີອາຍຸ ຮອບວຽນ ຕ່ຳກວ່າ 1ປີ, ບັນຊີລາຍການພືດລົມລຸກ ໄດ້ຂຽນໄວ້ໃນເອກະສານຊ້ອນທ້າຍ 1.

ໃນການສຳຫຼວດສະຖິຕິກະສິກຳຂອງລາວເຮົາ, ຂໍ້ມູນພືດລົມລຸກອີງໃສ່ພືດທີ່ປູກໃນລະດູຝົນປີ 1998 ແລະລະດູແລ້ງ 1998/99. ການປູກພືດໃນລະດູການນັ້ນ ໝາຍເຖິງ ໄລຍະເວລາປູກພືດນັ້ນຕົນຕໍ ໃນລະດູການນັ້ນໆ. ເນື້ອທີ່ຂອງ

ພືດ ໃຫ້ອີງໃສ່ເນື້ອທີ່ປູກ (ປັກດຳ), ບໍ່ແມ່ນອີງໃສ່ເນື້ອທີ່ເກັບກ່ຽວ.

ພືດຕົ້ນຕໍທີ່ປູກຈະເກັບກຳໃນການສຳຫຼວດສະຖິຕິກະສິກຳ ສະແດງໃນຕາຕະລາງ 3.1 ລຸ່ມນີ້:

**ຕາຕະລາງ 3.1: ພືດລົມລຸກຂອງການສຳຫຼວດສະຖິຕິກະສິກຳ**

| ປະເພດພືດ | ໄລຍະເວລາປູກ | ໄລຍະເວລາເກັບກ່ຽວ | ລະດູການ |
|---|---|---|---|
| ນາປີ | ເດືອນ: 07-08 /1998 | ເດືອນ: 10 - 12/98 | ລະດູຝົນ 1998 |
| ເຂົ້າໄຮ່ | ເດືອນ: 05/98 | ເດືອນ: 08 - 09/1998 | ລະດູຝົນ 1998 |
| ເຂົ້ານາແຊງ | ເດືອນ: 12/98 - 01/1999 | ເດືອນ: 04 - 05/1999 | ລະດູແລ້ງ 1998/99 |
| ສາລີ | ເດືອນ: 03 - 04/98<br>ເດືອນ: 11 - 12/98 | ເດືອນ: 09 - 10/98<br>ເດືອນ: 01 - 02/99 | ລະດູຝົນ 1998<br>ລະດູແລ້ງ 1998/99 |
| ມັນຕົ້ນ | ເດືອນ: 05 - 06/98 | ເດືອນ: 10 - 11/98 | ລະດູຝົນ 1998 |
| ມັນດ້າງ | ເດືອນ: 05 - 06/98 | ເດືອນ: 10 - 11/98 | ລະດູຝົນ 1998 |
| ຖົ່ວເຫຼືອງ | ເດືອນ: 05/98 | ເດືອນ: 08 - 09/98 | ລະດູຝົນ 1998 |
| ຖົ່ວຂຽວ | ເດືອນ: 10 - 11/98 | ເດືອນ: 01 - 02/99 | ລະດູແລ້ງ 1998/99 |
| ຖົ່ວດິນ | ເດືອນ: 10 - 11/98 | ເດືອນ: 02 - 03/99 | ລະດູແລ້ງ 1998/99 |
| ຝ້າຍ | ເດືອນ: 08 - 09/98 | ເດືອນ: 01 - 02/99 | ລະດູແລ້ງ 1998/99 |
| ອ້ອຍ | ເດືອນ: 04 - 06/98 | ເດືອນ: 03/99 | ລະດູຝົນ 1998 |
| ຢາສູບ | ເດືອນ: 01 - 02/99 | ເດືອນ: 04 - 05/99 | ລະດູແລ້ງ 1998/99 |
| ຜັກທຸກປະເພດ | ເດືອນ: 10/98 - 01/99 | ເດືອນ: 01 - 04/99 | ລະດູແລ້ງ 1998/99 |

## 3.7 ພືດຢືນຕົ້ນ:

ພືດຢືນຕົ້ນ ແມ່ນປະເພດພືດທີ່ມີ ຮອບວຽນການຈະເລີນເຕີບໂຕ ຫຼາຍກວ່ານຶ່ງປີ ຂຶ້ນໄປ ລວມມີ: ຕົ້ນໄມ້ໃຫ້ໝາກ ເຊັ່ນ: ໝາກກ້ວຍ, ກາເຟ, ຊາ ແລະ ໝາກແໜ່ງ. ບັນຊີລາຍຊື່ ພືດຢືນຕົ້ນເບິ່ງໃນເອກະສານຊ້ອນທ້າຍ 2. ຂໍ້ມູນກ່ຽວກັບພືດຢືນຕົ້ນ ໃຫ້ອີງໃສ່ ພືດທີ່ມີປະຈຸບັນ ເວລາເຮັດການສຳຫຼວດ.

## 3.8 ສັດລ້ຽງ:

ສັດລ້ຽງ ແມ່ນໝາຍເຖິງ ສັດລ້ຽງທຸກປະເພດ ນັບທັງສັດປີກ ທີ່ລ້ຽງ ເພື່ອຈຸດປະສົງສຳລັບກະສິກຳ. ປະເພດສັດລ້ຽງຕົ້ນຕໍລວມມີ: ງົວ, ຄວາຍ, ໝູ, ແກະ, ແບ້, ມ້າ, ລາ, ເຕົ່າ, ຊ້າງ, ໄກ່, ເປັດ, ຫານ, ໄກ່ງວງ ແລະ ນົກກະທາ. ປະເພດງົວລວມມີ: ງົວຜູ້, ງົວແມ່ ແລະ ລູກຂອງມັນ. ສັດປະເພດລ້ຽງໃນຄົວເຮືອນເຊັ່ນ: ແມວ, ໝາ ແມ່ນບໍ່ນັບເຂົ້າໃນປະເພດສັດຂ້າງເທິງ.

ຈຳນວນສັດລ້ຽງ ແມ່ນ ໝາຍເຖິງ ຈຳນວນສັດ ທີ່ໄດ້ຄອບຄອງໃນມື້ສຳຫຼວດ. ການຄອບຄອງນຶ່ງ ແມ່ນ ການລ້ຽງເຊິ່ງຖືເອົາບັນຫາ ການເບິ່ງແຍງ, ຮັກສາສັດລ້ຽງໃນໄລຍະຍາວເປັນພື້ນຖານ ແລະ ມີການຕັດສິນໃຈ ເປັນມື້ຕໍ່ມື້ກ່ຽວກັບ ສັດດັ່ງກ່າວ. ສ່ວນຫຼາຍການຄອບຄອງ ແມ່ນເຈົ້າຂອງ ເປັນຜູ້ລ້ຽງເອງ, ແຕ່ວ່າບາງເທື່ອ ລ້ຽງສັດ ໃຫ້ຄົນອື່ນ ພາຍໃຕ້ຮູບແບບ ຕົກລົງເຫັນດີເຫັນພ້ອມນຳກັນ.

# 4. ຈະສ້າງບັນຊີລາຍຊື່ຄົວເຮືອນຄືແນວໃດ.

## ( ຕາຕະລາງເບີ 2 )

## 4.1 ຄວາມໝາຍຫຍໍ້ ຂອງ ບັນຊີ ລາຍຊື່ຄົວເຮືອນ

ບາດກ້າວທຳອິດຂອງການຈົດນັບ ພາຍໃນບ້ານ ແມ່ນບັນຊີລາຍຊື່ຄົວເຮືອນ. ຈຸດປະສົງຂອງການສ້າງບັນຊີລາຍຊື່ຄົວເຮືອນ ແມ່ນເພື່ອຈຳແນກ ຄົວເຮືອນທັງໝົດ ໃນບ້ານ ແລະ ເວລານັ້ນ ເລືອກເອົາ ຄົວເຮືອນຕົວແທນ.ບັນຊີລາຍຊື່ ມີຄວາມຈຳເປັນຕ້ອງກະກຽມສຳລັບການເກັບກຳຂໍ້ມູນ: ຄົວເຮືອນທີ່ຖືກເປັນຕົວແທນຈະໄດ້ສຳພາດໂດຍນຳໃຊ້ຕາຕະລາງ 5 ແລະຄົວເຮືອນທັງໝົດອື່ນໆຈະສຳພາດດ້ວຍຕາຕະລາງ 4 (ໃບສອບຖາມລວມ).

ລາຍຊື່ ຄົວເຮືອນ ຈະໄດ້ຈົດໃສ່ ໃນ ຕາຕະລາງ ບັນຊີລາຍຊື່ຄົວເຮືອນ ( ຕາຕະລາງ 2 ). ນັກເດີນສຳຫຼວດ ຈະໄດ້ຮັບ ຕາຕະລາງບັນຊີ ພ້ອມກັບ ການຈົດກ່າຍ ລະຫັດຂໍ້ມູນ ບາງສ່ວນໃນ ໜ້າປົກຂອງ ຕາຕະລາງ (ແບບຟອມ 2) ສຳລັບແຕ່ລະບ້ານ ຊຶ່ງສະແດງໃຫ້ເຫັນ ລາຍລະອຽດຂອງລະຫັດທີ່ຕັ້ງ ຂອງບ້ານ ພ້ອມທັງຂໍ້ມູນທີ່ຈຳເປັນສຳລັບການເລືອກເອົາ ຄົວເຮືອນ ຕົວແທນ. ນັກເດີນສຳຫຼວດຈະໄດ້ຮັບແຜນວາດຂອງບ້ານ, ຊຶ່ງແຜນວາດດັ່ງກ່າວຈະສະແດງໃຫ້ເຫັນຂອບເຂດຊາຍແດນ ຂອງບ້ານ.

ນັກເດີນສຳຫຼວດຈະຕ້ອງໄດ້ກະກຽມ ບັນຊີລາຍຊື່ຄົວເຮືອນ ໃນແຕ່ລະບ້ານ ໂດຍການຊ່ວຍເຫຼືອຈາກນາຍບ້ານ. ນັກເດີນສຳຫຼວດຈະຕ້ອງບັນທຶກຊື່ ຂອງແຕ່ລະຄົວເຮືອນ ພ້ອມດຽວກັນນັ້ນກໍຕ້ອງໄດ້ລະບຸວ່າຄົວເຮືອນດັ່ງກ່າວ ຕ້ອງມີດິນກະສິກຳ ຄອບຄອງ ຫຼາຍກວ່າ 0,02 ຮ.ຕ. ຂໍ້ມູນເລົ່ານີ້ ຈະຖືກນຳໃຊ້ເຂົາໃນ ການຄັດເລືອກ ຄົວເຮືອນຕົວແທນ.

ເມື່ອເວລາບັນຊີລາຍຊື່ຖືກສ້າງສຳເລັດແລ້ວ, ນັກເດີນສຳຫຼວດຈະຕ້ອງໄດ້ເລືອກຄົວເຮືອນຕົວແທນ ໂດຍໃຊ້ ວິທີການເລືອກຕົວແທນ ທີ່ໄດ້ຮັບການອົບຮົມໃຫ້ໂດຍສະເພາະ.

## 4.2 ບົດບາດຂອງນາຍບ້ານ

ຖ້າເປັນໄປໄດ້, ກ່ອນລົງໄປບ້ານໃຫ້ຕິດຕໍ່ກັບນາຍບ້ານ ເພື່ອກຳນົດເວລາພົບປະໃຫ້ເໝາະສົມ. ຖ້າ ທ່ານບໍ່ໄດ້ນັດພົບກັບນາຍບ້ານກ່ອນ, ເມື່ອເວລາລົງໄປເຖິງ ໃຫ້ໄປພົວພັນໄວເທົ່າທີ່ຈະໄວໄດ້ ແລະ ໃນເວລາ ພົບນັ້ນຄວນແນະນຳວ່າ ທ່ານແມ່ນໃຜ ມາເພື່ອຈຸດປະສົງຫຍັງ?

ນາຍບ້ານຈະຊ່ວຍທ່ານ ໄດ້ 3 ທາງ:

- ລາວ ຈະເປັນຜູ້ ບອກ ຈຳນວນຄົວເຮືອນທັງໝົດ ໃນການສ້າງບັນຊີລາຍຊື່.
- ລາວຈະເປັນຜູ້ບອກວ່າ ແຕ່ລະຄົວເຮືອນ ມີດິນກະສິກຳຫຼືບໍ່.
- ຈະຊ່ວຍບອກ ທ່ານ ໃຫ້ຮູ້ ທີ່ຕັ້ງຂອງຄົວເຮືອນ ທີ່ເປັນເປົາໝາຍຂອງການສຳຫຼວດ.

ເວລາທີ່ທ່ານຫາກສຳເລັດສ້າງບັນຊີຄົວເຮືອນພາຍໃນບ້ານແລ້ວ,ໃຫ້ນາຍບ້ານຊ່ວຍກວດເບິ່ງຄືນ ຈຳນວນຄົວເຮືອນ

ໃນຕາຕະລາງ 2 ເພື່ອຢັ້ງຢືນວ່າບັນຊີລາຍຊື່ຄົວເຮືອນຄົບຖ້ວນຖືກຕ້ອງ ແລະເຮັດໃຫ້ການສຳຫຼວດສາມາດເນີນໄປໄດ້ດີ.

ເວລາສຳພາດຄົວເຮືອນ ບໍ່ຄວນໃຫ້ນາຍບ້ານຢູ່ນຳ ຫຼື ບຸກຄົນອື່ນທີ່ຈະເຮັດໃຫ້ຜູ້ຕອບຢ້ານ ຫຼື ລະແວງສົງໃສ ບໍ່ກ້າເວົາຄວາມຈິງ. ນີ້ ເປັນບັນຫາສຳຄັນທີ່ຄວນເອົາໃຈໃສ່ ເພື່ອເປັນການຮັກສາຄວາມລັບຂອງຂໍ້ມູນການສຳຫຼວດ.

## 4.3 ການກວດສອບບ້ານໃຫ້ຖືກຕ້ອງ

ກ່ອນຈະເລີ່ມສ້າງບັນຊີ, ທ່ານຕ້ອງໝັ້ນໃຈວ່າທ່ານໄດ້ໄປຖືກບ້ານແລ້ວ. ໃຫ້ສັງເກດຮູບພາບຂອງບ້ານ ແລ້ວກວດກາເບິ່ງແຜນວາດຂອງບ້ານ ວ່າມັນຖືກຕ້ອງສອດຄ່ອງກັນບໍ່. ນາຍບ້ານຈະເປັນຜູ້ຮູ້ດີ ກ່ຽວກັບຄົວເຮືອນໃດຢູ່ໃນຄວາມຮັບຜິດຊອບຂອງລາວເອງ.

ບາງຄັ້ງ, ທ່ານອາດພົບສະພາບຂອງບ້ານມີການປ່ຽນແປງ:

- ຫາກບ້ານໄດ້ປ່ຽນຊື່ໃໝ່, ການເດີນສຳຫຼວດຖືວ່າປົກກະຕິ. ບັນທຶກຊື່ບ້ານໃໝ່ໃສ່ ຕາຕະລາງ 2.
- ຖ້າບ້ານແຍກອອກເປັນ 2 ບ້ານໃໝ່, ໃຫ້ເດີນສຳຫຼວດທັງສອງບ້ານໂດຍໃຊ້ຕາຕະລາງ2 (ໃບດຽວກັນ).
- ຖ້າບ້ານຫາກລວມເຂົາກັບບ້ານອື່ນແລ້ວຕັ້ງເປັນບ້ານນຶ່ງໃໝ່. ຖ້າຫາກທ່ານເປັນນັກເດີນສຳຫຼວດທັງສອງບ້ານ, ຕ້ອງ ມີ ຕາຕະລາງ ເບີ2 ສຳລັບແຕ່ລະບ້ານ. ຈາກນັ້ນ ໃຫ້ຂຽນບັນຊີລາຍຊື່ຄົວເຮືອນທັງສອງບ້ານ ໃສ່ ຕາຕະລາງ ໃບດຽວ (ຕາຕະລາງ ເບີ 2 ). ສ່ວນຕາຕະລາງ 2 ໃບທີ່ ສອງ ໃຫ້ປະເປົ່າຫວ່າງ ແລ້ວຂຽນຄຳອະທິບາຍສາຍເຫດຂອງການລວມເຂົາກັບບ້ານອື່ນ. ຖ້າສົມມຸດວ່າ 2 ບ້ານລວມເຂົາກັບບ້ານອື່ນ ພັດມີນັກເດີນສຳຫຼວດ 2 ຄົນ ໄດ້ມອບໝາຍຮັບຜິດຊອບແຕ່ລະບ້ານກ່ອນແລ້ວ, ນັກເດີນສຳຫຼວດທີ່ຖືກມອບໝາຍສຳຫຼວດ ບ້ານໃດ(ທີ່ເປັນບ້ານເກົ່າກ່ອນລວມເຂົາກັນເປັນບ້ານໄໝ່), ຕ້ອງໄດ້ສຳຫຼວດບ້ານເກົ່າຂອງໃຜລາວຕາມທີ່ໄດ້ມອບໝາຍນັ້ນ ແລະຕ້ອງກຳນົດ ເຂດແດນຂອງບ້ານເກົ່ານັ້ນໃຫ້ ຈະແຈ້ງ, ໂດຍເອົາແຜນວາດຂອງບ້ານມາຊ່ວຍຈຳແນກ ເຂດແດນຂອງບ້ານເດີມ.

ຖ້າ ທ່ານ ພົບຄວາມຫຍຸ້ງຍາກ ໃນການກຳນົດເຂດແດນບ້ານ, ພະຍາຍາມຕິດຕໍ່ພົບນັກກວດກາຂອງ ທ່ານໂດຍດ່ວນ. ຜົນທີ່ໄດ້ຮັບຈາກການສຳຫຼວດຈະມີຄ່າສູງ ກໍຕໍ່ເມື່ອວ່າ ທຸກຄົວເຮືອນ ໄດ້ຂື້ນບັນຊີລາຍຊື່ໝົດ ແລະກໍ່ເປັນການຊ່ວຍແກ້ໄຂບັນຫາໃຫ້ວ່ອງໄວ.

## 4.4 ຄົວເຮືອນໃດຄວນຈົດເຂົາບັນຊີ

ທ່ານ ຕ້ອງຈົດ ລາຍຊື່ ຄົວເຮືອນທັງໝົດທີ່ມີທີ່ຢູ່ປະຈຳ ໃນເວລາການສຳຫຼວດ ໝາຍວ່າ ມີທີ່ຕັ້ງຂອງເຮືອນຢູ່ໃນຂອບເຂດຊາຍແດນຂອງບ້ານ.

- ບໍ່ຄວນຈົດລາຍຊື່ຄົວເຮືອນທີ່ມີທີ່ພັກບໍ່ຖາວອນ ເຊັ່ນ ຕູບ, ຖຽງນາ...ໄລຍະລະດູການປູກພືດ, ເກັບກ່ຽວ...
- ບໍ່ຈົດເອົາຄົວເຮືອນທີ່ໄດ້ຍົກຍ້າຍໜີອອກຈາກບ້ານ.
- ບໍ່ຈົດເອົາ ເຮືອນພວມ ປຸກສ້າງ ຫຼື ເຮືອນ ບໍ່ມີໃຜ ພັກຢູ່.
- ໃຫ້ຈົດເອົາຄົວເຮືອນ ຊຶ່ງມີທີ່ຢູ່ປົກກະຕິໃນບ້ານ ແຕ່ຜູ້ກ່ຽວໄປຢູ່ບ່ອນອື່ນຊົ່ວຄາວ

ລາຍຊື່ຄົວເຮືອນທີ່ບໍ່ຄວນຈົດເຂົ້າບັນຊີ:

- ຄົວເຮືອນສະຖານທູດຕ່າງປະເທດທີ່ອາໄສຢູ່ລາວ, ຫຼື ຊາວຕ່າງດາວທີ່ອາໄສຢູ່ລາວ ຊົ່ວຄາວ ຍ້ອນມາເຮັດວຽກກັບອົງການຈັດຕັ້ງສາກົນຕ່າງໆ ຫຼື ບໍລິສັດ....

- ຄົວເຮືອນລວມໝູ່ (ໃຫ້ເບິ່ງຂໍ້ 3.1)

ໃຫ້ອີງໃສ່ ຂໍ້ 3.1 ກ່ຽວກັບ ນິຍາມ ຄົວເຮືອນ. ໄດ້ຊຸງນບອກວ່າ ຄົວເຮືອນປົກກະຕິປະກອບດ້ວຍ ຄົນດຽວ ຫຼື ກຸ່ມຄົນທີ່ມີລາຍຊື່ໃນສຳມະໂນຄົວ, ແຕ່ຕົວຈິງ ສຳມະໂນຄົວຍັງບໍ່ມີໝົດໃນຂອບເຂດທົ່ວປະເທດ.

## 4.5. ໜ້າປົກ ຂອງ ຕາຕະລາງ 2

ເຊັ່ນດຽວກັນກັບ ລາຍຊື່ຄົວເຮືອນ ແລະ ການເລືອກຕົວແທນ, ຕາຕະລາງ2 ຈະໄດ້ບັນທຶກ ຂໍ້ມູນຂ່າວສານ ຕ່າງໆ ທີ່ມີລັກສະນະກວດສອບໃນໜ້າປົກຂອງຕາຕະລາງ. ໜ້າປົກໄດ້ແບ່ງອອກເປັນ 3 ພາກ.

<u>ກ່ອນທ່ານຈະລົງສະໜາມຕົວຈິງ</u>: ນັກກວດກາຈະມອບຕາຕະລາງ2 ທີ່ໄດ້ຈົດກ່າຍລະຫັດຕ່າງໆ ໃສ່ໃນໜ້າປົກຂອງຕາຕະລາງແລ້ວ:

- ລະຫັດ ແຂວງ, ເມືອງ ແລະບ້ານ;
- ຈະບອກວ່າບ້ານໃດຄວນເຮັດການສຳຫຼວດເນື້ອທີ່ດິນ;
- ຊື່ ແຂວງ (ຄ.1);
- ຊື່ ເມືອງ (ຄ. 2);
- ຊື່ ບ້ານ (ຄ. 3 );

| ລະຫັດທີ່ຕັ້ງ | ຕາຕະລາງ ເບີ 2 | ແຂວງ | ເມືອງ | ບ້ານ |
|---|---|---|---|---|
| | | | | |

| | | |
|---|---|---|
| ເປັນເປົ້າໝາຍ | ແມ່ນ | ☐ |
| ວັດແທກເນື້ອທີ່ | ບໍ່ແມ່ນ | ☐ |

- ຈຳນວນຄົວເຮືອນໃນບ້ານ ຈາກ ການສຳຫຼວດພົນລະເມືອງ ປີ 1995 (ຄ. 4);
- ຄົວເຮືອນຕົວແທນທຳອິດ (ຄ. 5) ເພື່ອໃຊ້ສຳລັບເລືອກຕົວແທນ
- ໄລຍະຫ່າງ (ຄ. 6), ເພື່ອໃຊ້ສຳລັບເລືອກຕົວແທນ

<u>ຄຳຖາມ 4</u> ບາງບ້ານອາດຈະບໍ່ມີຍ້ອນວ່າ ເປັນບ້ານໃໝ່ ພາຍຫລັງການສຳຫຼວດພົນລະເມືອງ ປີ 1995.

| | | |
|---|---|---|
| 1. | ຊື່ແຂວງ | |
| 2. | ຊື່ເມືອງ | |
| 3. | ຊື່ບ້ານ | |
| 4. | ຈຳນວນຄົວເຮືອນທີ່ໄດ້ຈົດກ່າຍ ໃນການສຳຫລວດພົນລະເມືອງ 1995 | ☐ |
| 5. | ຄົວເຮືອນຕົວແທນທຳອິດ | ☐ |
| 6. | ໄລຍະຫ່າງ | ☐ |

<u>ພາຍຫຼັງທີ່ທ່ານໄດ້ສຳເລັດ ການສ້າງບັນຊີລາຍຊື່ ແລະ ຄັດເລືອກຕົວແທນແລ້ວ,</u>ທ່ານຕ້ອງຈົດກ່າຍດັ່ງລຸ່ມນີ້:

- ຈຳນວນ ຄົວເຮືອນ ທັງໝົດທີ່ໄດ້ຈົດກ່າຍຄັ້ງນີ້ (ໃນຕາຕະລາງ 2, ຄຳຖາມ 7);
- ເຫດຜົນຂອງຄວາມແຕກຕ່າງ

ລະຫວ່າງ ການສຳຫຼວດພົນລະເມືອງປີ 1995 ແລະການຈົດບັນຊີລາຍຊື່ຄັ້ງນີ້ (ຄຳຖາມ 8);

- ຈຳນວນຄົວເຮືອນຖືກເລືອກເປັນຕົວແທນ (ຄຳຖາມ 9);
- ຈຳນວນຄົວເຮືອນ ຄາດຫວັງຈະເປັນຕົວແທນ (ຄຳຖາມ 10).

<u>ພາຍຫຼັງທີ່ທ່ານສຳເລັດການສຳພາດຄົວເຮືອນ,</u> ທ່ານຕ້ອງຈົດກ່າຍດັ່ງລຸ່ມນີ້:

- ຈຳນວນ ໃບສອບຖາມລະອຽດ (ຕາຕະລາງ 5, ໃນຄຳຖາມ 11) ;
- ຈຳນວນ ໃບສອບຖາມລວມ (ຕາຕະລາງ 4, ໃນຄຳຖາມ 12);
- ຈຳນວນຕາຕະລາງການວັດແທກເນື້ອທີ່ (ໃນຄຳຖາມ 13);
- ໝາຍເຫດ.

## 4.6. ວິທີຈົດກ່າຍ ລາຍຊື່ ຄົວເຮືອນພາຍໃນບ້ານ.

ທ່ານຈະມີຂໍ້ມູນຫຼາຍຢ່າງເພື່ອຊ່ວຍໃນການກະກຽມສ້າງລາຍຊື່ຄົວເຮືອນ. ໂດຍປົກກະຕິແລ້ວ ແຜນວາດຂອງບ້ານຈະສະແດງໃຫ້ເຫັນທຸກຄົວເຮືອນ ໃນເຂດສຳຫຼວດ. ບາງຄັ້ງ ອາດແມ່ນລາຍຊື່ຄົວເຮືອນ ຈາກຜົນການສຳຫຼວດສຳມະໂນຄົວ ປີ 1995. ນາຍບ້ານອາດອີງໃສ່ປື້ມສຳມະໂນຄົວ ແລະ ຂໍ້ມູນອື່ນທີ່ເກັບກຳມາໄດ້.

ດັ່ງທີ່ໄດ້ກ່າວແລ້ວ ແຜນວາດ ແລະ ບາງຢ່າງທີ່ພົວພັນເຖິງ ບັນຊີລາຍຊື່ຄົວເຮືອນໃນການສຳຫຼວດພົນລະເມືອງ ປະຈຸບັນ ແມ່ນຜ່ານມາໄດ້ 4 ປີ ແລ້ວ ແລະ ຕັ້ງແຕ່ເວລານັ້ນເຖິງດຽວນີ້ ອາດມີຫຼາຍຢ່າງປ່ຽນແປງໄປ. **<u>ບໍ່ຄວນຕັດສິນໃຈ ໃຊ້ລາຍຊື່ຄົວເຮືອນ ຕາມລາຍຊື່ ຂອງການສຳຫຼວດພົນລະເມືອງໄດ້ເຮັດ.</u>** ການຈົດນັບທຸກຄົວເຮືອນໃນບ້ານ ໂດຍ ຖືເອົາເວລາປະຈຸບັນ ແມ່ນມີຄວາມສຳຄັນເປັນຢ່າງຍິ່ງ ຖ້າທ່ານ ລະເລີຍຄົວເຮືອນໃດນຶ່ງໄປ ຍ່ອມຈະມີຜົນສະທ້ອນຕໍ່ຜົນການສຳຫຼວດ.

ໃຫ້ ຈົດລາຍຊື່ຢ່າງເປັນລະບົບ ແລະໃຫ້ໝັ້ນໃຈວ່າບໍ່ມີຄົວເຮືອນໃດນຶ່ງຂາດຫາຍ. ໃຫ້ນຳໃຊ້ແຜນວາດຊ່ວຍເບິ່ງວ່າໄດ້ກວມເອົາທຸກຄົວເຮືອນພາຍໃນເຂດບ້ານແລ້ວ. ນາຍບ້ານອາດຊ່ວຍທ່ານ ໂດຍ ເບິ່ງລາຍຊື່ຄົວເຮືອນ ໄປເປັນແຕ່ລະໜ່ວຍ ພາຍໃນບ້ານ. ຈົ່ງລະມັດລະວັງເປັນພິເສດສຳລັບບ້ານ ທີ່ມີຈຳນວນຄົວເຮືອນຫຼາຍ, ແຜນວາດນີ້ຈະຊ່ວຍທ່ານໃຫ້ສຳເລັດຜົນໄປດ້ວຍດີ.

ສຳລັບແຕ່ລະຄົວເຮືອນໃນເຂດສຳຫຼວດໃຫ້ຈົດກ່າຍຊື່ຄົວເຮືອນໃສ່ຖັນທີ່ (2) ແລະ ໝາຍ (✓) ໃສ່ຖັນ (3) ຫຼື ຖັນ (4)

- ໝາຍ(✓) ຖັນ(3) ຖ້ານາຍບ້ານບອກທ່ານວ່າຄົວເຮືອນມີດິນ 0,02 ຮຕຂຶ້ນໄປ ອີງໃສ່ຂໍ້ 3.3 ຂອງນິຍາມ ດິນກະສິກຳ.
- ໝາຍ (✓) ຖັນ (4) ຖ້າຄົວເຮືອນມີດິນກະສິກຳນ້ອຍກວ່າ 0,02 ຮຕ

ຖ້າ ນາຍບ້ານບໍ່ຮູ້ເນື້ອທີ່ດິນ ຂອງຄົວເຮືອນແນ່ນອນ, ຈົ່ງບອກໃຫ້ລາວພິຈາລະນາເບິ່ງຄືນຄັກແນ່. ຂໍ້ມູນເລານີ້ແມ່ນມີຄວາມສຳຄັນສຳລັບຊ່ວຍເລືອກຕົວແທນເທົ່ານັ້ນ; ສ່ວນ ເນື້ອທີ່ ຕົວຈິງ ຈະໄດ້ເກັບກຳ ສຳພາດ ຈາກ ແຕ່ລະຄົວເຮືອນ ຕົວແທນ.

| (1) ລຳດັບ | (2) ຊື່ ຫົວໜ້າຄົວເຮືອນ ຄົວເຮືອນ | (3) ໝາຍ ຖ້າ* ແມ່ນຄົວເຮືອນ ຊາວກະສິກອນ | (4) ໝາຍ ຖ້າ ບໍ່ແມ່ນຄົວເຮືອນ ຊາວກະສິກອນ |
|---|---|---|---|
| 001 | | | |
| 002 | | | |
| 003 | | | |
| 004 | | | |
| 005 | | | |
| 006 | | | |
| 007 | | | |
| 008 | | | |

## 4.7 ຈະເຮັດແນວໃດ ສົມມຸດວ່າ ຈຳນວນຄົວເຮືອນຫາກ ຫຼາຍກ່ວາ ຕາຕະລາງ2 ທີ່ກຳນົດໄວ້

ຕາຕະລາງ 2 ສາມາດ ຈົດກ່າຍໄດ້ 460 ຄົວເຮືອນ. ຖ້າຈຳນວນຄົວເຮືອນຫາກຫຼາຍກ່ວາ ຈຳນວນແຖວທີ່ກຳນົດໃຫ້ເອົາຕາຕະລາງ ໃໝ່ມາຈົດກ່າຍຕື່ມໃຫ້ ຈົດກ່າຍລະຫັດໃສ່ໜ້າປົກຂອງຕາຕະລາງໄໝ່ ຄືກັນກັບຕາຕະລາງທຳອິດ. ຖ້າສົມມຸດວ່າທ່ານລື່ມ ຈົດກ່າຍລະຫັດຂ້າງເທິງນັ້ນ ຈະເຮັດໃຫ້ບັນດາຄົວເຮືອນດັ່ງກ່າວ ບໍ່ສາມາດນຳມາໃຊ້ໄດ້. ດີແທ້ໃຫ້ຂຽນໃສ່ ແຈເບື້ອງຂວາສຸດ ວ່າ “ ໃບສືບຕໍ່” ແລະລຳດັບຂອງຄົວເຮືອນໃນຕາຕະລາງໄໝ່ຄວນຂຽນຕໍ່ ເຊັ່ນ 461, 462,...,ຍຶດຖືລຳດັບຕົວເລກເປັນສິ່ງສຳຄັນ.

ພາຍຫຼັງຈົດກ່າຍແລ້ວໃຫ້ເອົາຕາຕະລາງເບີ 2 ສອງສະບັບ(ເກົ່າ, ໃໝ່) ຕິດແນບກັນໄວ້, ຂໍ້ມູນຂ່າວສານໃນ ຄຳຖາມ 7 ຄຳຖາມ 13 ຢູ່ໜ້າປົກຂອງຕາຕະລາງເບີ 2 ໃຫ້ຂຽນໃສ່ ຕາຕະລາງທຳອິດເທົ່ານັ້ນ. ໜ້າປົກຕາຕະລາງທຳອິດຈະບອກໃຫ້ຮູ້ວ່າມີຈຳນວນຄົວເຮືອນທັງໝົດໃນບ້ານ. ສ່ວນໜ້າປົກຂອງຕາຕະລາງສືບຕໍ່ໃຫ້ປະເປົ່າຫວ່າງ ຢູ່ ຄຳຖາມ 7-ຄ. 13.

## 4.8 ຈະເລືອກເອົາຄົວເຮືອນຕົວແທນ ຄືແນວໃດ

ການເລືອກຕົວແທນຈະປະຕິບັດໂດຍການນຳໃຊ້ ຂໍ້ມູນໃນ ຄຳຖາມ 5 ແລະຄຳຖາມ 6 ຂອງໜ້າປົກຕາຕະລາງ2 ຊຶ່ງໄດ້ບອກລຳດັບຄົວເຮືອນຕົວແທນທຳອິດ ພ້ອມ ໄລຍະຫ່າງ ຂອງຕົວແທນ. ຄວນປະຕິບັດຕາມບາດກ້າວນີ້:

- **ບາດກ້າວ 1**: ເລີ້ມຕົນຈາກລຳດັບທີ່ 1 ຂອງຄົວເຮືອນໃນບັນຊີລາຍຊື່, ນັບລົງໄປ ໃນ ຖັນ 3 ຈົນພົບເຫັນ ຄ່າຕົວແທນທຳອິດທີ່ໃຫ້ ແລ້ວ ຂີດວົງມົນອ້ອມເລກທີ່ຄົວເຮືອນ. ຄົວເຮືອນນີ້ ແມ່ນຄົວເຮືອນຕົວແທນທຳອິດ.

- **ບາດກ້າວ 2**: ສືບຕໍ່ນັບໃນຖັນທີ່ 3 ຈາກ ຄົວເຮືອນຕົວແທນທຳອິດ ລົງໄປອີກຈົນຄົບຄ່າໄລຍະຫ່າງ ແລ້ວໝາຍວົງມົນໃສ່ ເລກທີ່ຄົວເຮືອນທີ່ນັບໄປເຖິງນັ້ນ. ຄົວເຮືອນນີ້ແມ່ນຄົວເຮືອນ ຕົວ ແທນທີ່ ສອງ.

- **ບາດກ້າວ 3**: ປະຕິບັດຕາມບາດກ້າວ ທີ່ສອງໄປຈົນເຖິງຄົວເຮືອນ(✓) ສຸດທ້າຍໃນ ຖັນ3 ຂອງຕາຕະລາງ. (ຖ້າມີຕາຕະລາງສືບຕໍ່ໃຫ້ນັບໃນຖັນທີ່ 3 ກ່ອນ ຈົນຄົບທຸກຕາຕະລາງ).

- **ບາດກ້າວ 4**: ເມື່ອສິ້ນສຸດຄົວເຮືອນຕົວແທນ (✓) ໃນຖັນ 3 ໃຫ້ສືບຕໍ່ນັບ (✓) ໃນຖັນ 4 ແລະ ໝາຍວົງມົນໃສ່ຄົວເຮືອນທີ່ສອດຄ່ອງກັບໄລຍະຫ່າງຄືດັ່ງທີ່ໄດ້ ເຮັດຜ່ານມາ.

- **ບາດກ້າວ 5**: ສືບຕໍ່ນັບຈົນກ່ວາ ຄົບຄົວເຮືອນສຸດທ້າຍ ໃນຖັນທີ່ (4).

- **ບາດກ້າວທີ່ 6**: ແຕ່ລະຄົວເຮືອນທີ່ຖືກເລືອກເປັນຕົວແທນ, ໃຫ້ຂີດວົງມົນອ້ອມໃສ່ ເລກ ໃນຖັນທີ່ 1.

| (1) ລຳດັບ | (2) ຊື່ ຫົວໜ້າຄົວເຮືອນ ຄົວເຮືອນ | (3) ໝາຍຖ້າ* ແມ່ນຄົວເຮືອນ ຊາວກະສິກອນ | (4) ໝາຍຖ້າ ບໍ່ແມ່ນຄົວເຮືອນ ຊາວກະສິກອນ |
|---|---|---|---|
| 001 | | | |
| 002 | | | |
| 003 | | | |
| 004 | | | |
| 005 | | | |
| 006 | | | |

ຄົວເຮືອນທີ່ໄດ້ຂີດວົງມົນໃສ່ ຖັນທີ່ 1 ແມ່ນຄົວເຮືອນຕົວແທນ ທີ່ຈະໄດ້ສຳພາດ ຂໍ້ມູນລະອຽດໃນຕາຕະລາງ 5. ຕົວຢ່າງ ໃຫ້ເບິ່ງເອກະສານຊ້ອນທ້າຍ 4 ວິທີການຄັດເລືອກຕົວແທນ. ການເລືອກຕົວແທນບໍ່ແມ່ນວິທີການຍາກ ແຕ່ທ່ານຕ້ອງຮູ້ຈັກແລະເຂົາໃຈຢ່າງຄົບຖ້ວນ ບໍ່ດັ່ງນັ້ນ ທ່ານຈະສຳພາດຄົວເຮືອນບໍ່ຖືກ ແລະ ຜົນການສຳຫຼວດ ກໍຈະບໍ່ຄົບຖ້ວນ ຫຼືທາງກົງກັນຂ້າມ ຖ້າຫຼົງເອົາຕາຕະລາງສອບຖາມໄປຖາມຜິດພາດກໍ່ຈະເຮັດໃຫ້ ຜົນອອກມາ ບໍ່ຖືກ. ຖ້າທ່ານບໍ່ໝັ້ນໃຈກ່ຽວກັບ ການເລືອກຕົວແທນ ໃຫ້ຖາມຜູ້ກວດກາຂອງທ່ານເພື່ອຂໍຄຳແນະນຳຕື່ມ.

## 4.9 ຈະເລືອກເອົາ ຄົວເຮືອນໃດ ເຮັດການວັດແທກເນື້ອທີ່ດິນ

ໃຫ້ສັງເກດເບິ່ງຢູ່ແຈເບື້ອຂວາເທິງສຸດຂອງຕາຕະລາງ 2 ທີ່ບອກວ່າ ບ້ານນີ້ ຄວນເຮັດການວັດແທກເນື້ອທີ່ດິນ.

4 ຄົວເຮືອນໃດ ທີ່ຖືກເລືອກເປັນຕົວແທນເຮັດການສຳພາດແມ່ນເລືອກ ເອົາ1 ຄົວເຮືອນເພື່ອເຮັດການວັດແທກເນື້ອທີ່. ໃຫ້ສັງເກດເບິ່ງ ຄົວເຮືອນທີ່ຖືກເປັນຕົວແທນໃນຖັນທີ່ 1 ຂອງຕາຕະລາງ 2. ໃຫ້ເອົາ ຄົວເຮືອນຕົວແທນທຳອິດ ເຮັດການວັດແທກ ເນື້ອທີ່ ແລະຕໍ່ມາທຸກໆ ຄົວເຮືອນຕົວແທນທີ່ 4 ຈົນເຖິງຄົວເຮືອນຕົວແທນສຸດ

ທ້າຍ. ໃຫ້ໝາຍໄຂ່ວຕົບກາ ( X ) ໃສ່ຕົວເລກໃນຖັນທີ່ 1 ຂອງຕາຕະລາງ2 .

| (1)<br>ລຳດັບ | (2)<br>ຊື່ ຫົວໜ້າຄົວເຮືອນ | (3)<br>ໝາຍຖ້າ*<br>ແມ່ນຄົວເຮືອນ<br>ຊາວກະສິກອນ | (4)<br>ໝາຍຖ້າ<br>ບໍ່ແມ່ນຄົວເຮືອນ<br>ຊາວກະສິກອນ |
|---|---|---|---|
| 001 | | | |
| 002 | | | |
| 003 | | | |
| 004 | | | |
| 005 | | | |
| 006 | | | |

## 4.10 ເຮັດຫຍັງແດ່ ພາຍຫຼັງ ສຳເລັດ ສ້າງບັນຊີ ແລະເລືອກຄົວເຮືອນຕົວແທນ

ພາຍຫຼັງສຳເລັດການສ້າງບັນຊີ ລາຍຊື່ ຄົວເຮືອນ ແລະ ການເລືອກຕົວແທນແລ້ວທ່ານຕ້ອງຈົດກ່າຍໃສ່ຄຳຖາມ 7 ເຖິງຄຳຖາມ 10 ໃນໜ້າປົກທຳອິດຂອງໃບສອບຖາມ.

<u>ຄຳຖາມ 7 : ຈຳນວນຄົວເຮືອນທີ່ໄດ້ຂຶ້ນບັນຊີ:</u> ແມ່ນຈຳນວນຄົວເຮືອນທີ່ໄດ້ຂຶ້ນບັນຊີຫຼ້າສຸດ.

<u>ຄຳຖາມ 8 ເຫດຜົນ ຄວາມແຕກຕ່າງ ລະຫວ່າງ ຄຳຖາມ 4 ແລະ 7</u> : ອະທິບາຍເຫດຜົນ ຄວາມແຕກຕ່າງ ລະຫວ່າງ ຈຳນວນຄົວເຮືອນທີ່ຂຶ້ນບັນຊີ ຢູ່ໃນຕາຕະລາງນີ້ ແລະ ຈຳນວນ ໃນເວລາສຳຫຼວດພົນລະເມືອງ ປີ 1995. ສອງຈຳນວນບໍ່ອາດເທົ່າກັນໄດ້ ຍ້ອນວ່າເວລາໄດ້ຜ່ານພົນໄປເຖິງ 4 ປີແລ້ວ. ເຖິງຢ່າງໃດກໍ່ດີ ການເພີ່ມຂຶ້ນ ຫຼື ລຸດລົງຫຼາຍກວ່າ 10 ຄົວເຮືອນ ຕ້ອງໄດ້ອະທິບາຍ.(ຈົ່ງຄຳຖາມນີ້ໄວ້ຫາກ ຄຳຖາມ 4 ບໍ່ມີຄຳຕອບ).

<u>ຄຳຖາມ 9 ຈຳນວນຕົວແທນ:</u> ໃຫ້ຈົດຈຳນວນຄົວເຮືອນຕົວແທນທີ່ໄດ້ຄັດເລືອກແລ້ວໃສ່ຄຳຖາມນີ້.(ນັບເອົາຄົວເຮືອນທີ່ຖືກຂີດອອ້ມເປັນຕົວແທນຂອງການສຳຫຼວດ) ແລະບັນທຶກຈຳນວນທັງໝົດໃສ່.

<u>ຄຳຖາມ 10 ຄາດ ຫວັງຈະໄດ້ຕົວແທນ :</u> ໃຊ້ພຽງແຕ່ກວດເບິ່ງວ່າທ່ານໄດ້ຄັດເລືອກຕົວແທນ ຖືກຕ້ອງ ຫຼືບໍ່. ວິທີປະຕິບັດ ແມ່ນເອົາຈຳນວນຄົວເຮືອນທີ່ໄດ້ ຂຶ້ນບັນຊີ ທັງໝົດ ໃນບ້ານ (ຄ.7) ຫານ ໃຫ້ ຕົວເລກໄລຍະຫ່າງຂອງຕົວແທນ (ຄ.6) ແລ້ວບັນທຶກລົງໃສ່ຫ້ອງທີ່ໄດ້ມີໃຫ້ມາພ້ອມນີ້ (ຈຳນວນທີ່ເປັນເລກເສດເຊັ່ນ: 17,33 ) ຈຳນວນຕົວແທນ ໃນ ຄຳຖາມ9 ຕ້ອງແມ່ນຕົວເລກຖັດໄປ ມີຄ່າສູງກ່ວາ ຫຼື ຕ່ຳກ່ວາ ຄ່າ ໃນຄຳຖາມ 10. ຍົກຕົວຢ່າງລຸ່ມນີ້:

| | | |
|---|---|---|
| ຈຳນວນຄົວເຮືອນທັງໝົດທີ່ຂຶ້ນບັນຊີໃນບ້ານ (ຄ.7) | : | 52 |
| ໄລຍະຫ່າງທີ່ໃຫ້ (ຄ.6) | : | 3 |
| ຄາດຫວັງຈະໄດ້ຕົວແທນ | : | 17,33 |
| ຈຳນວນທີ່ເລືອກໄດ້ໃນ ຄ.9 ຕ້ອງຢູ່ໃນລະຫວ່າງ | : | 17 ຫຼື 18 |

6. ໄລຍະຫ່າງ

7. ຈຳນວນຄົວເຮືອນທັງຫມົດທີ່ໄດ້ຈົດກ່າຍໃນຄັ້ງນີ້

8. ເຫດຜົນ ສຳລັບ ຄວາມແຕກຕ່າງ ລະຫວ່າງ ຂໍ້ 4 ແລະ 7

9. ຈຳນວນຄົວເຮືອນຖືກເລືອກເປັນຕົວແທນ

10. ຄາດຫັວງຈະໄດ້ຕົວແທນ (7 / 6)

ຖ້າໃນຄຳຖາມ (ຄ.10) ເຫັນວ່າ ຄັດເລືອກເອົາຕົວແທນ ບໍ່ຖືກໃນການຄັດເລືອກເອົາຕົວແທນ, ທ່ານ ຄວນເຮັດການຄັດເລືອກຄືນໃໝ່. ຖ້າບໍ່ໝັ້ນໃຈວິທີເຮັດ ຄວນໄປພົບ ແລະຖາມນັກກວດກາຂອງ ທ່ານເລີຍ.

ຫຼັງຈາກຂື້ນບັນຊີລາຍຊື່ ແລະເລືອກເອົາຕົວແທນ ຖືກຕ້ອງແລ້ວກໍສາມາດລິເລີ່ມເຮັດການສຳພາດເກັບກຳຂໍ້ມູນການສຳຫຼວດໄດ້ເລີຍ.

## 4.11 ໜ້າວຽກຂອງ ນັກເດີນສຳຫຼວດ ພາຍໃນບ້ານ

ວຽກງານເກັບກຳຂໍ້ມູນຂອງ ທ່ານ ແລະ ເພື່ອນຮ່ວມທີມງານ ມີດັ່ງນີ້ :

- ສຳພາດແຕ່ລະຄົວເຮືອນທີ່ເປັນຕົວແທນ(ໃນຂໍ້4.8)ເພື່ອເກັບກຳຂໍ້ມູນລະອຽດໂດຍນຳໃຊ້ຕາຕະລາງ 5;
- ສຳພາດທຸກໆຄົວເຮືອນທີ່ຍັງເຫຼືອ(ທີ່ບໍ່ໄດ້ເປັນຕົວແທນ)ເພື່ອລວບລວມເອົາຂໍ້ມູນພື້ນຖານໂດຍໃຊ້ຕາຕະລາງ 4.

- ລົງໄປວັດແທກເນື້ອທີ່ຕົວຈິງຂອງຄົວເຮືອນ ຊຶ່ງໄດ້ອະທິບາຍໃນຂໍ້4.9 (ກໍລະນີຖ້າໄດ້ເຮັດການວັດແທກ).

## 4.12 ຖ້າ ພົບເຫັນຄວາມຜິດຂອງບັນຊີຄົວເຮືອນ ໃນຂະນະສຳພາດ

ໃນຂະນະທີ່ກຳລັງສຳພາດຄົວເຮືອນ, ຖ້າພົບວ່າ ຄົວເຮືອນທີ່ເຮົາສຳພາດ ພັດແຍກເປັນ 2 ຄົວເຮືອນ. ໃຫ້ເອົາໃບສອບຖາມ(ຕາຕະລາງ4) ຫຼື (ຕາຕະລາງ 5)ມາຖາມ ແຕ່ລະຄົວເຮືອນ. (ມັນຂຶ້ນຢູ່ກັບວ່າ ເຮົາເອົາຕາຕະລາງ 4 ຫຼື 5 ໃຫ້ນຳໃຊ້ກັບຄົວເຮືອນຕົວແທນເດີມ). ສຳລັບຄົວເຮືອນທີ່ ສອງ, ໃຫ້ບັນທຶກຂໍ້ມູນລະຫັດຕ່າງໆອັນດຽວກັນ (ເຊັ່ນ ແຂວງ, ເມືອງ, ບ້ານ, ຄົວເຮືອນເລກທີ)ໃສ່ ແຈເບື້ອງຂວາມື ຂ້າງເທິງສຸດຂອງຕາຕະລາງສອບຖາມ ແລະ ໃຫ້ຂຽນຄຳອະທິບາຍໃສ່ບ່ອນຫວ່າງທີ່ຈັດວ່າງໄວ້ໃຫ້.

ຖ້າ ສົມມຸດວ່າ, ມີ ຄົວເຮືອນໃດນຶ່ງ ຫາກບໍ່ມີໃນບັນຊີລາຍຊື່ ໃນ ຕາຕະລາງ ເບີ2, ໃຫ້ ຂຽນຕື່ມໃສ່ ລຳດັບສຸດທ້າຍ ຂອງ ຕາຕະລາງ 2. ໃຫ້ນັບໄລຍະຫ່າງຈາກ ຄົວເຮືອນຕົວແທນສຸດທ້າຍ ຂອງຕາຕະລາງ. ຖ້າຄົວເຮືອນໃໝ່ ຖືກເລືອກ ເປັນຕົວແທນ, ໃຫ້ສຳພາດຄົວເຮືອນນັ້ນໃນຕາຕະລາງ 5 ຫຼື, ກົງກັນຂ້າມຄົວເຮືອນທີ່ບໍ່ແມ່ນຕົວແທນໃຫ້ໃຊ້ຕາຕະລາງ 4.

ຖ້າບໍ່ພົບເຫັນຄົວເຮືອນດັ່ງກ່າວໃນບັນຊີລາຍຊື່ຄົວເຮືອນ ຍ້ອນຍົກຍ້າຍໄປບ້ານອື່ນ, ໃຫ້ບັນທຶກຂໍ້ມູນຕ່າງໆ ໃສ່ໜ້າປົກຂອງຕາຕະລາງ 4/ຕາຕະລາງ5 ແລະ ຂຽນບອກວ່າຍົກຍ້າຍໜີໄປບ້ານອື່ນ, ສ່ວນຄຳຖາມອື່ນ ໆ ໃນ ຕາຕະລາງ 4/5 ໃຫ້ ປະຫວ່າງໄວ້ ບໍ່ຕ້ອງຂຽນຫຍັງໃສ່.

ຖ້າໃນກໍລະນີທີ່ຄົວເຮືອນນັ້ນ ຫາກຍົກຍ້າຍເຮືອນ ໄປຢູ່ ບ່ອນໃໝ່ ພາຍໃນຂອບເຂດບ້ານດຽວ, ໃຫ້ຈົດກ່າຍປົກກະຕິ ຖືວ່າບໍ່ມີການປ່ຽນແປງໃດໆ

## 4.13 ຈະເຮັດຫຍັງ ພາຍຫຼັງສຳເລັດການສຳພາດພາຍໃນບ້ານ

ການເດີນສຳຫຼວດຂອງທີມງານທ່ານ ຫາກສຳເລັດການສຳພາດ ແລະວັດແທກເນື້ອທີ່ດິນແລ້ວ, ໃຫ້ນັບຈຳນວນ ຕາຕະລາງ ສອບຖາມທີ່ສຳພາດແລ້ວ ແລະໃຫ້ຈົດຈຳນວນດັ່ງກ່າວໃສ່ ຄຳຖາມ 11-13.

ຄ.11. ບັນທຶກຈຳນວນ ໃບສອບຖາມລະອຽດ (ຕາຕະລາງ 5).
ຄ.12. ບັນທຶກຈຳນວນ ໃບສອບລວມ (ຕາຕະລາງ 4).
ຄ.13. ບັນທຶກຈຳນວນຕາຕະລາງເຮັດການວັດແທກເນື້ອທີ່ (ຕາຕະລາງ 7).

ໃຫ້ ກວດເບິ່ງ ການເດີນສຳຫຼວດ ຂອງ ທີມງານ ທ່ານ ວ່າ ໄດ້ ສຳເລັດຕາມບໍລິມາດ ວຽກງານສຳຫຼວດ ແລ້ວ ຫຼື ຍັງ. ຈຳນວນຕາຕະລາງສອບຖາມລວມ ແລະລະອຽດ ໃນຄຳຖາມ (ຄ.11+ຄ.12) ຈະແມ່ນຕົວເລກດຽວກັນ ໃນຄຳຖາມ 7.
(ຈຳນວນ ຄົວເຮືອນ ທີ່ມີ ໃນບັນຊີລາຍຊື່ ໃນບ້ານ ). (ບາງຄັ້ງ, ອາດມີໃບສອບຖາມຫຼາຍກ່ວາ ນຶ່ງ ຄົວເຮືອນ- ເບິ່ງ ຂໍ້ (6.2 ແລະ7.2).

| ຈຳນວນແບບສອບຖາມທີ່ໄດ້ສຳພາດທັງໝົດ : | |
|---|---|
| 11. ຕາຕະລາງເບີ 5 | |
| 12. ຕາຕະລາງເບີ 4 | |
| 13. ຕາຕະລາງເບີ 7 ວັດແທກເນື້ອທີ່ | |
| ໝາຍເຫດ | |

ສິ່ງສຳຄັນ ຕາຕະລາງສອບຖາມຈະບໍ່ຄົບຕາມຈຳນວນ. ຖ້າຫາກບໍ່ໄດ້ສຳພາດຄົວເຮືອນ. ໃຫ້ອະທິບາຍເຫດຜົນທີ່ບໍ່ໄດ້ໄປສຳພາດຍ້ອນອັນໃດ, ທ່ານຍັງຈະຕ້ອງສົ່ງໃບສອບຖາມພ້ອມທັງຄຳອະທິບາຍພ້ອມ (ເບິ່ງ ຂໍ້ 5.11).
ຈາກນັ້ນໄປ, ເບື້ອງຫຼັງຂອງຕາຕະລາງ 2. ຮຽກຮ້ອງຕ້ອງມີ 3 ລາຍເຊັນ:

- ທ່ານເອງ ແລະເພື່ອຮ່ວມທີມງານ ຕ້ອງເຊັນທັງສອງຄົນ ເພື່ອສະແດງໃຫ້ເຫັນວ່າໄດ້ສຳເລັດຕາມແຜນວຽກ
- ກວດກາຂອງ ທ່ານຕ້ອງໄດ້ເຊັນໃສ່ໃບສອບຖາມ ເພື່ອຢັ້ງຢືນວ່າ ນັກກວດກາໄດ້ກວດເບິ່ງຄວາມຖືກຕ້ອງແລ້ວ
- ນາຍບ້ານ ຕ້ອງໄດ້ເຊັນ ແລະຈ້ຳກາ (ຖ້າຫາກມີກາຈ້ຳ) ໃສ່ຕາຕະລາງບັນຊີລາຍຊື່ຄົວເຮືອນ ເພື່ອຢັ້ງຢືນວ່າ ບັນຊີລາຍຊື່ຄົວເຮືອນ ແມ່ນຄົບຖ້ວນ ແລະຖືກຕ້ອງ.

# 5. ຫຼັກການທົ່ວໄປຂອງການສຳພາດຄົວເຮືອນ

## 5.1. ນັດໝາຍ ກັບຄົວເຮືອນ ຈະເຮັດແນວໃດ.

ໃຫ້ພະຍາຍາມໄປພົບນາຍບ້ານ ແລະຄະນະບ້ານ ກ່ອນຈະລົງໄປສຳພາດຄົວເຮືອນ. ຖ້າເປັນໄປໄດ້, ໃຫ້ນັດໝາຍກັບຄົວເຮືອນ ເພື່ອໄປເກັບກຳຂໍ້ມູນ. ບໍ່ຄວນໃຫ້ຄົວເຮືອນລໍຖ້າໂດຍບໍ່ຈຳເປັນ. ໃນເວລາທ່ານໄປເຖິງຄົວເຮືອນ, ແຕ່ຄົວເຮືອນບໍ່ພ້ອມໃຫ້ສຳພາດ ທ່ານອາດຈະນັດເວລາໃໝ່ເພື່ອກັບຄືນມາສຳພາດ. ຂໍຄວນຈົດຈຳ, ໃນການສ້າງແຜນການ, ນັກເດີນສຳຫຼວດຄວນຄຳນຶງເຖິງໄລຍະເວລາການເດີນທາງ ແລະການໃຊ້ເວລາໃນແຕ່ລະມື້ເພື່ອໃຫ້ທັນກັບກຳນົດເວລາການສຳຫຼວດທີ່ໄດ້ວາງໄວ້.

## 5.2. ຈະ ສຳພາດໃຜ :

ພະຍາຍາມສຳພາດຜູ້ຄອບຄອງເຮັດກະສິກຳ ຫຼືຫົວໜ້າຄົວເຮືອນ. ກໍລະນີຜູ້ຄອບຄອງບໍ່ສາມາດໃຫ້ສຳພາດ ຫຼື ບໍ່ຢູ່, ນັກເດີນສຳຫຼວດອາດຈະສຳພາດຜູ້ອື່ນທີ່ເປັນຜູ້ໃຫຍ່ ເປັນສະມາຊິກໃນຄົວເຮືອນ ແລະ ໄດ້ເຂົາຮ່ວມໃນ

ການປູກພືດ ແລະລ້ຽງສັດໃນຄົວເຮືອນ. ບໍ່ຄວນສຳພາດເດັກ, ເພື່ອນບ້ານ ຫຼື ບຸກຄົນທີ່ບໍ່ແມ່ນສະມາຊິກໃນຄົວເຮືອນ. ນັກເດີນສຳຫຼວດອາດຈະຊອກຫາບຸກຄົນທີ່ເໝາະສົມທີ່ສຸດ ທີ່ສາມາດໃຫ້ຄຳຕອບໄດ້ໃນຄົວເຮືອນດັ່ງກ່າວ.

### 5.3. ພາສາ ໃຊ້ ສຳພາດ :

ເມື່ອນັກເດີນສຳຫຼວດໄປເຖິງຄົວເຮືອນ, ຄວນໃຊ້ພາສາທີ່ທັງສອງສາມາດເຂົ້າໃຈກັນໄດ້ດີທີ່ສຸດ. ຖ້າມີລາມແປກໍຄວນລະມັດລະວັງໃນການໃຊ້ສັບໃຫ້ໃກ້ຄຽງກັບຄຳຖາມທີ່ມີຢູ່ໃນໃບສອບຖາມ.

## 5.4. ສິ່ງທີ່ຄວນປະຕິບັດ ເວລາການສຳພາດ :

ທັດສະນະຂອງຜູ້ຕອບໃນເວລາສຳພາດແມ່ນຂຶ້ນກັບການປະຕິບັດຕົນຂອງນັກເດີນສຳຫຼວດ ທີ່ຈະສຳພາດ. ປົກກະຕິຜູ້ຕອບແມ່ນຈະໃຫ້ຄວາມຮ່ວມມືຢ່າງເຕັມໃຈ ຖ້າພວກເຂົາສາມາດເຂົ້າໃຈຄຳຖາມ ແລະນັ້ນແມ່ນຄວາມອາດສາມາດ ຂອງນັກເດີນສຳຫຼວດ ທີ່ຈະຕ້ອງເຮັດ. ການຮັບຮູ້, ເຂົ້າໃຈໃນໃບສອບຖາມແລະສາລະບານຂອງປຶ້ມຄູ່ມືແມ່ນເປັນສິ່ງສຳຄັນ. ໃນການປະຕິບັດການສຳພາດ ຄວນວາງລັກສະນະ ທ່າທີສຸພາບອ່ອນນ້ອມ ແລະເປັນກັນເອງກັບຄົວເຮືອນ. ເອົາໃຈໃສ່ຟັງຢ່າງລະມັດລະວັງຄຳຕອບຂອງຜູ້ຖືກສຳພາດ ເພື່ອສະແດງໃຫ້ຜູ້ຖືກສຳພາດເຫັນເຖິງຄວາມເອົາໃຈໃສ່ ແລະສົນໃຈ ແລະໃຫ້ຄວາມສຳຄັນຕໍ່ຄຳເວົ້າທີ່ຄົວເຮືອນກຳລັງເວົ້າ.

ໂດຍປົກກະຕິ ຈະໃຊ້ເວລາຢູ່ປະມານ 1 ຊົ່ວໂມງສຳລັບການສຳພາດ. ການສຳພາດຄວນໄປຕາມຄຳຖາມເພື່ອເຮັດໃຫ້ຜູ້ຕອບເຂົ້າໃຈງ່າຍ ແລະ ບໍ່ເສຍເວລາ. ຜູ້ຖືກສຳພາດອາດຈະບໍ່ສົນໃຈ ຖ້າຫາກວ່າໃນການຖາມບໍ່ຕໍ່ເນື່ອງ ແລະຢຸດເປັນໄລຍະຍາວ ລະຫວ່າງຄຳຖາມນີ້ຫາຄຳຖາມຕໍ່ໄປ ເພາະວ່າຄົວເຮືອນອາດບໍ່ເຂົ້າໃຈເຖິງໂຄງສ້າງ ຂອງຄຳຖາມເປັນແນວໃດ ແລະໂຄງສ້າງວຽກແມ່ນຈະໄປໃນຮູບໃດ.

ທ່ານແມ່ນນັກເດີນສຳຫຼວດ, ດັ່ງນັ້ນ ບໍ່ຈຳເປັນຕ້ອງຈົດເອົາຄຳຕອບທີ່ຜູ້ຖືກສຳພາດຕອບໃນເວລານັ້ນໂລດ. ຖ້າມີຄຳຕອບໃດບໍ່ຄັກແນ, ບໍ່ຈະແຈ້ງ ທ່ານຈະຕ້ອງໃຊ້ພິກໃຫວເພື່ອກວດສອບໃຫ້ໄດ້ຄຳຕອບທີ່ຖືກຕ້ອງ ແລະ ຊັດເຈນກວ່າເກົ່າ. ໃນໄລໄລຍະ ການສຳພາດ ໃຫ້ສ້າງ ມະໂນພາບ ເພື່ອໃຫ້ເຫັນ ກິດຈະກຳດ້ານການກະສິກຳຂອງຄົວເຮືອນຈະຊ່ວຍໃຫ້ທ່ານເຂົ້າໃຈຕື່ມກ່ຽວກັບຄຳຕອບທີ່ຖືກຕ້ອງ. ຕ້ອງແນ່ໃຈຕື່ມເວລາ ຂຽນຄຳຕອບເຊັ່ນ: ເພດ, ອາຍຸຂອງສັດລ້ຽງ ເຂົ້າໃນບ່ອນທີ່ຕ້ອງການ ບັນທຶກ. ຕົວຢ່າງອາດປະກົດເຫັນຂໍ້ມູນໃດນຶ່ງທີ່ບໍ່ກົມກ່ຽວກັນ ເຊັ່ນສົມມຸດວ່າ: ໃນພາກ ສ ບໍ່ມີຂໍ້ມູນ ກ່ຽວກັບພືດຢືນຕົ້ນ (ໃນຕາຕະລາງ 5), ແຕ່ພັດມີຂໍ້ມູນເນື້ອທີ່ພືດຢືນຕົ້ນໄດ້ຈົດໄວ້ໃນ ພາກ ຄ, ຫຼືຕົວຢ່າງມີຂໍ້ມູນ ກ່ຽວກັບເຄື່ອງມືເກັບກ່ຽວຜົນຜະລິດຖົ່ວເຫຼືອງ ໃນພາກ ຍ ແຕ່ພັດບໍ່ມີຂໍ້ມູນຖົ່ວເຫຼືອງໃນພາກ **ງ** ຫຼື ພາກ **ຈ.**

ໃນເວລາສຳພາດນັກເດີນສຳຫຼວດຈະຕ້ອງເປັນກາງຢູ່ຕະຫຼອດເວລາ. ຕ້ອງລະມັດລະວັງການໃຊ້ຄຳຖາມທີ່ມີລັກສະນະຊັກຈູງ ເພື່ອໃຫ້ຜູ້ຕອບເຫັນດີນຳ ຄຳເວົ້າໃນເວລາຖາມຄຳຖາມ (ເບິ່ງໃນຂໍ້5.5). ແລະຕ້ອງຫຼີກລ້ຽງການໃຫ້ສັນຍານແທນຄຳຕອບ ດວ້ຍສາຍຕາ ຫຼືໃຊ້ສຳນຽງແຂງເຊັ່ນ: " ຖືກຕ້ອງ ຫຼື ຜິດໃດ ". ຖ້າເຫັນວ່າຄຳຕອບຍັງບໍ່ຈະແຈ້ງ (ຍັງເປັນທີ່ສົງໃສ) ແລະ ຕ້ອງການຄຳຕອບທີ່ດີກວ່ານັ້ນ ຈຳເປັນຕ້ອງຊອກຄົນຫາຄຳຕອບ ທ່ານກໍຄວນວາງຕົວເປັນກາງເຊັ່ນ: "ທ່ານຈະອະທິບາຍຕື່ມອີກຈັກໜ່ອຍໄດ້ບໍ່?" ບໍ່ຄວນໃຊ້ຄຳຖາມທີ່ມີລັກສະນະຕອບໃຫ້ພ້ອມ ຫຼືແນະນຳຄຳຕອບເຊັ່ນ : "ທ່ານບໍ່ມີໝູແມ່ນບໍ່ ?".

ອາດຈະແນະນໍາໃນລັກສະນະດັ່ງລຸ່ມນີ້ໄດ້ :

- ກ່ອນຈະສໍາພາດ ທ່ານຈະຕ້ອງໄດ້ແນະນໍາຕົນເອງ ແລະອະທິບາຍຈຸດປະສົງ, ເປົາໝາຍຂອງການສໍາຫຼວດຈາກນັ້ນກໍສະເໜີສິ່ງທີ່ຕ້ອງການຈາກຄົວເຮືອນ. ເອົາໃຈໃສ່ສ້າງຄວາມເປັນກັນເອງກັບຄົວເຮືອນຕະຫຼອດເວລາແຕ່ເລີ້ມຕົນຈົນຈົບການສໍາພາດ.
- ຖ້າຜູ້ຖືກສໍາພາດຍັງມີຄວາມລະແວງສົງໃສ ກັງວົນກ່ຽວກັບຄໍາຕອບໃນຄໍາຖາມ ທ່ານຈະຕ້ອງໄດ້ອະທິບາຍຄືນວ່າທຸກໆຄໍາຕອບໃນໃບສອບຖາມນີ້ຈະຖືເປັນຄວາມລັບ (ເບິ່ງຂໍ້ 5.12). ແລະຕ້ອງແນໃຈວ່າບໍ່ມີສະມາຊິກຂອງຄົວເຮືອນອື່ນຢູ່ທີ່ນັ້ນໃນເວລາສໍາພາດ.
- ໃຫ້ໂຄສະນາຊວນເຊື່ອ ແລະ ຊັກຈູງ ຄົວເຮືອນ ເພື່ອໃຫ້ເຂົາເຈາ ໃຫ້ການຮ່ວມໄມ້ຮ່ວມມືນໍາ.
- ກະກຽມ ທຸກ ໆ ຄໍາຕອບລ່ວງໜ້າໄວ້ເພື່ອຄົວເຮືອນອາດຈະມີຄໍາຖາມ, ຖ້າທ່ານບໍ່ສາມາດອະທິບາຍຫຼືບໍ່ ສາມາດຕອບ ທ່ານຈະຕ້ອງຊອກຫານັກກວດກາ ຂອງ ທ່ານ ເພື່ອຂໍຄໍາເຫັນ.
- ເມື່ອສໍາເລັດການສໍາພາດນັກເດີນສໍາຫຼວດຄວນຂອບໃຈຕໍ່ຜູ້ໃຫ້ສໍາພາດທີ່ໄດ້ໃຫ້ການຮ່ວມມື

## 5.5 ການຖາມໃຫ້ໃຊ້ຄໍາເວົາ ຕາມຄວາມໝາຍ ໃນໃບສອບຖາມ

ຄວນເອົາໃຈໃສ່ທີ່ສຸດ ຄໍາເວົາໃນໃບສອບຖາມ. ສ່ວນທີ່ສໍາຄັນທີ່ສຸດຂອງນັກເດີນສໍາຫຼວດແມ່ນ <u>ຖາມຄໍາຖາມທີ່ມີຄວາມໝາຍອັນດຽວກັນກັບຄໍາເວົາໃນໃບສອບຖາມ.</u> ນີ້ແມ່ນຫົນທາງດຽວທີ່ຮັບປະກັນໄດ້ວ່າ ການເກັບກໍາຂໍ້ມູນແມ່ນຖືກຕ້ອງ, ເປັນເອກະພາບກັນໃນທົ່ວປະເທດ ແລະ ຊ່ວຍໃຫ້ການສໍາພາດນັ້ນລະອຽດດີ.

ເວົາ ແລະອະທິບາຍຈະແຈ້ງຈະຊ່ວຍໃຫ້ຜູ້ຕອບເຂົາໃຈແຈ້ງໃນແຕ່ລະຄໍາຖາມ. ອ່ານຄໍາຖາມຄືນໃຫ້ຄົວເຮືອນຟັງອີກເທື່ອນຶ່ງມີຄວາມຈໍາເປັນ. ຖ້າຄົວເຮືອນຍັງບໍ່ທັນເຂົາໃຈຄໍາຖາມ ທ່ານຈະຕ້ອງອະທິບາຍອີກ ແລະໃຊ້ວິທີອະທິບາຍທີ່ໄດ້ໃຫ້ໄວ້ໃນຂໍ້ທີ່ 6 ແລະ 7.
ບາງຄໍາຖາມ, ເຊັ່ນໃນຄໍາຖາມ 46 (ຕາຕະລາງ 5), ມີຄໍາເວົາ "ຄົວເຮືອນ (ຫົວໜ່ວຍການຄອບຄອງ)". ໃຫ້ນໍາໃຊ້ຄໍາເວົາທີ່ເຂົາໃຈງ່າຍ ແລະ ມີ ຄວາມໝາຍດຽວກັນ. ປົກກະຕິ, ທ່ານຕ້ອງໃຊ້ ຄໍາຖາມ ທີ່ໝາຍເຖິງທຸກຄົນ (ບໍ່ແມ່ນໃຜຜູ້ນຶ່ງ) ໃນຄົວເຮືອນ ດັ່ງ ຄໍາຖາມ 46, ຕົວຢ່າງ, ຈະຕ້ອງອ່ານຄໍາຖາມວ່າ ຄົວເຮືອນຂອງ ທ່ານນີ້ໄດ້ລ້ຽງງົວບໍ່? ຖ້າ ເຫັນວ່າຄົວເຮືອນໄດ້ແບ່ງເປັນສອງຫົວໜ່ວຍການຄອບຄອງ (ໃຫ້ເບິ່ງ ຂໍ້ 6.2 ແລະ 7.2), ຄໍາຖາມ 46 ໃຫ້ອ່ານວ່າ " ຫົວໜ່ວຍ ການຄອບຄອງຂອງ ທ່ານ ໄດ້ລ້ຽງງົວບໍ່?".

ບາງຄໍາຖາມອາດມີຄໍາຖາມຍ່ອຍລະອຽດອີກ. ຄໍາຖາມເລົ່ານັ້ນ ຄວນໃຊ້ຖາມເຈາະຈີ້ມຜູ້ຖືກສໍາພາດ, ຄວນອ່ານໃຫ້ຜູ້ຕອບຊາບຄໍາຖາມນໍາ. ເຊັ່ນ ຄໍາຖາມ 10 ຂອງຕາຕະລາງ 5, ໃຫ້ຖາມວ່າ : "ຄໍາຖາມກ່ຽວກັບ... ຄົວເຮືອນຂອງທ່ານມີເນື້ອທີ່ປະເພດລຸ່ມນີ້ບໍ່..?" . ຄໍາຖາມ 3 (ຂອງຕາຕະລາງ 4) ແລະຄໍາຖາມ 1 (ຂອງຕາຕະລາງ 5) ມີ " ຄໍາຍ່ອຍໃນຂໍ້ຄວນລະວັງຊຶ່ງຕ້ອງຖາມເຈາະຈີ້ມຜູ້ຖືກສໍາພາດ" ຕ້ອງອ່ານໃຫ້ຜູ້ກ່ຽວຊາບນໍາດ້ວຍ.

## 5.6. ການຈັດວາງລະບຽບແບບແຜນຂອງໃບສອບຖາມ:

**ການນິຍົມໃຊ້ ແບບ ໃບສອບຖາມ :**

- ຂອບສີມິ່ນ ມັນຈະຊ່ວຍໃຫ້ນັກເດີນສໍາຫຼວດຊອກຫາຄໍາຖາມງ່າຍຂື້ນ. ສ່ວນບ່ອນ ທີ່ນັກເດີນສໍາຫຼວດຈະ ຂຽນຄໍາຕອບລົງໄປນັ້ນ<u>ແມ່ນບ່ອນທີ່ ປະວ່າງ ໂດຍບໍ່ມີສີ</u>. ຖ້ານັກເດີນສໍາຫຼວດຕ້ອງການຢາກໝາຍ

ເຫດ ຫຼືຄິດໄລ່ອັນໃດອັນນຶ່ງ ຄວນໃຊ້ບ່ອນເປົ່າຫວ່າງຂອງຕາຕະລາງ (ຫຼືເບື້ອງຫຼັງຂອງໃບສອບຖາມ).

- ຄຳຖາມ ທີ່ ຈະຖາມ ແມ່ນໄດ້ສະແດງຢູ່ຫ້ອງທີ່ມີສີມົ່ນ ຂອງໃບສອບຖາມ. ໃນການຖາມຄຳຖາມ, ນັກເດີນສຳຫຼວດຄວນອ່ານ ທຸກ ໆ ຢ່າງທີ່ໄດ້ຂຽນຢູ່ໃນຂອບເຂດນັ້ນ. ເພາະສະນັ້ນ, ບໍ່ຄວນອ່ານກາຍຄຳຖາມ. ຕົວຢ່າງ : ຄຳຖາມ 81(ຕາຕະລາງ 5) ຄວນອ່ານ "ໃນ 12 ເດືອນຜ່ານມາ, ຄົວເຮືອນທ່ານໄດ້ນຳໃຊ້ແຮງງານນອກບໍ່ ?"; ຄຳຖາມ 82 ຄວນສືບຕໍ່ຖາມ ໂດຍອ່ານ 4 ຄຳຖາມດັ່ງນີ້ : "ຈ່າຍຄ່າແຮງງານໃຫ້ພວກເຂົາດ້ວຍ: ຈ່າຍເປັນເງິນສົດບໍ່?, ຈ່າຍເປັນຜົນຜົນຜະລິດບໍ່?, ແລກປ່ຽນແຮງງານບໍ່?, ຮູບການອື່ນໆ?".

- ໃບສອບຖາມມີບາງ <u>ຫ້ອງຫຼ່ຽມຍາວມີລັກສະນະແນະນຳ</u> ຢູ່ໃນເຂດທີ່ມີສີມົ່ນ, ມີ ຫ້ອງຫຼ່ຽມຍາວທີ່ຂີດເປັນເສັ້ນຄູ່ນັ້ນແມ່ນເພື່ອໃຫ້ນັກເດີນສຳຫຼວດເບິ່ງບໍ່ຈຳເປັນອ່ານໃຫ້ຄົວເຮືອນຟັງ. ຕົວຢ່າງ : ໃນຫ້ອງຫຼ່ຽມຍາວ ອັນນຶ່ງຂຽນວ່າ : "ຜ່ານໄປ" ໝາຍວ່າ (ເບິ່ງຈຸດຕໍ່ໄປ); ບາງອັນແນະນຳວ່າ ໃຫ້ ໝາຍ (√)ໃສ່ຫ້ອງສີ່ຫຼ່ຽມ ( ຕົວຢ່າງຂອງຄຳຖາມ12 ຂອງຕາຕະລາງ 5); ແລະມີຂໍ້ມູນສຳລັບນັກເດີນສຳຫຼວດບັນທຶກເອງ ໂດຍອີງໃສ່ຄຳຕອບຂອງຄຳຖາມຜ່ານມາ ( ເຊັ່ນ ຄຳຖາມ 14 ຂອງຕາຕະລາງ 5).

- ບາງຄຳຖາມບໍ່ກ່ຽວພັນກັບຄົວເຮືອນ; ຕົວຢ່າງ : ບໍ່ຈຳເປັນຈະຖາມຄົວເຮືອນກ່ຽວກັບຮູບການການຈ່າຍຄ່າແຮງງານ (ຂອງຄຳຖາມ 82 ຂອງຕາຕະລາງ 5) ຖ້າຫາກວ່າ ຄົວເຮືອນນັ້ນບໍ່ໄດ້ນຳໃຊ້ແຮງງານຂ້າງນອກ (ຄຳຖາມ 81). ໃຫ້ປະຕິບັດຕາມການແນະນຳໂດຍມີ ສັນຍາລັກ ສະແດງໄວ້ " → ຄ.82" ມັນຂຶ້ນຢູ່ກັບຄຳຕອບທີ່ວ່າ ຖ້າມີຄຳຕອບວ່າ " ໄດ້ນຳໃຊ້:" ຢູ່ຄຳຖາມ 81 ໃຫ້ຖາມຕໍ່ຄຳຖາມ 82, ແຕ່ ຄຳຕອບພັດວ່າ "ບໍ່ໄດ້ນຳໃຊ້" ຄວນຂ້າມໄປຫາຄຳຖາມ 84. ຖ້າບໍ່ໄດ້ແນະນຳອາດເຮັດໃຫ້ນັກເດີນສຳຫຼວດເສຍເວລາໄປຕາມຂັ້ນຕອນ.

- ໃນພາກ ດ ນັກເດີນສຳຫຼວດຖາມທຸກໆຄົນໃນຄົວເຮືອນ, ແຕ່ລະຄຳຖາມແມ່ນໄດ້ຈ້ຳເມັດ "....." ນັ້ນແມ່ນສຳລັບຊື່ຂອງຜູ້ຖືກຖາມ ຫຼືອາດຈະແມ່ນ "ຜູ້ຍິງ ຫຼື ຜູ້ຊາຍ". ດັ່ງນັ້ນ ຖ້າຖາມຄຳຖາມກ່ຽວກັບຊື່ຂອງ "ໂອແກ້ວ" ໃນຄຳຖາມ 68 ("....ຜູ້ຍິງ ຫຼືຜູ້ຊາຍ") ຄວນຖາມວ່າ "ໂອແກ້ວແມ່ນຜູ້ຍິງ ຫຼືຜູ້ຊາຍ".
- ຢູ່ຫຼາຍຄຳຖາມການໝາຍຄຳຕອບໂດຍການໃຊ້ ເຄື່ອງໝາຍ (√) ຄຳຕອບ ໃສ່ຫ້ອງສີ່ຫຼ່ຽມ, ຕາມປົກກະຕິ ໝາຍ (√ ) ໄດ້ພຽງຄຳຕອບດຽວ, ເຊັ່ນ : "ແມ່ນ/ບໍ່ແມ່ນ". ບ່ອນທີ່ໝາຍ (√ ) ຄຳຕອບດຽວອາດຈະພົວພັນກັບຄຳຖາມອື່ນ ເຊັ່ນ : ຄຳຖາມ 80(ຕາຕະລາງ5). ແຕ່ຍົກເວັ້ນພຽງແຕ່ຄຳຖາມ 10, 12, 29, 37, 59, 82, 85 ແລະ 88. ໃນນີ້ ທ່ານຄວນຖາມ ຜູ້ຖືກສຳພາດ ແຕ່ລະຂໍ້ໆ ໄປ, ຄຳຕອບອາດເປັນໄປໄດ້ຫຼາຍໆ ກໍລະນີ ແລະອາດຈະ ໝາຍ (√ ) ໃສ່ຄຳຕອບດຽວ ຫຼື ຫຼາຍກ່ວານັ້ນ ( ແຕ່ລະຄຳຖາມສາມາດໝາຍ (.√ )ໄດ້).

## 5.7 ຈະຈົດກ່າຍ ຄຳຕອບ ຄືແນວໃດ

ການຈົດກ່າຍໃສ່ໃນໃບສອບຖາມ, ທ່ານໝັ້ນໃຈແລ້ວບໍ່ວ່າໄດ້ຈົດກ່າຍຖືກຕ້ອງຄົບຖ້ວນ ແລະຂຽນຈະແຈ້ງໂດຍໃຊ້ບິກສີດຳ ຫຼື ສີຟ້າ. ສຳລັບຕົວເລກແມ່ນໃຊ້ຕົວເລກໂຣມັນ (0,1, 2,3,4,5,6,7,8,9 ) ບໍ່ໃຫ້ໃຊ້ຕົວເລກພາສາລາວ. ຕົວເລກທະສະນິຍົມ (ເລກເສດ) ຫຼັງຈຸດ ໃຫ້ ຂຽນ ແບບລະບົບ ພາສາຝຣັ່ງເສດ" 1,25" ແທນທີ່ຈະຂຽນ

“1.25” (ຫ້າມຂຽນ).

ຄຳຕອບທີ່ນັກເດີນສຳຫຼວດຈະຕ້ອງໄດ້ ຈົດ ໃນໃບສອບຖາມມີ 4 ປະເພດ:

ໃຊ້ເຄື່ອງໝາຍ (√ ) ໃສ່ຫ້ອງສີ່ຫຼ່ຽມ (ຄຳຖາມ 81 ຂອງຕາຕະລາງ 5)

**81.** ໃນ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ນຳໃຊ້ແຮງງານນອກບໍ່?

| | | | |
|---|---|---|---|
| ໄດ້ | ☐ | 1 | → *ຜ່ານໄປຫາຄຳຖາມ 82* |
| ບໍ່ໄດ້ | ☐ | 2 | → *ຂ້າມໄປຫາຄຳຖາມ 84* |

ຂີດວົງມົນອ້ອມເອົາຄຳຕອບ (ຄຳຖາມ 17 ຂອງຕາຕະລາງ 5)

**17.**
ດິນຕອນນີ້ເປັນ
ຂອງຕົນເອງ ຫລືເຊົ່າ?

1 = ຂອງຕົນເອງ

2 = ເຊົ່າ *(ຖາມຕໍ່ຄຳຖາມ18)*

3 = ອື່ນໆ *(ໃຫ້ຂຽນບອກແຈ້ງ)*

1 2
3

ຂຽນ ຈຳນວນຕົວເລກເຂົາໃນຮູບສີ່ຫຼ່ຽມ (ຄຳຖາມ 11 ຂອງຕາຕະລາງ 5)

**11.** ດິນກະສິກຳທັງໝົດທີ່ທ່ານມາຂ້າງເທິງນັ້ນມີຈັກຕອນ ? ☐

ຂຽນຕາມຄຳເວົາທີ່ເປັນຄຳຕອບຂອງຜູ້ຕອບ (ຄຳຖາມ 70 ຂອງຕາຕະລາງ 5)

**70.**
ໃນ 12 ເດືອນຜ່ານມາ
ອາຊີບຕົ້ ນຕໍ...ແມ່ນຫຍັງ?

*ໃຊ້ສະເພາະ*
*ຫກສກ*

## 5.8. ຈະຈົດກ່າຍຂໍ້ມູນ ເນື້ອທີ່ ຄືແນວໃດ

ຄຳຖາມ ກ່ຽວກັບເນື້ອທີ່, ໃຫ້ນຳໃຊ້ ທັງສອງຫົວໜ່ວຍ ຄື : ຫົວໜ່ວຍທ້ອງຖິ່ນທີ່ເຄີຍໃຊ້ ແລະ ເຮັກຕາ. ຫົວໜ່ວຍທ້ອງຖິ່ນທີ່ໃຊ້ແມ່ນທຸກໆຫົວໜ່ວຍທີ່ທ້ອງຖິ່ນເຄີຍນຳໃຊ້ ໃນ ບ້ານຂອງໃຜລາວ ຍົກເວັ້ນ ຫົວໜ່ວຍທີ່ເອີ້ນວ່າ “ເຮັກຕາ”.

<u>ກໍລະນີຜູ້ຕອບລາຍງານເປັນເຮັກຕາ :</u> ແມ່ນໃຫ້ຂຽນຄຳຕອບເຂົາໂດຍກົງໃນຫ້ອງສີ່ຫຼ່ຽມ ທີ່ມີເຄື່ອງໝາຍ “ເຮັກຕາ”. ນັກເດີນ ສຳຫຼວດບໍ່ຈຳເປັນຈະຂຽນຫຍັງເຂົາຕື່ມໃນແຖວຫົວໜ່ວຍທ້ອງຖິ່ນອີກ.

<u>ກໍລະນີຜູ້ຕອບລາຍງານເປັນຫົວໜ່ວຍທ້ອງຖິ່ນ :</u> ໃຫ້ຂຽນຄຳຕອບນັ້ນເຂົາໃນຫ້ອງ ”ຫົວໜ່ວຍທ້ອງຖິ່ນ” ໂດຍຂຽນ ຕາມຄຳບອກຂອງຜູ້ຕອບຢ່າງຖືກຕ້ອງ ເຊັ່ນ : “3 ໄລ່”, “ປະມານ 20ແມັດ ຄູນ 30 ແມັດ” ຫຼື “ໃຊ້ແນວເຂົາປູກ 50 ກິໂລ”. ຈາກນັ້ນ ຈຶ່ງຄ່ອຍຄິດໄລ່ມາເປັນເຮັກຕາ ໂດຍໃຊ້ຕາຕະລາງຊ້ອນທ້າຍ(X)ຊ່ວຍໃນການຄິດໄລ່ ແລ້ວຈົດລົງໃສ່ຫ້ອງ “ເຮັກຕາ”

ການຈົດກ່າຍຈຳນວນເຮັກຕາເຂົາຕາຕະລາງໃນຫ້ອງເຮັກຕານັ້ນ ໄດ້ກຳນົດຫຼັງຈຸດແມ່ນ <u>2-3 ຕົວເລກ</u> ຕົວຢ່າງ : “1,00”, “1,25”, “0,75” ແລະ “0,125”. ກໍລະນີ 0 ເຮັກຕາ ກໍໃຫ້ຂຽນ 0 ໂລດ ບໍ່ໃຫ້ປະຫວ່າງເປົ່າ. <u>ຫ້າມບໍ່ໃຫ້ຂຽນເຮັກຕາຕໍ່ຫຼັງຕົວເລກ</u> ຕົວຢ່າງ : “1,25 ເຮັກຕາ”.

## 5.9. ວິທີເຮັດໃຫ້ຂໍ້ມູນດ້ານເນື້ອທີ່ ຖືກຕ້ອງ

ໜ້າທີ່ອັນສຳຄັນທີ່ສຸດຂອງນັກເດີນສຳຫຼວດຄືຕ້ອງແນ່ໃຈວ່າຂ່າວສານທີ່ໄດ້ມາຈາກການສຳພາດແມ່ນຖືກຕ້ອງ ເປັນຈິງ ແລະ ຕໍ່ບັນຫານີ້ ສາມາດກວດສອບໄດ້ຫຼາຍວິທີທາງ.

<u>**ກວດກາເບິ່ງດິນ ຂອງຜູ້ຕອບ**:</u> ເມື່ອໃດກໍຕາມ ຖ້າຜູ້ຕອບຫາກມີຕອນດິນໃນບ້ານທີ່ລາວກຳລັງອາໄສຢູ່ ນັກເດີນສຳຫຼວດຈະຕ້ອງໄດ້ກວດກາເບິ່ງຕອນດິນນັ້ນ (ໃບສອບຖາມລະອຽດ). ເປົາໝາຍຕົນຕໍ ແມ່ນຈະຊ່ວຍໃຫ້ການເກັບກຳຂໍ້ມູນຂອງຕອນ ດິນ ນັ້ນຖືກຕ້ອງ ແລະ ປະເມີນຜົນໄດ້ຢ່າງໄວວາ ກ່ຽວກັບຄວາມກວ້າງ, ຄວາມຍາວ ຂອງຕອນດິນ ແລະຄິດໄລ່ເນື້ອທີ່ ຂອງຕອນດິນ ດັ່ງກ່າວ. ເຖິງແມ່ນວ່າໃນເວລາສຳຫຼວດຕອນດິນ ດັ່ງກ່າວອາດຈະບໍ່ມີພືດໃດໆ ປູກຢູ່ແຕ່ທ່ານອາດສາມາດຕີລາຄາເບິ່ງການນຳໃຊ້ດິນມາກ່ອນໜ້ານີ້ໄດ້. ນັກເດີນສຳຫຼວດຄວນຕ້ອງແຕ້ມແຜນອາດເນື້ອທີ່ດິນດັ່ງກ່າວໃສ່ຂ້າງຫຼັງຂອງໃບສອບຖາມກໍໄດ້.

<u>**ການລາຍງານ ເນື້ອທີ່ ໄຮ່**:</u> ມີບາງຕອນທີ່ໄກຈາກໝູ່ບ້ານ ເຊິ່ງຍາກທີ່ຈະໄປເບິ່ງຕອນດິນດັ່ງກ່າວ. ເອກກະສານດິນຂອງຊາວກະສິກອນທີ່ເສຍພາສີທີ່ດິນອາດຈະບໍ່ຈະແຈ້ງ. ຖ້າຈຳເປັນ ຢາກໄດ້ຂໍ້ມູນບາງຢ່າງ ເພື່ອ ຊ່ວຍຄາດຄະເນເນື້ອທີ່, ຂໍ້ມູນແນວປູກທີ່ໃຊ້, ຜົນຜະລິດທີ່ເກັບກ່ຽວໄດ້ ຈຳນວນມື້ປູກ ຫຼື ເກັບກ່ຽພືດ ເນື້ອທີ່ເກັບກ່ຽວ, ເວລາປູກ ຫຼື ເກັບກ່ຽວພືດ, ຫຼື ເຊິ່ງສາມາດນຳມາສົມທຽບ ແລະ ຄິດໄລ່ ເນື້ອທີ່ ດັ່ງກ່າວ. ຜູ້ຖືກຕອບອາດຢ້ານກົວ ເວລາ ລາຍງານ ດ້ານເນື້ອທີ່ໄຮ່ ແຕ່ນັກເດີນສຳຫຼວດ ຈະຕ້ອງສ້າງຄວາມໝັ້ນໃຈໃຫ້ແກ່ຜູ້ຕອບວ່າຈະບໍ່ມີຜົນກະທົບສິ່ງທີ່ບໍ່ດີຄືນໃຫ້ເຂົາເຈົາ, ພວກເຮົາຕ້ອງການຂໍ້ມູນເພື່ອຄິດໄລ່ໃຫ້ເຫັນຮູບພາບຕາມຈຸດປະສົງຂອງການສຳຫຼວດເທົ່ານັ້ນ.

<u>**ການຕີລາຄາ ການລາຍງານ ຂໍ້ມູນ ດ້ານເນື້ອທີ**:</u> ທຸກຂໍ້ມູນໃນການສຳຫຼວດ, ໜ້າທີ່ຂອງນັກເດີນສຳຫຼວດບໍ່ພຽງແຕ່

ຈົດກ່າຍເຂົາໃນ ໃບສອບຖາມຕາມຄຳຕອບ ຂອງຜູ້ຖືກສຳພາດ, ແຕ່ທ່ານຈະຕ້ອງສັງເກດວ່າຄຳຕອບ ນັ້ນສົມເຫດສົມຜົນຫຼືບໍ່. ຖ້າຫາກປະກົດເຫັນວ່າ ຂໍ້ມູນຍັງບໍ່ຈະແຈ້ງເທື່ອ. ອາດຈະຖາມຜູ້ຕອບຄືນເພື່ອຢັ້ງຢືນອີກເທື່ອນຶ່ງ.
<u>ການວັດແທກເນື້ອທີ່ :</u> ນັກເດີນສຳຫຼວດຕ້ອງໄດ້ລົງວັດແທກເນື້ອທີ່ຂອງຕອນດິນສຳຫຼັບຄົວເຮືອນ (ເບິ່ງໃນຂໍ້ທີ່ 7)

## 5.10 ຖ້າ ຂຽນ ຜິດ ຈະແກ້ແນວໃດ

ຖ້ານັກເດີນສຳຫຼວດຂຽນຜິດ ຫຼືຜູ້ຕອບອາດຈະປ່ຽນຄຳຕອບ, ໃຫ້ຂີດຂ້າ ຄຳຕອບທີ່ບໍ່ຖືກຕ້ອງ ແລ້ວຂຽນຄຳຕອບທີ່ຖືກຕ້ອງຍອງໃສ່ແທນ. ຫ້າມບໍ່ໃຫ້ລຶບຄຳຕອບທີ່ຜິດນັ້ນ ຕົວຢ່າງ :

**81.** ໃນ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ນຳໃຊ້ແຮງງານນອກບໍ່?

| | | |
|---|---|---|
| ໄດ້ | ☐ 1 | → *ຜ່ານໄປຫາຄຳຖາມ 82* |
| ບໍ່ໄດ້ | ☐ 2 | → *ຂ້າມໄປຫາຄຳຖາມ 84* |

**17.**
ດິນຕອນນີ້ເປັນ
ຂອງຕົນເອງ ຫລືເຊົ່າ?

1 = ຂອງຕົນເອງ
2 = ເຊົ່າ *(ຖາມຕໍ່ຄຳຖາມ18)*
3 = ອື່ນໆ *(ໃຫ້ຂຽນບອກແຈ້ງ)*

1 2
3

**11.** ດິນກະສິກຳທັງໝົດທີ່ກ່າວມາຂ້າງເທິງນັ້ນມີຈັກຕອນ ? ☐

ຂໍ້ມູນທີ່ບັນທຶກໃນ ພາກ **ຄ**, **ງ**, **ຈ**, **ສ** ແລະ **ດ (ຕາຕະລາງ** 5), ທ່ານ ອາດຈະຂ້າທັງໝົດແຖວນັ້ນ. ແລ້ວຂຽນຄຳຕອບທີ່ຖືກຕ້ອງ ຍອງໃສ່ເທິງ/ລຸ່ມ ແທນ.

## 5.11 ແຕ່ລະຄົວເຮືອນ/ຫຼືຫົວໜ່ວຍການຄອບຄອງ ຕ້ອງມີ ໃບສອບຖາມ.

ເວລາ ທ່ານ ສົ່ງໃບສອບຖາມທີ່ຈົດກ່າຍຄົບຖ້ວນແລ້ວນັ້ນໃຫ້ນັກກວດກາ. ນັກກວດກາຈະກວດຄືນ ເບິ່ງວ່າແຕ່ລະໃບສອບຖາມ ໄດ້ສຳພາດ ແຕ່ລະຄົວເຮືອນແລ້ວບໍ່ (ໃບສອບຖາມລວມ ຫຼືໃບສອບຖາມລະອຽດ). ເຖິງແມ່ນວ່າບໍ່ສາມາດສຳພາດຄົວເຮືອນນັ້ນໄດ້ກໍຕາມ ຕ້ອງສົ່ງໃບສອບຖາມເປົ່າ ຂອງແຕ່ລະຄົວເຮືອນໃນບ້ານ ນັ້ນ. <u>**ຄົວເຮືອນໃດທີ່ທ່ານຍັງບໍ່ທັນໄດ້ສຳພາດດ້ວຍເຫດຜົນໃດກໍຕາມ, ໃບສອບຖາມຂອງຄົວເຮືອນນັ້ນຈະລວມຢູ່ໃນຊຸດ ຂອງບ້ານນັ້ນ**</u> ຂຽນລາຍລະອຽດ, ເຫດຜົນຕ່າງໆວ່າເປັນຫຍັງຈຶ່ງບໍ່ສາມາດສຳພາດຄົວເຮືອນນັ້ນໄດ້. <u>**ມັນບໍ່ເໝາະປານໃດຖ້າ ນັກເດີນສຳຫຼວດ ຕອບພຽງວ່າແມ່ນຄົວເຮືອນ ທີ່ບໍ່ມີດິນກະສິກຳ ຫຼືບໍ່ໄດ້ລ້ຽງສັດ ຫຼືຕອບພຽງແຕ່ວ່າບໍ່ສາ**</u>

ມາດໄປສຳພາດໄດ້.ເຖິງແມ່ນວ່າຄົວເຮືອນຫາກບໍ່ມີ ດິນ ຫຼືສັດລ້ຽງ ກໍຕ້ອງໄດ້ປະກອບຂໍ້ມູນໃສ່ໃບສອບຖາມ.

## 5.12. ການຮັກສາເປັນຄວາມລັບ :

ການສຳຫຼວດຈະໄດ້ຮັບ ຜົນສຳເລັດ, ກໍຕໍ່ເມື່ອຊາວກະສິກອນ ເຊື່ອໝັ້ນວ່າຂ່າວສານທີ່ເຂົາເຈາໄດ້ໃຫ້ນັກເດີນສຳຫຼວດນັ້ນຈະຖືກຮັກສາເປັນຄວາມລັບ. ໝາຍຄວາມວ່າຄຳຕອບຂອງຜູ້ຖືກສຳພາດບໍ່ສາມາດເປີດເຜີຍໃຫ້ຜູ້ໃດຜູ້ນື່ງ ຫຼືອົງການໃດນື່ງຟັງ. ນອກຈາກນັກກວດກາ ແລະພະນັກງານຈາກຫ້ອງການສຳຫຼວດສະຖິຕິກະສິກຳ.

ຂໍ້ມູນຂ່າວສານທີ່ໄດ້ຈາກການສຳຫຼວດນີ້ ຈະໃຊ້ເປັນແຕ່ຂ່າວສານສະຖິຕິ ລວມ, ຈະບໍ່ໃຊ້ເປັນຕົວເລກຢັ້ງຢືນໃນການເກັບພາສີ ຫຼື ເປາໝາຍອື່ນ, ຈະບໍ່ມີຜົນກະທົບໃດໆ ຕໍ່ບຸກຄົນໃດນື່ງ ມັນພຽງເປັນ ຜົນທີ່ໄດ້ຮັບຈາກການສຳຫຼວດສະຖິຕິກະສິກຳເທົ່ານັ້ນ .
ຫຼັກການສຳຄັນທີ່ສຸດ ໃນການຮັກສາຄວາມລັບ ມີ:

- ນັກເດີນສຳຫຼວດຈະບໍ່ເວາເກີນໜ້າທີ່ຂອງຕົນທີ່ໄດ້ຮັບມອບໝາຍໃນເວລາຝຶກອົບຮົບ
- ບໍ່ໃຫ້ຜູ້ໃດຜູ້ນື່ງເຂາຟັງນຳໃນເວລາສຳພາດຄົວເຮືອນ, ນອກຈາກນັກກວດກາ ຫຼື ພະນັກງານຈາກຫ້ອງການສຳຫຼວດ.
- ຢ່າປະໃບສອບຖາມທີ່ໄດ້ສອບຖາມສຳເລັດແລ້ວໃຫ້ຜູ້ອື່ນເບິ່ງ.
- ຖ້າເປັນໄປໄດ້, ໃນເວລາສຳພາດຄວນຢູ່ ສອງຕໍ່ສອງ ກັບຫົວໜ້າຄົວເຮືອນ ຫຼື ກັບສະມາຊິກຂອງ ຄົວເຮືອນນັ້ນເທົ່ານັ້ນ.

## 6. ການຈົດກ່າຍໃບສອບຖາມລວມ
## (ຕາຕະລາງ 4)

ຄຽງຄູ່ກັບການເກັບກຳຂໍ້ມູນ ນຳ ຄົວເຮືອນທີ່ເລືອກເປັນຕົວແທນ ພາຍໃນບ້ານທີ່ເປັນຕົວແທນ, ທ່ານເອງ ຍັງ ຈະຕ້ອງໄດ້ເກັບກຳຂໍ້ມູນ ກັບ ທຸກໆ ຄົວເຮືອນ ທີ່ຍັງເຫຼືອ (ຄົວເຮືອນ ທີ່ຍັງບໍ່ໄດ້ເລືອກເປັນຄົວເຮືອນຕົວແທນ/ຫົວໜ່ວຍການຄອບຄອງ ໃສ່ໃບສອບຖາມລວມ (ຕາຕະລາງ 4) ພາຍໃນບ້ານດັ່ງກ່າວດ້ວຍ.

### 6.1 ກ່ອນເລີ້ມລົງມືສຳພາດ

ກ່ອນຈະເລີ້ມ ລົງມືສຳພາດ, ທ່ານ ຕ້ອງຈົດກ່າຍ ຂໍ້ມູນ ລະຫັດທີ່ຕັ້ງໃສ່ໜ້າປົກຂອງຕາຕະລາງ. ທຳອິດ ຈົດກ່າຍ ລະຫັດທີ່ຕັ້ງຂອງຄົວເຮືອນຢູ່ ແຈເທິງເບື້ອງຂວາ ຂອງຕາຕະລາງ 4:

- ກ່າຍເອົາລະຫັດຂອງແຂວງ, ເມືອງ, ບ້ານແລະເຂດສຳຫຼວດ ຈາກ "ລະຫັດທີ່ຕັ້ງ "ຢູ່ຫ້ອງເບື້ອງ ເທິງ ຂອງ ຕາຕະລາງ 2.
- ກ່າຍເອົາເລກລຳດັບ ຂອງຄົວເຮືອນ ຢູ່ໃນຖັນ (1) ຂອງບັນຊີ ລາຍຊື່ຄົວເຮືອນ ໃນຕາຕະລາງ 2.

| | | | |
|---|---|---|---|
| ຕາຕະລາງເບີ | | | 4 |
| ແຂວງ | | | |
| ເມືອງ | | | |
| ບ້ານ | | | |
| ເລກທີ ຄົວເຮືອນ | | | |

**ລະຫັດດັ່ງກ່າວນີ້ ຕ້ອງຂຽນ ກ່ອນດຳເນີນການສຳພາດຄົວເຮືອນ.** ຖ້າຫາກລືມເຮັດອັນນີ້, ຄຸນລັກສະນະຂອງຄົວເຮືອນຈະບໍ່ສາມາດຮູ້ໄດ້ ແລະຂໍ້ມູນໃນໃບສອບຖາມກໍຈະບໍ່ສາມາດນຳເອົາໄປໃຊ້ໄດ້.
**ໃຫ້ໝັ້ນໃຈວ່າ ລະຫັດທີ່ຈົດກ່າຍແມ່ນຖືກຕ້ອງ.** ລະຫັດນີ້ແມ່ນວິທີດຽວທີ່ເຮົາສາມາດຮູ້ທີ່ຕັ້ງຂອງແຕ່ລະຄົວເຮືອນ.

ພ້ອມກັນນັ້ນ, ໃຫ້ຂຽນລາຍລະອຽດກ່ຽວກັບຄົວເຮືອນໃສ່ ໜ້າປົກ: ຊື່ ຄົວເຮືອນ, ຊື່ ຂອງຫົວໜ້າ ຄົວເຮືອນ, ທີ່ຕັ້ງຂອງຄົວເຮືອນ , ຊື່ຂອງຜູ້ຖືກສຳພາດ (ຜູ້ຕອບ), ຜູ້ຕອບ ມີ ສາຍພົວພັນ ກັບ ຫົວໜ້າຄົວເຮືອນ,

### 6.2 ຄົວເຮືອນ ແລະ ຫົວໜ່ວຍການຄອບຄອງເຮັດກະສິກຳ

ໃນການເຮັດການສຳຫຼວດພາຍໃນບ້ານ, ທ່ານຈະຂື້ນບັນຊີລາຍຊື່ຄົວເຮືອນ, ແຕ່ເວລາຈົດກ່າຍຂໍ້ມູນໃສ່ຕາຕະລາງ ພັດຖາມຫົວໜ່ວຍການຄອບຄອງເຮັດກະສິກຳ ( ອີງຕາມ ຂໍ້ 3.2 ຊຶ່ງໃຫ້ນິຍາມຂອງການຄອບຄອງເຮັດກະສິກຳ). ປົກກະຕິແລ້ວ, ການຄອບຄອງເຮັດກະສິກຳ ແມ່ນມີຄວາມໝາຍດຽວຄືຄົວເຮືອນ ແລະໂດຍທົ່ວໄປ ໃບສອບຖາມນີ້ງ ແມ່ນສຳລັບຄົວເຮືອນນີ້ງ.ກ່ອນອື່ນ, ຖາມຜູ້ຕອບ ວ່າມີຈຳນວນສາມະຊິກຄົວເຮືອນຫຼາຍປານໃດ (ເຊັ່ນ ລູກຊາຍ/ລູກສາວ ຫຼືບໍ່ແມ່ນຍາດຕິພີ່ນ້ອງທີ່ອາໄສຢູ່ນຳ) ໄດ້ນຳໃຊ້ດິນຢ່າງເປັນເອກະລາດຈາກຄົວເຮືອນ, ຫຼືຖ້າຄົວເຮືອນໄດ້ນຳໃຊ້ດິນຮ່ວມກັນກັບຄົວເຮືອນອື່ນ. ໃຫ້ຖາມບັນຫານີ້ ໄລຍະເວລາ 12 ເດືອນຜ່ານມາ. ບັນທຶກລາຍລະອຽດຕ່າງໆໃນຫ້ອງສີ່ຫຼ່ຽມທີ່ຈັດວາງໄວ້.

(ກ) ຖ້າມີສາມະຊິກໃນຄົວເຮືອນໄດ້ນຳໃຊ້ດິນກະສິກຳ ຫຼື ລ້ຽງສັດເປັນຂອງຕົນເອງຕ່າງຫາກ

ກໍລະນີດັ່ງກ່າວນີ້, ຖືວ່າຄົວເຮືອນນີ້ມີສອງ ການຄອບຄອງເຮັດກະສິກຳພາຍໃນຄົວເຮືອນ. ໃຫ້ແບ່ງຄົວເຮືອນອອກເປັນ ສອງຫົວໜ່ວຍ ການ ຄອບຄອງເຮັດກະສິກຳ ແລະຕ້ອງແຍກໃຊ້ຕາຕະລາງ 4 ສຳລັບແຕ່ລະການຄອບຄອງ. ແຕ່ລະຕາຕະລາງໃຫ້ບັນທຶກ:

- ບັນທຶກຂໍ້ມູນຂ່າວສານອັນດຽວກັນ (ແຂວງ, ເມືອງ, ບ້ານ, ຄົວເຮືອນເລກທີ)
- ໃຫ້ອະທິບາຍເຫດຜົນຢ່າງລະອຽດ ໃສ່ຫ້ອງສີ່ລ່ຽມ
- ບັນທຶກຂໍ້ມູນຫົວໜ່ວຍການຄອບຄອງເຮັດກະສິກຳ, ບໍ່ແມ່ນທັງໝົດຄົວເຮືອນ. ຂະໜາດຂອງຄົວເຮືອນອີງຕາມສາມະຊິກຄົວເຮືອນທີ່ພົວພັນກັບການຄອບຄອງເຮັດກະສິກຳ.

(ຂ) <u>ຖ້າຄົວເຮືອນໄດ້ນຳໃຊ້ດິນ ຫຼືໄດ້ລ້ຽງສັດ ຮ່ວມກັບຄົວເຮືອນອື່ນ</u>

ກໍລະນີນີ້, ຜູ້ເຮັດຮ່ວມກັນ (ສອງຄົວເຮືອນ) ແມ່ນ ການຄອບຄອງເຮັດກະສິກຳ ອັນນຶ່ງ. ຄະນະດຽວກັນ, ຖ້າສອງຄົວເຮືອນໄດ້ມີການຄອບຄອງເຮັດກະສິກຳ ຖ້າພວກເຂົາຫາກໄດ້ນຳໃຊ້ດິນ ຫຼືລ້ຽງສັດ ເປັນຕົນເອງ. ນຳໃຊ້ດິນ ຫຼື ລ້ຽງສັດເປັນຂອງໃຜລາວອີກ (ບໍ່ຮ່ວມກັນ), ສອງຄົວເຮືອນນີ້ ຖືວ່າແມ່ນ ສອງຫົວໜ່ວຍການຄອບຄອງອີກຕື່ມ.

ໃຫ້ຈົດກ່າຍຂໍ້ມູນໃສ່ ຕາຕະລາງ 3 ຊຸດ:

- ຕາຕະລາງ 4 ສຳລັບສຳພາດຄົວເຮືອນ, ທີ່ມີກິດຈະກຳດ້ານປູກຝັງແລະລ້ຽງສັດ ເປັນຂອງຕົນເອງ (ບໍ່ຮ່ວມກັນ).
- ຕາຕະລາງ 4 ຫຼື ຕາຕະລາງ 5 ສຳລັບສຳພາດ ຄົວເຮືອນອື່ນທີ່ເຮັດຮ່ວມກັນ, ຊຶ່ງມີກິດຈະກຳ ປູກຝັງແລະລ້ຽງສັດເປັນຂອງຕົນເອງອີກ (ຈະໃຊ້ໃບສອບຖາມແບບໃດຈະຂຶ້ນຢູ່ກັບວ່າຄົວເຮືອນນັ້ນຖືກເລືອກເປັນຕົວແທນຫຼືບໍ່);
- ຕາຕະລາງ 4 ຫຼື ຕາຕະລາງ 5 ສຳລັບກິດຈະກຳຂອງ ການເຮັດຮ່ວມກັນ(ຂອງຫຸ້ນສ່ວນ)(ນຳໃຊ້ຕາຕະລາງ5 ຖ້າມີຄົວເຮືອນໃດຄົວເຮືອນນຶ່ງ ຖືກເລືອກເປັນຕົວແທນ; ນຳໃຊ້ຕາຕະລາງ 4 ຖ້າ ຄົວເຮືອນທັງສອງຫາກບໍ່ໄດ້ຖືກເລືອກເປັນຕົວແທນ).

<u>ການຈົດກ່າຍຕາຕະລາງ4 ສຳລັບ ຄົວເຮືອນ: ເຮັດຮ່ວມກັນ(ຫຸ້ນສ່ວນ) ແຕ່ມີການຄອບຄອງເປັນຂອງຕົນເອງອີກ</u>

- ຂຽນລະຫັດຂໍ້ມູນກ່ຽວກັບ (ແຂວງ, ເມືອງ, ບ້ານ, ຄົວເຮືອນເລກທີ) ຊຶ່ງເຄີຍເຮັດຜ່ານມາປົກກະຕິ. ໃຫ້ອະທິບາຍແຈ້ງກ່ຽວກັບ ສາຍພົວພັນ ລະຫວ່າງ ສອງຄົວເຮືອນ ໃສ່ໃນຫ້ອງເປົ່າຫວ່າງ
- ທຶກຂໍ້ມູນ ກ່ຽວກັບຄົວເຮືອນ, ຍົກເວັ້ນຂໍ້ມູນ ດ້ານ ດິນ ແລະສັດລ້ຽງ ຂອງການເຮັດຮ່ວມກັນ(ຂອງຫຸ້ນສ່ວນ) ລະວັງຢ່າຈົດກ່າຍຊ້ຳຊ້ອນ

<u>ການຈົດກ່າຍຕາຕະລາງ 4 ສຳລັບ ການເຮັດຮ່ວມກັນ(ຂອງຫຸ້ນສ່ວນ):</u>

- ຂຽນລະຫັດຂໍ້ມູນກ່ຽວກັບ (ແຂວງ, ເມືອງ, ບ້ານ, ຄົວເຮືອນເລກທີ). ຄົວເຮືອນເລກທີ ສາມາດຂຽນຕົວເລກ ໃດນຶ່ງຂອງຄົວເຮືອນໃນການເຮັດຮ່ວມກັນ (ຫຸ້ນສ່ວນ).
- ອະທິບາຍແຈ້ງ, ການຈັດແຈງສຳລັບການເຮັດຮ່ວມກັນ ແລະການເຂົາຮ່ວມຂອງຄົວເຮືອນ ໃສ່ໃນຫ້ອງເປົ່າຫວ່າງ.
- ທຶກຂໍ້ມູນກ່ຽວກັບການເຮັດຮ່ວມກັນ, ຍົກເວັ້ນຂໍ້ມູນດ້ານ ດິນ ແລະສັດລ້ຽງຂອງສ່ວນຕົວຂອງແຕ່ລະຄົວເຮືອນ (ຊຶ່ງບໍ່ເປັນຂອງ ຫຸ້ນສ່ວນ) ລະວັງຢ່າຈົດກ່າຍຊ້ຳຊ້ອນ

ຄຳຖາມ 1 ຂອງຕາຕະລາງ ບໍ່ໃຫ້ສອບຖາມ (ປະເປົ່າຫວ່າງ).

ຂໍ້ມູນກ່ຽວກັບການຈົດກ່າຍຕາຕະລາງ 5 ໃນສະພາບເຮັດຮ່ວມກັນ. ໃຫ້ເບິ່ງລາຍລະອຽດໃນຂໍ້ 7.2.

ຖ້າສົມມຸດວ່າ ຜູ້ເຮັດຮ່ວມກັນ ຢູ່ຄົນລະບ້ານ, ໃຫ້ ນັກເດີນສຳຫຼວດບ້ານນັ້ນ ເປັນຜູ້ຮັບຜິດຊອບສອບຖາມ. ທ່ານ

ເອງເປັນຜູ້ຮັບຜິດຊອບຄົວເຮືອນ ເຮັດຮ່ວມກັນ ຢູ່ໃນບ້ານຂອງທ່ານຮັບຜິດຊອບ ໃຫ້ໃຊ້ຕາຕະລາງ 4 ໄປ ສອບຖາມ, ແລະ ໃຫ້ໃຊ້ຕາຕະລາງ 4 ຫຼື 5 ອີກຕື່ມ ສຳລັບ ກິດຈະກຳການເຮັດຮ່ວມກັນ (ຂອງຫຸ້ນສ່ວນ).

## 6.3 ໂຄງສ້າງຂອງຕາຕະລາງ 4

ໃບສອບຖາມແບ່ງອອກເປັນ ຫຼາຍພາກ:

- ຄ.1 ຖາມກ່ຽວກັບ ຂະໜາດຂອງຄົວເຮືອນ.
- ຄ.2 ຖາມກ່ຽວກັບ ສັດລ້ຽງ.
- ຄ.3-ຄ.5 ຖາມກ່ຽວກັບດິນ. ຖ້າ ຄົວເຮືອນ/ຜູ້ຄອບຄອງ ມີດິນກະສິກຳ ແຕ່ 0,02 ເຮັກຕາຂຶ້ນໄປ, ທ່ານ ສືບຕໍ່ຖາມລາຍລະອຽດກ່ຽວກັບການປູກພືດ; ຖ້າກົງກັນຂ້າມກັບຂ້າງເທິງ, ໃຫ້ສິ້ນສຸດການສຳພາດ.
- ຄ.6-ຄ.9 ຖາມກ່ຽວກັບ ການປູກພືດລົມລຸກໃນລະດູຝົນ 1998.
- ຄ.10-ຄ.12 ຖາມກ່ຽວກັບ ການປູກພືດລົມລຸກໃນລະດູແລ້ງ ສົກປີ 1998/99.
- ຄ.13-ຄ15 ຖາມກ່ຽວກັບ ການປູກພືດຍືນຕົນ.

## 6.4 ການຕັ້ງ ຄຳຖາມ

ປົກກະຕິ, ການຕັ້ງຄຳຖາມຄວນໃຫ້ກວມເອົາທຸກກິດຈະກຳຂອງການປູກຝັງ ແລະ ລ້ຽງສັດທີ່ສະມາຊິກທຸກຄົນໃນຄົວເຮືອນ ໄດ້ປະຕິບັດ ແລະ ຄຳຕອບທີ່ໄດ້ຮັບກໍຄວນໃຫ້ສອດຄ່ອງກັບ. ຂໍ້ມູນການຕອບຄຳຖາມ ກ່ຽວກັບການຄອບຄອງເຮັດກະສິກຳ ຢ່າງເອກະລາດ ຂອງສະມາຊິກ ໃນຄົວເຮືອນໄດ້ເວົ້າລະອຽດໃນຂໍ້ 6.2.

**ຄຳຖາມທີ່ 1**

| | | |
|---|---|---|
| 1. ມີຈັກຄົນທີ່ດຳລົງຊີວິດຢູ່ຮ່ວມກັນປົກກະຕິ ໃນຄົວເຮືອນຂອງທ່ານ? | | ຄົນ |

ອີງໃສ່ຂໍ້ 3.1ນິຍາມວ່າດ້ວຍຄົວເຮືອນ. ສາມະຊິກຄົວເຮືອນ ແມ່ນບຸກຄົນທີ່ຈັດແຈງ, ຊອກຫາອາຫານຮ່ວມກັນ ແລະ ໃຊ້ສອຍສິ່ງຂອງທຸກຢ່າງທີ່ຈຳເປັນຮ່ວມກັນ, ລວມທັງບຸກຄົນທີ່ບໍ່ເປັນຍາດຕິພີ່ນ້ອງ ເຊັ່ນ ຊາວສວນຮັບຈ້າງ...ຖ້າຫາກທ່ານບໍ່ໝັ້ນໃຈ ກ່ຽວກັບໃຜຄວນເປັນສາມະຊິກໃນຄົວເຮືອນ, ຄວນນຳໃຊ້ ຄຳເວົາ “ ປົກກະຕິ”. ດັ່ງບຸກຄົນລຸ່ມນີ້:

- ບຸກຄົນທີ່ຈະເປັນສາມະຊິກຄົວເຮືອນ ປົກກະຕິ ລາວອາໄສໃນຄົວເຮືອນ ແຕ່ວ່າ ລາວບໍ່ມີໜ້າຊົ່ວຄາວ ເວລາເຮັດການສຳຫຼວດສະຖິຕິກະສິກຳ;
- ຍົກເວັ້ນບຸກຄົນທີ່ອາໄສຢູ່ບ່ອນອື່ນ ປົກກະຕິ ແຕ່ກັບມາຢາມຄົວເຮືອນບ່າງຄັ້ງຄາວ;
- ລວມເອົາບຸກຄົນທີ່ຈະເປັນສາມະຊິກຄົວເຮືອນ ຖ້າລາວມີວຽກເຮັດຢູ່ບ່ອນອື່ນ ເປັນອາທິດ ແຕ່ລາວກັບເມື່ອຫາຄົວເຮືອນເວລາ ພັກ.

ໃຫ້ເບິ່ງຂໍ້ 3.2 ຂໍ້ມູນຄວນຕອບຄຳຖາມ ຄືແນວໃດ ຊື່ງວ່າ ຜູ້ຄອບຄອງແມ່ນຕາງຈາກຄົວເຮືອນ.

**ຄຳຖາມທີ່ 2**

2. ຈຳນວນສັດທີ່ຄົວເຮືອນ (ຫົວໜ່ວຍການຄອບຄອງ) ຂອງທ່ານລ້ຽງ ປະຈຸບັນມີຫລາຍປານໃດ? ເຊັ່ນ:

| | | | | | | |
|---|---|---|---|---|---|---|
| 1.ງົວ ? | | 5.ແກະ ? | | 9.ຈຳນວນສັດລ້ຽງອື່ນໆ ເຊັ່ນ: ມ້າ,ຊ້າງ,ໄກ່ງວງ,ຫ່ານ? | | |
| 2.ຄວາຍ ? | | 6.ໄກ່ລາດ ? (ນັບທັງໄກ່ນ້ອຍ) | | ໃຫ້ລະບຸຊື່ແຈ້ງ | | ໃຊ້ສະເພາະ ພາກສາ |
| 3.ໝູ ? | | 7.ໄກ່ພັນ ? ( ນັບທັງໄກ່ນ້ອຍ ) | | | | |
| 4.ແບ້ ? | | 8. ເປັດ ? | | | | |

ໃຫ້ຖາມກ່ຽວກັບ ຈຳນວນສັດລ້ຽງ ແລະສັດປີກ ແຕ່ລະປະເພດ ແລ້ວບັນທຶກຂໍ້ມູນໃສ່ຫ້ອງສີ່ຫຼ່ຽມ.ສ່ວນສັດລ້ຽງອື່ນໆທີ່ບໍ່ໄດ້ກ່າວໄວ້ ໃຫ້ຂຽນຊື່ຂອງສັດຕ່າງໆ ຢ່າງລະອຽດໃສ່ ແຖວທີ່ຈັດວາງໄວ້ໃຫ້.
ລາຍລະອຽດສຳລັບການລ້ຽງສັດມີຄວາມໝາຍແນວໃດ ໃຫ້ເບິ່ງຂໍ້ 3.8. ການລາຍງານຈຳນວນສັດ ແມ່ນສັດທີ່ມີຢູ່ຕົວຈິງໃນມື້ເດີນສຳຫຼວດເກັບກຳຂໍ້ມູນ. ໃຫ້ຂຽນ " 0 " ໃນຫ້ອງສີ່ຫຼ່ຽມ ຖ້າຄົວເຮືອນຫາກບໍ່ມີສັດແຕ່ລະປະເພດ.

**ຄຳຖາມ 3**

3. ຄົວເຮືອນ (ຫົວໜ່ວຍການຄອບຄອງ) ຂອງທ່ານໄດ້ຄອບຄອງເນື້ອທີ່ດິນກະສິກຳ ໃນລະດູຝົນ ປີ1998 ຫລື ລະດູແລ້ງ 1998/99 ບໍ່ ?

ໄດ້ ☐ 1 → ຂ້າມໄປຫາຄຳຖາມ 4

ບໍ່ໄດ້ ☐ 2 → ຂ້າມໄປຫາຄຳຖາມ 5

*ຂໍ້ຄວນເອົາໃຈໃສ່ ລວມທັງດິນນາ, ດິນໄຮ່, ດິນສວນ, ປູກພືດຢູ່ຂ້າງເຂດບ້ານ, ປູກຢູ່ບ່ອນອື່ນ, ພືດຢືນຕົ້ນ, ດິນກະສິກຳທີ່ປະເປັນເຮື້ອ*

ຖ້າເປັນຄຳຕອບວ່າ "ໄດ້" ໃຫ້ໝາຍ (√ ) ໃສ່ຫ້ອງສີ່ຫຼ່ຽມ ແລ້ວຜ່ານໄປຫາຄຳຖາມທີ່ 4. ຖ້າເປັນຄຳຕອບວ່າ "ບໍ່ໄດ້" ໃຫ້ໝາຍ (√ ) ໃສ່ຫ້ອງສີ່ຫຼ່ຽມ ແລ້ວຜ່ານໄປຫາຄຳຖາມທີ່ 5. ຢູ່ເບື້ອງລຸ່ມຈະ ມີ ຂໍ້ຄວນເອົາໃຈໃສ່ ເພື່ອອ່ານໃຫ້ ຜູ້ຖືກສຳພາດຟັງ. ຈຸດປະສົງຂອງຂໍ້ຄວາມດັ່ງກ່າວ ແມ່ນຊ່ວຍໃຫ້ຜູ້ຕອບໝັ້ນໃຈ ທັງເປັນການທົບທວນຄືນກ່ຽວກັບດິນກະສິກຳ ປະເພດຕ່າງໆ ວ່າໄດ້ບອກໝົດແລ້ວບໍ່ ຫຼືຍັງບາງອັນບໍ່ທັນລາຍງານ.

ອີງຕາມຂໍ້ 3.6 ລາຍລະອຽດພືດທີ່ປູກໃນລະດູຝົນປີ 1998 ຫຼື ລະດູແລ້ງສົກປີ 1998/99 ມີຄວາມໝາຍຄືແນວໃດ. ດິນກະສິກຳໝາຍເຖິງດິນນຳໃຊ້ໂດຍ ຄົວເຮືອນ/ຜູ້ຄອບຄອງ ເພື່ອປູກພືດໃດພືດນຶ່ງ ເຊັ່ນ ພືດລົ້ມລຸກ ຫຼື ພືດພືດຢືນຕົນ ຫຼື ດິນປະເປັນເຮື້ອ ຫຼື ເປົ່າຫວ່າງ) (ໃຫ້ເບິ່ງຂໍ້ 3.3).

**ຄຳຖາມທີ່ 4**

4. ເນື້ອທີ່ດິນກະສິກຳຂ້າງເທິງ ທັງໝົດທີ່ທ່ານໄດ້ຄອບຄອງ ມີຫລາຍປານໃດ?

ຫົວໜ່ວຍທ້ອງຖິ່ນ ☐ ເຮັກຕາ ☐

ຄຳຖາມນີ້ ສຳລັບການລາຍງານດ້ານເນື້ອທີ່ ຂອງ ຜູ້ຖືກສຳພາດໃນຄຳຖາມ ທີ່ 3. ໃຫ້ບັນທຶກຂໍ້ມູນເນື້ອທີ່ໃສ່ຫົວໜ່ວຍທ້ອງຖິ່ນຂອງບ້ານທີ່ເຄີຍໃຊ້ ຫຼື ຫົວໜ່ວຍເປັນເຮັກຕາ, ໃຫ້ໃຊ້ວິທີການຄິດໄລ່ໃນຂໍ້ 5.8. ຖ້າ ຜູ້ຕອບຫາກມີດິນຫຼາຍຕອນ, ໃຫ້ຖາມ ແລະຂຽນລາຍລະອຽດຂອງແຕ່ລະຕອນດິນ ແລ້ວຄຳນວນຫາເນື້ອທີ່ລວມ.ໃຫ້ນຳໃຊ້ຫ້ອງສີ່ຫຼ່ຽມຫວ່າງທາງຂ້າງເບື້ອງຂວາ ເພື່ອຄິດໄລ່ເນື້ອທີ່ຂອງແຕ່ລະຕອນດິນ. ຕ້ອງຮັບປະກັນວ່າດິນກະສິກຳທັງໝົດໃນຄຳຖາມ 1 ຂອງຕາຕະລາງ 5 (ຕາມນິຍາມໃນຂໍ້ 3.3, 3.6, 3.7) ໄດ້ລະບຸຄົບຖ້ວນແລ້ວ.

**ຄຳຖາມທີ່ 5**

5. *ຖ້າມີເນື້ອທີ່ 0.02 ເຮັກຕາ ຂຶ້ນໄປ ໃນຄຳຖາມ 4* → *ຜ່ານໄປຫາຄຳຖາມ 6*

*ກົງກັນຂ້າມເນື້ອທີ່ນ້ອຍກວ່າ 0,02 ເຮັກຕາ ລົງມາ* → *ສິ້ນສຸດການສຳພາດ*

ຮູບຂ້າງເທິງແມ່ນຫ້ອງ ແນະນຳ. ຖ້າເນື້ອທີ່ ຢູ່ຄຳຖາມ 4 ມີເນື້ອທີ່ ແຕ່ 0,02 ເຮັກຕາຂື້ນໄປ, ໃຫ້ຜ່ານໄປຖາມຄຳຖາມທີ່ 6 ເຊິ່ງແມ່ນຄຳຖາມກ່ຽວກັບພືດທີ່ໄດ້ປູກ; ກົງກັນຂ້າມ ຖ້າຄົວເຮືອນຫາກມີເນື້ອທີ່ຕ່ຳກ່ວາ 0,02 ໃຫ້ສິ້ນສຸດການສອບຖາມຄຳຖາມ. ເຫດຜົນຂອງການແນະນຳ ແມ່ນເພື່ອບໍ່ໃຫ້ເສຍເວລາຖາມ ກ່ຽວກັບພືດທີ່ປູກ ໂດຍທີ່ຄົວເຮືອນມີເນື້ອທີ່ປູກໜ້ອຍດຽວ.

**ຄຳຖາມທີ່ 6**

| | | | | |
|---|---|---|---|---|
| 6. ລະດູຝົນປີ 1998 ຄົວເຮືອນ(ຫົວໜ່ວຍການຄອບຄອງ) ຂອງທ່ານໄດ້ປູກພືດລົ້ມລຸກຊະນິດໃດນຶ່ງບໍ່ ? | ໄດ້ປູກ | | 1 | → *ຂ້າມໄປຫາຄຳຖາມ 7* |
| | ບໍ່ໄດ້ປູກ | | 2 | → *ຂ້າມໄປຫາຄຳຖາມ 10* |

ຈຸດປະສົງ ຂອງ ຄຳຖາມ ນີ້ ແມ່ນ ເພື່ອ ຊອກຫາ ຄົວເຮືອນ/ຜູ້ຄອບຄອງທີ່ໄດ້ປູກພືດລົມລຸກໃນລະດູຝົນປີ 1998 ຜ່ານມາ. ຖ້າຄຳຕອບ ບອກ ວ່າ "ໄດ້ປູກ", ໃຫ້ໝາຍ (√ )ໃສ່ ຫ້ອງ ທີ່ ສອດຄ່ອງ ແລ້ວ ສືບຕໍ່ຖາມຄຳຖາມກ່ຽວກັບພືດເລົ່ານັ້ນ ແຕ່ລະ ຊະນິດໃນຄຳຖາມທີ່ 7 ແລະ8. ຖ້າຄຳຕອບ ບອກວ່າ "ບໍ່ໄດ້ປູກ" ໃຫ້ຜ່ານໄປຫາຄຳຖາມທີ່ 10 ເລີຍ ເພື່ອຖາມກ່ຽວກັບການປູກພືດ ໃນລະດູແລ້ງ.

ໃຫ້ເບິ່ງຂໍ້ 3.6 ລາຍລະອຽດກ່ຍວກັບພືດລົມລຸກ, ມີລາຍລະອຽດບອກວ່າ ປູກພືດໃນລະດູຝົນປີ 1998 ໝາຍເຖິງຄືແນວໃດ, ແລະລາຍຊື່ພືດທີ່ປູກໃນໄລຍະລະດູການດັ່ງກ່າວ.

**ຄຳຖາມທີ່ 7,8**

| 7. ໃນລະດູຝົນປີ 1998 ມີພືດລົມລຸກຊະນິດໃດແດ່ທີ່ທ່ານໄດ້ປູກ?<br>*ລວມທັງເຂົ້ານາປີ, ເຂົ້າໄຮ່, ພືດອື່ນໆທີ່ປູກກະແຈກກະຈາຍ ແລະປູກເນື້ອທີ່ຂະໜາດນ້ອຍໃນແຕ່ລະຕອນດິນ* | *ໃຊ້ສະເພາະຫກສກ* | 8. ເນື້ອທີ່ປູກພືດດັ່ງກ່າວມີຫລາຍປານໃດ?<br>*ໃຫ້ໝາຍ ( √ ) ໃສ່ຫ້ອງຖ້າເນື້ອທີ່ນ້ອຍກວ່າ 0,01 ເຮັກຕາ (100 ມ$^2$ ) ຫລືຖ້າປູກປະປົນ /ກະແຈກກະຈາຍ*<br>ຫົວໜ່ວຍທ້ອງຖິ່ນ | ເຮັກຕາ | ເນື້ອທີ່ນ້ອຍ ຫລືກະແຈກກະຈາຍ |
|---|---|---|---|---|
| | | | | |
| | | | | |

ຄຳຖາມເລົ່ານີ້ ແມ່ນຖາມກ່ຽວກັບພືດລົມລຸກແຕ່ລະຊະນິດທີ່ໄດ້ປູກໃນລະດູຝົນປີ 1998. ໃຫ້ບັນທຶກ ແຖວນຶ່ງຕໍ່ພືດຊະນິດນຶ່ງ. ໃຫ້ຂຽນເປັນລຳດັບຄັກແນ່ ແລະ ຮັບປະກັນວ່າ ທຸກພືດທີ່ປູກແມ່ນໄດ້ຂຽນໝົດແລ້ວ. ອາດເຮັດອີກວິທີນຶ່ງ, ໃຫ້ຂຽນພືດທີ່ໄດ້ປູກໄປຕາມ ແຕ່ລະຕອນດິນທີ່ມີ ວ່າໄດ້ປູກພືດຫຍັງແດ່ ເຖິງແມ່ນວ່າ ພືດທີ່ປູກຈະມີຄືກັນກັບຕອນດິນອື່ນກໍຕາມ.

ໃຫ້ຂຽນຊື່ພືດແຕ່ລະຊະນິດ ໃຫ້ຈະແຈ້ງ ແລະ ຄົບຖ້ວນ. ຫ້າມຂຽນແບບລວມໆ ເຊັ່ນ " ຜັກ ", ທ່ານຕ້ອງບອກແຈ້ງວ່າແມ່ນຜັກຊະນິດໃດແດ່. ໃຫ້ອີງໃສ່ບັນຊີລາຍຊື່ພືດລົມລຸກໃນເອກະສານຊ້ອນທ້າຍ 1 ຖ້າຫາກທ່ານບໍ່ຮູ້ວ່າຈະຂຽນຄືແນວໃດ. ຕ້ອງໝັ້ນໃຈວ່າ ໄດ້ລວມເອົາທຸກຢ່າງລຸ່ມນີ້ແລ້ວ:

- ພືດທີ່ປູກໃນເນື້ອທີ່ນ້ອຍ ຫຼື ຈຳນວນໜ້ອຍ ແລະ ກະແຈກກະຈາຍ;
- ພືດທີ່ໄດ້ປູກແລ້ວ ແຕ່ວ່າບໍ່ໄດ້ເກັບກ່ຽວ ຍ້ອນນ້ຳຖ້ວມ, ສັດຕູພືດທຳລາຍ ຫຼືເສຍຫາຍອື່ນໆ;

- ດິນຕອນດຽວ ປູກພືດ ທັງສອງລະດູ ຄື ລະດູຝົນ ແລະລະດູແລ້ງ ( ປູກພືດ ສອງລະດູ)
- ພືດປູກປະປົນກັນ (ປູກພືດຫຼາຍຊະນິດໃນຕອນດິນດຽວ ແລະ ເວລາດຽວກັນ).

ໃນຄຳຖາມທີ່ 8, ບັນທຶກຂໍ້ມູນເນື້ອທີ່ປູກໃນຮູບຂອງຫົວໜ່ວຍທ້ອງຖິ່ນທີ່ໃຊ້ ຫຼື ເຮັກຕາ, ໃຫ້ນຳໃຊ້ວິທີທີ່ໄດ້ກ່າວໃນຂໍ້ 5.8. ເນື້ອທີ່ ໃຫ້ ເອົາເນື້ອທີ່ປູກ, ບໍ່ໃຫ້ເອົາເນື້ອທີ່ເກັບກ່ຽວ. ຖ້າເນື້ອທີ່ປູກ ຕ່ຳກ່ວາ 100 ແມັດມົນທົນ, ໃຫ້ຂຽນໃສ່ຫ້ອງ “ຫົວໜ່ວຍທ້ອງຖິ່ນ”, ບໍ່ໃຫ້ຂຽນໃສ່ ຫ້ອງ “ເຮັກຕາ” (ປະເປົ່າຫວ່າງ), ແລະ ໝາຍ(√) ໃສ່ຫ້ອງ“ເນື້ອທີ່ນ້ອຍຫຼືກະແຈກະຈາຍ” ເນື້ອທີ່ໃນຫົວໜ່ວຍທ້ອງຖິ່ນປົກກະຕິຈະຂຽນໃນຮູບຂອງ ໄຕຣມຸມມິຕິ ເຊັ່ນ “10 x 5 ແມັດ” ຫຼືຂຽນ “ປູກກະແຈກກະຈາຍ”. ຖ້າຄົວເຮືອນ/ຜູ້ຄອບຄອງ ມີເນື້ອທີ່ ຫຼາຍກ່ວາ 100 ແມັດມົນທົນ ແລະ ພືດບາງຈຳນວນໄດ້ປູກກະແຈກກະຈາຍ, ກໍໃຫ້ໝາຍ(√ ) ໃສ່ໃນຫ້ອງ “ປູກກະແຈກກະຈາຍ”.

ຂໍ້ສັງເກດ<u>ການປູກພືດ 2 ຄັ້ງ(2ລະດູ)</u> ຈະບັນທຶກຂໍ້ມູນເນື້ອທີ່ ຄືແນວໃດ.ເນື້ອທີ່ດິນຕອນດຽວໄດ້ນຳໃຊ້ປູກພືດທັງສອງລະດູ ຄື ລະດູຝົນ ແລະລະດູແລ້ງ, ໃຫ້ບັນທຶກພືດລະດູຝົນໃນຄຳຖາມທີ່ 7 ແລະ ຄ.8 ແລະພືດລະດູແລ້ງໃນຄຳຖາມທີ່ 11 ແລະ ຄ.12 ຫຼື ເວົາຢ່າງນຶ່ງ ມັນແມ່ນການລາຍງານເນື້ອທີ່ຂອງດິນຕອນດຽວ 2 ຄັ້ງຄື: ເນື້ອທີ່ປູກພືດໃນລະດູແລ້ງ ແລະ ລະດູຝົນ. ຖ້າສົມມຸດວ່າ ໃນລະດູຝົນຫາກປູກພືດຫຼາຍຄັ້ງໃນເນື້ອທີ່ດຽວກັນ, ໃຫ້ບັນທຶກແຕ່ລະພືດໃນແຕ່ລະແຖວໃນຄຳຖາມທີ່ 7 ແລະ ຄ.8, ຖ້າສົມມຸດວ່າ, ມີເນື້ອທີ່ດິນ 0,5 ເຮັກຕາໄດ້ປູກເຂົາ 2 ເທື່ອໃນລະດູຝົນ, ເຮົາຕ້ອງຂຽນ 0,5 ເຮັກຕາ ເປັນ 2 ແຖວ. ການເກັບກ່ຽວພືດຕິດຕໍ່ກັນ ຕາມ ລຳດັບເຊັ່ນ: ພືດປະເພດ ອອ້ຍ, ບໍ່ໃຫ້ຖືວ່າ ເປັນພືດປູກສອງຄັ້ງ; ສຳລັບພືດນີ້, ເນື້ອທີ່ໃຫ້ລາຍງານເປັນເນື້ອທີ່ດຽວ.

ພືດປູກປະປົນກັນຫຼາຍຊະນິດ ແມ່ນພືດທີ່ປູກພ້ອມກັນໃນເວລາດຽວກັນໃນເນື້ອທີ່ດຽວກັນ, ຫຼືປູກປົນກັນກັບພືດອື່ນຫຼືປູກສັບຫວ່າງ ພືດຍືນຕົ້ນ (ປູກພືດນຶ່ງ ລະຫວ່າງແຖວຂອງພືດຊະນິດອື່ນ). ສຳລັບພືດປູກປະປົນກັນ, ຜົນບວກຂອງເນື້ອທີ່ແຕ່ລະຊະນິດພືດ ຕ້ອງເທົ່າກັບ ເນື້ອທີ່ຂອງຕອນດິນທີ່ໄດ້ປູກພືດເຫຼົ່ານັ້ນ. ຕົວຢ່າງ, ເນື້ອທີ່ປູກພືດ ມີ 0,5 ເຮັກຕາ ໄດ້ປູກພືດປະເພດ ໝາກແຕງ ແລະໝາກເລັ່ນ, ເນື້ອທີ່ ໝາກແຕງ ແລະ ເນື້ອທີ່ໝາກເລັ່ນບໍ່ຄວນຫຼາຍກວ່າ 0,5ເຮັກຕາ. ໃຫ້ປະເມີນເນື້ອທີ່ຂອງແຕ່ລະພືດສຸດຄວາມສາມາດເຮັດໄດ້ ແລະ ດ້ວຍວິທີການຕ່າງໆ ທີ່ດີທີ່ສຸດ. ວິທີນຶ່ງ, ໃຫ້ອີງໃສ່ ແນວປູກຂອງແຕ່ລະຊະນິດພືດເພື່ອຄິດໄລ່ຫາເນື້ອທີ່ຂອງແຕ່ລະພືດທີ່ປູກແບບປະສົມ; ຫຼືມີອີກວິທີອື່ນ ເບິ່ງອັດຕາສ່ວນ ແຕ່ລະຊະນິດ ພືດທີ່ປູກ. ທ່ານຄວນບັນທຶກ ເນື້ອທີ່ຂອງແຕ່ລະພືດທີ່ປູກອອກຈາກກັນ. <u>ພວກເຮົາບໍ່ສາມາດຮັບເອົາຂໍ້ມູນທີ່ຂຽນວ່າ “ປູກພືດປະປົນກັນ”. ແລະບໍ່ຄວນຂຽນຊື່ພືດແຕ່ລະຊະນິດ ແຕ່ວ່າເນື້ອທີ່ຂອງພືດປູກປະປົນ ພັດລວມກັນ (ເນື້ອທີ່ບໍ່ຂຽນອອກຈາກກັນ).</u>

ມີການປູກພືດອີກແບບນຶ່ງທີ່ ປູກພືດລົມລຸກ ຊັບກັນກັບ ການປູກພືດຍືນຕົ້ນແບບເປັນລະບຽບ. ກໍລະນີນີ້, ເນື້ອທີ່ປູກພືດຍືນຕົ້ນ ແມ່ນຖືເປັນເນື້ອທີ່ລວມຂອງການປູກ (ໃຫ້ບັນທຶກໃນຄຳຖາມທີ່ 11 ແລະ ຄ.15), ສ່ວນເນື້ອທີ່ປູກພືດລົມລຸກໃຫ້ຄິດໄລ່ແບບຂ້າງເທິງທີ່ໄດ້ກ່າວມາແລ້ວ. ມັນບໍ່ຄ້າຍຄືກັນກັບການປູກພືດປະສົມກັນກັບພືດຊະນິດອື່ນທີ່ໄດ້ກ່າວຢູ່ຂ້າງເທິງ, ເນື່ອງຈາກເນື້ອທີ່ລວມຂອງພືດທີ່ປູກຊັບກັບພືດຍືດຕົ້ນ ຈະໃຫຍ່ກ່ວາເນື້ອທີ່ຂອງຕອນດິນທີ່ໄດ້ປູກພືດດັ່ງກ່າວ.

ເນື້ອທີ່ພືດ ແມ່ນຂໍ້ມູນນຶ່ງທີ່ສຳຄັນຂອງການເກັບກຳຂໍ້ມູນໃນການສຳຫຼວດ ແລະມັນເປັນສິ່ງຈຳເປັນຕ້ອງໄດ້ຂໍ້ມູນສັດເຈນ. ລາຍລະອຽດວ່າຈະ **ເຮັດແນວໃດ ໃຫ້ຂໍ້ມູນດ້ານເນື້ອທີ່ ຖືກຕ້ອງ** ໃຫ້ເບິ່ງຂໍ້ 5.9.

**ຄຳຖາມທີ່ 9**

9. <u>ໃນລະດູຝົນ ປີ 1998</u> ຄົວເຮືອນ(ຫົວໜ່ວຍການຄອບຄອງ) ຂອງທ່ານມີເນື້ອທີ່ປູກເຂົາຫລາຍປານໃດ?

| | ຫົວໜ່ວຍທ້ອງຖິ່ນ | ເຮັກຕາ |
|---|---|---|
| ນາປີ ? | 33 | |
| ໄຮ່ ? | | |

ໃນຄຳຖາມນີ້, ທ່ານຈະຖາມຜູ້ຕອບໃຫ້ລາຍງານຂໍ້ມູນດ້ານເນື້ອທີ່ ປູກເຂົ້ານາປີ ແລະເຂົ້າໄຮ່ທີ່ໄດ້ປູກຜ່ານມາໃນລະດູຝົນປີ1998. ໃຫ້ ບັນທຶກເນື້ອທີ່ໃສ່ຫົວໜ່ວຍທ້ອງຖິ່ນ ຫຼື ເຮັກຕາ, ນຳໃຊ້ວິທີທີ່ກ່າວໃນຂໍ້ 5.8. ຕ້ອງຮັບປະກັນວ່າຄຳຕອບກ່ຽວກັບຄຳຖາມນີ້ ແມ່ນສອດຄ່ອງກັບເນື້ອທີ່ປູກເຂົ້າທີ່ໄດ້ຈົດ ຢູ່ໃນຄຳຖາມ 8.

**ຄຳຖາມທີ່ 10**

| | | | |
|---|---|---|---|
| 10. <u>ໃນລະດູແລ້ງປີ 1998/99</u> ຄົວເຮືອນ (ຫົວໜ່ວຍການຄອບຄອງ) ຂອງທ່ານ ໄດ້ປູກພືດລົ້ມລຸກຊະນິດໃດນຶ່ງບໍ່ ? | ໄດ້ປູກ | ☐ 1 | → *ຂ້າມໄປຫາຄຳຖາມ 11* |
| | ບໍ່ໄດ້ປູກ | ☐ 2 | → *ຂ້າມໄປຫາຄຳຖາມ 13* |

ຈຸດປະສົງຂອງຄຳຖາມນີ້ແມ່ນເພື່ອຊອກຮູ້ວ່າຄົວເຮືອນ/ຜູ້ຄອບຄອງໄດ້ປູກພືດລົມລຸກໃນລະດູແລ້ງຂອງສົກປີ 1998/99. ຖ້າຄຳຕອບແມ່ນ “ໄດ້ປູກ”, ໃຫ້ ໝາຍ (√ )ໃສ່ຫ້ອງທີ່ສອດຄ່ອງ ແລະດຳເນີນຖາມຕໍ່ກ່ຽວກັບຊື່ຂອງແຕ່ລະຊະນິດພືດໃນຄຳຖາມທີ່ 11 ແລະ ຄ.12. ຖ້າຄຳຕອບ ແມ່ນ “ບໍ່ໄດ້ປູກ”, ຜ່ານຂ້າມໄປຫາຄຳຖາມທີ່ 13 ເພື່ອຖາມກ່ຽວກັບພືດຍືນຕົ້ນ.

ອີງຕາມ ຂໍ້3.6ຂໍ້ມູນກ່ຽວກັບພືດລົມລຸກ, ໄດ້ອະທິບາຍ (ໃຫ້ລະອຽດ) ກ່ຽວກັບການປູກພືດໃນລະດູແລ້ງສົກປີ 1998/99, ແລະລາຍຊື່ພືດຕົ້ນຕໍທີ່ປູກໄລຍະລະດູການ.

ຄຳຖາມທີ່ 11, 12

| 11. <u>ໃນລະດູແລ້ງປີ 1998/99</u> ມີພືດລົມລຸກຊະນິດໃດແດ່ທີ່ທ່ານໄດ້ປູກ ? *ລວມທັງເຂົ້ານາແຊງ, ພືດອື່ນໆທີ່ປູກກະແຈກກະຈາຍ ແລະ ປູກເນື້ອທີ່ຂະໜາດນ້ອຍໃນແຕ່ລະຕອນດິນ* | *ໃຊ້ສະເພາະຫ້ອງການ* | 12. ເນື້ອທີ່ປູກພືດດັ່ງກ່າວມີຫລາຍປານໃດ? *ໃຫ້ໝາຍ (√ ) ໃສ່ຫ້ອງຖ້າເນື້ອທີ່ນ້ອຍກວ່າ 0,01 ເຮັກຕາ (100 $m^2$ ) ຫລືຖ້າປູກປະປົນ/ກະແຈກກະຈາຍ* ຫົວໜ່ວຍທ້ອງຖິ່ນ | ເຮັກຕາ | ເນື້ອທີ່ນ້ອຍ ຫລືກະແຈກກະຈາຍ |
|---|---|---|---|---|
| | ☐ | | ☐ | ☐ |
| | ☐ | | ☐ | ☐ |

ຄຳຖາມເລົ່ານີ້ແມ່ນຖາມຊື່ຂອງແຕ່ລະຊະນິດພືດລົມລຸກທີ່ປູກໃນລະດູແລ້ງສົກປີ 1998/99. ໃຫ້ຈົດຊື່ຂອງພືດແຖວນຶ່ງ ຕໍ່1 ພືດ. ໃຫ້ເບິ່ງໃນຂໍ້ແນະນຳໃນຄຳຖາມທີ່ 7 ແລະຄ.8 ຈະໄດ້ລາຍລະອຽດກ່ຽວກັບ ຄ.11 ແລະຄ.12 ຫຼາຍກ່ວານີ້.

**ຄຳຖາມທີ່ 13**

| | | | |
|---|---|---|---|
| 13. ປະຈຸບັນຄົວເຮືອນ (ຫົວໜ່ວຍການຄອບຄອງ) ຂອງທ່ານ ມີຕົ້ນໄມ້ກິນໝາກ ແລະພືດຢືນຕົ້ນຊະນິດໃດນຶ່ງບໍ່? | ມີ | ☐ 1 | → *ຂ້າມໄປຫາຄຳຖາມ 14* |
| | ບໍ່ມີ | ☐ 2 | → *ສິ້ນສຸດການສຳພາດ* |

ຈຸດປະສົງ ຂອງຄຳຖາມ ແມ່ນ ເພື່ອຊອກຮູ້ ວ່າ ຄົວເຮືອນ/ຜູ້ຄອບຄອງ ມີ ຕົ້ນໄມ້ໃຫ້ໝາກ ຫຼື ພືດຍືນຕົ້ນ ອື່ນ ໆ. ຖ້າຄຳຕອບແມ່ນ “ມີ”, ໃຫ້ ໝາຍ (√ )ໃສ່ຫ້ອງທີ່ສອດຄ່ອງ ແລະດຳເນີນຖາມຕໍ່ກ່ຽວກັບຊື່ແຕ່ລະຊະນິດຂອງ

ພືດໃນຄຳຖາມທີ່ 14 ແລະ ຄ.15. ຖ້າຄຳຕອບ ແມ່ນ “ບໍ່ມີ”, ຈະບໍ່ມີຄຳຖາມຕໍ່ໄປ.

ໃຫ້ເບິ່ງ ຂໍ້3.7 ສຳລັບ ຂໍ້ມູນເພີ່ມເຕີມ ກ່ຽວກັບພືດຍືນຕົ້ນ.

ຄຳຖາມທີ່ 14, 15

| 14. ປະຈຸບັນ ມີຕົ້ນໄມ້ກິນໝາກ ແລະພືດຍືນຕົ້ນ ຊະນິດໃດແດ່ ? | | 15. ເນື້ອທີ່ດັ່ງກ່າວມີຫລາຍປານໃດ? *ໃຫ້ໝາຍ (√) ໃສ່ຫ້ອງຖ້າເນື້ອທີ່ນ້ອຍກວ່າ 0,01 ເຮັກຕາ(100 ມ$^2$) ຫລືຖ້າປູກປະປົນ/ ກະແຈກກະຈາຍ* | | |
|---|---|---|---|---|
| *ບໍ່ຄວນລືມພືດທີ່ປູກກະແຈກກະຈາຍ ແລະ ປູກເນື້ອທີ່ຂະໜາດນ້ອຍ ໃນແຕ່ລະຕອນດິນ* | *ໃຊ້ສະເພາະ ພາສາ* | ຫົວໜ່ວຍທ້ອງຖິ່ນ | ເຮັກຕາ | ເນື້ອທີ່ນ້ອຍ ຫລື ກະແຈກກະຈາຍ |
| | | | | ☐ |
| | | | | ☐ |

ຄຳຖາມນີ້ແມ່ນຖາມກ່ຽວກັບພືດຍືນຕົ້ນທີ່ມີໃນປະຈຸບັນຂອງຄົວເຮືອນ/ຜູ້ຄອບຄອງໃນມື້ເດີນສຳຫຼວດ. ບັນຊີລາຍຊື່ພືດຍືນຕົ້ນ ໃຫ້ເບິ່ງເອກະສານຊ້ອນທ້າຍ 2.

ໃຫ້ຂຽນລາຍຊື່ພືດຍືນຕົ້ນໄປຕາມລຳດັບເພື່ອໃຫ້ມີຄວາມເຊື່ອໝັ້ນວ່າ ທຸກພືດຂອງຄົວເຮືອນ/ຜູ້ຄອບຄອງ ໄດ້ຈົດກ່າຍໝົດແລ້ວ.ໃຫ້ຂຽນຊື່ເຕັມ, ບໍ່ຄວນຂຽນແບບລວມໆ ເຊັ່ນ “ຕົ້ນໄມ້ໃຫ້ໝາກ”, ທ່ານຄວນຈຳແນກຕົ້ນໄມ້ໃຫ້ໝາກວ່າ ແມ່ນຕົ້ນໄມ້ຊະນິດໃດ ໃນແຕ່ລະແຖວ.

ຢ່າລືມວ່າ, ລັກສະນະການປູກພືດຍືນຕົ້ນ ມີທັງ ປູກເປັນລະບົບລະບຽບ ແລະປູກແບບກະແຈກກະຈາຍອ້ອມແອ້ມຄົວເຮືອນ. ການປູກເປັນລະບົບລະບຽບໝາຍເຖິງຕົ້ນໄມ້/ຕົ້ນພືດ ລຽນເປັນຖັນເປັນແຖວ ຫຼືປູກເປັນຜືນດຽວ ແລະ ສາມາດວັດແທກເນື້ອທີ່ໄດ້.ຖ້າການປູກຕົ້ນໄມ້ໃຫ້ໝາກ ມີໄລຍະຫ່າງກັນໂພດ ທຽບໃສ່ການປູກທຳມະດາ ກໍ່ໃຫ້ລະບຸເປັນການປູກແບບກະແຈກກະຈາຍ.

ສຳລັບການປູກເປັນລະບົບລະບຽບ, ຫົວໜ່ວຍຄິດໄລ່ເນື້ອທີ່ ໃນຄຳຖາມທີ່ 15 ແມ່ນໃຊ້ຫົວໜ່ວຍທ້ອງຖິ່ນ ຫຼືເຮັກຕາ, ນຳໃຊ້ວິທີທີ່ໄດ້ກ່າວແລ້ວໃນຂໍ້ 5.8. ສຳລັບການປູກກະແຈກກະຈາຍ ຫຼືປູກປະປົນກັນ (ຫຼືມີເນື້ອທີ່ ຕ່ຳກ່ວາ 100 ມ$^2$), ບໍ່ໃຫ້ຂຽນໃສ່ ຫ້ອງຫົວໜ່ວຍເຮັກຕາ ແຕ່ໃຫ້ໝາຍ (√ )ໃນຫ້ອງທີ່ຂຽນວ່າ “ເນື້ອທີ່ນ້ອຍ ຫຼືກະແຈກກະຈາຍ”. ຖ້າສົມມຸດວ່າ ພືດຍືນຕົ້ນ ທັງສອງປະເພດ ຄື ປູກເປັນລະບົບລະບຽບ ແລະປູກກະແຈກກະຈາຍ, ໃຫ້ບັນທຶກໃສ່ ທັງສອງ ຫ້ອງ.

ການປູກພືດຍືນຕົ້ນ ຊັບຫວ່າງແມ່ນມີໂດຍທົ່ວໄປ. ກໍລະນີນີ້, ຜົນບວກຂອງເນື້ອທີ່ພືດຍືນຕົ້ນແຕ່ລະຊະນິດ ແມ່ນເທົ່າກັບເນື້ອທີ່ຂອງຕອນດິນທີ່ໄດ້ປູກພືດຊັບກັນ. ການປະເມີນເນື້ອທີ່ຂອງແຕ່ລະພືດ ໃຫ້ອີງໃສ່ອັດຕາສ່ວນຂອງຕົ້ນໄມ້ທີ່ກວມເນື້ອທີ່ປູກຂອງແຕ່ລະຊະນິດພືດ. ໃຫ້ບັນທຶກຂໍ້ມູນແຕ່ລະຊະນິດພືດຍືນຕົ້ນ ແຍກອອກຈາກກັນ ພ້ອມດ້ວຍເນື້ອທີ່ຂອງມັນ. <u>ພວກເຮົາບໍ່ສາມາດຮັບເອົາຂໍ້ມູນທີ່ຂຽນວ່າ “ປູກພືດສະລັບກັນ”. ແລະຮັບບໍ່ໄດ້ ການຂຽນຊື່ພືດແຕ່ລະຊະນິດ ແຕ່ວ່າເນື້ອທີ່ປູກຊັບກັນ ພັດຍັງບໍ່ແຍກອອກຈາກກັນ.</u>

ຖ້າປູກພືດລົມລຸກ ຊັບຫວ່າງກັນກັບ ການປູກພືດຍືນຕົນ(ປູກເປັນລະບຽບ, ເນື້ອທີ່ປູກພືດຍືນຕົນ ແມ່ນເນື້ອທີ່ທັງໝົດ. (ໃຫ້ເບິ່ງຂໍ້ແນະນຳ ສຳລັບ ຄ.7 ແລະ ຄ.8 ກ່ຽວກັບການຄຳນວນຫາເນື້ອທີ່ປູກພືດລົມລຸກ).

## 6.5 ຖ້າ ທ່ານບໍ່ມີບ່ອນຈົດກ່າຍຂໍ້ມູນພຽງພໍໃນຄຳຖາມ ຄ.7, ຄ.11, ຫຼື ຄ.14

ຖ້າບໍ່ມີບ່ອນພຽງພໍໃນການຈົດກ່າຍລາຍການພືດຕ່າງໆໃນຄຳຖາມທີ່ 7, ຄ.11 ຫຼື ຄ.14, ໃຫ້ໝາຍ (√)ໃສ່ຫ້ອງສີ່ຫຼ່ຽມເບື້ອງລຸ່ມເພື່ອສະແດງໃຫ້ເຫັນວ່າຍັງມີລາຍການພືດອື່ນໆອີກຕື່ມທີ່ຈະຈົດກ່າຍເຂົາ ແລະໃຫ້ເອົາຕາຕະລາງ 4 ຊຸດໃໝ່ມາຈົດເພີ້ມ.ຢູ່ໜ້າປົກຂອງຕາຕະລາງໃໝ່,ໃຫ້ກ່າຍລະຫັດຄືນໃໝ່ໝົດແລະໃຫ້ໝາຍເຫດວ່າເປັນຕາຕະລາງຄົວເຮືອນດຽວກັນ.

## 6.6 ພາຍຫຼັງສຳເລັດການສຳພາດຄົວເຮືອນ

ເວລາທີ່ ທ່ານ ສຳເລັດການຈົດກ່າຍຕາຕະລາງ 4 ສຳລັບແຕ່ລະຄົວເຮືອນ/ຜູ້ຄອບຄອງ, ໃຫ້ກວດເບິ່ງຄືນຕາຕະລາງທີ່ຈົດກ່າຍແລ້ວ ເຫັນວ່າຖືກຕ້ອງ ແລະຄົບຖ້ວນໝົດ. ການກວດກາໃຫ້ອີງໃສ່ການແນະນຳຢູ່ເອກະສານຊ້ອນທ້າຍ 10 ເພື່ອກວດຄວາມຖືກຕ້ອງແລະຄວາມສອດຄ່ອງຂອງຂໍ້ມູນ. ນັກກວດກາພາກສະໜາມຂອງ ທ່ານ ຈະໄດ້ກວດອີກຕື່ມເວລາທີ່ ທ່ານສົ່ງຕາຕະລາງ. ກ່ອນສົ່ງໃບສອບຖາມ ທ່ານບໍ່ຄວນລືມເຊັນເພື່ອເປັນການຢັ້ງຢືນວ່າ ທ່ານໄດ້ກວດເບິ່ງຖືກຕ້ອງຄົບຖ້ວນແລ້ວ.

# 7. ການຈົດກ່າຍໃບສອບຖາມລະອຽດ

## ( ຕາຕະລາງ 5 )

ທຸກໆຄົວເຮືອນ/ຜູ້ຄອບຄອງທີ່ຖືກເປັນຕົວແທນພາຍໃນບ້ານຕ້ອງໄດ້ສຳພາດດ້ວຍໃບສອບຖາມລະອຽດ (ຕາຕະລາງ5).

## 7.1 ກ່ອນເລີ້ມຕົນສຳພາດ

ກ່ອນເລີ້ມຕົນສຳພາດ, ທ່ານຄວນຈົດກ່າຍຂໍ້ມູນຕ່າງໆໃສ່ໜ້າປົກ. ອັນທີ່ນື່ງ, ຈົດກ່າຍລະຫັດຂອງຄົວເຮືອນຢູ່ຂ້າງເທີງມູມເບື້ອງຂວາຂອງໜ້າປົກຕາຕະລາງ 5.

- ກ່າຍລະຫັດ ແຂວງ, ເມືອງ ແລະບ້ານ ຈາກ "ລະຫັດ" ຢູ່ ຫ້ອງເບື້ອງເທີງຂອງໜ້າປົກ ຕາຕະລາງ 2
- ກ່າຍເອົາເລກລຳດັບທີ່ ຂອງຄົວເຮືອນ ຈາກ ຖັນທີ່ 1 ຂອງຕາຕະລາງ ບັນຊີລາຍຊື່ຄົວເຮືອນ (ຕາຕະລາງ 2)

| | | | |
|---|---|---|---|
| ຕາຕະລາງເບີ | | | 5 |
| ແຂວງ | | | |
| ເມືອງ | | | |
| ບ້ານ | | | |
| ເລກທີ ຄົວເຮືອນ | | | |

ລະຫັດທີ່ໄດ້ກ່າວມາຂ້າງເທີງທັງໝົດນັ້ນ ຕ້ອງຈົດກ່າຍ ກ່ອນດຳເນີນການສຳພາດ. ຖ້າ ທ່ານລືມຈົດກ່າຍ,ຈະບໍ່ສາມາດນຳໃຊ້ຂໍ້ມູນ ໃນຕາຕະລາງນີ້ ຍ້ອນບໍ່ຮູ້ວ່າ ເປັນຂອງຄົວເຮືອນໃດ ແລະຢູ່ໃສ.
ຕ້ອງຮັບປະກັນວ່າໄດ້ຈົດກ່າຍລະຫັດຖືກຕ້ອງແລ້ວແລະມັນແມ່ນທົນທາງດຽວທີ່ເຮົາຈະສາມາດຮູ້ໄດ້ທີ່ຕັ້ງຂອງແຕ່ລະຄົວເຮືອນ.

ພ້ອມກັນນັ້ນ, ໃຫ້ຂຽນລາຍລະອຽດກ່ຽວກັບຄົວເຮືອນໃສ່ ໜ້າປົກ: ຊື່ ຄົວເຮືອນ, ຊື່ ຂອງຫົວໜ້າ ຄົວເຮືອນ, ທີ່ຕັ້ງຂອງຄົວເຮືອນ , ຊື່ຂອງຜູ້ຖືກສຳພາດ (ຜູ້ຕອບ), ຜູ້ຕອບ ມີ ສາຍພົວພັນ ກັບ ຫົວໜ້າຄົວເຮືອນຄືແນວໃດ.

## 7.2 ຄົວເຮືອນ ແລະ ການຄອບຄອງເຮັດກະສິກຳ

ການເຮັດການສຳຫຼວດ ພາຍໃນບ້ານ, ທ່ານ ຈະມີບັນຊີລາຍຊື່ຄົວເຮືອນ, ແຕ່ເວລາຈົດກ່າຍຂໍ້ມູນໃສ່ຕາຕະລາງ ພັດຖາມຫົວໜ່ວຍການຄອບຄອງເຮັດກະສິກຳ. (ໃຫ້ເບິ່ງຂໍ້ 3.2 ສຳລັບນິຍາມຂອງການຄອບຄອງເຮັດກະສິກຳ). ປົກກະຕິແລ້ວ, ການຄອບຄອງເຮັດກະສິກຳ ແລະ ຄົວເຮືອນ ແມ່ນມີຄວາມໝາຍດຽວອັນດຽວກັນ ແລະໂດຍທົ່ວໄປ ໃບສອບຖາມນີ້ ແມ່ນສຳລັບຄົວເຮືອນນີ້.
ຂັ້ນຕອນ ແລະ ເງື່ອນໄຂ ທີ່ ຈຳແນກ ວ່າຫົວໜ່ວຍຄອບຄອງ ເຮັດກະສິກຳ ມີຄວາມໝາຍແຕກຕ່າງຈາກ ຄົວເຮືອນ ໃນ
ສະພາບເງື່ອນໄຂທີ່ຄົວເຮືອນ ແລະຜູ້ຄອບຄອງບໍ່ແມ່ນອັນນຶ່ງ ອັນດຽວກັນ ການຈົດກ່າຍ ຕາຕະລາງ4 ແລະ ຕາຕະລາງ 5 ກໍ່ແຕກຕາງກັນ. ຕາຕະລາງ 4, ໃຫ້ຖາມທົ່ວໄປກ່ຽວກັບບຸກຄົນພາຍໃນຄົວເຮືອນທີ່ນຳໃຊ້ດິນ ແລະມີສັດລ້ຽງຄືແນວໃດ. ຈາກນັ້ນ, ແຕ່ລະຜູ້ຄອບຄອງຈະໄດ້ສຳພາດ ດ້ວຍຕາຕະລາງ 4(ໃຫ້ເບິ່ງ ຂໍ້ 2 ທີ່ກ່າວມາແລ້ວ). ສຳລັບຕາຕະລາງ 5, ໃນ ພາກ **ກ** ໄດ້ມີຄຳຖາມສະເພາະ ຖາມ ເພື່ອຈຳແນກໃຫ້ຮູ້ວ່າ ມີຜູ້ຄອບຄອງເຮັດກະສິກຳ ບໍ່.

(ກ) ຖ້າມີສາມະຊິກຄົວເຮືອນໄດ້ນຳໃຊ້ດິນກະສິກຳ ຫຼື ມີສັດລ້ຽງເປັນຂອງຕົນເອງຕ່າງຫາກ ນອກຈາກ

ຂອງຄົວເຮືອນ

ກໍລະນີດັ່ງກ່າວນີ້, ຖືວ່າ ຄົວເຮືອນມີສອງການຄອບຄອງເຮັດກະສິກຳ. ໃຫ້ ແບ່ງຄົວເຮືອນອອກເປັນ ສອງຫົວໜ່ວຍການຄອບຄອງເຮັດກະສິກຳ ແລະຕ້ອງນຳໃຊ້ຕາຕະລາງ 5 ສຳລັບແຕ່ລະ ການຄອບຄອງ. ແຕ່ລະຕາຕະລາງໃຫ້ບັນທຶກ:

- ໃຫ້ບັນທຶກ ລະຫັດຂ່າວສານ ອັນດຽວກັນ (ແຂວງ, ເມືອງ, ບ້ານ, ຄົວເຮືອນເລກທີ);
- ໃຫ້ອະທິບາຍເຫດຜົນຢ່າງຄົບຖ້ວນໃສ່ ຫ້ອງສີ່ຫຼ່ຽມ ໃນກໍລະນີພິເສດ;
- ໃຫ້ບັນທຶກຂໍ້ມູນສຳລັບຫົວໜ່ວຍການຄອບຄອງເຮັດກະສິກຳ, ບໍ່ແມ່ນຂອງຄົວເຮືອນທັງໝົດ. ລັກສະນະຂອງຄົວເຮືອນ ໃນພາກ ດ ໃຫ້ອີງໃສ່ຈຳນວນສາມະຊິກຄົວເຮືອນທີ່ພົວພັນກັບແຕ່ລະການຄອບຄອງເຮັດກະສິກຳ;
- ຖ້າໃຊ້ຕາຕະລາງ5 ເພີ້ມ ຕື່ມອີກຊຸດນື່ງ, ບໍ່ໃຫ້ຈົດກ່າຍ ພາກ ກ ຕື່ມຊ້ຳ ສອງ.

(ຂ) ຖ້າຄົວເຮືອນໄດ້ນຳໃຊ້ດິນ ຫຼືໄດ້ລ້ຽງສັດ ໂດຍເຮັດຮ່ວມກັບ ຄົວເຮືອນອື່ນ(ມີຫຸ້ນສ່ວນຮ່ວມກັບ)

ກໍລະນີນີ້, ຜູ້ເຮັດຮ່ວມກັນ ແມ່ນ ການຄອບຄອງເຮັດກະສິກຳ ອັນນື່ງ. ຄະນະດຽວກັນ, ຖ້າສອງຄົວເຮືອນໄດ້ມີການນຳໃຊ້ດິນ ຫຼື ລ້ຽງສັດເປັນຂອງໃຜລາວອີກ, ສອງຄົວເຮືອນ ດັ່ງກ່າວ ຖືວ່າແມ່ນສອງຫົວໜ່ວຍການຄອບຄອງອີກຕື່ມ.

ໃຫ້ຈົດກ່າຍຂໍ້ມູນໃສ່ ຕາຕະລາງ 3 ຊຸດ:

- ຕາຕະລາງ 5 ສຳລັບສຳພາດຄົວເຮືອນ, ທີ່ມີກິດຈະກຳດ້ານປູກຝັງແລະລ້ຽງສັດ ເປັນຂອງຕົນເອງ ຜູ້ດຽວທີ່ບໍ່ກ່ຽວຂ້ອງ ກັບ ການເຮັດຮ່ວມກັນ.
- ຕາຕະລາງ 4 ຫຼື ຕາຕະລາງ 5 ສຳລັບສຳພາດ ຄົວເຮືອນອື່ນ ທີ່ເຮັດຮ່ວມກັນ, ຊື່ງມີກິດຈະກຳ ປູກຝັງແລະລ້ຽງສັດເປັນຂອງຕົນເອງອີກ (ຈະໃຊ້ໃບສອບຖາມແບບໃດ ຂື້ນຢູ່ກັບວ່າຄົວເຮືອນນັ້ນຖືກເລືອກເປັນຕົວແທນຫຼືບໍ່);
- ຕາຕະລາງ 5 ອີກຕື່ມສຳລັບກິດຈະກຳຂອງ ການເຮັດຮ່ວມກັນ(ຂອງຫຸ້ນສ່ວນ) ສຳລັບ 2/ຫຼືຫຼາຍ ຄົວເຮືອນ.

ການຈົດກ່າຍຕາຕະລາງ 5 ( ຕາຕະລາງ 4) ສຳລັບຄົວເຮືອນເຮັດຮ່ວມກັນ ຊື່ງມີການຄອບຄອງເປັນຂອງຕົນເອງອີກຕາງຫາກ ທີ່ບໍ່ກ່ຽວຂ້ອງກັບ ການເຮັດຮ່ວມກັນ:

- ຂຽນລະຫັດຂໍ້ມູນກ່ຽວກັບ (ແຂວງ, ເມືອງ, ບ້ານ, ຄົວເຮືອນເລກທີ) ຊື່ງເຄີຍເຮັດຜ່ານມາປົກກະຕິ.
- ອະທິບາຍແຈ່ມແຈ້ງໃນຫ້ອງເປົ່າຫວ່າງ ກ່ຽວກັບ ສາຍພົວພັນ ລະຫວ່າງ ສອງຄົວເຮືອນ
- ບັນທຶກຂໍ້ມູນກ່ຽວກັບຄົວເຮືອນ, ຍົກເວັ້ນຂໍ້ມູນດ້ານ ດິນ ແລະສັດລ້ຽງຂອງການເຮັດຮ່ວມກັນ(ຂອງຫຸ້ນສ່ວນ) ລະວັງຢ່າຈົດກ່າຍຊ້ຳຊ້ອນ
- ໃຊ້ຕາຕະລາງ5 ເພີ້ມ ຕື່ມອີກໃບນື່ງ ບໍ່ໃຫ້ຈົດກ່າຍ ພາກ ກ ຕື່ມຊ້ຳ ສອງ

ການຈົດກ່າຍຕາຕະລາງ 5 ສຳລັບ ກິດຈະກຳການເຮັດຮ່ວມກັນ(ຂອງຫຸ້ນສ່ວນ):

- ຂຽນລະຫັດຂໍ້ມູນກ່ຽວກັບ (ແຂວງ, ເມືອງ, ບ້ານ, ຄົວເຮືອນເລກທີ). ຄົວເຮືອນເລກທີ ສາມາດຂຽນຕົວເລກໃດນຶ່ງຂອງຄົວເຮືອນໃນການເຮັດຮ່ວມກັນ (ຫຸ້ນສ່ວນຮ່ວມກັນ).
- ອະທິບາຍແຈ້ງ, ການຈັດແຈງສໍາລັບການເຮັດຮ່ວມກັນ ແລະການເຂົ້າຮ່ວມຂອງຄົວເຮືອນ ໃສ່ຫ້ອງເປົ່າຫວ່າງ.
- ບັນທຶກຂໍ້ມູນກ່ຽວກັບການເຮັດຮ່ວມກັນ, ຍົກເວັ້ນຂໍ້ມູນດ້ານ ດິນ ແລະສັດລ້ຽງຂອງສ່ວນຕົວຂອງແຕ່ລະຄົວເຮືອນ (ຊຶ່ງບໍ່ເປັນຂອງ ຫຸ້ນສ່ວນ) ລະວັງຢ່າຈົດກ່າຍຊໍ້າຊ້ອນ
- ພາກ ກ ແລະ ສ ຂອງຕາຕະລາງ ບໍ່ໃຫ້ສອບຖາມ (ປະເປົ່າຫວ່າງ).

ຂໍ້ມູນກ່ຽວກັບການຈົດກ່າຍຕາຕະລາງ 4 ໃນສະພາບເຮັດຮ່ວມກັນ ແບບຫຸ້ນສ່ວນ, ໃຫ້ເບິ່ງລາຍລະອຽດໃນຂໍ້ 6.2.

ຖ້າສົມມຸດວ່າ ຜູ້ຫຸ້ນສ່ວນຢູ່ຄົນລະບ້ານ, ໃຫ້ນັກເດີນສໍາຫຼວດບ້ານໃດບ້ານນັ້ນ ເປັນຜູ້ຮັບຜິດຊອບສອບຖາມ. ທ່ານເອງເປັນຜູ້ຮັບຜິດຊອບຄົວເຮືອນຕົວແທນທີ່ຢູ່ໃນບ້ານຂອງທ່ານຮັບຜິດຊອບ ໃຫ້ໃຊ້ຕາຕະລາງ 5 ໄປ ສອບຖາມ, ແລະ ໃຫ້ໃຊ້ຕາຕະລາງ 5 ອີກຕື່ມສໍາລັບ ກິດຈະກໍາການເຮັດຮ່ວມກັນ (ຂອງຫຸ້ນສ່ວນ).

## 7.3 ໂຄງສ້າງຂອງ ຕາຕະລາງ 5

ຕາຕະລາງ ໄດ້ແບ່ງອອກເປັນ 10 ພາກ:

- **ພາກ ກ** ຖາມ ຄົວເຮືອນ ແບບຫຍໍ້ ໆ ເພື່ອສາມາດຈໍາແນກໃຫ້ເຫັນວ່າແມ່ນ ຫົວໜ່ວຍການຄອບຄອງ

  ເຮັດ ກະສິກໍາ . ຖ້າແມ່ນຈະໄດ້ຖາມລາຍລະອຽດ ກ່ຽວກັບ ການປູກພືດ ແລະ ລ້ຽງສັດ; ຖ້າບໍ່ແມ່ນກໍ່ບໍ່ຈໍາເປັນສໍາພາດຕໍ່ໄປ.
- **ພາກ ຂ** ກໍານົດຈໍານວນຕອນດິນ ແລະການນໍາໃຊ້ດິນ (ປະໂຫຍດຂອງການນໍາໃຊ້ດິນ).
- **ພາກ ຄ** ຖາມລາຍລະອຽດຂອງ ແຕ່ລະຕອນດິນ
- **ພາກ ງ** ໃຫ້ຈົດລາຍຊື່ພືດລົມລຸກແຕ່ລະຊະນິດ ພ້ອມດ້ວຍເນື້ອທີ່ປູກຂອງມັນໃນລະດູຝົນ 1998. ໜ້າທີ່

  ສອງ ຂອງ ພາກ ງ ຖາມລາຍລະອຽດກ່ຽວກັບ ການປູກເຂົ້າ.
- **ພາກ ຈ** ໃຫ້ຈົດລາຍຊື່ພືດລົມລຸກແຕ່ລະຊະນິດ ພ້ອມດ້ວຍເນື້ອທີ່ປູກຂອງມັນໃນລະດູແລ້ງ 1998/99.

  ໜ້າທີ່ສອງ ຂອງ ພາກ **ຈ** ຖາມລາຍລະອຽດກ່ຽວກັບ ການປູກເຂົ້າ.
- **ພາກ ສ** ຖາມກ່ຽວກັບ ການປູກພືດຢືນຕົ້ນ.
- **ພາກ ຊ** ຖາມລະອຽດກ່ຽວກັບສັດລ້ຽງແຕ່ລະປະເພດ ແລະໂຄງປະກອບອາຍຸຂອງສັດ.
- **ພາກ ຍ** ຖາມກ່ຽວກັບ ກົນຈັກກະສິກໍາ ແລະປັດໄຈການຜະລິດ( ປັດໄຈ ຂາເຂົ້າແລະກົນຈັກ ກະສິກໍາ)
- **ພາກ ດ** ລາຍຊື່ຂອງສະມາຊິກໃນຄົວເຮືອນ, ອາຍຸ/ເພດ ແລະອາຊີບຕົນຕໍຂອງຄົວເຮືອນ
- **ພາກ ຕ** ອື່ນໆ ( ຖາມເຖິງການຊົມໃຊ້ຜົນຜະລິດ, ການຈ້າງແຮງງານນອກ ແລະ ການປະມົງ...)

## 7.4 ພາກ ກ: ລັກສະນະການຄອບຄອງ

ພາກ ກ ມີຈຸດປະສົງ ສອງຢ່າງ.

ແຕ່ຄຳຖາມ 1 - 5 ໃນໜ້າປົກຂອງໃບສອບຖາມ ຕ້ອງການລະບຸໃຫ້ໄດ້ວ່າຄົວເຮືອນນີ້ ເໝາະສົມຈັດເຂົ້າເປັນເປົ້າໝາຍ ຂອງການສຳຫຼວດຫຼືບໍ່. ຢູ່ຂໍ້ 3.3 ໄດ້ກ່າວໄວ້ວ່າ, ຈະ ເປັນຜູ້ຄອບຄອງເຮັດກະສິກຳ , ຄົວເຮືອນນັ້ນ ຕ້ອງ (i) ນຳໃຊ້ດິນ 0,02 ຮຕ ຂຶ້ນໄປ ຫຼື (ii) ມີ ງົວ/ຄວາຍ 2 ໂຕຂຶ້ນໄປ, ໝູ/ແກະ/ແບ້ ຫຼາຍກ່ວາ5 ໂຕ, ຫຼື ມີສັດປີກຫຼາຍກ່ວາ 20 ໂຕ. ຄຳຖາມ ທີ່ 1- 4 ຊອກຫາເງື່ອນໄຂໃດນຶ່ງທີ່ສອດຄ່ອງກັບທີ່ໄດ້ກ່າວໃນຂ້າງເທິງ.

ຄ.6 - ຄ.9 ກຳນົດໃຫ້ຮູ້ວ່າ ການຄອບຄອງເຮັດກະສິກຳ ແລະ ຄົວເຮືອນ ແມ່ນ ຫົວໜ່ວຍອັນດຽວກັນ. ຄ.6 - 7 ຈະພິສູດ ໃຫ້ເຫັນວ່າ ໃນຄົວເຮືອນ ນຶ່ງ ອາດມີນຶ່ງ ຫຼື ຫຼາຍກວ່ານຶ່ງ ຫົວໜ່ວຍການຄອບຄອງ; ຄ. 8 ແລະ ຄ.9 ກວດເບິ່ງວ່າ ກິດຈະກຳການປູກພືດ ແລະລ້ຽງສັດ ຂອງຄົວເຮືອນ ມີລັກສະນະເຮັດຮ່ວມກັນ ກັບຄົວເຮືອນອື່ນ ຫຼືບໍ່.

**ຄຳຖາມ 1**

| | | |
|---|---|---|
| **1.** ຄົວເຮືອນ(ຫົວໜ່ວຍການຄອບຄອງ) ຂອງທ່ານໄດ້ຄອບຄອງເນື້ອທີ່ດິນກະສິກຳ <u>ໃນລະດູຝົນ ປີ1998</u> ຫລື<u>ລະດູແລ້ງ ປີ1998/99</u> ບໍ່? | ໄດ້ ☐ 1 | *→ ຜ່ານໄປຫາຄຳຖາມ 2* |
| | ບໍ່ໄດ້ ☐ 2 | *→ ຂ້າມໄປຫາຄຳຖາມ 3* |
| *ຂໍ້ຄວນເອົາໃຈໃສ່ ລວມທັງດິນນາ, ດິນໄຮ່, ດິນສວນ, ປູກພືດຢູ່ຂົງເຂດບ້ານ, ປູກຢູ່ບ່ອນອື່ນ, ພືດຢືນຕົ້ນ, ດິນກະສິກຳທີ່ປະເປັນເຮື້ອ* | | |

ຖ້າ ຄຳຕອບ ວ່າ "ໄດ້", ໃຫ້ໝາຍ (✓) ໃສ່ຫ້ອງສີ່ຫຼ່ຽມ ທີ່ເຫັນວ່າເໝາະສົມ ແລ້ວ ຜ່ານໄປຄຳຖາມ 2 ຖ້າຄຳຕອບວ່າ "ບໍ່ໄດ້" ໃຫ້ອ່ານ ຂໍ້ຄວນເອົາໃຈໃສ່ ຖ້າຜູ້ຕອບຍັງຢືນຢັນວ່າ "ບໍ່ໄດ້", ໃຫ້ຜ່ານໄປຄຳຖາມ 3.ຈຸດປະສົງການຂຽນ ຂໍ້ຄວນເອົາໃຈໃສ່ ເພື່ອຊ່ວຍໃຫ້ໄດ້ຄຳຕອບຕອນດິນກະສິກຳ ໝົດທຸກປະເພດ.

ຄຳຖາມ ເປັນ ຂໍ້ກຸນແຈທີ່ສຳຄັນ ໃນການກຳນົດວ່າ ຄົວເຮືອນໃດຄວນຈະເປັນເປົ້າໝາຍຂອງ ການສຳຫຼວດ ຄັ້ງນີ້. ໃຫ້ເບິ່ງຂໍ້ 3.3 ຄວາມໝາຍດິນກະສິກຳ ແມ່ນຫຍັງ. ຢູ່ໃນນິຍາມ ຂອງ ການຄອບຄອງເຮັດກະສິກຳທີ່ໄດ້ຂຽນໃນຂໍ້ 3.2, ແມ່ນ ລວມເອົາ ດິນກະສິກຳ ທີ່ໄດ້ຄອບຄອງນຳໃຊ້ ໂດຍຄົວເຮືອນ ທຸກປະເພດ.

**ຄຳຖາມ 2**

| | | |
|---|---|---|
| **2.** ເນື້ອທີ່ດິນກະສິກຳທັງໝົດ | ຫລາຍກວ່າ 200 ມ$^2$ (1/8ໄຮ່)ຂຶ້ນໄປ ☐ 1 | *→ ຂ້າມໄປຫາຄຳຖາມ 5* |
| ມີຫລາຍປານໃດ? | ຕ່ຳກວ່າ 200 ມ$^2$(1/8ໄຮ່) ☐ 2 | *→ ຜ່ານໄປຫາຄຳຖາມ 3* |
| *ໝາຍ (√) ພຽງຄຳຕອບດຽວ* | | |

ຄຳຖາມນີ້ ໃຊ້ຖາມສະເພາະຄົວເຮືອນທີ່ມີຄຳຕອບ ໃນ ຄຳຖາມທີ່ 1. ຖ້າຄົວເຮືອນມີດິນ ແຕ່ 200 ຕາແມັດຂຶ້ນໄປ ( 1/4ໄລ່), ໃຫ້ໝາຍ (✓) ໃສ່ຫ້ອງສີ່ຫຼ່ຽມ 1 ແລະຜ່ານໄປຫາຄຳຖາມທີ່ 5; ຖ້າກໍລະນີກົງກັນຂ້າມ ໃຫ້ໝາຍ (✓) ໃສ່ຫ້ອງສີ່ຫຼ່ຽມ 2 ແລະຜ່ານໄປຫາຄຳຖາມທີ່ 3.

ລວມເອົາທຸກຕອນດິນກະສິກຳທັງໝົດ ທີ່ຄົວເຮືອນໄດ້ຄອບຄອງນຳໃຊ້ (ໃຫ້ເບິ່ງຂໍ້ 3.2, 3.3, 3.6, 3.7).

ຈຸດປະສົງຂອງຄຳຖາມ 2 ແມ່ນເພື່ອຢາກຮູ້ວ່າ ຄົວເຮືອນມີດິນພຽງພໍຕາມເງື່ອນໄຂທີ່ໄດ້ກຳນົດ ເປັນຫົວໜ່ວຍການຄອບຄອງເຮັດກະສິກຳ. ດັ່ງນັ້ນ ຈຶ່ງມີຄວາມຈຳເປັນພຽງແຕ່ ຮູ້ຈັກເນື້ອທີ່ ແຕ່ 200 ຕາແມັດຂຶ້ນໄປເທົ່ານັ້ນ ບໍ່ຈຳເປັນ ເສຍ ເວລາຄິດໄລ່ເນື້ອທີ່ໃຫ້ຖືກຕ້ອງ ເຖິງແມ່ນວ່າຂໍ້ມູນຕ່າງໆຍັງບໍ່ຈະແຈ້ງກໍ່ຕາມ. ເນື້ອທີ່ ສັດເຈນ ຈະໄດ້ຄິດໄລ່ຕາມຫຼັງ ຢູ່ ພາກ ຄ ຂອງ ໃບສອບຖາມ.

**ຄຳຖາມ 3**

**3.** ປະຈຸບັນນີ້ຄົວເຮືອນ (ຫົວໜ່ວຍການຄອບຄອງ) ຂອງທ່ານໄດ້ລ້ຽງສັດມີຈຳນວນເທົ່າໃດ? ເຊັ່ນ:

| | | | | | |
|---|---|---|---|---|---|
| 1.ງົວ ? | | 5.ແກະ ? | | 9.ຈຳນວນສັດລ້ຽງອື່ນໆ ເຊັ່ນ: ມ້າ,ຊ້າງ,ໄກ່ງວງ,ຫ່ານ? | |
| 2.ຄວາຍ ? | | 6.ໄກ່ລາດ ? (ນັບທັງໄກ່ນ້ອຍ) | | ໃຫ້ລະບຸຊື່ແຈ້ງ | |
| 3.ໝູ ? | | 7.ໄກ່ພັນ ? ( ນັບທັງໄກ່ນ້ອຍ ) | | | |
| 4.ແບ້ ? | | 8. ເປັດ ? | | | |

ຄຳຖາມ ນີ້ ແມ່ນ ຖາມ ສະເພາະ ຄົວເຮືອນທີ່ມີເນື້ອທີ່ ດິນກະສິກຳ ຕ່ຳກວ່າ 200 ແມັດມົນທົນໃນຄຳຖາມ 2. ໃຫ້ຖາມ ຈຳນວນສັດແຕ່ລະປະເພດ. ສັດປະເພດຕ່າງໆ ແລະຄວາມໝາຍຂອງຄຳວ່າ ປະຈຸບັນ ໄດ້ລ້ຽງສັດ ໃຫ້ເບິ່ງໃນຂໍ້ 3.8.
ຂໍ້ມູນດ້ານ ລ້ຽງສັດ ແມ່ນ ອີງໃສ່ ມື້ ເດີນສຳຫຼວດເກັບກຳຂໍ້ມູນ.

**ຄຳຖາມ 4**

**4.** *ໝາຍ ( √ ) ພຽງຄຳຕອບດຽວ*

ໄດ້ຄອບຄອງສັດລ້ຽງ* ☐ 1
ບໍ່ໄດ້ຄອບຄອງສັດລ້ຽງ ☐ 2

**ງົວ/ຄວາຍ 2 ໂຕຂຶ້ນໄປ, ໝູ/ແບ້/ແກະ 5 ໂຕຂຶ້ນໄປ, ສັດປີກ 20 ໂຕ ຂຶ້ນໄປ*

ມັນແມ່ນ ການແນະນຳໃຫ້ຮູ້. ຖ້າ ໝາຍ (✓)ໃນຫ້ອງສີ່ຫຼ່ຽມ 1 ໝາຍເຖິງ ຄົວເຮືອນ ມີຈຳນວນສັດລ້ຽງຕາມເງື່ອນໄຂທີ່ວາງໄວ້, ຫຼື ທາງກົງກັນຂ້າມ ໃຫ້ ໝາຍ (✓)ໃສ່ ຫ້ອງ 2.

**ຄຳຖາມ 5**

| | | | | |
|---|---|---|---|---|
| **5.** | *ໝາຍ ( √ ) ພຽງຄຳຕອບດຽວ* | *(ຄຳຖາມ.2=1)* ໄດ້ຄອບຄອງດິນກະສິກຳ | ☐ 1 | → *ຜ່ານໄປຫາຄຳຖາມ 6* |
| | | *(ຄຳຖາມ.4=1)* ໄດ້ຄອບຄອງສັດລ້ຽງ | ☐ 2 | → *ຜ່ານໄປຫາຄຳຖາມ 6* |
| | | ບໍ່ໄດ້ຄອບຄອງດິນ ແລະສັດລ້ຽງ | ☐ 3 | → *ຂ້າມໄປຫາຄຳຖາມ 8* |

ມັນແມ່ນການແນະນຳໃຫ້ຮູ້. ຖ້າໝາຍ (✓) ໃສ່ ສາມຫ້ອງສີ່ຫຼ່ຽມ ໂດຍອີງໃສ່ ຄຳຕອບ ໃນຄຳຖາມທີ່ 1-4.

- ຖ້າໝາຍ (✓) ໃສ່ ຫ້ອງ 1, ສະແດງວ່າ ໄດ້ໝາຍ (✓) ໃສ່ ຫ້ອງ 1 ຢູ່ ຄຳຖາມທີ່ 2 ແລ້ວ (ຜູ້ຄອບຄອງເຮັດກະສິກຳ ມີດິນກະສິກຳ).
- ຖ້າໝາຍ (✓) ໃສ່ ຫ້ອງ 2, ສະແດງວ່າ ໄດ້ໝາຍ (✓) ໃສ່ ຫ້ອງ 1 ຢູ່ ຄຳຖາມທີ່ 4 ແລ້ວ (ຜູ້ຄອບຄອງເຮັດກະສິກຳມີສັດລ້ຽງ ພັດບໍ່ມີດິນກະສິກຳ).
- ຖ້າໝາຍ (✓) ໃສ່ ຫ້ອງ 3, ສະແດງວ່າ ຄົວເຮືອນ ບໍ່ມີດິນ ຫຼື ບໍ່ມີສັດລ້ຽງ ຕາມເງື່ອນໄຂ (ນິຍາມ) ກຳນົດກ່ຽວກັບ ຜູ້ຄອບຄອງເຮັດກະສິກຳ.

**ຄຳຖາມ 6, 7**

| | | | |
|---|---|---|---|
| **6.** ຄົວເຮືອນ ຂອງທ່ານ ເຮັດກິດຈະກຳການປູກພືດ ແລະລ້ຽງສັດ ແບບໃດ? | | | |
| | ເປັນຫົວໜ່ວຍການຜະລິດດຽວ | ☐ 1 | → *ຂ້າມໄປຫາຄຳຖາມ 8* |
| | ຫລາຍກວ່ານຶ່ງຫົວໜ່ວຍການຜະລິດ | ☐ 2 | → *ຜ່ານໄປຫາຄຳຖາມ 7* |
| **7.** ໃຫ້ຂຽນບອກແຈ້ງ | | | |

ຄຳຖາມເລົ່ານີ້ ຈະຊ່ວຍໃຫ້ຮູ້ວ່າ ຄົວເຮືອນ ນຶ່ງ ມີ ນຶ່ງ ຫຼື ຫຼາຍກ່ວາ ນຶ່ງ ການຄອບຄອງເຮັດກະສິກຳ, ເຊັ່ນວ່າ ມີ ສະມາຊິກ ໃນຄົວເຮືອນ ຜູ້ໃດ ຜູ້ນຶ່ງໄດ້ ປູກພືດ ຫຼືລ້ຽງສັດ ໃຫ້ຕົນເອງ ນອກຈາກ ຂອງ ຄົວເຮືອນ.

ຖ້າ ການຄອບຄອງແມ່ນຂອງຄົວເຮືອນດຽວ, ໃຫ້ ໝາຍ (✓) ໃສ່ ຫ້ອງ 1 ໃນ ຄ.6 ແລະຂ້າມໄປຄຳຖາມ 8. ຖ້າ ມີຫຼາຍກ່ວາ ນຶ່ງ ການຄອບຄອງໃນຄົວເຮືອນ ໃຫ້ໝາຍ (✓) ໃສ່ ຫ້ອງ 2 ໃນ ຄ.6 ແລະໃຫ້ ຜູ້ກ່ຽວ ຂຽນບອກແຈ້ງ ກ່ຽວກັບ ການເຮັດຮ່ວມກັນ ໃນ ຄຳຖາມ 7.

ສ່ວນຫຼວງຫຼາຍ ນຶ່ງ ຄົວເຮືອນ ແມ່ນ ນຶ່ງການຄອບຄອງເຮັດກະສິກຳ. ໂດຍທົ່ວໄປ, ມັກພົບພໍ້ ແມ່ນບຸກຄົນທີ່ມີກິດຈະກຳ ການປູກພືດ ຫຼືລ້ຽງສັດ ເປັນຂອງຕົນເອງສ່ວນນຶ່ງຕ່າງຫາກ ຈາກ ຄົວເຮືອນທີ່ອາໄສຢູ່. ບໍ່ແມ່ນຍາດຕິພີ່ນ້ອງຂອງຕົນເອງຢູ່ອາໄສຢູ່ຮ່ວມນຳ ໃນຄົວເຮືອນ, ເຊັ່ນ ຜູ້ຮັບຈ້າງ ຫຼື ບຸກຄົນອື່ນໆ ທີ່. ບາງຄັ້ງຄາວ, ສາມະຊິກໃນຄົວເຮືອນ ເຊັ່ນ ລູກຊາຍ/ລູກສາວ ໄດ້ແຕ່ງງານ ແລະມີກິດຈະກຳເປັນຂອງ ຄອບຄົວຂອງເຂົາເຈາເອງຕ່າງຫາກ, ບາງຄັ້ງ ພາກປະຕິບັດຕົວຈິງ, ແມ່ນມີຄວາມຫຍຸ້ງຍາກ ທີ່ຈະແຍກແຍະ, ເບິ່ງວ່າ ກິດຈະກຳດ້ານກະສິກຳພາຍໃນຄົວເຮືອນ. ຖ້າ ຍັງມີຂໍ້ສົງໃສ, ບໍ່ຈະແຈ້ງ, ໃຫ້ກຳນົດເປັນ ນຶ່ງການຄອບຄອງໃນຄົວເຮືອນ.
<u>ສິ່ງສຳຄັນອັນນຶ່ງ ແມ່ນທຸກກິດຈະກຳ ດ້ານປູກພືດ ແລະ ລ້ຽງສັດ ທີ່ເປັນຂອງຄົວເຮືອນໄດ້ ທັງໝົດໄດ້ບັນທຶກຄົບຖ້ວນ.</u>

สิ่งที่ควนปะติบัด เวลามี สองภานคอบคองเร็ดกะสิภำในคือเรือน เช่น:

(ກ) ຫົວໜ່ວຍການຄອບຄອງເຮັດກະສິກຳຜູ້ທີ່ ນຶ່ງ

- ຈົດກ່າຍຕາຕະລາງ 5 ໃຫ້ສຳເລັດ ສຳລັບຫົວໜ່ວຍການຄອບຄອງທີ່ ນຶ່ງ. ຫົວໜ່ວຍການຄອບຄອງເຮັດກະສິກຳຜູ້ທີ່ນຶ່ງ ປົກກະຕິຈະແມ່ນກິດຈະກຳດ້ານປູກພືດ ແລະລ້ຽງສັດຂອງຫົວໜ້າຄົວເຮືອນ.
- ຢູ່ ພາກ ດ (ລາຍລະອຽດກ່ຽວກັບຄົວເຮືອນ), ບໍ່ໃຫ້ຈົດກ່າຍສາມະຊິກຄົວເຮືອນ ຈະຈົດແຕ່ ຫົວໜ່ວຍການຄອບຄອງທີ່ສອງ.

(ຂ) ຫົວໜ່ວຍການຄອບຄອງເຮັດກະສິກຳຜູ້ທີ່ສອງ

- ເອົາຕາຕະລາງ 5 ທີ່ບໍ່ທັນໄດ້ຈົດກ່າຍ ອອກມາ(ຕາຕະລາງໃໝ່)
- ກ່າຍເອົາລະຫັດ (ແຂວງ, ເມືອງ, ບ້ານ, ຄົວເຮືອນເລກທີ)ຈາກຕາຕະລາງ 5 ຂອງການຄອບຄອງທີ່ນຶ່ງຂ້າງເທິງ.
- ໃຫ້ຈົດກ່າຍຂໍ້ມູນໃສ່ ຄຳຖາມຢູ່ເບື້ອງຊ້າຍຂອງໜ້າປົກທຳອິດ ໃຫ້ຄົບຖ້ວນ.
- ໃຫ້ອະທິບາຍກໍລະນີພິເສດຂອງຄົວເຮືອນທີ່ເຮັດຮ່ວມກັບຄົວເຮືອນອື່ນ
- ໃຫ້ຈົດກ່າຍຂໍ້ມູນໃສ່ຄຳຖາມ ຢູ່ ພາກ ຂ ເຖິງ ພາກ ຕ ສຳລັບ ການຄອບຄອງທີ່ສອງ ໃຫ້ຄົບຖ້ວນ. ບໍ່ຕ້ອງຈົດກ່າຍຫຍັງໃນພາກ ກ. ຄຳວ່າ “ຄົວເຮືອນ” ໃນຕາຕະລາງ 5 ມີ ຄວາມໝາຍວ່າ ແມ່ນ ບຸກຄົນ ທີ່ມີບົດບາດເປັນ ຫົວໜ່ວຍການຄອບຄອງສຳຮອງ.
- ຢູ່ ພາກ ດ, ໃຫ້ບັນທຶກສາມະຊິກຄົວເຮືອນ ຂອງບຸກຄົນທີ່ມີການຄອບຄອງເຮັດກະສິກຳ ທີ່ສອງ.
- ໃຫ້ລະມັດລະວັງ ບໍ່ຄວນຈົດນັບ ດິນ ຫຼື ສັດລ້ຽງ 2 ເທື່ອ.

**ຄຳຖາມ 8,9**

| | | |
|---|---|---|
| **8.** ໃນປີຜ່ານມາ ຄົວເຮືອນຂອງທ່ານ ໄດ້ປູກພືດ ຫລືລ້ຽງສັດ ຮ່ວມກັບຄົວເຮືອນອື່ນບໍ່? | ໄດ້ ☐ 1 | → *ຜ່ານໄປຫາຄຳຖາມ 9* |
| | ບໍ່ໄດ້ ☐ 2 | → *ຂ້າມໄປຫາພາກ ຂ* |
| **9.** ໃຫ້ຂຽນບອກແຈ້ງ | | |

ຄຳຖາມຂ້າງເທິງເລົ່ານີ້, ກຳນົດໃຫ້ຮູ້ວ່າ ບາງກິດຈະກຳດ້ານປູກພືດ ຫຼື ລ້ຽງສັດຂອງຄົວເຮືອນໄດ້ເຮັດຮ່ວມກັບຄົວເຮືອນອື່ນ ( ມີຫຸ້ນສ່ວນຮ່ວມກັນເຮັດຫຼາຍຄົນຈາກ ຫຼາຍຄົວເຮືອນ).

ຖ້າ ບໍ່ໄດ້ເຮັດຮວມກັນ, ໃຫ້ ໝາຍ (✓) ໃສ່ຫ້ອງ 2 ຢູ່ ຄຳຖາມ 8 ແລະຂ້າມຜ່ານໄປຫາຄຳຖາມພາກ ຂ. ຖ້າເຮັດຮ່ວມກັບຄົວເຮືອນອື່ນ, ໃຫ້ ໝາຍ (✓) ໃສ່ຫ້ອງ 1 ໃນຄຳຖາມ 8 ແລະຖາມ ຜູ້ຕອບໃຫ້ ກະຈາງແຈ້ງ ກ່ຽວກັບ ສະພາບການເຮັດຮ່ວມກັນ (ການມີຫຸ້ນສ່ວນຮ່ວມກັນເຮັດ)ໃນ ຄຳຖາມ 9.

ໃຫ້ເບິ່ງ ຂໍ້ 7.2 ສຳລັບ ນິຍາມ ຂອງ ຄຳວ່າ ການເຮັດຮ່ວມກັນ. ການເຮັດຮ່ວມກັນ ຈະຈຳແນກ ໄດ້ຍາກ. ຄົວເຮືອນ, ອາດ ນຳໃຊ້ດິນ/ລ້ຽງສັດ ເປັນຂອງຕົນເອງ ສ່ວນນຶ່ງ, ແລະອີກສ່ວນນຶ່ງ ໄປຮ່ວມເຮັດກັບ ຄົວເຮືອນອື່ນ. ບາງຄັ້ງ, ໃນພາກປະຕິບັດຕົວຈິງອາດຕັດສິນໄດ້ຍາກ ວ່າ ແມ່ນຄົວເຮືອນເຮັດຮ່ວມກັນ. ຖ້າ ມີຂໍ້ສົງໃສ, ໃຫ້ກຳນົດ

ເປັນ ນຶ່ງການຄອບຄອງໃນຄົວເຮືອນ. ສິ່ງສຳຄັນອັນນຶ່ງ ແມ່ນທຸກກິດຈະກຳ ດ້ານປູກພືດ ແລະລ້ຽງສັດ ຂອງຄົວເຮືອນໄດ້ ບັນທຶກຄົບຖ້ວນທັງໝົດຊຶ່ງເປັນຂອງຄົວເຮືອນ.

ສິ່ງທີ່ຄວນປະຕິບັດ ເວລາມີ ສອງການຄອບຄອງເຮັດກະສິກຳໃນຄົວເຮືອນ ເຊັ່ນ:

- ກ່າຍຕາຕະລາງ 5 ຂອງ ຄົວເຮືອນທີ່ຖືກເລືອກເປັນຕົວແທນ, ບັນທຶກເອົາກິດຈະກຳດ້ານກະສິກຳ ຊຶ່ງເປັນຂອງສ່ວນຕົວຂອງຄົວເຮືອນ. ແລະໃຫ້ຂຽນບອກແຈ້ງ ການເຮັດຮ່ວມກັບຄົວເຮືອນອື່ນ (ມີຫຸ້ນສ່ວນກັບຄົວເຮືອນອື່ນ)
- ນຳໃຊ້ ຕາຕະລາງ 4 ຫຼື ຕາຕະລາງ5 ສຳພາດຄົວເຮືອນອື່ນ ນັ້ນ,ບັນທຶກເອົາກິດຈະກຳດ້ານກະສິກຳ ຊຶ່ງເປັນຂອງສ່ວນຕົວຂອງຄົວເຮືອນນີ້. ແລະໃຫ້ຂຽນບອກແຈ້ງ ການເຮັດຮ່ວມກັບຄົວເຮືອນນັ້ນ.
- ນຳໃຊ້ອີກຕາຕະລາງ 5 ສຳພາດ ເອົາຂໍ້ມູນດ້ານ ປູກພືດ/ລ້ຽງສັດ ຂອງການເຮັດຮ່ວມກັນ ຂອງ ສອງຄົວເຮືອນ. ໃຫ້ມີຄວາມລະມັດລະວັງ ຢ່າຈົດກ່າຍຊ້ຳຊ້ອນກັນ.

## 7.5 ພາກ ຂ : ລັກສະນະຂອງຕອນດິນ

**ຄຳຖາມ 10,11**

**10.** ຄຳຖາມຕໍ່ໄປນີ້ແມ່ນຖາມກ່ຽວກັບດິນກະສິກຳທັງໝົດຂອງຄົວເຮືອນ (ຫົວໜ່ວຍການຄອບຄອງ) ຂອງທ່ານ ໃນລະດູຝົນປີ 1998 ແລະລະດູແລ້ງປີ 1998/99

ຄົວເຮືອນ (ຫົວໜ່ວຍການຄອບຄອງ) ມີອັນໃດນຶ່ງເຫລົ່ານີ້ບໍ່?

*ໝາຍ (√ )ໃສ່ ນຶ່ງຄຳຕອບ ຫລື ຫລາຍກວ່າກໍ່ໄດ້*

ປູກພືດຢູ່ໃນຂອບເຂດຂອງບ້ານນີ້ບໍ່? ☐ 1
ປູກພືດຢູ່ບ່ອນອື່ນບໍ່? ☐ 2
ມີສວນຄົວບໍ່? ☐ 3
ເຊົ່າດິນປູກພືດຈາກຜູ້ອື່ນບໍ່? ☐ 4
ປູກພືດຢືນຕົນບໍ່? ☐ 5
ດິນກະສິກຳປະເປັນເຮື້ອມີບໍ່? ☐ 6

**11.** ດິນກະສິກຳທັງໝົດທີ່ກ່າວມາຂ້າງເທິງນັ້ນມີຈັກຕອນ ? ☐

ຈຸດປະສົງຂອງຄຳຖາມແມ່ນເຈາະຈີ້ມໃຫ້ຮູ້ວ່າ ຄົວເຮືອນ/ການຄອບຄອງ ມີ ຈຳນວນຕອນດິນກະສິກຳຈັກຕອນ ? ຢູ່ ຄ.10 ມີຄຳຖາມຍ່ອຍຕ່າງໆໃຫ້ເຮົາຖາມຄົວເຮືອນວ່າມີດິນຢູ່ໃສ່ແດ່ ແລະມີດິນປະເພດໃດແດ່ ເພື່ອບໍ່ໃຫ້ຄົວເຮືອນລືງລືມ.

ມີຄຳຖາມຍ່ອຍ ຢູ່ 6 ຄຳຖາມໃນຄຳຖາມທີ່ 10: ໃຫ້ ໝາຍ (✓) ໃສ່ຄຳຕອບທີ່ສອດຄ່ອງ ຂອງແຕ່ລະຄຳຖາມຍ່ອຍ. ສາມາດໝາຍ (✓) ໃສ່ ຫຼາຍຫ້ອງອາດເປັນໄປໄດ້ຂອງຄົວເຮືອນ. ຖ້າກໍລະນີບໍ່ໄດ້ໝາຍຫຍັງ ໃສ່ແຕ່ລະຫ້ອງ ໝາຍເຖິງວ່າ ຄົວເຮືອນບໍ່ມີດິນກະສິກຳ.

ໃນຄຳຖາມທີ່ 11, ໃຫ້ບັນທຶກຈຳນວນຕອນດິນກະສິກຳ. ໃຫ້ບັນທຶກຈຳນວນຕອນດິນຕົວຈິງຂອງຄົວເຮືອນທີ່ມີ, ບໍ່ໝາຍເຖິງຈຳນວນ ຫ້ອງທີ່ໄດ້ໝາຍ (✓) ໃນຄຳຖາມ 10. ຕົວຢ່າງ: ຖ້າຄົວເຮືອນ ໄດ້ເຊົ່າດິນ ຈາກຜູ້ອື່ນ ປູກພືດຢືນຕົນ 1 ຕອນດິນ , ໃນຄຳຖາມ 10 ຈະມີຄຳຕອບ 2 ຫ້ອງ ໝາຍວ່າ ໄດ້ໝາຍ (✓)ໃສ່ ສອງຫ້ອງ ຄື ຫ້ອງ

ເຊົ່າດິນປູກພືດຈາກຜູ້ອື່ນ ແລະ ທ້ອງ ປູກພືດຍືນຕົນ.

ໃຫ້ ເບິ່ງຂໍ້3.3 ລາຍລະອຽດ ກ່ຽວກັບ <u>ດິນກະສິກຳ.</u> ພືດ ລວມ ທັງພືດລົມລຸກ ແລະພືດຍືນຕົນ (ໃຫ້ເບິ່ງ ຂໍ້ 3.6ແລະ 3.7). ດິນປະເປັນເຮື້ອ ແມ່ນດິນກະສິກຳທຸກປະເພດ ພາຍໃຕ້ການຄອບຄອງເຮັດກະສິກຳ ຕາມນິຍາມທີ່ລະບຸໄວ້ ໃນຂໍ້ 3.2 ຊຶ່ງດິນດັ່ງກ່າວ ບໍ່ນຳໃຊ້ຊົ່ວຄາວ.

**ຄຳຖາມ 12,13**

| | |
|---|---|
| **12.** ປະຈຸບັນນີ້ຄົວເຮືອນ (ຫົວໜ່ວຍການຄອບຄອງ) ຂອງທ່ານມີດິນອື່ນອີກບໍ່ທີ່ບໍ່ແມ່ນດິນກະສິກຳ? ເຊັ່ນ : | |
| *ໝາຍ (√ )ໃສ່ ບ່ອງຄຳຕອບ ຫລື ຫລາຍກວ່າກໍ່ໄດ້* | ດິນປູກຫຍ້າ? ☐ 1<br>ດິນປ່າໄມ້? ☐ 2<br>ດິນນຳໃຊ້ສຳລັບຂຸດສະລຽງປາມີບໍ່? ☐ 3<br>ດິນບໍ່ເໝາະເຮັດການຜະລິດ? ☐ 4<br>(ຍົກເວັ້ນດິນເຮືອນ) |
| **13.** ດິນທີ່ບໍ່ແມ່ນດິນກະສິກຳທັງໝົດທີ່ກ່າວມາຂ້າງເທິງນັ້ນມີຈັກຕອນ? | ☐ |

ໃນການສຳຫຼວດສະຖິຕິກະສິກຳຄັ້ງນີ້, ພວກເຮົາສົນໃຈຢາກຮູ້ ທັງ ສອງປະເພດດິນ ຄື ດິນກະສິກຳ ແລະບໍ່ແມ່ນດິນກະສິກຳທີ່ຄົວເຮືອນ/ການຄອບຄອງ ໄດ້ນຳໃຊ້ດິນດັ່ງກ່າວ.

ຢູ່ຄຳຖາມ 12 ມີ 4 ຄຳຖາມຍ່ອຍ. ໃຫ້ຖາມແຕ່ລະປະເພດຂອງດິນທີ່ຄົວເຮືອນມີ ແລະໝາຍຄຳຕອບ (✓) ໃສ່ຫ້ອງທີ່ກ່ຽວຂ້ອງ. ສາມາດ ມີຄຳຕອບ (✓) ຫຼາຍກວ່າ 1 ຄຳຕອບ ໄດ້ . ຫຼັງຈາກນັ້ນໃຫ້ ບັນທຶກ ຈຳນວນຕອນດິນທີ່ບໍ່ແມ່ນດິນກະສິກຳໃນຄຳຖາມ13. ຫຼືໃຫ້ ໝາຍ “ 0 ” ໃສ່ຄຳຖາມ 13 ຖ້າ ຄົວເຮືອນບໍ່ມີດິນ ຊຶ່ງບໍ່ແມ່ນດິນກະສິກຳໃນຄຳຖາມ 12.

<u>ດິນປູກຫຍ້າ</u> ແມ່ນດິນນຳໃຊ້ ສຳລັບ ປູກຫຍ້າ ລ້ຽງສັດ. ລວມມີສອງປະເພດ ຄື ຫຍ້າປູກ ແລະຫຍ້າທຳມະຊາດ,. ບໍ່ໃຫ້ລວມເອົາ ທົ່ງຫຍ້າ ສາທາລະນະ ຫຼື ເອີ້ນວ່າ ທົ່ງຫຍ້າຂອງບ້ານ...

<u>ດິນປ່າໄມ້</u>: ລວມມີ :ປ່າທຳມະຊາດ ແລະປ່າໄມ້ທີ່ໄດ້ປູກ (ຫຼືຈະເປັນປ່າໃນຕໍ່ໜ້າ)ຊຶ່ງຜົນຜະລິດ ຂອງມັນ ຈະໃຫ້ຄ່າ ເປັນ ຕົນໄມ້, ໄມ້ທ່ອນ, ຜະລິດຕະພັນ ປ່າໄມ້ ອື່ນ ໆ . ລວມເອົາ ທັງສວນກ້າເບັ້ຽໄມ້ ແລະເນື້ອທີ່ໄມ້ ປ່ອງ. ບໍ່ໃຫ້ລວມເອົາ ປ່າສາທາລະນະ ຫຼື ປ່າລວມຂອງບ້ານ....

<u>ດິນອື່ນໆ ທີ່ບໍ່ມີເງື່ອນໄຂຜະລິດ </u> ລວມເອົາດິນຕ່າງໆ ທີ່ບໍ່ສາມາດ ປູກພືດໄດ້, ບໍ່ລວມເອົາ ເຮືອນຢູ່ ຂອງ ຄົວເຮືອນ.

**ຄຳຖາມ 14**

| | | |
|---|---|---|
| **14.** | *ຈຳນວນຕອນດິນທັງໝົດທີ່ມີຈາກ (ຄຳຖາມ.11 + ຄຳຖາມ.13)* | ☐ |
| | ຖ້າມີດິນ ບ່ອງຕອນຂຶ້ນໄປໃຫ້ໝາຍ ( √ ) ໃສ່ຫ້ອງນີ້ ⟶ | ☐ 1 ⟶ *ຂ້າມໄປພາກ ຄ* |
| | ຖ້າບໍ່ມີດິນຈັກຕອນ ໃຫ້ໝາຍ (√) ໃສ່ຫ້ອງນີ້ ⟶ | ☐ 2 ⟶ *ຂ້າມໄປພາກ ຊ* |

ຄຳຖາມນີ້ ເປັນຂໍ້ແນະນຳ ຄິດໄລ່ຈຳນວນຕອນດິນທັງໝົດທີ່ມີ ຊຶ່ງໄດ້ມາຈາກ ຜົນບວກຂອງ ຈຳນວນຕອນດິນກະສິກຳ ແລະຈຳນວນຕອນດິນທີ່ບໍ່ແມ່ນດິນກະສິກຳ (ຜົນບວກ ຂອງ ຄຳຖາມ 11 ແລະ ຄຳຖາມ 13. ). ຖ້າ ມີຈຳນວນຕອນດິນ 1 ຕອນຂື້ນໄປ ໃຫ້ໝາຍ (√) ໃສ່ ຫ້ອງ1 ແລ້ວ ສືບຕໍ່ຖາມ ຢູ່ ພາກ **ຄ** ລາຍລະອຽດຂອງແຕ່ລະຕອນດິນ ຂອງຄົວເຮືອນ. ຖ້າບໍ່ມີດິນຈັກຕອນ, ໃຫ້ໝາຍ (√)ໃສ່ ຫ້ອງ 2 ແລະຂ້າມໄປຫາຄຳຖາມ ກ່ຍວກັບ ຈຳນວນສັດລ້ຽງຢູ່ ພາກ **ຊ** .

**ຄຳຖາມ 15**

| |
|---|
| **15.** ຄຳຖາມຕໍ່ໄປນີ້ຈະຖາມກ່ຽວກັບແຕ່ລະຕອນດິນ |

ນີ້ ແມ່ນເປັນຫົວຂໍ້ປະກາດ ໃຫ້ເຮົາ ອ່ານ ໃຫ້ຜູ້ຕອບຟັງ ເພື່ອກະກຽມໃສ່ຄຳຖາມ ກ່ຽວກັບ ແຕ່ລະຕອນດິນ ທີ່ມີ.

## 7.6 ພາກ ຄ: ລາຍລະອຽດ ກ່ຽວກັບຕອນດິນ

**ຂໍ້ສັງເກດ.** ຄຳຖາມ 16-24 ຖາມກ່ຽວກັບດິນແຕ່ລະຕອນ ໃນຄຳຖາມ 14. ສຳລັບດິນແຕ່ລະຕອນ ໃຫ້ແຍກຂຽນແຕ່ລະແຖວ. ຖ້າວ່າມີດິນຫຼາຍກວ່າ 12 ຕອນ, ຕາຕະລາງນີ້ຈະບໍ່ມີ ແຖວ ພຽງພໍສຳລັບຕອນດິນຕໍ່ໄປ, ໃຫ້ຫມາຍ ( √ ) ໃສ່ຫ້ອງທີ່ຢູ່ລຸ່ມສຸດຂອງຕາຕະລາງເພື່ອເປັນການບອກໃຫ້ຮູ້ວ່າຍັງມີໃບຕໍ່ໄປ ແລະສ່ວນຕອນດິນທີ່ຍັງເຫຼືອນັ້ນຈະໄດ້ບັນທຶກລະອຽດໃສ່ ຕາຕະລາງເບີ 8.

**ຄຳຖາມ 16**

| **16.** ດິນຕອນນີ້ເອີ້ນວ່າດິນຫຍັງ? |
|---|
| |

ຈຸດປະສົງຂອງຄຳຖາມນີ້ ແມ່ນຊ່ວຍນັກເດີນສຳຫຼວດ ແລະຜູ້ຕອບຈຳແນກຊະນິດຂອງແຕ່ລະຕອນດິນ. ໃຫ້ນຳໃຊ້ປະເພດຂອງດິນທີ່ນຳໃຊ້ ແລະເປັນຊື່ຂອງດິນທີ່ບຸກຄົນທົ່ວໄປເຂົາໃຈໄດ້ງ່າຍ ຂອງຄວາມແຕກຕາງກັນແຕ່ລະຕອນດິນ ເຊັ່ນ: ໃນບ້ານນີ້, ດິນຢູ່ບ້ານອື່ນ, ດິນໄຮ່ປູກເຂົາ, ດິນນາ, ດິນສ່ວນ, ດິນປູກຫຍ້າ ແລະອື່ນໆ..

ຖ້າເປັນໄປໄດ້, ໃຫ້ທ່ານບອກຄົວເຮືອນໃຫ້ພາໄປເບິ່ງ ແລະສັງເກດ ຕອນດິນ ດ້ວຍຕົນເອງ. ມັນຈະຊ່ວຍໃຫ້ ທ່ານ ເກັບກຳຂໍ້ມູນດ້ານເນື້ອທີ່ຂອງແຕ່ລະຕອນດິນໄດ້ດີ. ໃຫ້ເບິ່ງຢູ່ຂໍ້ 5.9 ຂໍ້ມູນເພີ້ມເຕີມ.

**ຄຳຖາມ 17**

| **17.** ດິນຕອນນີ້ເປັນຂອງຕົນເອງ ຫລືເຊົ່າ?<br>1 = ຂອງຕົນເອງ<br>2 = ເຊົ່າ *(ຖາມຕໍ່ຄຳຖາມ18)*<br>3 = ອື່ນໆ *(ໃຫ້ຂຽນບອກແຈ້ງ)* |
|---|
| 1 2 3 |

ຈຸດປະສົງຂອງຄຳຖາມນີ້ແມ່ນຊ່ວຍໃຫ້ ຮູ້ຈັກ ລັກສະນະຂອງການຄອບຄອງດິນ. ໃຫ້ຂີດວົງອ້ອມຕົວເລກທີ່ເປັນຄຳຕອບ ຖືກຕ້ອງ : 1 (ຂອງຕົນເອງ) 2 (ເຊົ່າ) 3. (ອື່ນໆ) ຖ້າແມ່ນຄຳຕອບ "ອື່ນໆ" ຈົ່ງໃຫ້ຂຽນລາຍລະອຽດ ຄວາມໝາຍອື່ນໆ.

<u>**ດິນຂອງຕົນເອງ**</u>: ມີຄວາມຫມາຍວ່າ ດິນ ເປັນຂອງຕົນເອງຢ່າງເປີດເຜີຍຖືກຕ້ອງຕາມກົດໝາຍ ຫຼື ມີຖານະເປັນເຈາຂອງດິນ. ບາງຕົວຢ່າງ ມີຖານະເປັນເຈາຂອງດິນ ຄື: ດິນໄດ້ນຳໃຊ້ຕະຫຼອດ ຫຼື ເຊົ່າເປັນເວລາຍາວນານ; ດິນທີ່ໄດ້ທຳການຜະລິດມາເປັນເວລາຫຼາຍປີເຮັດຕະຫຼອດລະດູ ແລະດິນທີ່ຄົວ

ເຮືອນໄດ້ຮັບຈາກລັດ ພາຍໃຕ້ເງື່ອນໄຂອັນແນ່ນອນ ເພື່ອໃຫ້ນຳໃຊ້ເຂົາໃນການຜະລິດກະສິກຳ. ຄົວເຮືອນທີ່ມີດິນເປັນຂອງຕົນເອງບາງເທື່ອກໍ່ມີເອກະສານເປັນກຳມະສິດຂອງຕົນເອງ ຫຼື ບາງເທື່ອກໍ່ບໍ່ມີເອກະສານເປັນກຳມະສິດຂອງຕົນເອງ.

**ດິນເຊົ່າ**: ມີຄວາມໝາຍວ່າ ດິນທີ່ໄດ້ເຊົ່າຈາກຜູ້ອື່ນ (ປົກກະຕິແລ້ວແມ່ນໄດ້ກຳນົດເວລາຢ່າງຄັກແນ່) ສຳລັບການຕົກລົງຄ່າເຊົ່ານັ້ນຈະຢູ່ໃນຮູບການເປັນເງິນສົດ ຫຼື ເປັນວັດຖຸພັນ. ລາຍລະອຽດຂອງການເຊົ່າ ຈະໄດ້ສົນທະນາອີກຕື່ມ ໃນ ຄຳຖາມ 18 .

**ດິນອື່ນໆ**: ແມ່ນລວມເອົາດິນທັງໝົດ ຍົກເວັ້ນດິນຂອງຕົນເອງ ຫຼື ດິນເຊົ່າ. ຕົວຢ່າງ: ດິນໃຊ້ລ້າ, ດິນທີ່ນຳໃຊ້ເພື່ອ ປູກພືດ ຊຶ່ງບໍ່ໄດ້ເປັນກຳມະສິດຂອງຕົນເອງ, ແລະ ຢືມດິນຈາກຜູ້ອື່ນ .

**ຄຳຖາມ 18**

ຈຸດປະສົງຂອງຄຳຖາມນີ້ແມ່ນຊ່ວຍໃຫ້ຜູ້ທີ່ເຊົ່າດິນເຂົາໃຈເພື່ອກະກຽມຄຳຕອບໃຫ້ຖືກຕ້ອງ. ອັນນີ້ມັນເປັນການຖາມກັບຜູ້ທີ່ຖືກສຳພາດ, ຖ້າວ່າດິນນັ້ນແມ່ນໄດ້ເຊົ່າຢູ່ໃນຄຳຖາມ 17.
ຂີດວົງອ້ອມຕົວເລກຕາມຄຳຕອບທີ່ເໝາະສົມ: 1. ຈ່າຍເປັນເງິນສົດ; 2. ແບ່ງປັນຜົນຜະລິດ; 3. ແລກປ່ຽນແຮງງານ 4. ອື່ນໆ (ໃຫ້ບອກແຈ້ງ)

| *ຖ້າວ່າ"ເຊົ່າ"ໃນຄຳຖາມ 17* |
| --- |
| **18.**<br>ຮູບແບບການເຊົ່າ<br>ດິນຕອນນີ້ມີຄືແນວໃດ?<br>1 = ຈ່າຍເປັນເງິນສົດ<br>2 = ແບ່ງປັນຜົນຜະລິດ<br>3 = ແລກປ່ຽນແຮງງານ<br>4 = ອື່ນໆ *(ໃຫ້ຂຽນບອກແຈ້ງ)* |
| 1 2 3 4 |

**ແບ່ງປັນຜົນຜະລິດ:** ມີຄວາມໝາຍວ່າ: ໄດ້ກຳນົດບໍລິມາດຜົນຜະລິດ ຫຼື ກຳນົດອັດຕາສ່ວນ ຜົນຜະລິດ ຕອບແທນແຮງງານ . ອີກຕົວຢ່າງ: **ການແລກປ່ຽນແຮງງານ** ໝາຍເຖິງ ການຕອບສະໜອງແຮງງານ ຊ່ວຍເຫຼືອສິ່ງກັນ ແລະກັນຍ ໄລຍະເວລາ ຊ່ວງຂອງລະດູການຜະລິດ (ຕົກກ້າ, ກຽມດິນ, ປູກ, ເກັບກ່ຽວ...).

**ຄຳຖາມ 19**

ຈຸດປະສົງຂອງຄຳຖາມນີ້ ແມ່ນເພື່ອເຂົາໃຈ ຂອບເຂດລະຍະເວລາ ຂອງການສັບສ່າວດິນຜ່ານມາ. ໃຫ້ຂີດວົງມົນອອ້ມຕົວເລກທີ່ເຫັນວ່າສອດຄ່ອງກັບຄຳຕອບ: 1= ປີກາຍນີ້; 2= ລະຫວ່າງ 1-3ປີ; 3= 4ປີຂຶ້ນໄປ ແລະ4 = ດິນບໍ່ທັນບຸກເບີກ.

| **19.** |
| --- |
| ດິນຕອນນີ້<br>ໄດ້ຖືກສັບສ່າວ<br>ດົນປານໃດແລ້ວ?<br>1 = ປີກາຍນີ<br>2 = ລະຫວ່າງ 1-3 ປີ<br>3 = 4 ປີຂຶ້ນໄປ<br>4 = ດິນບໍ່ທັນບຸກເບີກ |
| 1 2 3 4 |

ຖ້າ ໄດ້ສັບສ່າວຕອນດິນດັ່ງກ່າວ ຫຼາຍລະຍະເວລາແຕກຕ່າງກັນ, ໃຫ້ຖືເອົາເວລາສ່ວນໃຫຍ່ຂອງການບຸກເບີກມາບັນທຶກໃນໃບສອບຖາມ. ຖ້າດິນໄດ້ສັບສ່າວຄືນໃໝ່ອີກ ພາຍຫຼັງບໍ່ໄດ້ປູກມາຫຼາຍປີແລ້ວ, ໃຫ້ບັນທຶກ ເວລາສ່ວນໃຫຍ່ບຸກເບີກດິນ. ບໍ່ຄວນເສຍເວລາ ແລະບໍ່ຈຳເປັນທີ່ຈະເອົາເວລາທີ່ແນ່ນອນໃນມື້ສັບສ່າວ; ຖ້າຜູ້ຕອບບອກວ່າ ສັບສ່າວ "ຫຼາຍປີມາແລ້ວ", ໃຫ້ຈົດໃສ່ຄຳຕອບ 3 " = 4 ປີຂຶ້ນໄປ".

ການຕັ້ງຄຳຖາມແບບນີ້ ແມ່ນຍ້ອນເປັນຄຳຖາມ ລະອຽດອອ່ນ ທີ່ຜູ້ຕອບຢ້ານກົວທີ່ສຸດ ໂດຍສະເພາະ ຜູ້ຖາງປ່າເຮັດໄຮ່ ຍ້ອນພວກເຮົາມີກົດໝາຍ ວ່າ ການຖາງປ່າເຮັດໄຮ່. ດີແທ້ ຖ້ານັກເດີນສຳຫຼວດ ທາກລະດົມຂົນຂວາຍຊາວໄຮ່ ໃຫ້ບອກຄວາມຈິງ ແລະກໍ່ຈະບໍ່ມີຜົນສະທ້ອນແກ່ ຜູ້ຕອບ ຍິ່ງເປັນການດີ ທີ່ຈະຮູ້ຈັກເນື້ອທີ່ຂອງການຖາງ

ປ່າເຮັດໄຮ່.

**ຄໍາຖາມ 20**

ຈຸດປະສົງຂອງຄໍາຖາມນີ້ ແມ່ນຢາກໄດ້ຂໍ້ມູນດ້ານເນື້ອທີ່ ຂອງແຕ່ລະຕອນດິນແລະເປັນເຄື່ອງມືຂອງການຄິດໄລ່ ຂະໜາດ ຂອງ ການຄອບຄອງດິນ. ຂະໜາດ ຂອງການຄອບຄອງ ແມ່ນ ບັນຫານຶ່ງທີ່ສໍາຄັນ ຂອງລາຍການຂໍ້ມູນໃນການສໍາຫຼວດສະຖິຕິ ກະສິກໍາຄັ້ງນີ້ ເຮັດໃຫ້ເຮົາສາມາດຮູ້ໄດ້ ແລະເປົ້າໝາຍສຶກສາ ຂະໜາດ ຕ່າງໆ ຂອງແຕ່ລະການຄອບຄອງ.

| 20. ເນື້ອທີ່ຂອງດິນຕອນນີ້ມີເທົ່າໃດ? | |
|---|---|
| ຫົວໜ່ວຍທ້ອງຖິ່ນ | ເຮັກຕາ |
| | |

ໃຫ້ອີງໃສ່ ຂໍ້ 5.8 ແລະ 5.9 ສໍາລັບລາຍລະອຽດຂອງການບັນທຶກຂໍ້ມູນດ້ານເນື້ອທີ່ດິນ.

**ຄໍາຖາມ 21**

ຈຸດປະສົງ ຂອງ ຄໍາຖາມ ນີ້ ແມ່ນກໍານົດຂະໜາດຂອງການນໍາໃຊ້ດິນ ປູກພືດຕ່າງໆ ເຊັ່ນ ປູກພືດລົມລຸກ ແລະ ພືດຢືນຕົ້ນ. ຂໍ້ມູນ ກ່ຽວກັບ ການນໍາໃຊ້ດິນຈະເປັນປະໂຫຍດຫຼາຍສໍາລັບການສຶກສາ ຕົວຢ່າງການນໍາໃຊ້ດິນ ຢູ່ ສ.ປ.ປ.ລາວ.

| 21. ເນື້ອທີ່ຂອງດິນຕອນນີ້ ຕົ້ນຕໍແມ່ນນໍາໃຊ້ຫຍັງ? | | | | | |
|---|---|---|---|---|---|
| ພືດລົ້ມລຸກ | | | | | |
| ປີຜ່ານມາໄດ້ ນໍາໃຊ້ປູກພືດ ເທົ່າໃດ? | ປີຜ່ານມາບໍ່ໄດ້ ນໍາໃຊ້ປູກພືດ ເທົ່າໃດ? | ນໍາໃຊ້ປູກພືດ ຢືນຕົ້ນມີເນື້ອທີ່ ເທົ່າໃດ? | ດິນປູກຫຍ້າ ເທົ່າໃດ? | ດິນປ່າໄມ້ ເທົ່າໃດ? | ອື່ນໆ? |
| ເຮັກຕາ | ເຮັກຕາ | ເຮັກຕາ | ເຮັກຕາ | ເຮັກຕາ | ເຮັກຕາ |
| | | | | | |

ໃຫ້ບັນທຶກຂໍ້ມູນ ການນໍາໃຊ້ດິນ ໃນຫົວໜ່ວຍເປັນ ເຮັກຕາ (ຮ.ຕ). ໃຫ້ນໍາໃຊ້ ທ້ອງໝາຍເຫດຂ້າງລຸ່ມຂອງໜ້າເຈັ້ຍ ເພື່ອນໍາໃຊ້ ຄິດໄລ່ເນື້ອທີ່ ຫຼືປ່ຽນຫົວໜ່ວຍທ້ອງຖິ່ນ ເປັນເຮັກຕາ. ຜົນບວກຂອງເນື້ອທີ່ການນໍາໃຊ້ດິນແຕ່ລະອັນໃນຄໍາຖາມ 21 ຕ້ອງ ແມ່ນເນື້ອທີ່ດຽວກັນ ຂອງຕອນດິນໃນຄໍາຖາມ 20.

ຂໍ້ສັງເກດ ໃນການສໍາຫຼວດສະຖິຕິກະສິກໍາຂອງ ສ.ປ.ປ.ລາວ ຂໍ້ມູນເນື້ອທີ່ ທີ່ເຮົາເກັບກໍາ ມີ 2 ຊະນິດ: ເນື້ອທີ່ປູກພືດ ແລະເນື້ອທີ່ດິນ. ຂໍ້ມູນ ສອງຊະນິດນີ້ ແມ່ນມີຄວາມສໍາຄັນໃນການຕີລາຄາ ການນໍາໃຊ້ດິນປູກພືດແບບກະເສດສຸມ. ພາກ ງ ແລະພາກ ຈ ຂອງຕາຕະລາງ5 ເກັບກໍາຂໍ້ມູນ ກ່ຽວກັບ ເນື້ອທີ່ປູກພືດ, ສ່ວນຄໍາຖາມຢູ່ພາກ ຄ ສັງລວມເອົາເນື້ອທີ່ດິນ. ຕອນດິນ ຂະໜາດ 1ເຮັກຕາ ອາດນໍາໃຊ້ປູກພືດລົມລຸກ, ແຕ່ວ່າ ເນື້ອທີ່ປູກພືດອາດລວມເປັນ

2 ເຮັກຕາທີ່ປູກໃນຕອນດິນດັ່ງກ່າວນີ້(ຍ້ອນປູກພືດ 2 ຄັ້ງ ໃນລະດູແລ້ງ ແລະລະດູຝົນ).

ດິນປູກພືດລົມລຸກ ແມ່ນດິນຊຶ່ງເອົາໄປນຳໃຊ້ປູກພືດລົມລຸກ(ໃຫ້ເບິ່ງຂໍ້ 3.6). ເຮົາຄວນຂຽນລາຍງານຂໍ້ມູນ ໂດຍອີງໃສ່ ພືດລົມລຸກໄດ້ປູກຕົວຈິງໃນດິນຕອນນີ້ ຫຼື ປະເປັນເຮື້ອຊົ່ວຄາວປີຜ່ານມາ. ໃຫ້ເບິ່ງໃນຫົວຂໍ້ 3.3 ສຳລັບນິຍາມຄຳວ່າ ດິນປະເຮື້ອ.

ດິນປູກຫຍ້າ ແມ່ນນຳໃຊ້ດິນ ສຳລັບປູກຫຍ້າ ລ້ຽງສັດ ຊຶ່ງລວມມີທັງທົ່ງຫຍ້າປູກ ແລະທົ່ງຫຍ້າທຳມະຊາດ.
ດິນປ່າໄມ້: ລວມມີ ປ່າທຳມະຊາດ ຫຼື ປ່າໄມ້ ປູກ ທີ່ຈະເປັນປ່າໃນຕໍ່ໜ້າ. ຄຸ່ມຄ່າຂອງດິນປ່າໄມ້ຈະໃຫ້ ຄຸ່ມຄ່າເປັນໄມ້ທ່ອນ, ໄມ້ແປຮູບ ແລະໄມ້ອື່ນໆ. ດິນປ່າໄມ້ ຈະລວມເອົາ ທັງສວນກ້າເບັ້ຽໄມ້ ແລະເນື້ອທີ່ໄມ້ປ່ອງ....
ດິນອື່ນໆ ລວມມີດິນອາຄານປຸກສ້າງ; ຖະໜົນຫົນທາງ; ສວນດອກໄມ້, ດິນເປົ່າຫວ່າງ, ແລະດິນບໍ່ສາມາດປູກພືດອື່ນໆ, ດິນປູກພືດໄຕ້ນ້ຳ (ດິນນ້ຳຖ້ວມ).

ດິນຕອນນຶ່ງ ອາດ ນຳໃຊ້ໄດ້ຫຼາຍປະໂຫຍດ. ຖ້າບາງສ່ວນໃນຕອນດິນ ນຳໃຊ້ ປູກພືດລົມລຸກ ສ່ວນເຫຼືອອື່ນ ໆ , ນຳໃຊ້ປູກຫຍ້າ, ໃຫ້ບັນທຶກ ເນື້ອທີ່ຂອງພືດລົມລຸກ ແລະ ເນື້ອທີ່ປູກຫຍ້າ ຕາມຂະໜາດ ຂອງ ແຕ່ລະ ສ່ວນໃນ ຕອນດິນ ນັ້ນ. ຖ້າສົມມຸດວ່າ, ເນື້ອທີ່ປູກພືດຍືນຕົນ ແລະພືດລົມລຸກ ປູກຊັບວ່າງ (ສະລັບກັນ) ຈະກຳນົດ ການນຳໃຊ້ດິນອັນໃດເປັນຕົນຕໍ. ຖ້າເປັນກໍລະນີນີ້ ໃຫ້ກຳນົດ ບົນພື້ນຖານ ພືດໃດທີ່ປູກຕົນຕໍ ແລະກວມເອົາດິນສ່ວນໃຫຍ່. ຖ້າການນຳໃຊ້ດິນ ມີການປ່ຽນແປງເລື້ອຍໆ ໃນປີ, ໃຫ້ກຳນົດ ດິນ ບົນພື້ນຖານການນຳໃຊ້ດິນປະຈຸບັນ. ດິນນ້ຳຖ້ວມ ໃນໄລຍະລະດູຝົນ ແຕ່ ໃນໄລຍະລະດູແລ້ງພັດນຳໃຊ້ດິນດັ່ງກ່າວ ປູກພືດລົມລຸກ ໃຫ້ກຳນົດເປັນດິນ " ພືດລົມລຸກ" .

**ຄຳຖາມ 22, 23**

ຄຳຖາມເລົ່ານີ້ ແມ່ນຢາກຮູ້ ເນື້ອທີ່ຂອງຕອນດິນ ທີ່ໄດ້ຮັບນ້ຳຊົນລະປະທານ. ເພາະວ່າ ຊົນລະປະທານແມ່ນປັດໄຈນຶ່ງທີ່ສຳຄັນຂອງການຍົກຜົນຜະລິດພືດ ແລະຂໍ້ມູນດັ່ງກ່າວຈະຊ່ວຍໃຫ້ເຮົາເຂົາໃຈ ບັນຫາສະພາບການຜະລິດດີຂື້ນ .

| 22. ໃນປີຜ່ານມາ ດິນຕອນນີ້ ໄດ້ຮັບນ້ຳຈາກ: | | 23. ໃນປີຜ່ານມາ ເນື້ອທີ່ດິນ ຕອນນີ້ໄດ້ຮັບ ນ້ຳທັງໝົດ ມີຫລາຍ ປານໃດ? ເຮັກຕາ |
|---|---|---|
| ໂຄງການ ຊົນລະປະທານ ຂອງລັດບໍ່? 1= ໄດ້ຮັບ 2= ບໍ່ໄດ້ຮັບ | ແຫລ່ງນ້ຳ ຈາກແຫ່ງ ຕ່າງໆບໍ່? 1= ໄດ້ຮັບ 2= ບໍ່ໄດ້ຮັບ | |
| 1 2 | 1 2 | |

ໃຫ້ຂີດວົງມົນອອ້ມ "ໄດ້ຮັບ" ຫຼື "ບໍ່ໄດ້ຮັບ" ແຕ່ລະອັນຂອງຄຳຖາມ 22 ແລະບັນທຶກ ເນື້ອທີ່ລວມຂອງ ຕອນດິນໄດ້ຮັບນ້ຳຊົນລະປະທານ ໃນຄຳຖາມ 23. ຖ້າຕ້ອງການຄິດໄລ່ ເນື້ອທີ່ ໃຫ້ນຳໃຊ້ ຫ້ອງໝາຍເຫດ ຂ້າງລຸ່ມ ຫຼື ປ່ຽນຫົວໜ່ວຍທ້ອງຖິ່ນ ມາເປັນຫົວໜ່ວຍ ເຮັກຕາ.

ຮັບນ້ຳຊົນລະປະທານ ໝາຍເຖິງການຈັດຫາ ແລະສະໜອງນ້ຳ ໃຫ້ດິນປູກພືດ, ບໍ່ໝາຍເຖິງນ້ຳຟ້ານ້ຳຝົນ. ກໍລະນີນ້ຳຖ້ວມ ຫຼືນ້ຳລົນຝັ່ງ ບໍ່ໃຫ້ຖືວ່າເປັນການຮັບນ້ຳຊົນລະປະທານ. ຊົນລະປະທານແມ່ນລວມທັງໝົດ ທີ່ນຳເອົາ ນ້ຳທຳມະຊາດເຂົາສູ່ການຜະລິດ ໂດຍບໍ່ໃຫ້ ເຂົາໃຈ ພຽງແຕ່ ແມ່ນ ໂຄງການຊົນລະປະທານຂອງລັດສ້າງໃຫ້ເທົ່ານັ້ນ. ມັນລວມທັງນ້ຳ ຈາກ ແມ່ນ້ຳລຳເຊ, ອ່າງເກັບນ້ຳ, ນ້ຳສ້າງ, ນ້ຳບາດານ ຮັບໃຊ້ເຮັດສວນຜັກ ກໍໃຫ້ຖືວ່າ ເປັນການຮັບນ້ຳຊົນລະປະທານ. ໃຫ້ຂີດວົງມົນອອ້ມຄຳຕອບ "ໄດ້ຮັບ" ນ້ຳຈາກໂຄງການຊົນລະປະທານຂອງລັດ. ໃຫ້ຂີດວົງມົນອອ້ມ ຄຳຕອບ ທີ່ ໄດ້ຮັບນ້ຳ ຈາກແຫຼ່ງນ້ຳແຫ່ງ ຕ່າງ ໆ ຊຶ່ງບໍ່ແມ່ນໂຄງ

ການຊົນລະປະທານຂອງລັດສະໜອງໃຫ້. ປີຜ່ານມາ ໝາຍເຖິງ ຊ່ວງໄລຍະ ລະດູຝົນປີ 1998 ແລະລະດູແລ້ງ 1998/99.

ເນື້ອທີ່ລວມຮັບນ້ຳຊົນລະປະທານ ໃນຄຳຖາມ 23 ຕ້ອງນ້ອຍກ່ວາ ຫຼື ເທົ່າກັບ ເນື້ອທີ່ຂອງຕອນດິນ ໃນຄຳຖາມ 20.

**ຄຳຖາມ 24**

| 24. ບັກເດີນ ສຳຫລວດ ໄດ້ໄປເບິ່ງ ດິນຕອນ ນີ້ບໍ່? 1=ໄດ້ໄປ 2=ບໍ່ໄດ້ໄປ |
|---|
| 1 2 |

ການລົງໄປກວດກາເບິ່ງຕົວຈິງແຕ່ລະຕອນດິນ ຈະຊ່ວຍໃຫ້ພວກເຮົາມີຂໍ້ມູນເນື້ອທີ່ຈາກການລາຍງານຂອງຄົວເຮືອນ/ ການຄອບຄອງ ໄດ້ຖືກຕ້ອງສັດເຈນ. ໃຫ້ຂີດວົງມົນອອັນຕົວເລກ ຖ້າຫາກ ທ່ານໄດ້ໄປກວດກາເບິ່ງດິນຕົວຈິງ. ຖ້າຫາກທ່ານມີຂໍ້ສັງເກດ ຫຼື ອະທິບາຍໃຫ້ ໃຊ້ ຫ້ອງໝາຍເຫດຂ້າງລຸ່ມໄດ້.

## 7.7 ພາກ ງ: ການປູກພືດລົມລຸກ ລະດູຝົນ

ພາກ ງ ເກັບເອົາຂໍ້ມູນ ກ່ຽວກັບ ການປູກພືດລົມລຸກໃນລະດູຝົນປີ 1998.(ສ່ວນພືດລົມລຸກລະດູແລ້ງຈະເກັບກຳຢູ່ໃນພາກ ຈ ແລະພືດຍືນຕົ້ນໃນພາກ ສ).

ຄ.26 ແລະ ຄ.27 ບັນທຶກເນື້ອທີ່ປູກພືດລົມລຸກແຕ່ລະຊະນິດໃນລະດູຝົນ, ໃຫ້ຂຽນລາຍຊື່ພືດແຕ່ລະຊະນິດ ໃສ່ແຕ່ລະແຖວ (ນຶ່ງ ແຖວ ຕໍ່ ນຶ່ງ ພືດ). ໃນກໍລະນີ ທີ່ລາຍຊື່ພືດຫາກຫຼາຍກ່ວາແຖວທີ່ໄດ້ກຳນົດໄວ້ໃນຕາຕະລາງ, ໃຫ້ ໝາຍ (√) ໃສ່ ຫ້ອງສີ່ຫຼ່ຽມ ຢູ່ລຸ່ມສຸດຂອງຕາຕະລາງ ເພື່ອເປັນການບອກໃຫ້ຮູ້ວ່າ ຍັງມີໃບຕໍ່ໄປ. ສ່ວນລາຍຊື່ພືດທີ່ຍັງເຫຼືອໃຫ້ ຂຽນໃສ່ ຕາຕະລາງເບີ 09. ຄ.28 - ຄ.32 ບັນທຶກລາຍລະອຽດ ກ່ຽວກັບ ຊະນິດຂອງເຂົາທີ່ປູກໃນລະດູຝົນ.

**ຄຳຖາມ 25**

| | | | |
|---|---|---|---|
| **25.** ລະດູຝົນປີ 1998 ຄົວເຮືອນ(ຫົວໜ່ວຍການຄອບຄອງ) ຂອງທ່ານ ໄດ້ປູກພືດລົ້ມລຸກຊະນິດໃດນຶ່ງບໍ່ ? | ໄດ້ປູກ | ☐ 1 | → *ຜ່ານໄປຫາຄຳຖາມ 26* |
| | ບໍ່ໄດ້ປູກ | ☐ 2 | → *ຂ້າມໄປຫາພາກ ຈ* |

ຈຸດປະສົງຂອງຄຳຖາມ ແມ່ນເປີດເຜີຍໃຫ້ຮູ້ວ່າ ຄົວເຮືອນ/ການຄອບຄອງ ໄດ້ປູກຫຼື ບໍ່ ພືດລົມລຸກໃນລະດູຝົນ. ໃຫ້ຖາມ ຜູ້ຕອບວ່າ ໃນລະດູຝົນປີ 1998 ຜ່ານມາ ໄດ້ປູກພືດລົມລຸກບໍ່? ຖ້າ ປູກ ໃຫ້ໝາຍ (√) ໃສ່ ຫ້ອງກ່ຽວຂ້ອງ, ແລະສືບຕໍ່ຖາມ ຄຳຖາມ 26; ຖ້າບໍ່ປູກ, ໃຫ້ ໝາຍ (√)ໃສ່ຫ້ອງທີ່ກ່ຽວຂ້ອງ ແລະຂ້າມຜ່ານໄປຄຳຖາມພາກ ຈ.

**ຄຳຖາມ 26, 27**

| 26. ໃນລະດູຝົນ 1998 ມີພືດລົ້ມລຸກຊະນິດໃດແດ່ທີ່ໄດ້ປູກຢູ່ໃນແຕ່ລະຕອນດິນທັງໝົດທີ່ມີ? *ຂຽນຊື່ຊະນິດພືດໃສ່ຕາມແຕ່ລະຕອນດິນ* | | | 27. ໃນລະດູຝົນປີ 1998 ເນື້ອທີ່ໆໄດ້ປູກມີຫລາຍປານໃດ? *ໃຫ້ໝາຍ (√) ໃສ່ຫ້ອງຖ້າເນື້ອທີ່ນ້ອຍກວ່າ 0,01 ເຮັກຕາ (100 ມ²) ຫລືຖ້າປູກປະປົນ /ກະແຈກກະຈາຍ* | | |
|---|---|---|---|---|---|
| ນຳເບີຕອນດິນ | ຊື່ພືດ | *ໃຊ້ສະເພາະ ຫກສກ* | ຫົວໜ່ວຍທ້ອງຖິ່ນ | ເຮັກຕາ | ເນື້ອທີ່ນ້ອຍ ຫລື ກະແຈກ ກະຈາຍ |
| ☐ | | ☐ | | ☐ | ☐ |

ສະເພາະຄຳຖາມນີ້ ກ່ອນອື່ນໝົດຕ້ອງໃຫ້ຜູ້ຕອບບອກລາຍຊື່ພືດແຕ່ລະຊະນິດ ທີ່ໄດ້ປູກ ໃນຕອນດິນທີ່ນີ້ງ ໃນລະດູຝົນປີ 1998. ຈາກນັ້ນ, ໃຫ້ບັນທຶກຂໍ້ມູນ ດ້ານເນື້ອທີ່ ໃສ່ ຄຳຖາມ 27 ຂອງແຕ່ລະຊະນິດພືດທີ່ຈົດກ່າຍແລ້ວ, ໂດຍນຳໃຊ້ຂໍ້ມູນເນື້ອທີ່ ຂອງແຕ່ລະຕອນດິນໃນ ພາກ ຄ ເປັນບ່ອນອີງ. ສຳລັບຕອນດິນອື່ນໆ ທີ່ຍັງເຫຼືອ ໃຫ້ຈົດກ່າຍແບບດຽວກັບ ຕອນດິນທີ່ ນື່ງ. ພືດທີ່ຈະຈົດກ່າຍ ໃຫ້ ບັນທຶກ ນຳເບີ ຂອງຕອນດິນດັ່ງກ່າວ ແລະໃຫ້ຂຽນລາຍລະອຽດຂອງຊະນິດພືດທີ່ປູກໃນຕອນດິນນັ້ນ.

<u>ພືດລົມລຸກ</u> ແມ່ນ ພືດ ຊຶ່ງຕ້ອງໄດ້ປູກ ທຸກ ໆ ປີ. ລາຍລະອຽດ ຂອງ<u>ການປູກພືດໃນລະດູຝົນປີ 1998</u> ໃຫ້ ເບິ່ງ ຂໍ້ 3.6.

ໃຫ້ຂຽນບອກຊື່ພືດ ຂອງແຕ່ລະຊະນິດພືດຢ່າງຈະແຈ້ງ. ບໍ່ຄວນຂຽນແບບລວມ ໆ ເຊັ່ນ "ຜັກຕ່າງໆ"; ພວກເຮົາຄວນແຍກແຍະຜັກຕ່າງ ໆ ອອກເປັນລາຍຊື່ລະອຽດ ໃນແຕ່ລະແຖວ. ໃຫ້ເບິ່ງ ບັນຊີລາຍຊື່ ພືດລົມລຸກ ໃນເອກະສານຊ້ອນທ້າຍ 1 ຖ້າວ່າ ທ່ານ ບໍ່ໝັ້ນໃຈລາຍລະອຽດ ກ່ຽວກັບພືດ.

ສຳລັບ ປະເພດ ເຂົາ, ອານຸຍາດໃຫ້ຂຽນ ຊື່ລວມກໍໄດ້ ເຊັ່ນ "ເຂົາ"; ລາຍລະອຽດ ກ່ຽວກັບ ຊະນິດເຂົາທີ່ປູກ ຈະເກັບກຳ ຂໍ້ມູນລະອຽດໃນ ຄຳຖາມ 28-ຄ.32. ຖ້າສົມມຸດວ່າ ໃນລະດູຝົນປີ 1998 ໄດ້ປູກເຂົາ ຢູ່ 2 ຕອນດິນຕ່າງກັນ, ໃຫ້ບັນທຶກ ການປູກ ໃນແຕ່ລະແຖວຕ່າງກັນ.

ໝັ້ນໃຈ ວ່າໄດ້ເກັບກຳລະອຽດໝົດ ແລ້ວບໍ່? ເຊັ່ນ :

- ປູກແບບກະແຈກກະຈາຍ ຫຼື ປູກໃນເນື້ອທີ່ຂະໜາດນ້ອຍ
- ພືດທີ່ປູກ ພັດບໍ່ໄດ້ເກັບກ່ຽວ ຍ້ອນນ້ຳຖ້ວມ, ສັດຕູພືດລະບາດ, ແຫ້ງແລ້ງ ຫຼື ການເສຍຫາຍອື່ນໆ
- ດິນຕອນດຽວ ປູກພືດ ທັງສອງລະດູ ຄື ລະດູຝົນ ແລະລະດູແລ້ງ ( ປູກພືດ ສອງລະດູ)
- ປູກພືດແບບ ປະສົມປະສານ (ປູກພືດຫຼາຍຊະນິດໃນຕອນດິນດຽວ).

ໃນຄຳຖາມ 27, ໃຫ້ບັນທຶກເນື້ອທີ່ປູກ ໃນຫົວໜ່ວຍທ້ອງຖິ່ນ ຫຼື ເຮັກຕາ, ໃຫ້ນຳໃຊ້ວິທີ ທີ່ໄດ້ກ່າວໃນຂໍ້ 5.8. ເນື້ອທີ່ ແມ່ນອີງໃສ່ <u>ເນື້ອທີ່ປູກ, ບໍ່ແມ່ນເນື້ອທີ່ເກັບກ່ຽວ</u>. ຖ້າເນື້ອທີ່ປູກ ຫາກຕ່ຳກ່ວາ 100 ມ$^2$, ໃຫ້ຂຽນໃສ່ ຫ້ອງຂອງຫົວໜ່ວຍທ້ອງຖິ່ນ, ບໍ່ໃຫ້ຂຽນຫຍັງໃສ່ (ປະວ່າງ) ໃນຫ້ອງຫົວໜ່ວຍເຮັກຕາ, ແລະໝາຍ (√)ໃສ່ຫ້ອງ ເນື້ອທີ່ນ້ອຍຫຼືກະແຈກກະຈາຍ. ເນື້ອທີ່ໃນຫົວໜ່ວຍທ້ອງຖິ່ນ ປົກກະຕິຢູ່ໃນຂະໜາດ ລວງຍາວ ຄູນໃຫ້ລວງກ້ວາງ (ເຊັ່ນ: 10 x 5 ແມັດ )ຫຼື ເປັນຕົນທີ່ປູກ ກະແຈກກະຈາຍ.

<u>ການປູກພືດ 2 ຄັ້ງ(2ລະດູ)</u> ຈະບັນທຶກຂໍ້ມູນເນື້ອທີ່ ຄືແນວໃດ? ເນື້ອທີ່ແປງດຽວໄດ້ນຳໃຊ້ປູກພືດທັງສອງລະດູ ຄື ລະດູຝົນ ແລະລະດູແລ້ງ, ໃຫ້ບັນທຶກພືດລະດູຝົນໃນພາກ ງ ແລະພືດລະດູແລ້ງໃນພາກ ຈ. ໃນຄຳເວົາອື່ນ, ລາຍງານເນື້ອທີ່ ສອງເທື່ອ, ແຕ່ລະຄັ້ງສຳລັບແຕ່ລະພືດ. ຖ້າສົມມຸດວ່າ ໃນລະດູຝົນຫາກປູກພືດຫຼາຍຄັ້ງໃນເນື້ອທີ່ດຽວກັນ, ໃຫ້ບັນທຶກແຕ່ລະພືດໃນແຕ່ລະແຖວໃນຄຳຖາມທີ່ 26 ແລະ ຄ.27, ຖ້າສົມມຸດວ່າ, ມີເນື້ອທີ່ດິນ 0,1 ເຮັກຕາໄດ້ປູກ ຜັກສະລັດ 3 ເທື່ອໃນລະດູຝົນ, ເຮົາຕ້ອງຂຽນ 0,1 ເຮັກຕາ ເປັນ 3 ແຖວ. ການກ່ຽວພືດຕິດຕໍ່ກັນ ຕາມລຳດັບຈາກພືດປະເພດ ອອ້ຍ, ບໍ່ໃຫ້ຖືວ່າ ເປັນພືດປູກສອງຄັ້ງ; ສຳລັບພືດນີ້, ເນື້ອທີ່ໃຫ້ລາຍງານເປັນເນື້ອທີ່ດຽວ.

ພືດສະລັບກັນຫຼາຍຊະນິດ ແມ່ນປູກພ້ອມກັນໃນເວລາດຽວກັນໃນເນື້ອທີ່ດຽວກັນ, ຫຼືປູກປົນກັນກັບພືດອື່ນ ຫຼືປູກສັບຫວ່າງ ພືດຍືນຕົ້ນ (ປູກພືດນຶ່ງ ລະຫວ່າງແຖວຂອງພືດຊະນິດອື່ນ). ສຳລັບພືດປູກສະລັບກັນ, ຜົນບວກຂອງເນື້ອທີ່ແຕ່ລະຊະນິດພືດ ຕ້ອງເທົ່າກັບ ເນື້ອທີ່ດິນທີ່ມີການປູກພືດເລົ່ານັ້ນ. ຕົວຢ່າງ, ເນື້ອທີ່ປູກພືດ ມີ 0,5 ເຮັກຕາ ໄດ້ປູກພືດປະເພດ ໝາກແຕງ ແລະໝາກເລັ່ນ, ເນື້ອທີ່ ໝາກແຕງ ແລະເນື້ອທີ່ໝາກເລັ່ນຄວນເພີ່ມ 0,5ເຮັກຕາ. ໃຫ້ປະເມີນເນື້ອທີ່ຂອງແຕ່ລະພືດຕາມທີ່ສາມາດເຮັດໄດ້ດີ. ວິທີນຶ່ງ, ໃຫ້ອີງໃສ່ ແນວປູກຂອງແຕ່ລະຊະນິດພືດເພື່ອຄິດໄລ່ຫາເນື້ອທີ່ຂອງແຕ່ລະພືດທີ່ປູກແບບປະສົມ; ຫຼືມີອີກວິທີອື່ນ ເບິ່ງອັດຕາສ່ວນ ພືດທີ່ປູກ ແຕ່ລະຊະນິດ. ທ່ານຄວນບັນທຶກ ເນື້ອທີ່ຂອງແຕ່ລະພືດທີ່ປູກອອກຈາກກັນ. <u>ພວກເຮົາບໍ່ສາມາດຮັບເອົາຂໍ້ມູນທີ່ຂຽນວ່າ "ປູກພືດສະລັບກັນ". ແລະບໍ່ຄວນຂຽນຊື່ພືດແຕ່ລະຊະນິດ ແຕ່ວ່າເນື້ອທີ່ປູກສະລັບກັນ ພັດລວມກັນ (ເນື້ອທີ່ ບໍ່ຂຽນອອກຈາກກັນ).</u>

ມີການປູກພືດອີກແບບນຶ່ງທີ່ ປູກພືດລົມລຸກ ສະລັບກັນກັບ ການປູກພືດຍືນຕົ້ນແບບເປັນລະບຽບ. ກໍລະນີນີ້, ເນື້ອທີ່ປູກພືດຍືນຕົ້ນ ແມ່ນຖືເປັນເນື້ອທີ່ລວມຂອງການປູກ (ໃຫ້ບັນທຶກໃນຄຳຖາມ ພາກ ສ), ສ່ວນເນື້ອທີ່ປູກພືດລົມລຸກໃຫ້ຄິດໄລ່ແບບຂ້າງເທິງທີ່ໄດ້ກ່າວມາແລ້ວ. ບໍ່ຄ້າຍຄືກັນກັບການປູກພືດສະລັບກັນກັບພືດຊະນິດອື່ນຂ້າງເທິງ, ເນື້ອທີ່ລວມຂອງພືດປູກສະລັບກັບພືດຍືດຕົ້ນ ຈະໃຫຍ່ກວ່າເນື້ອທີ່ດິນທີ່ໄດ້ປູກພືດດັ່ງກ່າວ.

ໃນການບັນທຶກ ຂໍ້ມູນ ເນື້ອທີ່ພືດ, ຄວນກວດຜ່ານຂໍ້ມູນເນື້ອທີ່ພືດ ກັບເນື້ອທີ່ ຂອງຕອນດິນໃນຄຳຖາມ ພາກ ຄ . ຖ້າປູກພືດຊະນິດດຽວໃນຕອນດິນນັ້ນ, ເນື້ອທີ່ປູກພືດ ແມ່ນຕ້ອງເທົ່າກັບ ເນື້ອທີ່ຂອງຕອນດິນ. ຖ້າວ່າປູກ ພຽງສ່ວນໃດນຶ່ງຂອງຕອນດິນ, ເນື້ອທີ່ປູກ ຕ້ອງນ້ອຍກວ່າ ເນື້ອທີ່ຂອງຕອນດິນນັ້ນ. ຖ້າວ່າປູກພືດຫຼາຍຊະນິດໃນຕອນດິນ, ຜົນບວກຂອງເນື້ອທີ່ພືດ ຕ້ອງ ກົງກັນກັບເນືອທີ່ລວມຂອງຕອນດິນ. ມັນຈະງ່າຍໃນການກວດ ຖ້າພວກເຮົາຫາກລຽງລາຍຊື່ພືດ ຂອງຕອນດິນໃຜຕອນດິນມັນ. ການລົງໄປກວດກາເບິ່ງຕອນດິນຕົວຈິງ ກໍຈະຊ່ວຍເຮັດໃຫ້ຂໍ້ມູນສັດເຈນຂຶ້ນຕື່ມ.

ເນື້ອທີ່ພືດ ແມ່ນຂໍ້ມູນນຶ່ງທີ່ສຳຄັນຂອງການເກັບກຳຂໍ້ມູນໃນການສຳຫຼວດ ແລະມັນເປັນສິ່ງຈຳເປັນຕ້ອງໄດ້ຂໍ້ມູນສັດເຈນ. ໃຫ້ເບິ່ງຂໍ້ 5.9 ລາຍລະອຽດກ່ຽວກັບ **ເຮັດແນວໃດ ໃຫ້ຂໍ້ມູນດ້ານເນື້ອທີ່ ຖືກຕ້ອງ.**

**ຄຳຖາມ 28**

| | | | | |
|---|---|---|---|---|
| **28.** | *ຖ້າໄດ້ປູກເຂົ້າໃນຄຳຖາມ 26 ໃຫ້ໝາຍ (√)ໃສ່ຫ້ອງນີ້* | ⟶ | ☐ 1 | *→ ຜ່ານໄປຫາຄຳຖາມ 29* |
| | *ຖ້າບໍ່ໄດ້ປູກເຂົ້າໃນຄຳຖາມ 26 ໃຫ້ໝາຍ (√)ໃສ່ຫ້ອງນີ້* | ⟶ | ☐ 2 | *→ ຂ້າມໄປຫາພາກ ຈ* |

ຄຳຖາມ ທີ່ ເຫຼືອໃນພາກ ງ ແມ່ນຄຳຖາມກ່ຽວກັບ ການປູກເຂົາໃນລະດູຝົນປີ 1998. ຄ.28 ເປັນຄຳຖາມຢັ່ງສືບແບບໄວ ເພື່ອຜ່ານໄປຄຳຖາມອື່ນ ຖ້າຄົວເຮືອນຫາກໄດ້ປູກເຂົາໃຫ້ສືບຕໍ່ສອບຖາມ ແລະຖ້າບໍ່ໄດ້ປູກເຂົາໃຫ້ຂ້າມຜ່ານໄປຄຳຖາມ ພາກ ຈ (ບໍ່ໄດ້ປູກເຂົາລະດູຝົນ). ໃຫ້ໝາຍ (√ ) ຕາມລຳດັບຂອງຄຳຖາມທີ່ວາງໄວ້.

**ຄຳຖາມ 29**

ໃນຄຳຖາມນີ້, ທ່ານຈະໄດ້ຖາມ ຜູ້ຕອບ ກ່ຽວກັບ ປະເພດຂອງເຂົາທີ່ປູກໃນລະດູການນັ້ນ; ໂດຍສະເພາະ:

- <u>ເຂົ້າປະເພດ ໃດທີ່ປູກ</u>: ນາປີ ຫຼື ໄຮ່
- <u>ແນວພັນເຂົາ</u> : ພັນພື້ນເມືອງ ຫຼື ພັນປັບປຸງ

- ຊະນິດເຂົາ : ເຂົາໜຽວ ຫຼື ເຂົາຈ້າວ
- ປະເພດອາຍຸຂອງເຂົາ : ເຂົາດໍ, ເຂົາກາງ ຫຼື ເຂົາປີ (ເຂົາງັນ)

**29.** ໃນລະດູຝົນ ປີ 1998 ມີເຂົ້າປະເພດໃດແດ່ທີ່ໄດ້ປູກ?

*ໝາຍ (√ ) ໃສ່ບ່ອນ ຫລືຫລາຍຫ້ອງກໍ່ໄດ້*

| | | ນາປີ | | ໄຮ່ | |
|---|---|---|---|---|---|
| | | ພັນພື້ນເມືອງ | ພັນປັບປຸງ | ພັນພື້ນເມືອງ | ພັນປັບປຸງ |
| ເຂົ້າໜຽວ | ເຂົ້າດໍ | ☐ 11 | ☐ 12 | ☐ 13 | ☐ 14 |
| | ເຂົ້າກາງ | ☐ 21 | ☐ 22 | ☐ 23 | ☐ 24 |
| | ເຂົ້າງັນ ( ເຂົ້າປີ ) | ☐ 31 | ☐ 32 | ☐ 33 | ☐ 34 |
| ເຂົ້າຈ້າວ | | ☐ 41 | ☐ 42 | ☐ 43 | ☐ 44 |

ຄຳຖາມນີ້ ສາມາດ ໝາຍ (√ ) ໃສ່ຫ້ອງ ຫຼາຍກ່ວາ 1. ໝາຍເຫດ ແຕ່ລະຫ້ອງພວກເຮົາ ໄດ້ໃສ່ລະຫັດຂອງແຕ່ລະປະເພດ/ແຕ່ລະຊະນິດຂອງເຂົາແລ້ວ. ລະຫັດດັ່ງກ່າວນີ້ຈະໄດ້ໄປຂຽນຄືນ ຢູ່ ຄຳຖາມ 30-32.
ຄຳຖາມ 29 ຄວນປະຕິບັດຕາມຂັ້ນຕອນລຸ່ມນີ້. ໃຫ້ອີງໃສ່ ຄຳຕອບໃນຄຳຖາມ 26 ເພື່ອເບິ່ງຄືນວ່າໄດ້ປູກເຂົາປະເພດໃດແດ່. ດີແທ້ການຈົດຄວນຈົດໄປຕາມ ແຕ່ລະປະເພດຕອນດິນທີ່ປູກ. ໃຫ້ຖາມລາຍລະອຽດຕາມຕົວຢ່າງລຸ່ມນີ້:

<u>ຄຳຖາມ</u>: ໃນລະດູຝົນປີ 1998 ຜ່ານມາ, ປະເພດເຂົາທີ່ ປູກແມ່ນຫຍັງ ? ທຳອິດໃຫ້ ທ່ານ ເລີ້ມຕອບແຕ່ ຕອນດິນທີ່ ນຶ່ງ ໄປ. ຕອນດິນນີ້ ເປັນ ດິນນາ ຫຼື ດິນໄຮ່ ?

<u>ຕຳຕອບ</u>: ດິນນາ.

<u>ຄຳຖາມ</u>: ແນວພັນເຂົາທີ່ປູກ ພັນພື້ນເມືອງ ຫຼືພັນປັບປຸງ ?

<u>ຄຳຕອບ:</u> ໃສ່ພັນພື້ນເມືອງທັງໝົດ.

<u>ຄຳຖາມ:</u> ຊະນິດເຂົາໜຽວ ຫຼື ເຂົາຈ້າວປູກຜ່ານມາ?

<u>ຄຳຕອບ:</u> ປູກເຂົາໜຽວໝົດ.

<u>ຄຳຖາມ:</u> ປະເພດອາຍຸຂອງເຂົາທີ່ປູກ ໃສ່ເຂົາດໍ/ເຂົາກາງ/ເຂົາປີ?

<u>ຄຳຕອບ:</u> ໃສ່ທັງສອງປະເພດ ຄື ເຂົາດໍ ແລະເຂົາກາງ.

ໃນຄຳຖາມຕົວຢ່າງນີ້, ສາມາດ ໝາຍ (√ ) ໃສ່ຫ້ອງທີ່ມີກົດລະຫັດ “11” ແລະ ຫ້ອງ “21”.
<u>ແນວພັນປັບປຸງ</u> ແມ່ນຈຳພວກແນວພັນທີ່ກະຊວງກະສິກຳ ແລະປ່າໄມ້ ໄດ້ຮັບຮອງ ແລະສົ່ງເສີມນຳໃຊ້ຢ່າງເປັນທາງການ ຊຶ່ງໃຫ້ຜົນຜະລິດສູງ ຫຼື ແນວພັນທີ່ນຳເອົາມາຈາກ ປະເທດເພື່ອນບ້ານທີ່ໃຫ້ ຜະລິດສູງຊຶ່ງເປັນການຍອມຮັບຈາກຊາວນາ.
ແນວພັນປັບປຸງ ທີ່ເຮົາເຄີຍໄດ້ຍິນເຊັ່ນ: ທ່າດອກຄຳ 1, ທ່າດອກຄຳ 2, ທ່າດອກຄຳ 3, ກຂ 10, ກຂ 6, ກຂ 8, ເຊແອ 203, ໂພນງາມ 1, ໂພນງາມ 2, ......ໃຫ້ບັນທຶກແນວພັນປັບປຸງດັ່ງກ່າວທີ່ ຊາວນາ/ຊາວໄຮ່ ໄດ້ນຳໃຊ້ແນວພັນ ຕົວຈິງ.

<u>ຊະນິດອາຍຸຂອງເຂົາທີ່ປູກ "ເຂົາດໍ"</u> ຊຶ່ງມີອາຍຸ ປະມານ 3ເດືອນກ່ວາ, ເຂົາກາງ ມີອາຍຸ 4 ເດືອນ ກ່ວາ ແລະເຂົາປີ (ງັນ) ມີອາຍຸ 5 ເດືອນກ່ວາ. ອາຍຸຂອງແນວພັນ ແມ່ນ ໄລຍະເວລາຂອງການຈະເລີນເຕີບໂຕຂອງເຂົາ ສາມາດເກັບກ່ຽວ ບໍ່ແມ່ນ ຊ່ວງເວລາຂອງການປູກເຂົາ.

**ຄໍາຖາມ 30,31,32**

| *ໃຊ້ນຶ່ງແຖວສໍາລັບແຕ່ລະຊະນິດເຂົາທີ່ປູກ ແລະ ໃຫ້ໝາຍລະຫັດເຂົາໃຫ້ສອດຄ່ອງກັບຄໍາຕອບໃນຄໍາຖາມ 29.* | | | | | |
|---|---|---|---|---|---|
| *ລະຫັດເຂົ້າ (ຈາກຄໍາຖາມ29)* | **30.** ເຂົາຊະນິດນີ້ມີເນື້ອທີ່ປູກຫລາຍປານໃດ? | | **31.** ແຫລ່ງຮັບນໍ້າມີຄືແນວໃດ? | | **32.** ເນື້ອທີ່ໆໄດ້ຮັບນໍ້າທັງໝົດມີຫລາຍປານໃດ? |
| | ຫົວໜ່ວຍທ້ອງຖິ່ນ | ເຮັກຕາ | ຈາກໂຄງການຊົນລະປະທານຂອງລັດບໍ່? 1= ໄດ້ຮັບ 2= ບໍ່ໄດ້ຮັບ | ຮັບນໍ້າຈາກແຫລ່ງຕ່າງໆບໍ່? 1= ໄດ້ຮັບ 2= ບໍ່ໄດ້ຮັບ | ເຮັກຕາ |
| | | | 1 2 | 1 2 | |

ໃນຄໍາຖາມ 29, ພວກເຮົາໄດ້ຖາມລະອຽດ ກ່ຽວກັບ ປະເພດ ແລະຊະນິດ ເຂົາທີ່ປູກ ຂອງຄົວເຮືອນ/ການຄອບຄອງ ໃນລະດູຝົນປີ 1998. ໃນຄໍາຖາມ 30, ພວກເຮົາຈະຖາມ ກ່ຽວກັບ ເນື້ອທີ່ປູກ ຂອງແຕ່ລະປະເພດເຂົາທີ່ປູກ. ໃນຄໍາຖາມ 31 ແລະ ຄ.32, ພວກເຮົາຈະໄດ້ຖາມຫາເນື້ອທີ່ ຮັບນໍ້າຊົນລະປະທານ ຈາກ ແຕ່ລະແຫຼ່ງນໍ້າ.

ແຕ່ລະແຖວ ໃຫ້ຈົດຊະນິດເຂົາທີ່ປູກແຕ່ລະຊະນິດ ໃນຄໍາຖາມ 29, ໃຫ້ຈົດກ່າຍເອົາລະຫັດໃນຄໍາຖາມ 29 ໃສ່ໃນຖັນ ກ່ຽວຂ້ອງ. ໃນຕົວຢ່າງຂ້າງເທິງຂອງຄໍາຖາມ 29, ຄົວເຮືອນໄດ້ປູກເຂົາ ທັງສອງປະເພດ ຄື ລະຫັດ "11" ແລະ "21"; ໃນຄໍາຖາມ 30-ຄ.32, ສໍາລັບແຖວທໍາອິດ ໃຫ້ ຈົດກ່າຍ ລະຫັດ "11" ແລະ ແຖວທີ່ ສອງ ລະຫັດ ''21" ໃສ່ໃນຫ້ອງທີ່ກ່ຽວຂ້ອງ;ຈາກນັ້ນ, ໃຫ້ຖາມຄໍາຖາມ 30-32 ຂອງແຕ່ລະຊະນິດເຂົາທີ່ປູກກ່ອນຈະຖາມຊະນິດຂອງເຂົາທີ່ປູກໃນແຖວທີ່ ສອງ.

ໃນຄໍາຖາມ 30, ໃຫ້ບັນທຶກເນື້ອທີ່ປູກ ໃນຫົວໜ່ວຍທ້ອງຖິ່ນທີ່ນໍາໃຊ້ ແລະຫົວໜ່ວຍເປັນ ເຮັກຕາ, ນໍາໃຊ້ວິທີ ທີ່ໄດ້ກ່າວໃນຂໍ້ 5.8. ເນື້ອທີ່ຈະບັນທຶກ ແມ່ນເນື້ອທີ່ປູກ ບໍ່ແມ່ນເນື້ອທີ່ເກັບກ່ຽວ. ເນື້ອທີ່ລວມຂອງທຸກປະເພດ/ທຸກຊະນິດເຂົາທີ່ປູກ ຕ້ອງ ແມ່ນ ເນື້ອທີ່ດຽວກັນ ກັບ ເນື້ອທີ່ຢູ່ຄໍາຖາມ 27.

ໃນຄໍາຖາມ 31, ໃຫ້ບັນທຶກຂໍ້ມູນ ຮັບນໍ້າຊົນລະປະທານຈາກ ໂຄງການ ຊົນລະປະທານຂອງລັດ ຫຼື ຈາກແຫຼ່ງນໍ້າແຫ່ງຕ່າງໆ. ໃນຄໍາຖາມ 32, ໃຫ້ບັນທຶກເນື້ອທີ່ຮັບນໍ້າຊົນລະປະທານໃນຫົວໜ່ວຍທ້ອງຖິ່ນ ແລະຫົວໜ່ວຍເຮັກຕາ. ໃຫ້ເບິ່ງຄໍາແນະນໍາສໍາລັບຄໍາຖາມ 22 ແລະ 23 ໃນຂໍ້ 7.6 ກ່ຽວກັບ ການຊົນລະປະທານ.

## 7.8 ພາກ ຈ: ພືດລົມລຸກລະດູແລ້ງ

**ຄໍາຖາມ 33, 34, 35, 36, 37, 38, 39 ແລະ40**

ພາກ **ຈ** ເກັບກຳເອົາຂໍ້ມູນ ການປູກ ພືດລົມລຸກ ໃນລະດູແລ້ງ ສົກປີ 1998/99. (ຂໍ້ມູນພືດລົມລຸກໃນລະດູຝົນ ເກັບກຳ ແລ້ວ ໃນພາກ **ງ** ແລະ ຂໍ້ມູນການປູກພືດຢືນຕົ້ນ ຈະຖາມໃນ ພາກ **ສ**).

ຄຳຖາມ 34 ແລະ 35 ບັນທຶກຂໍ້ມູນເນື້ອທີ່ຂອງແຕ່ລະຊະນິດພືດທີ່ປູກ ໂດຍຄົວເຮືອນ/ການຄອບຄອງ, ແຖວນຶ່ງສຳລັບພືດນຶ່ງ. ຖ້າລາຍການພືດລົມລຸກຫາກ ຫຼາຍກ່ວາແຖວທີ່ໄດ້ກຳນົດມ້ຽນ ໃຫ້ນຳໃຊ້ ຕາຕະລາງ ໃໝ່. ສະເພາະຄຳຖາມ 36-ຄ.40 ໃຫ້ບັນທຶກຂໍ້ມູນລະອຽດ ກ່ຽວກັບການປູກເຂົາໃນລະດູແລ້ງ.

ລາຍລະອຽດຂອງຄຳຖາມໃນພາກ ຈ ໃຫ້ເບິ່ງຂໍ້ 7.7ທີ່ໄດ້ກ່າວແລ້ວ ເປັນບ່ອນອີງຄນຄ້ວາ. ແລະໃຫ້ ເບິ່ງຂໍ້ 3.6 ລາຍຊື່ພືດລົມລຸກ<u>ໃນລະດູແລ້ງປີ 1998/99</u> , ແລະບັນຊລາຍຊື່ພືດທີ່ປູກໃນລະດູການນັ້ນ.

## 7.9 ພາກ ສ: ການປູກພືດຢືນຕົ້ນ

**ຄຳຖາມ** 41

| | | | |
|---|---|---|---|
| **41.** ປະຈຸບັນຄົວເຮືອນ (ຫົວໜ່ວຍການຄອບຄອງ) ຂອງທ່ານ ມີຕົ້ນໄມ້ກິນໝາກ ແລະພືດຢືນຕົ້ນຊະນິດໃດນຶ່ງບໍ່? | ມີ | ☐ 1 | → *ຜ່ານໄປຫາຄຳຖາມ 42* |
| | ບໍ່ມີ | ☐ 2 | → *ຂ້າມໄປຫາພາກ ຊ* |

ຈຸດປະສົງຂອງຄຳຖາມ ແມ່ນຊອກຮູ້ວ່າ ຄົວເຮືອນ/ການຄອບຄອງ ໃດ ທີ່ມີການປູກພືດຢືນຕົ້ນ. ຖ້າຄຳຕອບ ວ່າມີການປູກຕົ້ນໄມ້ໃຫ້ໝາກ ຫຼືພືດຢືນຕົ້ນອື່ນໆ ໃຫ້ໝາຍ (√ )ໃສ່ຫ້ອງທີ່ກ່ຽວຂ້ອງ ແລ້ວສືບຕໍ່ຖາມລາຍລະອຽດຂອງແຕ່ລະລາຍການພືດທີ່ປູກໃນຄຳຖາມ 42-45. ຖ້າບໍ່ມີການປູກພືດຢືນຕົ້ນໃຫ້ຂ້າມໄປຫາພາກ ຊ.

<u>ພືດຢືນຕົ້ນ</u> ແມ່ນປະເພດພືດທີ່ມີ ຮອບວຽນການຈະເລີນເຕີບໂຕ ຫຼາຍກວ່ານຶ່ງປີ ຂຶ້ນໄປ(ໃຫ້ເບິ່ງຂໍ້ 3.7). ເຊັ່ນ ຕົວຢ່າງ: ຕົ້ນໄມ້ໃຫ້ໝາກ ແລະຕົ້ນໄມ້ກິນແກ່ນ, ຕົ້ນກ້ວຍ, ກາເຟ, ຊາ, ໝາກແໜ່ງ. ບັນຊີລາຍຊື່ ພືດຢືນຕົ້ນ ໃຫ້ເບິ່ງເອກະສານ ຊ້ອນທ້າຍ 2.

**ຄຳຖາມ** 42, 43, 44, 45

**42.**
ມີພືດຢືນຕົ້ນຫຍັງແດ່ທີ່ໄດ້ປູກໃນແຕ່ລະຕອນດິນ?

*ຂຽນຊື່ຊະນິດພືດໃສ່ຕາມແຕ່ລະຕອນດິນ*

| ນຳເບີຕອນດິນ | ຊື່ພືດ | *ໃຊ້ສະເພາະ ທກສກ* |
|---|---|---|
| ☐ | | ☐ |

ຄຳຖາມເລົ່ານີ້ ຖາມກ່ຽວກັບ ພືດຢືນຕົນ ທີ່ມີປະຈຸບັນ ຂອງ ຄົວເຮືອນ/ການຄອບຄອງ <u>ໃນມື້ເດີນສຳຫຼວດ.</u>

ຄຳຖາມ 42 ຄວນນຳໃຊ້ວິທີດຽວກັບ ຄຳຖາມສຳລັບ ພືດລົມລຸກໃນຄຳຖາມ 26 ແລະ ຄ.34. ໃຫ້ຜູ້ຕອບ ແຈ້ງລາຍການພືດທີ່ປູກທັງໝົດໃນແຕ່ລະຕອນດິນ (ເລີ້ມຈາກ ຕອນດິນທີ່ ນື່ງ). ຫຼັງຈາກນັ້ນ, ໃຫ້ຖາມຫາເນື້ອທີ່ປູກ ແລະຈຳນວນຕົນໄມ້ໃຫ້ໝາກທີ່ໄດ້ປູກໃນຄຳຖາມ 43-ຄ.45 ໃນແຕ່ລະຊະນິດພືດທີ່ປູກ, ບ່ອນອີງໃຫ້ອີງໃສ່ເນື້ອທີ່ໄດ້ລາຍງານໃນຄຳຖາມ ພາກ ຄ ຂອງແຕ່ລະຕອນດິນ. ແຕ່ລະແຖວ ໃຫ້ບັນທຶກລາຍການພືດແຕ່ລະຊະນິດ. ສຳ

| 43. ເນື້ອທີ່ດັ່ງກ່າວມີຫລາຍປານໃດ? *ໃຫ້ໝາຍ (√) ໃສ່ຫ້ອງຖ້າເນື້ອທີ່ນ້ອຍກວ່າ 0,01 ເຮັກຕາ (100 ມ$^2$) ຫລື ຖ້າປູກປະປົນ /ກະແຈກກະຈາຍ* | | | 44. *ເປັນລະບຽບ ຫຼື ປູກເປັນກຸ່ມ* | 45. *ກະແຈກກະຈາຍ ຫລືປູກສັບປົນ* |
|---|---|---|---|---|
| ຫົວໜ່ວຍທ້ອງຖິ່ນ | ເຮັກຕາ | ເນື້ອທີ່ນ້ອຍ ຫລື ກະແຈກ ກະຈາຍ | ຕົນໄມ້ທີ່ປູກ ເປັນລະບຽບ ມີຈັກຕົນ ? (ຫົວໜ່ວຍ:ຕົນ) | ຕົນໄມ້ທີ່ປູກ ກະແຈກກະຈາຍ ມີຈັກຕົນ ? (ຫົວໜ່ວຍ:ຕົນ) |
| | ☐ | ☐ | ☐ | ☐ |

ລັບຕອນດິນຕໍ່ໄປທີ່ມີທັງໝົດໃຫ້ປະຕິບັດແບບດຽວກັນຄືກັບຕອນດິນທີ່1. ຖ້າລາຍການພືດຫາກຫຼາຍກ່ວາຈຳນວນແຖວທີ່ໄດ້ກຳນົດໃຫ້ອະນຸຍາດນຳໃຊ້ ຕ.11.

ການບັນທຶກຂໍ້ມູນກ່ຽວກັບ ພືດ, ໃຫ້ຂຽນ ນ້ຳເບີຕອນດິນ ແລະລາຍລະອຽດຂອງພືດທີ່ປູກແຕ່ລະຊະນິດໃສ່ແຕ່ລະແຖວໃນຄຳຖາມ 42. ໃຫ້ຂຽນຊື່ພືດແຕ່ລະຊະນິດເຕັມ ແລະຈະແຈ້ງ. ບໍ່ຄວນຂຽນແບບລວມໆ ເຊັ່ນວ່າ " ປູກຕົນໄມ້ໃຫ້ໝາກ" ;

ການປູກພືດຢືນຕົນ ບາງຄັ້ງ ປູກ ເປັນລະບົບລະບຽບ ແລະປູກແບບກະແຈກກະຈາຍອອ້ມແອ້ມຄົວເຮືອນ. <u>ການປູກເປັນ ລະບົບລະບຽບ</u> ໝາຍເຖິງຕົນໄມ້/ຕົນພືດ ລຽນເປັນຖັນເປັນແຖວ ຫຼືປູກເປັນຜືນດຽວ ແລະ ສາມາດວັດແທກເນື້ອທີ່ໄດ້. ຖ້າການປູກຕົນໄມ້ໃຫ້ໝາກ ມີໄລຍະຫ່າງກັນໂພດ ທຽບໃສ່ທຳມະດາທີ່ເຄີຍປູກ ກໍ່ໃຫ້ລະບຸເປັນການປູກແບບກະແຈກກະຈາຍ. ໃນຄຳຖາມ 43-45, ພວກເຮົາຈະໄດ້ຖາມຜູ້ຕອບກ່ຽວກັບ ເນື້ອທີ່ ແລະຈຳນວນຕົນທີ່ປູກແບບລະບົບລະບຽບ, ແຕ່ຖ້າປູກແບບກະແຈກກະຈາຍໃຫ້ ຖາມແຕ່ ຈຳນວນຕົນເທົ່ານັ້ນ.

ສຳລັບການປູກເປັນລະບົບລະບຽບ, ຫົວໜ່ວຍຄິດໄລ່ເນື້ອທີ່ ໃນຄຳຖາມທີ່43 ແມ່ນໃຊ້ຫົວໜ່ວຍທ້ອງຖິ່ນ ຫຼືເຮັກຕາ, ນຳໃຊ້ວິທີທີ່ໄດ້ກ່າວແລ້ວໃນຂໍ້ 5.8. ໃຫ້ສົມທຽບເນື້ອທີ່ປູກ ຕົນໄມ້ໃຫ້ໝາກ ກັບເນື້ອທີ່ ໃນຄຳຖາມ ພາກ ຄ. ຄວນລົງໄປກວດກາ ເບິ່ງຕົວຈິງດິນຕອນນັ້ນ ຈະເຮັດໃຫ້ຂໍ້ມູນຖືກຕ້ອງສັດເຈນ.

ການປູກກະແຈກກະຈາຍ ຫຼືປູກປະປົນກັນ (ຫຼືມີເນື້ອທີ່ ຕ່ຳກ່ວາ 100 ມ$^2$), ບໍ່ໃຫ້ຂຽນໃສ່ ຫ້ອງຫົວໜ່ວຍເຮັກຕາ ແລະໝາຍ (√ )ໃນຫ້ອງທີ່ຂຽນວ່າ "ເນື້ອທີ່ນ້ອຍ ຫຼືກະແຈກກະຈາຍ". ຖ້າສົມມຸດວ່າ ພືດຢືນຕົນ ທັງສອງປະເພດ ຄື ປູກເປັນລະບົບລະບຽບ ແລະປູກກະແຈກກະຈາຍ, ໃຫ້ບັນທຶກໃສ່ ທັງສອງ ຫ້ອງ.

ການປູກພືດຢືນຕົນສັບວ່າງ ແມ່ນມີໂດຍທົ່ວໄປ. ກໍລະນີນີ້, ຜົນບວກຂອງເນື້ອທີ່ພືດຢືນຕົນແຕ່ລະຊະນິດ ແມ່ນເທົ່າກັບເນື້ອທີ່ທີ່ໄດ້ປູກພືດສັບວ່າງ. ການປະເມີນເນື້ອທີ່ຂອງແຕ່ລະພືດ ໃຫ້ອີງໃສ່ອັດຕາສ່ວນຂອງຕົນໄມ້ທີ່ກວມເນື້ອທີ່

ປູກພືດຂອງແຕ່ລະຊະນິດ. ໃຫ້ບັນທຶກຂໍ້ມູນພືດຍືນຕົນແຕ່ລະຊະນິດ ແຍກອອກຈາກກັນພ້ອມດ້ວຍເນື້ອທີ່ຂອງມັນ. ຂຽນບໍ່ຖືກຖ້າສົມມຸດວ່າຂໍ້ມູນ <u>ຂຽນວ່າ "ປູກພືດສະສັບກັນ". ແລະຮັບບໍ່ໄດ້ ຂຽນຊື່ພືດແຕ່ລະຊະນິດ ແຕ່ວ່າເນື້ອທີ່ປູກພັດລວມກັນໝົດ.</u>

ຖ້າປູກພືດລົມລຸກ ສັບວ່າງກັບ ການປູກພືດຍືນຕົນ(ປູກເປັນລະບຽບ, ເນື້ອທີ່ປູກພືດຍືນຕົນ ແມ່ນເນື້ອທີ່ທັງໝົດ. (ໃຫ້ເບິ່ງຂໍ້ແນະນຳ ສຳລັບ ຄ.7 ແລະ ຄ.8 ກ່ຽວກັບການຄຳນວນຫາເນື້ອທີ່ປູກພືດລົມລຸກ).

## 7.10 ພາກ ຊ : ສັດລ້ຽງ

ຈຸດປະສົງຂອງຄຳຖາມໃນພາກ ຊ ແມ່ນຢາກຮູ້ຈັກ ກ່ຽວກັບ ຈຳນວນ ແລະລັກສະນະຂອງປະເພດສັດຕ່າງໆ. ມັນຊ່ວຍໃຫ້ເຮົາເຂົ້າໃຈເຖິງ ລັກສະນະໂຄງສ້າງຂອງສັດ ແລະຄວາມສຳພັນລະຫວ່າງ ດິນ ແລະສັດລ້ຽງ.

**ຄຳຖາມ 46**




ຖ້າວ່າ ຄົວເຮືອນນັ້ນຫາກມີງົວ. ໃຫ້ໝາຍ (✓) ໃສ່ ຫ້ອງລ້ຽງ; ຖ້າວ່າບໍ່ໄດ້ລ້ຽງ ໃຫ້ໝາຍ (✓) ໃສ່ຫ້ອງ ບໍ່ໄດ້ລ້ຽງ ແລ້ວຂ້າມໄປຫາຄຳຖາມທີ່ 47 ເລີຍ, ສົມມຸດວ່າມີງົວ, ໃຫ້ຖາມຈຳນວນ ແລະ ອາຍຸຂອງສັດ? ດັ່ງຕົວຢ່າງລຸ່ມນີ້:

| | | | |
|---|---|---|---|
| <u>ຕົວຢ່າງ</u>: | ຄຳຖາມ: | ຄົວເຮືອນຂອງທ່ານປະຈຸບັນໄດ້ລ້ຽງງົວບໍ່?. | <u>ຕອບ</u>: ໄດ້ລ້ຽງ |
| | ຄຳຖາມ: | ມີຈັກໂຕ? | <u>ຕອບ</u>: 4 ໂຕ |
| | ຄຳຖາມ: | ງົວໃນຈຳນວນທີ່ລ້ຽງມີ ອາຍຸ 2 ປີຂຶ້ນໄປມີຈັກໂຕ? | ຕອບ: 2 ໂຕ |
| | | ໃນນັ້ນ: ໂຕແມ່ 2 ປີຂຶ້ນໄປມີຈັກໂຕ? | ຕອບ: 1 ໂຕ |
| | | ອາຍຸລະຫວ່າງ 1 - 2 ປີ ມີຈັກໂຕ? | ຕອບ: 0 ໂຕ |
| | | ລູກງົວອາຍຸຕ່ຳກວ່າ 1 ປີ ມີຈັກໂຕ? | ຕອບ: 1 ໂຕ |
| | | ລູກງົວໂຕແມ່ອາຍຸຕ່ຳກວ່າ 1 ປີມີຈັກໂຕ? | ຕອບ: 0 ໂຕ |

<u>ຢ່າລືມວ່າ:</u> ຈຳນວນສັດໃນຫ້ອງອາຍຸ/ເພດຂອງສັດຜົນລວມຂອງມັນ ຕ້ອງເທົ່າກັບຈຳນວນຂອງສັດທັງໝົດ.

ຄວາມໝາຍ ຂອງຄຳວ່າ "<u>ປະຈຸບັນໄດ້ລ້ຽງ</u>" ງົວ ໃຫ້ເບິ່ງຂໍ້ 3.8. ຈຳນວນສັດລ້ຽງ <u>ໃຫ້ຖືເອົາມື້ເດີນສຳຫຼວດ.</u>

**ຄຳຖາມ 47, 48, 49, 50, 51**

ແມ່ນຄ້າຍຄືກັນກັບຄຳຖາມທີ່ 46, ສຳລັບຄຳຖາມ 47: ເວົາເຖິງ ຄວາຍ; ຄ.48 ຖາມກ່ຽວກັບ ໝູລາດ; ຄ.49 ຖາມກ່ຽວກັບ ໝູພັນ; ຄ.50 ຖາມເຖິງ ແບ້ ແລະ ຄ.51 ຖາມເຖິງ ແກະ. ໝວດ ກຸ່ມອາຍຸໃນແຕ່ລະຄຳຖາມ ຈະແຕກຕ່າງກັນ ໂດຍອີງໃສ່ ສັດລ້ຽງ ແຕ່ລະປະເພດ.
ໃຫ້ເບິ່ງຄຳແນະນຳ ສຳລັບຄຳຖາມ 46 ໃນ ຂໍ້ 3.8 ກ່ຽວກັບການຈົດກ່າຍສັດລ້ຽງ. ຈຳນວນສັດລ້ຽງ ໝາຍເຖິງ ຈຳນວນທີ່ມີຕົວຈິງໃນມື້ເດີນສຳຫຼວດ.

**ຄຳຖາມ 52, 53, 54**

ສຳລັບຄຳຖາມ ເຫຼົ່ານີ້ ແມ່ນໄດ້ລວມເອົາຈຳນວນທັງໝົດ ແລະປະເພດຂອງສັດປີກ 3 ຊະນິດເຊັ່ນ: ຄຳຖາມ 52 ແມ່ນເວົາເຖິງໄກ່ລາດ, ຄ.53 ໄກ່ພັນ ແລະ ຄ.54 ແມ່ນເປັດ. ຄຳຖາມເຫຼົ່ານີ້ ແມ່ນຄ້າຍຄືກັນກັບຄຳຖາມ 46 - 51.

- ຄຳຖາມ 52: ກ່ຽວກັບ ໄກ່ລາດ: ຈຳນວນໄກ່ໃຫຍ່ (ໄກ່ຊອນ), ໄກ່ແມ່ໄຂ່ ແລະ ໄກ່ນ້ອຍ
- ຄຳຖາມ 53: ກ່ຽວກັບ ໄກ່ພັນ : ຈຳນວນໄກ່ພັນໄຂ່ ແລະ ໄກ່ພັນຊີ້ນ
- ຄຳຖາມ 54: ຈຳນວນເປັນກາບ ແລະ ເປັດກີກ (ເປັດເທດ)

ເບິ່ງຄຳແນະນຳ ສຳລັບຄຳຖາມ 46 ໃນ ຂໍ້ 3.8 . ໃຫ້ຈົດນັບຈຳນວນສັດທີ່ມີໃນມື້ເດີນສຳຫຼວດ.

**ຄຳຖາມ 55**

55. ປະຈຸບັນ ຄົວເຮືອນ (ຫົວໜ່ວຍການຄອບຄອງ) ຂອງທ່ານໄດ້ລ້ຽງສັດອື່ນໆບໍ່? ເຊັ່ນ: ມ້າ, ລໍ...

ໄດ້ລ້ຽງ ☐ → ມີສັດຫຍັງແດ່?
ບໍ່ໄດ້ລ້ຽງ ☐

1 .............. → ມີຫລາຍປານໃດ? ☐
2 .............. → ມີຫລາຍປານໃດ? ☐
3 .............. → ມີຫລາຍປານໃດ? ☐

ໃຫ້ໝາຍ (✓) ໃສ່ຫ້ອງໃດນຶ່ງ “ໄດ້ລ້ຽງ” ຫຼື “ບໍ່ໄດ້ລ້ຽງ” ທີ່ສະແດງໃຫ້ເຫັນ ວ່າຄົວເຮືອນນັ້ນມີສັດລ້ຽງປະເພດອື່ນໆ, ຖ້າບໍ່ມີ ແມ່ນໃຫ້ຂ້າມໄປຫາ ຄ.56. ຖ້າວ່າຄົວເຮືອນນັ້ນຫາກມີສັດລ້ຽງປະເພດອື່ນໆ . ໃຫ້ຖາມກ່ຽວກັບຊະນິດຂອງສັດ ແລ້ວຂຽນຄຳຕອບເປັນປະໂຫຍກໃສ່ບ່ອນຫວ່າງທີ່ໄດ້ຈັດໄວ້ໃຫ້ ແລ້ວຖາມກ່ຽວກັບຈຳນວນຂອງສັດ ແລະ ບັນທຶກໃສ່ ຫ້ອງ ທີ່ຈັດໄວ້ໃຫ້ນັ້ນ.

**ສັດລ້ຽງອື່ນໆ**: ຄວາມໝາຍຂອງສັດລ້ຽງປະເພດອື່ນໆ ນັ້ນ ນອກຈາກແມ່ນພວກງົວ, ຄວາຍ, ໝູ, ແບ້ ແລະແກ້ແລ້ວ ຍັງມີພວກ ຊ້າງ, ມ້າ, ລໍ ແລະ ກວາງ. ລວມທັງສັດລ້ຽງຊະນິດທີ່ຖືກຂັງ ເຊິ່ງບໍ່ໄດ້ລວມເອົາສັດປີກເຂົານຳ; ສັດປີກ ຈະບັນທຶກໃນຄຳຖາມ56.
ໃຫ້ເບິ່ງຄຳແນະນຳທົ່ວໄປ ໃນ ຂໍ້ 3.8 . ໃຫ້ຈົດນັບຈຳນວນສັດທີ່ມີໃນມື້ເດີນສຳຫຼວດ.

**ຄຳຖາມ 56**

ໃນຄຳຖາມນີ້ແມ່ນຄ້າຍຄືກັນກັບຄຳຖາມ 55 ພຽງແຕ່ວ່າ ຖາມກ່ຽວກັບສັດປີກ ອື່ນໆ :ສັດປີກອື່ນໆ: ໝາຍເຖິງສັດປີກທີ່ມີ ນອກຈາກປະເພດໄກ່ ແລະ ເປັດແລ້ວ, ສັດປີກອື່ນໆ ທີ່ສຳຄັນແມ່ນ: ໄກ່ງວງ, ຫ່ານ ແລະນົກກະທາ, ລວມທັງສັດປີກທີ່ລ້ຽງແບບກັກຂັງ.

ສຳສັບວິທີຕອບຄຳຖາມນີ້ວ່າ:ຈະຕອບແນວໃດ? ແມ່ນໄປເບິ່ງຄຳແນະຄຳ ສຳລັບ ຄຳຖາມ 55. ແລະໃຫ້ເບິ່ງ ຂໍ້ 3.8 ຄຳແນະນຳ ທົ່ວໄປ ຂອງການຈົດກ່າຍສັດລ້ຽງ. ຈຳນວນສັດລ້ຽງທີ່ຈະບັນທຶກ ແມ່ນຈຳນວນສັດ <u>ທີ່ມີໃນມື້ເດີນສຳຫຼວດ.</u>

**ຄຳຖາມ 57**

| | | | |
|---|---|---|---|
| **57.** ໃນ 12 ເດືອນຜ່ານມາ ຄົວເຮືອນ (ຫົວໜ່ວຍການຄອບຄອງ) ຂອງທ່ານ ໄດ້ນຳໃຊ້ສັດເຂົ້າໃນການລາກແກ່ບໍ່? ເຊັ່ນ:ງົວ, ຄວາຍ ຫລືມ້າ | ນຳໃຊ້ | ☐ | 1 |
| | ບໍ່ນຳໃຊ້ | ☐ | 2 |

ໃຫ້ ບັນທຶກ ຄຳຕອບ ໂດຍ ໝາຍ (✓) ໃນຫ້ອງ ນຳໃຊ້ ຫຼື ບໍ່ນຳໃຊ້ . ຖ້າໄດ້ນຳໃຊ້ສັດລາກແກ່ ໃນ ໄລຍະ 12 ເດືອນຜ່ານມາ ໃຫ້ໝາຍ(✓) ໃສ່ຫ້ອງນຳໃຊ້; ໝາຍວ່າໄດ້ນຳໃຊ້ສັດລາກແກ່ໃນລະດູຝົນປີ 1998 ແລະລະດູແລ້ງ ສົກປີ 1998/99.

<u>**ຈຸດປະສົງ ການລາກແກ່**</u>: ໝາຍເຖິງການໄຖ, ຄາດ, ດຶງ (ແກ່ກວຽນ), ແບກຫາບ, ຍົກນ້ຳ ແລະ ວຽກອື່ນໆ ທີ່ກ່ຽວກັບການປູກພືດໃນຫົວໜ່ວຍການຄອບຄອງເຮັດກະສິກຳ. ສັດລາກແກ່ ບໍ່ແມ່ນງົວ, ຄວາຍສະເໝີໄປ. ແຕ່ ບາງທີອາດປະກອບດ້ວຍ ມ້າ ແລະ ລໍ.

ຈົ່ງໝັ້ນໃຈວ່າ: ຄຳຕອບຂອງຄຳຖາມນີ້ ແມ່ນຖືກຕ້ອງ (ກົງກັນ) ກັບຂໍ້ມູນອື່ນໆ ໃນໃບສອບຖາມ. ຖ້າຄົວເຮືອນຫາກບໍ່ມີການປູກພືດ, ພວກເຂົາແມ່ນບໍ່ສາມາດໃຊ້ສັດລາກແກ່ໄດ້, ສະນັ້ນ, ຄົວເຮືອນສ່ວນຈະໃຊ້ສັດລາກແກ່ຂອງຕົນເອງ, ແລະກໍ່ຕໍ່ເມື່ອມີ ສັດປະເພດ ຢູ່ ຄຳຖາມ 46, 47 ແລະ 55.

**ຄຳຖາມ 58, 59**

| | | | | |
|---|---|---|---|---|
| **58.** ໃນ 12 ເດືອນຜ່ານມາ ຄົວເຮືອນ (ຫົວໜ່ວຍການຄອບຄອງ) ຂອງທ່ານ ໄດ້ສັກຢາປ້ອງກັນພະຍາດໃຫ້ສັດລ້ຽງບໍ່? | ໄດ້ສັກ | ☐ | 1 | *→ ຜ່ານໄປຫາຄຳຖາມ 59* |
| | ບໍ່ໄດ້ສັກ | ☐ | 2 | *→ ຂ້າມໄປຫາພາກ ຍ* |
| **59.** ມີສັດຫຍັງແດ່ທີ່ໄດ້ສັກຢາປ້ອງກັນພະຍາດ? | ງົວ? | ☐ | 1 | |
| | ຄວາຍ? | ☐ | 2 | |
| *ໝາຍ ( √ )ໃສ່ ນຶ່ງຄຳຕອບ ຫລືຫລາຍກວ່າກໍ່ໄດ້* | ໝູ? | ☐ | 3 | |
| | ສັດອື່ນໆ? | ☐ | 4 | |

ໃນຄຳຖາມນີ້ ໃຫ້ ໝາຍພຽງ ແຕ່ (✓) ໃສ່ຫ້ອງ “ໄດ້ສັກ” ຫຼື ”ບໍ່ໄດ້ສັກ”. ຖ້າວ່າ: ໄດ້ສັກ, ໃຫ້ຖາມຕໍ່ວ່າ: ສັດຊະນິດໃດໃນຄຳຖາມ 59 ທີ່ໄດ້ສັກຢາກັນພະຍາດ ແລະ ສາມາດ ໝາຍ ຫຼາຍກວ່າ 1 ຫ້ອງ ຂອງຊະນິດສັດທີ່ໄດ້ສັກຢາກັນພະຍາດ.

ຖ້າຕອບວ່າ: “ບໍ່ໄດ້ສັກ” ໃນຄຳຖາມ 58 ແມ່ນໃຫ້ຜ່ານໄປຫາພາກ ຍ ເລີຍ.

<u>ການສັກຢາກັນພະຍາດ (ວັກຊີນ)</u>: ປະໂຫຍດເພື່ອເຮັດໃຫ້ການຕິດຕາມ, ກວດກາ ແລະ ຈຳກັດ ກ້າວໄປເຖິງການຫຼຸດຜ່ອນ ການ ລະບາດຂອງພະຍາດສັດ. ຊະນິດຂອງຢາວັກຊີນ ມີສຳລັບ ສັດປະເພດ ງົວ, ຄວາຍ ແລະໝູ.

ຄົວເຮືອນ/ຜູ້ຄອບຄອງ ອາດຈະໄດ້ສັກຢາວັກຊີນພຽງແຕ່ ບາງຈຳນວນສັດເທົ່ານັ້ນ; ໃນຄຳຖາມ 59, ໃຫ້ໝາຍ (✓) ໃສ່ ຫ້ອງ ມີ ສີ່ຫຼ່ຽມ ຖ້າວ່າ ຄົວເຮືອນ ດັ່ງກ່າວໄດ້ສັກຢາໃຫ້ສັດລ້ຽງປະເພດໃດນຶ່ງ ໃນ 12 ເດືອນຜ່ານມາ,

ເຖິງແມ່ນວ່າ ໄດ້ສັກ ບາງຈຳນວນ (ຍັງບໍ່ໄດ້ສັກຢາໝົດກໍ່ຕາມ). ຈຸດປະສົງ ສະແດງໃຫ້ເຫັນ ວ່າ ມີຈຳນວນ ຈັກຄົວເຮືອນ ທີ່ໄດ້ນຳ ສັດລ້ຽງ ໄປສັກຢາ ໃນໄລຍະ 12 ເດືອນ ຜ່ານ ມາ( ເຖິງວ່າບໍ່ໄດ້ ສືບຕໍ່ສັກຢາ ປົກກະຕິກໍ່ຕາມ).

## 7.11 ພາກ ຍ : ກົນຈັກກະສິກຳ ແລະປັດໄຈການຜະລິດ.

ພາກ ຍ ສຶກສາການນຳໃຊ້ ຝຸ່ນ ແລະຢາປາບສັດຕູພືດ (ຄ.60-ຄ.62) ແລະການເຮັດກະເສດສຸມຂອງຄົວເຮືອນ/ຜູ້ຄອບຄອງ ທີ່ນຳໃຊ້ກົນຈັກເຂົາໃນການຜະລິດ (ຄ.63-ຄ.65). ຂໍ້ມູນເລົ່ານີ້ ມີຄວາມສຳຄັນຍິ່ງຕໍ່ການສຶກສາໂອກາດເພີ້ມ ຜົນຜະລິດພືດໃຫ້ ສູງ.

**ຄຳຖາມ 60**

| | | |
|---|---|---|
| **60.** | ໃນ 12ເດືອນຜ່ານມາ,ຄົວເຮືອນ (ຫົວໜ່ວຍການຄອບຄອງ) ຂອງທ່ານໄດ້ນຳໃຊ້ຝຸ່ນເຄມີບໍ່? | ໃຊ້ ☐ 1<br>ບໍ່ໃຊ້ ☐ 2 |

ຄຳຖາມ ນີ້ ໃຫ້ ໝາຍ (✓) ໃສ່ ຫ້ອງ “ ໃຊ້” ຫຼື “ ບໍ່ໃຊ້”. ຝຸ່ນເຄມີສາດ ແມ່ນ ຜ່ານຂະບວນການຜະລິດແບບອຸດສະຫະກຳ ທີ່ ຕອບສະໜອງ ຄຸນທາດດ້ານອາຫານໃຫ້ແກ່ພືດ. ໃນ 12 ເດືອນຜ່ານມາ ໝາຍເຖິງ ລະດູຝົນ ປີ 1998 ແລະລະດູແລ້ງ ສົກປີ 1998/99.

**ຄຳຖາມ 61**

| | | |
|---|---|---|
| **61.** | ໃນ 12 ເດືອນຜ່ານມາ,ຄົວເຮືອນ (ຫົວໜ່ວຍການຄອບຄອງ) ຂອງທ່ານໄດ້ນຳໃຊ້ຝຸ່ນຄອກບໍ່? | ໃຊ້ ☐ 1<br>ບໍ່ໃຊ້ ☐ 2 |

ຄຳຖາມ ນີ້ ໃຫ້ ໝາຍ (✓) ໃສ່ ຫ້ອງ “ ໃຊ້” ຫຼື “ ບໍ່ໃຊ້”. ຝຸ່ນອົງຄະທາດ ແມ່ນອິນຊີພືດພັນ, ລວມເອົາທັງຝຸ່ນທຳມະຊາດ ແລະຝຸ່ນຜ່ານການປຸງແຕ່ງ, ນຳໃຊ້ເປັນທາດອາຫານຫຼໍ່ລ້ຽງພືດ. ໂດຍທົ່ວໄປຝຸ່ນອົງຄະທາດປະກອບດ້ວຍ ຂີ້ສັດ(ຝຸ່ນຄອກ) ແລະ ຝຸ່ນບົ່ມ (ຕົນຕໍປະສົມກັບ ຕົນພືດ). ໃນ 12ເດືອນຜ່ານມາ ໝາຍເຖິງ ລະດູຝົນ ປີ 1998 ແລະລະດູແລ້ງສົກປີ 1998/99.

**ຄຳຖາມ 62**

| | | |
|---|---|---|
| **62.** | ໃນ 12 ເດືອນຜ່ານມາ,ຄົວເຮືອນ (ຫົວໜ່ວຍການຄອບຄອງ) ຂອງທ່ານໄດ້ນຳໃຊ້ຢາປາບສັດຕູພືດບໍ່? | ໃຊ້ ☐ 1<br>ບໍ່ໃຊ້ ☐ 2 |

ຄຳຖາມ ນີ້ ໃຫ້ ໝາຍ (✓) ໃສ່ ຫ້ອງ “ ໃຊ້” ຫຼື “ ບໍ່ໃຊ້”. ຂໍ້ມູນ ກ່ຽວກັບ ຢາປາບສັດຕູພືດ ຈຸດປະສົງ ສຳລັບຄຸ້ມຄອງ ກວດກາ ແລະກຳຈັດປະເພດບງແມງ ແລະສັດຕູພືດອື່ນໆທີ່ຈະກະທົບຕໍ່ຜົນຜະລິດຂອງພືດ. ມັນລວມມີຢາຂ້າແມງໄມ້, ຢາຂ້າເຊື້ອເຫັດ, ຢາອົບເມັດພັນພືດ, ຢາຂ້າຫຍ້າ, ຢາຂ້າໜູ ແລະຢາຂ້າ ປູ. ໃນ 12 ເດືອນຜ່ານມາ ໝາຍເຖິງ ລະດູຝົນ ປີ 1998 ແລະລະດູແລ້ງສົກປີ 1998/99.

**ຄຳຖາມ 63, 64, 65**

| 63. ໃນ 12ເດືອນຜ່ານມາ, ຄົວເຮືອນ(ຫົວໜ່ວຍການຄອບຄອງ)ຂອງທ່ານໄດ້ນຳໃຊ້ກົນຈັກກະສິກຳປະເພດຕ່າງໆດັ່ງລຸ່ມນີ້ບໍ່ເຂົ້າໃນການຜະລິດກະສິກຳ? 1 = ໄດ້ໃຊ້ 2 = ບໍ່ໄດ້ໃຊ້ | |
|---|---|
| ຈັກກຳເນີດໄຟຟ້າ | 1 2 |
| ລົດໄຖ 4 ລໍ້ | 1 2 |

| 64. ລາຍລະອຽດປະເພດເຄື່ອງກົນຈັກທີ່ໄດ້ນຳໃຊ້ | 65. ປະຈຸບັນນີ້ເຄື່ອງກົນຈັກດັ່ງກ່າວເປັນຂອງຄົວເຮືອນ(ຫົວໜ່ວຍການຄອບຄອງ) ທ່ານເອງບໍ່? 1=ແມ່ນ 2=ບໍ່ແມ່ນ |
|---|---|
| 1. | 1 2 |

ຄຳຖາມເລົ່ານີ້ ແມ່ນຖາມ ຄົວເຮືອນ/ຜູ້ຄອບຄອງ ກ່ຽວກັບ ກົນຈັກກະສິກຳທີ່ໄດ້ນຳໃຊ້ ເຂົາໃນການຜະລິດ ໃນ 12 ເດືອນຜ່ານມາ (ຄ.63 ແລະ ຄ.64) ແລະຖາມກ່ຽວກັບ <u>ການເປັນເຈາຂອງ</u> ເຄື່ອງກົນຈັກດັ່ງກ່າວ (ຄ.65).

ໃນຄຳຖາມ 63, ຖາມ ຄົວເຮືອນ/ຜູ້ຄອບຄອງ ໄດ້ນຳໃຊ້ ປະເພດເຄື່ອງກົນຈັກຕ່າງໆ ແຕ່ລະຊະນິດ ທີ່ໄດ້ຂຽນໄວ້ນັ້ນ ໃນໄລຍະ 12 ເດືອນຜ່ານມາ ແລະ ໃຫ້ ຂີດວົງອອ້ມ ໃສ່ ຕົວເລກ 1 “ໄດ້ໃຊ້” ຫຼື 2 “ບໍ່ໄດ້ໃຊ້”. ຖ້າສົມມຸດວ່າ ຄົວເຮືອນ/ຜູ້ຄອບຄອງ ໄດ້ນຳໃຊ້ກົນຈັກຊະນິດນັ້ນ, ໃຫ້ຂຽນຊື່ ແລະຊະນິດຂອງກົນຈັກນັ້ນແຈ້ງ ພ້ອມທັງຂະໜາດ ຫຼືແຮງມ້າຍິ່ງເປັນການດີໃນ ຖັນ ຄຳຖາມ 64 ແລະຖາມວ່າ ກົນຈັກດັ່ງກ່າວ ເປັນຂອງຕົນເອງຫຼືບໍ່ໃນຄຳຖາມ 65.

ເຄື່ອງກົນຈັກ ໝາຍເຖິງ ເຄື່ອງມືຮັບໃຊ້ການຜະລິດກະສິກຳ ກະຕຸນໃຫ້ເຮັດວຽກ ໂດຍ ໄຟຟ້າ, ນ້ຳມັນທຸກຊະນິດ, ໝໍ້ໄຟ, ລົມ ຫຼື ພະລັງນ້ຳ, ຫຼື ອຸປະກອນນຳໃຊ້ ເປັນເຄື່ອງປະກອບ ລົດ (ເຊັ່ນ ເປັນເຄື່ອງໄຖນາ). ມັນຈະບໍ່ລວມເອົາ ອຸປະກອນທີ່ນຳໃຊ້ດ້ວຍ ແຮງງານຄົນ ແລະສັດ ເຊັ່ນ ໄຖ, ຄາດ, ເຄື່ອງສີດພົ່ນຢາ ດ້ວຍມື...ລວມເອົາເຄື່ອງກົນຈັກທັງໝົດ ທີ່ນຳໃຊ້ ສ່ວນນຶ່ງເຂົາໃນກິດຈະກຳການຜະລິດກະສິກຳ ເຊັ່ນ ຈັກກຳເນີດໄຟຟ້າ. ຍົກເວັ້ນ ເຄື່ອງກົນຈັກທັງໝົດທີ່ບໍ່ໄດ້ນຳໃຊ້ເຂົາໃນການຜະລິດກະສິກຳ.

ເຄື່ອງກົນຈັກກະສິກຳ ທີ່ຄົວເຮືອນ/ຜູ້ຄອບຄອງນຳໃຊ້ ລວມເອົາ ເຄື່ອງກົນຈັກ ທີ່ເປັນ ຂອງຕົນເອງ ຫຼື ຍືມ ຫຼື ເຊົ່າ

ຈາກ ຜູ້ໃດຜູ້ນຶ່ງ. ໃຫ້ບັນທຶກຂໍ້ມູນ ກົນຈັກທັງໝົດທີ່ຄົວເຮືອນໄດ້ນຳໃຊ້ ໂດຍບໍ່ຄຳນຶ່ງເຖິງວ່າ ເປັນ ຂອງຕົນເອງ ຫຼືບໍ່ກໍຕາມ ທີ່ໄດ້ນຳໃຊ້ໄລຍະ12 ເດືອນຜ່ານມາ. ໃນ12ເດືອນຜ່ານມາ ໝາຍເຖິງ ລະດູຝົນ ປີ 1998 ແລະລະດູແລ້ງ ສົກປີ 1998/99.

ໃນຄຳຖາມ 64, ໃຫ້ບອກລາຍລະອຽດຂອງຊະນິດເຄື່ອງກົນຈັກ ເຊັ່ນ " ລົດໄຖ 2 ລໍ້ 30 ແຮງມ້າ", "ຈັກສູບນ້ຳດ້ວຍໄຟຟ້າ 7 ແຮງມ້າ", "ຈັກຟາດເຂົ້າ", "ຈັກແກະຝັກສາລີ" ແລະ "ຈັກເລືອກ ຂະໜາດຂອງ ໄຂ່". ຫຼີກລ້ຽງຂຽນຊື່ກົນຈັກບໍ່ແຈ້ງ ເຊັ່ນ " ເຄື່ອງ ເກັບກ່ຽວ" ຫຼື "ເຄື່ອງ ຟາດ".

ຄຳຖາມ 65 ຖາມສະເພາະຄົວເຮືອນ/ຜູ້ຄອບຄອງທີ່ໄດ້ນຳໃຊ້ ເຄື່ອງກົນຈັກ ໃນຄຳຖາມ 63 ແລະ ຄ.64. ຖ້າສົມມຸດວ່າ ບໍ່ໄດ້ນຳໃຊ້ຈັກສູບນ້ຳໃນໄລຍະ 12ເດືອນຜ່ານມາ ແຕ່ວ່າປະຈຸບັນນີ້ພັດມີຂອງຕົນເອງ 1 ອັນ, ຕາມທຳມະດາຈັກສູບນ້ຳນີ້ ບໍ່ຄວນຈະມີໃນຄຳຖາມ 65. ແຕ່ຕົວຈິງແລ້ວ, ໃຫ້ເຂົ້າໃຈວ່າ ຄຳຖາມ 65 ໝາຍເຖິງ ເຄື່ອງກົນຈັກເປັນຂອງຕົນເອງໃນມື້ເດີນສຳຫຼວດ. ຖ້າສົມມຸດວ່າ ຄົວເຮືອນ/ຜູ້ຄອບຄອງ ນຳໃຊ້ ລົດໄຖ 2 ລໍ້ ຫຼາຍຄັນ, ແຕ່ໃນນັ້ນ ລົດໄຖ ເປັນຂອງຕົນເອງ 1ຄັນ, ໃຫ້ຂຽນວ່າໄດນຳໃຊ້ ລົດໄຖ 2ລໍ້ ໃນຄຳຖາມ 63 ແລະຄ.64 ໂດຍໃຫ້ຂີດວົງມົນອອ້ມເລກ 1 ຢູ່ຄຳຖາມ 65.

## 7.12 ພາກ ດ : ລາຍລະອຽດ ກ່ຽວກັບ ຄົວເຮືອນ

**ໝາຍເຫດ:** ພາກ ດ ກໍລະນີ ເຮັດຮ່ວມກັນ ກັບ ຄົວເຮືອນ ອື່ນ. ໂດຍສະເພາະໃນຄົວເຮືອນ ມີ 2 ຫົວໜ່ວຍ ຄອບຄອງ ເຮັດ ກະສິກຳ, ການຈົດນັບສາມະຊິກຄົວເຮືອນຕ້ອງອີງໃສ່ບຸກຄົນໃດທີ່ມີສ່ວນກ່ຽວຂ້ອງໃນຫົວໜ່ວຍການຄອບຄອງເຮັດກະສິກຳ ເທົ່ານັ້ນ (ໃຫ້ເບິ່ງໃນຂໍ້ 7.2) ຫ້າມບໍ່ໃຫ້ຈົດລວມກັນ ໝົດ.

ຄຳຖາມ 66, 67

ຈຸດປະສົງຂອງຄຳຖາມຂ້າງເທິງນີ້ ແມ່ນ ເພື່ອແຍກແຍະ ສະມາຊິກຄົວເຮືອນ ແລະຂະໜາດຂອງຄົວເຮືອນ. ຂະໜາດຂອງຄົວເຮືອນແມ່ນມີຄວາມສຳຄັນສຳລັບການປະເມີນເບິ່ງກຳລັງແຮງງານຂອງຄົວເຮືອນຊາວກະສິກອນທີ່ຈະແບກຫາບ ລ້ຽງດູຄົວເຮືອນ.

| | 66.<br>ມີໃຜແດ່ເປັນສະມະຊິກຂອງຄົວເຮືອນທ່ານ? | 67.<br>...ມີສາຍພົວພັນແນວໃດກັບ |
|---|---|---|
| 01 | | ຫົວໜ້າຄົວເຮືອນ |

ໃຫ້ຈົດລາຍຊື່ສະມາຊິກທຸກຄົນ ຂອງຄົວເຮືອນຕາມລຳດັບພ້ອມທັງຖາມສາຍພົວພັນກັບຫົວໜ້າຄົວເຮືອນ ໃສ່ ບ່ອນຫວ່າງທີ່ກຳນົດໄວ້, ເລີ້ມຕົ້ນດ້ວຍຫົວໜ້າຄົວເຮືອນ. ສຳຫຼັບເດັກທີ່ຍັງບໍ່ທັນມີຊື່ເທື່ອແມ່ນໃຫ້ຂຽນວ່າ: ເດັກເກີດໃໝ່ (ຂຽນຊື່ແມ່ ຫຼື ພໍ່ເດັກ)

ຖ້າສົມມຸດວ່າ ຫ້ອງທີ່ກຳນົດໄວ້ສຳຫຼັບຈົດຊື່ສະມາຊິກໃນຄົວເຮືອນໃນໃບສອບຖາມບໍ່ພຽງພໍແມ່ນໃຫ້ຈົດຕໍ່ໃສ່ຕາຕະລາງ 12. ແລ້ວໝາຍ (✓) ຢູ່ ຂ້າງລຸ່ມຕາຕະລາງ ຂອງ ພາກ ດ.

ໃຫ ້ອີງໃສ່ ຂໍ້ 3.1 ສຳລັບ ນິຍາມ ຄົວເຮືອນ. ສາມະຊິກຄົວເຮືອນ ລວມທຸກຄົນທີ່ມີການກິນຢູ່, ຈັດຫາອາຫານ

ຮ່ວມກັນ, ໃຊ້ອຸປະໂພກ ແລະເຄື່ອງໃຊ້ສອຍທີ່ຈຳເປັນໃນການດຳລົງຊີວິດປະຈຳວັນຮ່ວມກັນເປັນຫຼັກ, ລວມທັງບຸກຄົນອື່ນທີ່ບໍ່ເປັນຍາດຕິພີ່ນ້ອງ ເຊັ່ນ ຜູ້ມາຮັບຈ້າງ. ປື້ມສຳມະໂນຄົວແມ່ນເປັນປະໂຍດ ແລະ ເປັນບ່ອນອີງ ຊ່ວຍໃນການຈົດກ່າຍສະມາຊິກຂອງຄົວເຮືອນ, ແຕ່ນັກເດີນສຳຫຼວດບໍ່ຄວນອີງໃສ່ແຕ່ປື້ມສຳມະໂນ ເພາະບັນຫາ ດັ່ງກ່າວອາດຈະຍັງບໍ່ທັນໄດ້ຈົດເອົາສະມາຊິກທີ່ມາຢູ່ໃໝ່ ຫຼື ເປັນຂໍ້ມູນເກົ່າ ສາມະຊິກຍົກຍ້າຍໜີ ຍັງບໍ່ ລຶບຊື່ອອກຈາກສຳມະໂນເທື່ອກໍ່ມີ. ປື້ມສຳມະໂນ ມັນອາດຈະບໍ່ກົງກັບນິຍາມ ຂອງຄົວເຮືອນ ກໍເປັນໄດ້.

ຖ້າວ່າ ພວກເຮົາ ບໍ່ແນ່ໃຈກ່ຽວກັບໃຜແດ່ທີ່ເປັນສະມາຊິກໃນຄົວເຮືອນນີ້. ທ່ານອາດຈະໃຊ້ຄຳຖາມ <u>ປົກກະຕິ</u> ມີໃຜແດ່ທີ່ດຳລົງຊີວິດຢູ່ໃນເຮືອນນີ້ . ດັ່ງນັ້ນ, **ຄົນທີ່ຕ້ອງຈົດເຂົາໃນຄົວເຮືອນ ຄື** :

- ລວມເອົາສາມະຊິກຄົວເຮືອນ ຊຶ່ງປົກກະຕິລາວອາໄສໃນຄົວເຮືອນ ແຕ່ວ່າ ລາວ ບໍ່ມີໜ້າຊົ່ວຄາວໃນເວລາສຳຫຼວດ;
- ບໍ່ນັບເອົາບຸກຄົນ ຊຶ່ງ ປົກກະຕິ ອາໄສຢູ່ບ່ອນອື່ນ, ແຕ່ຫຽວມາຢູ່ຄົວເຮືອນນີ້ບາງຄັ້ງຄາວເທົ່ານັ້ນ; ຫຼື
- ລວມເອົາທຸກຄົນ ທີ່ລາວເຮັດວຽກຢູ່ບ່ອນອື່ນ ເປັນອາທິດ ແຕ່ລາວກັບບ້ານ ໃນມື້ພັກວຽກ.

ຂໍ້ມູນທີ່ເວົາເຖິງສາຍພົວພັນກັບຫົວໜ້າຄົວເຮືອນນີ້ແມ່ນ ມີຄວາມສຳຄັນພຽງແຕ່ສ້າງຄວາມແນ່ໃຈວ່າບໍ່ມີສະມາຊິກຜູ້ໃດໃນຄົວເຮືອນຍັງບໍ່ທັນໄດ້ຖືກຈົດນັບເຂົາ. <u>ຫົວໜ້າຄົວເຮືອນ</u>: ໝາຍເຖິງບຸກຄົນນຶ່ງ ທີ່ສະມາຊິກໃນຄົວເຮືອນເຫັນດີໃຫ້ເປັນ ແລະ ເປັນຜູ້ຮູ້ສະພາບຂອງຄົວເຮືອນດີ. ບຸກຄົນໃດຫາກບໍ່ມີສາຍພົວພັນກັບຫົວໜ້າຄົວເຮືອນແຕ່ອາໄສຢູ່ໃນເຮືອນັ້ນໃຫ້ຂຽນ "ບໍ່ມີສາຍພົວພັນ".

ເມື່ອນັກເດີນສຳຫຼວດຈົດຊື່ພ້ອມທັງສາຍພົວພັນກັບຫົວໜ້າຄົວເຮືອນໝົດທຸກຄົນແລ້ວ, ນັກເດີນສຳຫຼວດຕ້ອງໄດ້ອ່ານລາຍຊື່ດັ່ງກ່າວໃຫ້ຫົວໜ້າຄົວເຮືອນຟັງເພື່ອຢັ້ງຢືນອີກເທື່ອນຶ່ງວ່າໄດ້ຈົດນັບຄົບ ແລະ ຖືກຕ້ອງໝົດແລ້ວຫຼືບໍ່ ? ຖ້າຫາກຍັງມີອັນສົງໃສ ນັກເດີນສຳຫຼວດຈະຕ້ອງຊັກຖາມຄືນໃຫ້ລະອຽດກ່ອນຈະຜ່ານໄປຄຳຖາມຕໍ່ໄປ.

**<u>ໝາຍເຫດ</u>:** ຫຼັງຈາກຖາມສຳເລັດ ແລ້ວໃນຄຳຖາມທີ່ 66 ແລະ 67 ແລ້ວ, ນັກເດີນສຳຫຼວດຕ້ອງຖາມຄຳຖາມ 68 - ຄຳຖາມ 76 ນຳຫົວໜ້າຄົວເຮືອນ ກ່ອນ ແລ້ວ ຈຶ່ງໄປຖາມສະມາຊິກຄົວເຮືອນ, ການຖາມແຕ່ລະຄົນພະຍາຍາມຜູ້ກ່ຽວໂດຍກົງ ຫຼື ເອີ້ນເປັນຊື່ບຸກຄົນໄປກໍໄດ້.

**ຄຳຖາມ 68**

ຈຸດປະສົງການຖາມແມ່ນຊ່ວຍສຶກສາການປະກອບສ່ວນຂອງຜູ້ຊາຍແລະຜູ້ຍິງໃນວຽກງານກະສິກຳ. ໃຫ້ຂີດວົງມົນອອ້ມ ຕົວເລກທີ່ສອດຄ່ອງກັບຄຳຕອບ. ຖ້າບຸກຄົນນັ້ນຫາກຢູ່ເຮືອນໃຫ້ ພວກເຮົາເບິ່ງແລະສັງເກດ ຜູ້ກ່ຽວດ້ວຍຕົນເອງ. ບໍ່ຄວນສະຫຼຸບໂດຍລຳພັງ ເຊັ່ນວ່າ ຈາກຊື່ ທີ່ມີລັກສະນະ ຄ້າຍຄືຜູ້ຍິງ ແລະຜູ້ຊາຍ.

**68.**
...ແມ່ນ
ເພດຊາຍ ຫລື
1= ເພດຊາຍ
2= ເພດຍິງ
1 2

**ຄຳຖາມ 69**

ຈຸດປະສົງຂອງຄຳຖາມນີ້ສາມາດຊ່ອຍໃນການສຶກສາເບິ່ງກຸ່ມອາຍຸແຕກຕ່າງກັນທີ່ໄດ້ເຂົາຮ່ວມໃນວຽກງານກະສິກຳ. ໃຫ້ຂຽນອາຍຸເຕັມ, ຖ້າເດັກຕ່ຳກວ່າ 1 ປີ ແມ່ນໃຫ້ຂຽນ 0.

**69.**
...ອາຍຸ,
ຈັກ ປີ?

ກໍລະນີທີ່ບໍ່ຮູ້ອາຍຸ, ນັກເດີນສຳຫຼວດຈະຕ້ອງໄດ້ຄາດກະເອົາເອງ, ບາງເທື່ອຜູ້ກ່ຽວອາດຈະຮູ້ ຫຼື ຈຳເຫດການບາງຢ່າງທີ່ເກີດຂຶ້ນໃນເວລາທີ່ລາວເກີດຈາກແມ່ ຫຼື ຜູ້ອື່ນ ເລົ່າໃຫ້ຟັງ, ກໍລະນີນີ້ຜູ້ໃຫ້ສຳພາດອາດຈະຮູ້ແຕ່ປີລາວ ຫຼື ບໍ່ສາມາດ ບອກວັນ ແລະ ເດືອນເກີດ ຫຼື ອາດຈະບອກໄດ້ໃນກໍລະນີອື່ນກໍຕາມ ປະຕິທິນຢູ່ໃນຊ້ອນທ້າຍ (6) ຈະຊ່ວຍນັກເດີນສຳຫຼວດສາມາດຄິດໄລ່ ແລະ ຊ່ວຍໃນການຕັດສິນອາຍຸເຕັມຂອງຜູ້ຖືກສຳພາດໄດ້.

**<u>ໝາຍເຫດ</u>** : ຄຳຖາມທີ່ຍັງເຫຼືອໃນພາກ ດ (ຄຳຖາມ 70 ຫາ ຄຳຖາມ 76) ແມ່ນກ່ຽວກັບກິດຈະກຳຕນຕໍ ແລະ ຖາມສະເພາະແຕ່ບຸກຄົນທີ່ອາຍຸ 10 ປີຂື້ນໄປເທົ່ານັ້ນ. ຄຳຖາມ 70 ແມ່ນຖາມກ່ຽວກັບອາຊີບຕນຕໍທີ່ໄດ້ເຮັດໃນ 12 ເດືອນຜ່ານມາ. ສ່ວນຄຳຖາມ 71-73 ແມ່ນຖາມກ່ຽວກັບວຽກທີ່ໄດ້ເຮັດໃນຄົວເຮືອນຂອງຕົນເອງ. ແລະ ຄຳຖາມ 74-76 ແມ່ນຖາມກ່ຽວກັບວຽກງານອື່ນທີ່ບຸກຄົນນັ້ນໄດ້ເຮັດ ຢູ່ ຄົວເຮືອນຂອງຜູ້ອື່ນ.

**ຄຳຖາມ 70**

ຈຸດປະສົງຂອງຄຳຖາມນີ້ ແມ່ນສຶກສາເບິ່ງ ວຽກຕນຕໍຂອງ ສາມະຊິກ ແຕ່ລະຄົນທີ່ມີອາຍຸ ແຕ່ 10ປີ ຂື້ນໄປ ໃນຄົວເຮືອນ ເພື່ອຊ່ວຍໃຫ້ເຂົາໃຈສະພາບຂອງແຮງງານກະສິກຳ.




ອາຊີບຂອງບຸກຄົນ ແມ່ນຂື້ນກັບແຕ່ລະວຽກ, ຄ້າຂາຍ ຫຼື ວິຊາຊີບໃດນຶ່ງ. ມັນລວມເອົາທຸກປະເພດ ຄ່າຈ້າງແຮງງານ ແລະການເຮັດວຽກໃຫ້ ທຸລະກິດຂອງຕົນເອງພ້ອມ. ຕົວຢ່າງ ຊື່ ຂອງ ອາຊີບ: "ສ້ອມແປງລົດຈັກ" ແລະ "ພະນັກງານຂາຍເຄື່ອງ". ໃຫ້ຂຽນ ຊື່ ຂອງ ອາຊີບ ຈະແຈ້ງຄົບຖ້ວນ. ຫ້າມ ບໍ່ ໃຫ້ ຂຽນ ແບບບໍ່ ຈະ ແຈ້ງ ເຊັ່ນ " ກຳມະກອນ " ຫຼື
"ພະນັກງານທົ່ວໄປ"; ຄວນຈະຂຽນແບບນີ້ "ກຳມະກອນກໍ່ສ້າງ" ແລະ "ພະນັກງານພິມດີດ". ຖ້າບຸກຄົນຍັງບໍ່ມີອາຊີບ ຄວນຂຽນ ຄື: "ນັກຮຽນ/ນັກສຶກສາ", "ວ່າງງານ", "ຜູ້ເຖົ້າເຝົ້າເຮືອນ", "ເບັ້ຍບຳນານ" ຫຼື "ຄົນປ່ວຍ".

ອາຊີບດ້ານປູກພືດ ແລະລ້ຽງສັດ ຄວນຈົດລາຍລະອຽດລຸ່ມນີ້:

- " ຊາວນາ (ຫຼື ປູກກາເຟ ຫຼື ປູກໃບຢາສູບ, ອື່ນໆ..) ຊາວກະສິກອນ ".
- " ລ້ຽງສັດ "
- " ປູກຝັງ ແລະລ້ຽງສັດ "
- " ຊາວໄຮ່ ຊາວນາ "
- " ຮັບຈ້າງ "

<u>ອາຊີບຕນຕໍ</u> ໝາຍເຖິງ ບຸກຄົນໄດ້ທຸ່ມເທເວລາສ່ວນໃຫຍ່ ເຂົາໃນວຽກງານອາຊີບນີ້ ໃນໄລຍະຮອບ 12ເດືອນຜ່ານມາ. ນັກຮຽນ/ນັກສຶກສາ ຊຶ່ງໄດ້ຊ່ວຍພໍ່ແມ່ໃນໄລຍະປູກ/ເກັບກ່ຽວ ເວລາພັກຮຽນ ໃຫ້ ບັນທຶກ ເປັນ "ນັກຮຽນ". ຄູປະຖົມ ຊຶ່ງໄດ້ຊ່ວຍຄອບຄົວ ເຮັດວຽກຍາມແລງ ໃຫ້ບັນທຶກ ເປັນ "ຄູປະຖົມ". ພະນັກງານຊ່ວຍຂາຍເຄື່ອງໃນຮ້ານແຕ່ກ່ອນເປັນແພດພະຍາບານ ກ່ອນໜ້ານີ້ 1ເດືອນ ໃຫ້ບັນທຶກ ເປັນ "ແພດພະຍາບານ". ພະນັກງານຕັດຫຍິບ

ບາງຄັ້ງຄາວຜູ້ກ່ຽວຖືກຂໍຮ້ອງໃຫ້ຂັບລົດຂົນສົ່ງສິນຄ້າ ໃຫ້ບັນທຶກ ຜູ້ກ່ຽວ “ພະນັກງານຕັດຫຍິບ” ຖ້າຜູ້ກ່ຽວໃຊ້ເວລາສ່ວນໃຫຍ່ເຮັດວຽກດ້ານນີ້ແທ້.

ອາຊີບຕນຕໍຂອງບຸກຄົນ ບໍ່ຄວນຫຼົງກັບ ຊື່ຂອງສະຖານທີ່ເຮັດວຽກ ເຊັ່ນ ລາວໄດ້ເຮັດວຽກ ກ່ຽວກັບການສ້ອມແປງລົດໃນບໍລິສັດ ຂຸດຄົນແຮ່, ສະນັ້ນ ອາຊີບຂອງລາວ ແມ່ນ “ຊ່າງສ້ອມແປງລົດ” ບໍ່ແມ່ນ “ຂຸດຄົນແຮ່”.

**ໝາຍເຫດ:** ບາງຄຳຖາມໃນພາກ ດ ແມ່ນ ຖາມທຸກວຽກງານ ທີ່ບຸກຄົນໄດ້ເຮັດ ໃນ ແລະນອກ ຄົວເຮືອນ/ຜູ້ຄອບຄອງ. ບໍ່ຄວນໃຫ້ເຂົາໃຈວ່າ ທຸກຄົນຕ້ອງແມ່ນອາຊີບດຽວກັນໝົດໃນຄຳຖາມ 70. ເພາະວ່າ. ບາງບຸກຄົນມີອາຊີບຕນຕໍ ແມ່ນ “ ຂັບລົດຂົນສົ່ງ” ແຕ່ລາວ ຍັງມາເຮັດວຽກ ກະສິກຳ ຊ່ວຍຄອບຄົວຂອງລາວດ້ວຍ.

**ຄຳຖາມ 71, 72**

ຈຸດປະສົງຂອງຄຳຖາມນີ້ ແມ່ນຊອກຫາບຸກຄົນທີ່ ພົວພັນ ກັບການປູກພືດ ແລະລ້ຽງສັດ, ແລະເວລາສ່ວນໃຫຍ່ ທີ່ເຮັດວຽກ ດັ່ງກ່າວ. ມີຄວາມສຳຄັນຕໍ່ການສຶກສາ ຄວາມຕ້ອງການແຮງງານກະສິກອນ ແລະໂອກາດຂອງຊາວກະສິກອນເຮັດວຽກອື່ນໆ.

| *ຖ້າມີຕອບດົນໃນຄຳຖາມ 14* | |
|---|---|
| **71.**<br>ໃນ12ເດືອນຜ່ານມາ....<br>ໄດ້ເຮັດວຽກກະສິກຳ<br>1=ໄດ້*(ຜ່ານໄປຄຳຖາມ72)*<br>2=ບໍ່ໄດ້*(ຜ່ານໄປຄຳຖາມ73)* | **72.**<br>*ຖ້າມີຄຳຕອບ"1" ຢູ່ຄຳຖາມ.71*<br>ໃນ 12ເດືອນຜ່ານມາ...<br>3= 6-8 ເດືອນ<br>4= 9-12 ເດືອນ |
| 1 2 | 1 2<br>3 4 |

ໃນຄຳຖາມນີ້ ໃຫ້ຂີດວົງມົນອອ້ມ ຕົວເລກ ທີ່ສອດຄ່ອງກັບຄຳຕອບ ຄື : 1 “ໄດ້ເຮັດ” ຫຼື 2 “ບໍ່ໄດ້ເຮັດ” ຊຶ່ງຖາມແຕ່ລະຄົນທີ່ມີອາຍຸແຕ່ 10 ປີຂື້ນໄປ ໃນການເຮັດວຽກ. ສົມມຸດວ່າ ຄຳຕອບວ່າ 1= ໄດ້ເຮັດ ໃຫ້ສືບຕໍ່ຖາມ ແລະຂີດວົງມົນອອ້ມຕົວເລກໃນຄຳຖາມ 72 :

1 = (ໄລຍະ 1-2 ເດືອນ); 2= (ໄລຍະ 3-5 ເດືອນ) ; 3= (ໄລຍະ6-8 ເດືອນ); 4=(ໄລຍະ 9-12ເດືອນ).
ໃຫ້ຂີດວົງມົນອອ້ມ ພຽງຕົວເລກດຽວເທົ່ານັ້ນ, ບໍ່ໃຫ້ຂີດອອ້ມ ກາຍ 1 ເລກ.

ຄຳຖາມເລົ່ານີ້ ກ່ຽວພັນກັບກິດຈະກຳ ວຽກງານ ດ້ານ ການປູກພືດ. ຊຶ່ງລວມມີວຽກ ຄື: ຕຽມດິນ, ຫວ່ານກ້າ, ເສຍຫຍ້າ, ຫຼົກກ້າ, ປັກດຳ, ໃສ່ຝຸ່ນ, ສີດຢາ, ເກັບກ່ຽວ, ອົບ ແລະຕາກແຫ້ງຜົນລະປູກ ແລະຂົນສົ່ງຜົນຜະລິດຈາກທົ່ງນາ ໄປເຖິງ ຕະຫຼາດ. ບໍ່ຄວນເອົາ ກິດຈະກຳດ້ານລ້ຽງສັດໃນຄຳຖາມ 73 ມາກ່ຽວຂ້ອງ. ບໍ່ຄວນລວມເອົາ ບຸກຄົນ ຊຶ່ງເປັນ ແມ່ບ້ານ ແຕ່ງກິນ, ເຝົ້າບ້ານ...(ຖາມສະເພາະແຕ່ອາຍຸ 10 ປີຂື້ນໄປ).

ວຽກງານດ້ານ ປູກພືດ ມີລັກສະນະ ເປັນລະດູການ ແລະວຽກດັ່ງກ່າວຈະມີໄລຍະ ປູກ ເຖິງໄລຍະເກັບກ່ຽວ. ບາງຄົນເຮັດວຽກ ເຕັມໄລຍະເວລາການປູກພືດ; ບາງຄົນອາດຊ່ວຍບາງເວລາ ຂອງບາງກິດຈະກຳໃນຄົວເຮືອນ. ຈຳນວນເດືອນ ຂອງ ແຕ່ລະ ບຸກຄົນໃນຄຳຖາມ 72 ໝາຍເຖິງ ປີ ນື່ງ ມີຈັກເດືອນທີ່ລາວ ເຮັດວຽກກ່ຽວກັບການປູກພືດ, ບໍ່ຄຳນື່ງເຖິງຈຳນວນມື້ ຫຼື ຊົ່ວໂມງ ທີ່ລາວເຮັດຜ່ານມາ.
ຖາມສະເພາະຄົວເຮືອນທີ່ມີດິນປູກຝັງເທົ່ານັ້ນ, ຈື່ງຈະມີວຽກກ່ຽວພັນກັບການປູກພືດ; ບໍ່ຄວນຖາມຄົວເຮືອນທີ່ບໍ່ມີດິນປູກຝັງເລີຍ ໃນ ຄຳຖາມ ພາກ ຂ.

**ຄຳຖາມ 73**

| |
|---|
| **73.** ...ໃຊ້ເວລາຈັກຊົ່ວໂມງຕໍ່ມື້ເພື່ອເຝົ້າເບິ່ງສັດລ້ຽງຂອງຄົວເຮືອນທ່ານ? 1=ບໍ່ໄດ້ລ້ຽງ 2=ຕໍ່າກວ່າ 1 ຊົ່ວໂມງ/ມື້ 3=ລະຫວ່າງ 1-5ຊົ່ວໂມງ/ມື້ 4=ຫລາຍກວ່າ 5ຊົ່ວໂມງ/ມື້ |
| 1 2 3 4 |

ຈຸດປະສົງຂອງຄຳຖາມ 73 ແມ່ນຢາກຮູ້ ຈຳນວນບຸກຄົນທີ່ມີກິດຈະກຳກ່ຽວພັນກັບການລ້ຽງສັດໃນຄົວເຮືອນ, ແລະໃຊ້ເວລາຫຼາຍປານໃດ. ການຖາມ ແມ່ນອີງໃສ່ ໄລຍະເວລາໃນມື້ນຶ່ງ ຊຶ່ງກົງກັນຂ້າມກັບ ກິດຈະກຳການຜະລິດພືດໃນຊ່ວງ 12 ເດືອນໃນຄຳຖາມ 71 ແລະ ຄ.72 ມີລັກສະນະເປັນລະດູການ.

ຄຳຖາມນີ້ແມ່ນຖາມໂດຍສະເລ່ຍໃນມື້ນຶ່ງ ແຕ່ລະບຸກຄົນ ໄດ້ໃຊ້ເວລາເທົ່າໃດໃນການລ້ຽງສັດ. ຂີດວົງມົນອ້ອມໃສ່ລະຫັດທີ່ຜູ້ໃຫ້ສຳພາດຕອບພຽງຄຳຕອບດຽວ ເຊິ່ງລວມມີ : ລະຫັດ 1 ໝາຍເຖິງ (ບໍ່ໄດ້ລ້ຽງ), ລະຫັດ 2 ໝາຍເຖິງໄດ້ໃຊ້ເວລາ (ຕ່ຳກວ່າ 1 ຊົ່ວໂມງ/ມື້), ລະຫັດ 3 ໝາຍເຖິງໄດ້ໃຊ້ເວລາ (1 ຫາ 5 ຊົ່ວໂມງ/ມື້) ຫຼື ລະຫັດ 4 ໝາຍເຖິງໄດ້ໃຊ້ເວລາ (ຫຼາຍກວ່າ 5 ຊົ່ວໂມງ/ມື້).
ການລ້ຽງສັດລວມມີ: ການເກືອ, ໃຫ້ນົມ, ເກັບໄຂ່, ເບິ່ງພວກມັນໃນເວລາກິນຫຍ້າຢູ່ທົ່ງ, ເອົາສັດໄປຂ້າ ແລະນຳສັດໄປຂາຍ ຢູ່ ຕະຫຼາດ. ຄວນລະວັງ, ວຽກງານກຽມດິນ ດ້ວຍສັດລາກແກ່ຄວນພິຈາລະນາ ເປັນກິດຈະກຳກ່ຽວກັບການປູກພືດ.
ຊົ່ວໂມງ/ຕໍ່ມື້ ແມ່ນການສະເລັ່ຍເວລາ ມື້ນຶ່ງ ແຕ່ລະຄົນໄດ້ໃຊ້ເວລາໃນກິດຈະກຳການລ້ຽງສັດ ເທົ່າໃດ. ຖ້າສົມມຸດວ່າ ບາງບຸກຄົນອາດເຮັດວຽກບໍ່ເປັນປົກກະຕິ ດ້ານການລ້ຽງສັດ, ໃຫ້ ນຳໃຊ້ ການສະເລັ່ຍໃນອາທິດນຶ່ງ ລາວເຮັດວຽກເທົ່າໃດ ເພື່ອໃຫ້ໄດ້ຄຳຕອບຕາມທີ່ເຮົາກຳນົດໄວ້. ຢ່າລືມວ່າ ຄຳຕອບນັ້ນ, ມີ ພຽງແຕ່ 4 ກໍລະນີເທົ່ານັ້ນ ແລະການກຳນົດໄລຍະເວລາຂອງການເຮັດວຽກບໍ່ຮຽກຮ້ອງໃຫ້ສັດເຈນອີ່ຫຼີ ກໍໄດ້. ຕົວຢ່າງ, ການເກັບ ໄຂ່ໄກ່ ແຕ່ລະມື້ໃຊ້ເວລາ 1 ຊົ່ວໂມງ ສຳລັບ ຄົນ 3 ຄົນ, ດັ່ງນັ້ນ, ແຕ່ລະຄົນ ຄວນຈົດກ່າຍ ຫຼື ຂີດວົງມົນອອ້ມຕົວເລກ "2= ຕ່ຳກ່ວາ 1 ຊົ່ວໂມງ/ມື້".

**ຄຳຖາມ 74, 75**

| | |
|---|---|
| **74.** ໃນ 12 ເດືອນຜ່ານມາ...ໄດ້ໄປຮັບຈ້າງເຮັດວຽກກະສິກຳໃຫ້ຫົວໜ່ວຍການຄອບຄອງອື່ນບໍ່? 1= ໄດ້ເຮັດ 2= ບໍ່ໄດ້ເຮັດ | **75.** ໃນ 12 ເດືອນຜ່ານມາ...ໄດ້ເຮັດວຽກກະສິກຳໃຫ້ຫົວໜ່ວຍການຄອບຄອງອື່ນທີ່ບໍ່ໄດ້ຮັບຄ່າຈ້າງບໍ່? 1= ໄດ້ເຮັດ 2= ບໍ່ໄດ້ເຮັດ |
| 1 2 | 1 2 |

ຈຸດປະສົງຂອງຄຳຖາມນີ້ ແມ່ນຢາກຮູ້ ວ່າ ມີບຸກຄົນໃດນຶ່ງບໍ່ໃນຄົວເຮືອນ ທີ່ໄດ້ເຮັດວຽກກັບຄົວເຮືອນອື່ນ ກ່ຽວກັບ ການກະສິກຳ ໃນ ຮອບ 12 ເດືອນຜ່ານມາ. ຂໍ້ມູນເລົ່ານີ້ຈະຊ່ວຍສຶກສາ ການຫາໄດ້ ຂອງແຮງງານອື່ນ ແລະທີ່ນທາງອື່ນໃນການສະໜອງແຮງງານໃຫ້ ແກ່ການຜະລິດ.

ໃນຄຳຖາມ 74, ຖາມກ່ຽວກັບ ການເຮັດວຽກໄດ້ຮັບຄ່າຈ້າງແຮງງານ ແລະໃຫ້ຂີດວົງມົນອອ້ມຕົວເລກທີ່ສອດຄ່ອງ. ໃນຄຳຖາມ 75, ຖາມກ່ຽວກັບ ບຸກຄົນທີ່ໄປເຮັດວຽກໃຫ້ ຄົວເຮືອນອື່ນ ແຕ່ບໍ່ໄດ້ຮັບຄ່າຈ້າງແຮງງານ ແລະ ແລະໃຫ້ຂີດວົງມົນອອ້ມຕົວເລກທີ່ສອດຄ່ອງ.

ຮັບຄ່າຈ້າງແຮງງານ ໝາຍເຖິງ ບຸກຄົນໄດ້ຮັບການຕອບແທນຄ່າແຮງງານໂດຍກົງໃນຮູບແບບ ເປັນ ເງິນ ຫຼື ວັດຖຸພັນ. ບໍ່ໄດ້ຮັບຄ່າຈ້າງ ກວມ ເອົາ ປະເພດ ແຮງງານ ຊຶ່ງລວມມີ ການແລກປ່ຽນແຮງງານ ແລະຊ່ວຍແຮງງານລ້າ. ທັງສອງຄຳຖາມນີ້, ຖາມສະເພາະ ບຸກຄົນທີ່ເຮັດວຽກດ້ານກະສິກຳເທົ່ານັ້ນ; ເຊັ່ນວຽກ ປູກ ແລະເກັບກ່ຽວພືດ; ດູແລສັດລ້ຽງ; ແລະຂົນສົ່ງຜະລິດຕະພັນກະສິກຳ.

**ຄຳຖາມ 76**

> **76.**
> ໃນ 12ເດືອນ ຜ່ານມາ...ນອກຈາກ ເຮັດກະສິກຳ ແລ້ວທ່ານໄດ້ ເຮັດວຽກຫຍັງ?
>
> *ຂຽນບອກວຽກທີ່ໄດ້ເຮັດ*

ຈຸດປະສົງຂອງຄຳຖາມ 76 ແມ່ນຢາກຮູ້ຈັກ ກິດຈະກຳວຽກງານອື່ນໆ ທີ່ບໍ່ແມ່ນວຽກງານກະສິກຳ. ຂໍ້ມູນຂ່າວສານດ້ານນີ້ ຈະຊ່ວຍໃນການສຶກສາ ໂອກາດຂອງ ຄົນ ມີວຽກເຮັດອັນອື່ນ ນອກຈາກ ປູກຝັງ-ລ້ຽງສັດແລ້ວ ແລະເປັນການຊອກຫາ ແຫຼ່ງລາຍຮັບອື່ນໆຂອງຄົວເຮືອນອີກ.

ຈຸດປະສົງຂອງຄຳຖາມນີ້, <u>ເຮັດວຽກ</u> ໄດ້ກຳນົດນິຍາມວ່າ: (i) ມີເງິນເດືອນເປັນຄ່າຈ້າງ; ຫຼື (ii) ບຸກຄົນ ເຮັດວຽກ ໃນ ທຸລະກິດຂອງຕົນເອງ ຫຼື ຄ້າຂາຍ ຫຼື ມີວິຊາຊີບ. ຕົວຢ່າງ: ເຮັດວຽກຊຶ່ງບໍ່ແມ່ນວຽກງານດ້ານກະສິກຳ ຂອງຄອບຄົວຊາວກະສິກອນ ເຊັ່ນ: ດູແລຮ້ານຄ້າຂາຍເຄື່ອງ, ຕຳ່ຫູກ, ຫາປາ, ແລະກິດຈະກຳດ້ານປ່າໄມ້. ເຮັດວຽກ ອາດ ເພື່ອຜົນປະໂຫຍດ ຫຼື ເພື່ອຕົນເອງກໍ່ໄດ້. ມີບຸກຄົນຕຳ່ຫູກເຮັດເສື້ອຜ້າ ສຳລັບຄອບຄົວ ຄວນຂຽນ “ຕຳ່ຫູກ”, ເຖິງແມ່ນວ່າ ເສື້ອຜ້າບໍ່ໄດ້ຂາຍກໍຕາມ. ບຸກຄົນທີ່ໄປຫາຈັບປາສຳລັບກິນພາຍໃນຄອບຄົວຕົນເອງ ໃຫ້ຂຽນວ່າ “ອາຊີບຫາປາ”.

ບຸກຄົນນຶ່ງອາດມີວຽກເຮັດ ຫຼາຍອັນ; ໃຫ້ຂຽນ ທຸກປະເພດວຽກງານທີ່ເຮັດ. ໃຫ້ຂຽນວ່າ “ບໍ່ໄດ້ເຮັດຫຍັງ” ຖ້າ ບຸກຄົນນັ້ນ ນອກຈາກວຽກກະສິກຳແລ້ວ ລາວບໍ່ໄດ້ເຮັດວຍກອື່ນ ນອກຈາກວຽກດັ່ງກ່າວນີ້. ສົມມຸດວ່າ ອາຊີບຕນຕໍຂອງລາວ ໃນຄຳຖາມ 70 ແມ່ນວຽກທີ່ບໍ່ແມ່ນກະສິກຳ, ໃຫ້ຂຽນອາຊີບຂອງລາວຄືນອີກໃໝ່ໃນຄຳຖາມ 76.

ໝາຍເຫດ: ສຳລັບ ຄຳຖາມນີ້ ບໍ່ຄວນ ລວມເອົາກິດຈະກຳ ເຊັ່ນຄົວກິນໃຫ້ຄອບຄົວ, ອານາໄມເຮືອນຊານ, ຫຼືສ້ອມແປງເຮືອນ.

## 7.13 ພາກ ๓: ອື່ນໆ

| ໝາຍເຫດ: ພາກ ๓ ນີ້ ສຳລັບ ການເຮັດຮ່ວມກັນ ບໍ່ໃຫ້ຈົດກ່າຍ ( ມີຫຸ້ນສ່ວນຮ່ວມກັນ). |
|---|

**ຄຳຖາມ 77**

> **77.** ຢູ່ຄົວເຮືອນຂອງທ່ານແມ່ນໃຜເປັນຜູ້ຕັດສິນ ໃນການປູກພືດ ແລະລ້ຽງສັດ?
>
> *ຂຽນເລກທີ່ບຸກຄົນ ຈາກ ພາກ ໑*

ຈຸດປະສົງຂອງຄຳຖາມນີ້ ແມ່ນ ລົງເລິກ ຖາມ ຜູ້ເປັນເຈົາຂອງ ຄອບຄອງເຮັດກະສິກຳ (ໃຫ້ເບິ່ງຂໍ້ 3.4). ໃຫ້ຂຽນຊື່ແຈ້ງ ໃນບ່ອນຈັດວາງໄວ້ ແລ້ວກ່າຍເອົາລະຫັດຂອງບຸກຄົນນີ້ຈາກ ພາກ ໑. ເລກທີຂອງບຸກຄົນໃນພາກ ໑ ແມ່ນເລກລຳດັບຊື່ ຂອງບຸກຄົນໃນພາກ ດັ່ງກ່າວ; ຕົວຢ່າງ ຫົວໜ້າຄົວເຮືອນ ແມ່ນເລກ “ 01”.

ເວລາຈົດກ່າຍບຸກຄົນໃດນຶ່ງ ໃນຄຳຖາມ 77 ຕ້ອງໝັ້ນໃຈວ່າ ລາວ ເປັນຜູ້ຕັດສິນບັນຫາທັງໝົດ ດ້ານການປູກພືດ ແລະລ້ຽງສັດ. ປົກກະຕິ, ແມ່ນ ຫົວໜ້າຄົວເຮືອນ. ເຖິງແນວໃດກໍຕາມ, ບາງຄັ້ງຫົວໜ້າຄົວເຮືອນ ອາດເຖົາ

ແກ່ໂພດບໍ່ສາມາດປະກອບສ່ວນໄດ້ຢ່າງເຕັມເມັດເຕັມໜ່ວຍ. ອາດເກີດມີ ການໃຫ້ຜູ້ຍິງເປັນຜູ້ຈັດການທັງໝົດກໍເປັນໄປໄດ້. ບົດບາດຂອງຜູ້ຍິງໃນກະສິກໍາ ແລະບັນຫາປະເຊີນໜ້າ ແມ່ນສິ່ງສໍາຄັນໃນການສໍາຫຼວດຄັ້ງນີ້ ແລະພວກເຮົາຄວນເກັບກໍາຂໍ້ມູນໃຫ້ລະອຽດ ແລະຖືກຕ້ອງຄວາມເປັນຈິງແທ້.

ບຸກຄົນທີ່ເປັນຜູ້ຕັດສິນບັນຫາ ທຸກກິດຈະກໍາດ້ານກະສິກໍາ ບໍ່ສະເໝີໄປວ່າ ເຮັດວຽກໃຫ້ຄົວເຮືອນ. ບາງຄັ້ງ, ແມ່ນຜູ້ມາຮັບຈ້າງ ແຕ່ ເຈົ້າຂອງຜູ້ຄອບຄອງເຮັດກະສິກໍາ ຈະເປັນຜູ້ຕິດຕາມ ກວດກາ. ບາງໂອກາດ, ອາດຊື້ຈ້າງມາມາຊ່ວຍເປັນຜູ້ຕັດສິນບັນຫາການຜະລິດ.

**ຄໍາຖາມ 78**

**78.** ຜູ້ຕັດສິນໃນຄົວເຮືອນນີ້ ເປັນຊົນເຜົ່າໃດ? | *ໃຊ້ສະເພາະ ຫກສກ* ☐

ຈຸດປະສົງຂອງຄໍາຖາມນີ້ ແມ່ນຖາມກ່ຽວກັບ ຊົນເຜົ່າຂອງ ຜູ້ຕັດສິນໃນຄົວເຮືອນ (ໃຫ້ເບິ່ງ ຄໍາຖາມ 77). ຈະເປັນຂໍ້ມູນທີ່ດີສໍາລັບຊ່ວຍໃນການສຶກສາຄວາມແຕກຕ່າງລະຫວ່າງ ຊົນເຜົ່າໃນສັງຄົມ.

ໃຫ້ບັນທຶກຕາມ ຜູ້ຕອບ ບອກລາຍລະອຽດ. ບາງຄັ້ງ, ພວກເຮົາອາດພິສູດຈາກ ວັດທະນະທໍາ, ສາດສະໜາ ແລະຮີດຄອງປະເພນີ. ຖ້າເປັນໄດ້ ໃຫ້ໄປພົບ ຕົວແທນຂອງ ບັນດາເຜົ່າໃນທ້ອງຖິ່ນຕົນເອງ ຖ້າມີ.ຫຼື ໃຫ້ ເບິ່ງບັນຊີລາຍຊື່ ໃນເອກະສານຊ້ອນທ້າຍ 7.

ຖ້າສົມມຸດວ່າ ເປັນສັນຊາດລາວ ແຕ່ວ່າ ບໍ່ແມ່ນເຊື້ອຊາດລາວ (ເຊັ່ນ ວຽດນາມ, ຈີນ, ຂະເໝັນ, ພະມ້າ,...)ໃຫ້ຂຽນ ເອົາເຊື້ອຊາດເປັນຫຼັກ. ຖ້າສົມມຸດວ່າ ບໍ່ແມ່ນ ສັນຊາດລາວ, ໃຫ້ຂຽນ ສັນຊາດຕົວຈິງເລີຍ.

**ຄໍາຖາມ 79**

**79.** ໃນ 12 ເດືອນຜ່ານມາ, ຜົນຜະລິດໃດນຶ່ງຈາກການປູກພືດ ແລະສັດລ້ຽງ ຂອງຄົວເຮືອນທ່ານໄດ້ນໍາໃຊ້ຄືແນວໃດ?

| | | |
|---|---|---|
| ກ. ໄດ້ຂາຍບໍ່? | ໄດ້ | ☐ 1 |
| | ບໍ່ໄດ້ | ☐ 2 |
| ຂ. ໄດ້ແລກປ່ຽນກັບ ວັດຖຸອື່ນບໍ່? | ໄດ້ | ☐ 1 |
| | ບໍ່ໄດ້ | ☐ 2 |
| ຄ.ຊົມໃຊ້ຄົວເຮືອນບໍ່? | ໄດ້ | ☐ 1 |
| | ບໍ່ໄດ້ | ☐ 2 |

ຈຸດປະສົງຂອງຄໍາຖາມນີ້ ແມ່ນຢາກຮູ້ເຖິງການນໍາໃຊ້ ແລະຈໍລະຈອນແຈກຢາຍ ຜົນຜະລິດກະສິກໍາທີ່ຜະລິດໄດ້ ນໍາໃຊ້ ຄືແນວໃດ? ເພື່ອເຂົາໃຈເລິກເຊິ່ງ ກ່ຽວກັບ ສະພາບເສດຖະກິດສິນຄ້າ ແລະເສດຖະກິດ ຜະລິດເພື່ອກຸ້ມກິນ.

ຄໍາຖາມນີ້ ມີ 3 ຄໍາຖາມຍ່ອຍ. ໃຫ້ຖາມຜູ້ຕອບ ເພື່ອລາຍງານລະອຽດແຕ່ລະຄໍາຖາມຍ່ອຍ ແລະໝາຍ (√) ໃສ່ ຫ້ອງ “ແມ່ນ ” ຫຼື ” ບໍ່ແມ່ນ ” ໃນຮອບ 12ເດືອນຜ່ານມາ.

ຜົນຜະລິດກະສິກໍາ ສາມາດນໍາໃຊ້ ເຊັ່ນ ຕອບແທນຄ່າແຮງງານ, ຈ່າຍຄ່າເຊົ່າດິນ, ຈ່າຍຄ່າກູ້ຢືມເງິນ, ແລະໃຫ້ຜູ້ອື່ນລ້າ. ເລົ່ານີ້ເປັນຕົນ...

**ຄຳຖາມ 80**

> **80.** ໃນ 12 ຜ່ານມາ, ຜົນຜະລິດທີ່ໄດ້ຈາກການປູກພືດ ແລະ ລ້ຽງສັດຂອງຄົວເຮືອນທ່ານໄດ້ຖືກນຳໃຊ້ຕົ້ນຕໍເພື່ອເຮັດຫັຽງ?
>
> ເພື່ອຂາຍສະເພາະ ☐ 1
>
> ເພື່ອແລກປ່ຽນວັດຖຸອື່ນສະເພາະ ☐ 2
>
> ຊົມໃຊ້ສຳລັບຄົວເຮືອນສະເພາະ ☐ 3
>
> *ໝາຍ (√) ໃສ່ຄຳຕອບດຽວ*

ຈຸດປະສົງຂອງຄຳຖາມ 80 ແມ່ນຢາກຮູ້ວ່າ ຕນຕໍຜະລິດເພື່ອຫຍັງ. ໃຫ້ໝາຍ (√) ພຽງແຕ່ຫ້ອງດຽວ ໃນຈຳນວນ 3 ຫ້ອງ: " ຂາຍເອົາເງິນ "; ຫຼື " ແລກປ່ຽນເອົາວັດຖຸອື່ນ " ຫຼື " ຊົມໃຊ້ພາຍໃນຄົວເຮືອນ ".

ຊາວກະສິກອນສ່ວນໃຫຍ່ ນຳໃຊ້ຜົນຜະລິດຕົນເອງຫຼາຍຮູບແບບ. ເພື່ອຕີລາຄາຊາວກະສິກອນ ນຳໃຊ້ ຜົນຜະລິດສ່ວນໃຫຍ່ ແມ່ນນຳໃຊ້ ຄືແນວໃດ ໃນໄລຍະ 12 ເດືອນຜ່ານມາ.

**ຄຳຖາມ 81, 82**

> **81.** ໃນ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ນຳໃຊ້ແຮງງານນອກບໍ່?
>
> ໄດ້ ☐ 1 *→ ຜ່ານໄປຫາຄຳຖາມ 82*
>
> ບໍ່ໄດ້ ☐ 2 *→ ຂ້າມໄປຫາຄຳຖາມ 84*
>
> **82.** ຮູບການຈ່າຍຄ່າແຮງງານນັ້ນມີຄືແນວໃດ?
>
> *ໝາຍ(√)ນຶ່ງຄຳຕອບ ຫລືຫລາຍກວ່າກໍ່ໄດ້*
>
> ຈ່າຍເປັນເງິນສົດບໍ່? ☐ 1
>
> ຈ່າຍເປັນຜົນຜະລິດບໍ່? ☐ 2
>
> ແລກປ່ຽນແຮງງານບໍ່? ☐ 3
>
> ຮູບການອື່ນໆບໍ່? ☐ 4 *ໃຫ້ລະບຸຂ້າງລຸ່ມ* ↓

ຈຸດປະສົງຂອງຄຳຖາມນີ້ແມ່ນກຳນົດການນຳໃຊ້ແຮງງານຂ້າງນອກ ແລະທົນທາງອື່ນຊຶ່ງຈະສາມາດທົດແທນແຮງງານ. ໃຫ້ໝາຍ (√)ໃສ່ ຫ້ອງທີ່ສອດຄ່ອງຄຳຕອບ ໃນຄຳຖາມ 81. ຈາກນັ້ນ, ໃຫ້ປະຕິບັດຕາມລຳດັບຂອງຄຳຖາມຕໍ່ໄປ: ຖາມຄຳຖາມ 82 ຖ້າໄດ້ນຳໃຊ້ບາງແຮງງານຂ້າງນອກ; ຖ້າບໍ່ນຳໃຊ້ແຮງງານຂ້າງນອກ ໃຫ້ ຂ້າມໄປຫາຄຳຖາມ 84. ໃຫ້ລາຍງານສະພາບການນຳໃຊ້ແຮງງານຂ້າງນອກໃນ ຮອບ 12ເດືອນຜ່ານມາ.

ໃນຄຳຖາມ 82 ມີຄຳຖາມຍ່ອຍຢູ່ 4 ປະເພດຄຳຖາມ ທີ່ທົດແທນຄ່າແຮງງານ ແລະໃຫ້ໝາຍໃສ່ຫ້ອງທີ່ສອດຄ່ອງກັບຄຳຕອບ. ຄົວເຮືອນອາດຈ່າຍທົດແທນແຮງງານໄດ້ ຫຼາຍກ່ວາ 1 ວິທີ; ສະນັ້ນ, ສາມາດໝາຍ (√) ໃສ່ ຫຼາຍຫ້ອງໄດ້. ຫຼືຮູບການອື່ນທີ່ຈ່າຍທົດແທນແຮງງານໃຫ້ຂຽນລະບຸຂ້າງລຸ່ມ.

ແຮງງານຂ້າງນອກ ໝາຍເຖິງການຈ້າງຄົນມາເຮັດວຽກກະສິກຳ, ຊຶ່ງບໍ່ແມ່ນສາມະຊິກໃນຄົວເຮືອນ. ລວມທັງ 2 ເຊັ່ນ ຮັບຈ້າງຄ່າແຮງງານ ແລະບໍ່ຮັບຄ່າຈ້າງແຮງງານ. ແລກປ່ຽນແຮງງານ ລວມທັງ ເຮັດຮ່ວມກັນ ຫຼື ແລກປ່ຽນກຳລັງແຮງງານ. ຮູບແບບອື່ນ ລວມ ແຮງງານທີ່ໝູ່ຄູ່ມາຊ່ວຍເຫຼືອ ແລະຍາດຕິພີ່ນ້ອງ ທີ່ຊ່ວຍລ້າ.

ສະເພາະແຕ່ ເຮັດວຽກກະສິກຳ; ຊຶ່ງມີ ວຽກກ່ຽວກັບ ການປູກ ແລະເກັບກ່ຽວພືດ, ດູແລສັດລ້ຽງ, ແລະຂົນສົ່ງຜະລິດ

ຕະພັນສັດ. ບໍ່ຄວນລວມເອົາບຸກຄົນທີ່ຖືກຈ້າງມາເປັນ ແມ່ຄົວ-ພໍ່ຄົວ.

ຜູ້ມາຮັບຈ້າງຊຶ່ງບໍ່ແມ່ນສາມະຊິກໃນຄົວເຮືອນ ຖືວ່າ ເປັນແຮງງານຂ້າງນອກ.

**ຄຳຖາມ 83**

ຈຸດະສົງຂອງຄຳຖາມນີ້ແມ່ນກວດກາເບິ່ງຄວາມຕ້ອງການແຮງງານຕາມລະດູການ. ໃຫ້ຂີດວົງມົນອອ້ມເລກເດືອນ ຕາມປະຕິທິນ

> **83.** ໃນ 12 ເດືອນຜ່ານມາ ແມ່ນເດືອນໃດທີ່ຄົວເຮືອນທ່ານໄດ້ນຳໃຊ້ແຮງງານນອກ?
>
> *ຂີດອ້ອມວົງມົນເອົາເດືອນທີ່ໄດ້ນຳໃຊ້ແຮງງານນອກ ຕາມປະຕິທິນລາວ*
>
> 4 5 6 7 8 9 10 11 12 1 2 3

ຂອງລາວ ປົກກະຕິເດືອນລາວຈະໄວກ່ວາ 1ເດືອນ. ຖ້າຄຳຕອບເປັນແບບອື່ນ ໃຫ້ອີງໃສ່ ຕາຕະລາງ ໃນເອກະສານຊ້ອນທ້າຍ6. ໃຫ້ຂີດວົງມົນອອ້ມ ຫຼາຍກ່ວາ 1ຄຳຕອບ. ໃຫ້ຂີດອອ້ມເອົາເດືອນ ຖ້າໄດ້ນຳໃຊ້ແຮງງານຂ້າງນອກ.

**ຄຳຖາມ 84, 85, 86**

ຈຸດປະສົງ ຂອງຄຳຖາມ 84-ຄ.86 ແມ່ນຖາມກ່ຽວກັບ ຮູບແບບ ການລ້ຽງປາຂອງຄົວເຮືອນທີ່ມີ. ການລ້ຽງປາ ແມ່ນການລ້ຽງແບບກັກຂັງ. ບໍ່ລວມເອົາການລ້ຽງປາແບບທຳມະຊາດ; ຊຶ່ງນອນໃນຄຳຖາມ 87 ແລະ ຄ.88.

> **84.** ຄົວເຮືອນຂອງທ່ານໄດ້ລ້ຽງປາບໍ່?
>
> ລ້ຽງ ☐ 1 → *ຜ່ານໄປຫາຄຳຖາມ 85*
>
> ບໍ່ໄດ້ລ້ຽງ ☐ 2 → *ຂ້າມໄປຫາຄຳຖາມ 87*
>
> **85.** ປະເພດຂອງການລ້ຽງປານັ້ນມີຄືແນວໃດ?
>
> ລ້ຽງໃນນາເຂົາບໍ່? ☐ 1
>
> ລ້ຽງປາຢູ່ໃນໜອງບໍ່? ☐ 2
>
> ລ້ຽງປາໃສ່ກະຊັງບໍ່? ☐ 3
>
> ລ້ຽງປາແບບປະສົມປະສານບໍ່? ☐ 4
>
> ການຜະລິດລູກພັນປາ? ☐ 5
>
> ປະເພດອື່ນໆ? ☐ 6 *ໃຫ້ບອກແຈ້ງຂ້າງລຸ່ມນີ້* ↓
>
> *ໝາຍ(√) ນຶ່ງຄຳຕອບ ຫລືຫລາຍກວ່າກໍ່ໄດ້*
>
> **86.** ເນື້ອທີ່ຂອງການລ້ຽງປານັ້ນມີຫລາຍປານໃດ?
>
> ຫົວໜ່ວຍທ້ອງຖິ່ນ | ເຮັກຕາ

ໃຫ້ໝາຍ (√) ໃສ່ຫ້ອງໃນຄຳຖາມ 84. ຈາກນັ້ນ, ໃຫ້ປະຕິບັດຕາມລຳດັບຂອງຄຳຖາມ: ຖາມ ຄ.85 ແລະ ຄ.86 ຖ້າ ມີເພດຕ່າງ ໆ ຂອງການລ້ຽງປາ; ຖ້າກົງກັນຂ້າມ, ໃຫ້ຂ້າມໄປຫາຄຳຖາມ 87. ກິດຈະກຳການ ລ້ຽງປາ ແມ່ນ ໃຫ້ ອີງໃສ່ <u>ນີ້ເດີນສຳຫຼວດ.</u>

ຄຳຖາມ 85 ມີ 6 ຄຳຖາມຍ່ອຍ: ໃຫ້ຖາມແຕ່ລະປະເພດ ແລະໃຫ້ໝາຍ (√) ຄຳຕອບທີ່ສອດຄ່ອງ. ຄົວເຮືອນອາດມີ ຫຼາຍກ່ວາ 1 ປະເພດການລ້ຽງປາ; ດັ່ງນັ້ນ, ສາມາດ ໝາຍ (√) ໃສ່ຫຼາຍຫ້ອງໄດ້. ຖ້າມີປະເພດອື່ນ ໃຫ້

ໝາຍ ແລະໃຫ້ບອກແຈ້ງຂ້າງລຸ່ມ ດ້ວຍລາຍລະອຽດ.

<u>ລ້ຽງປາໃນນາເຂາ :</u> ແມ່ນການລ້ຽງປາໃສ່ທົ່ງນາປູກເຂາ, ກັກປາໄວ້ ຖ້າຮອດເກັບກ່ຽວເຂາຈຶ່ງເອົາປາມາກິນ.
<u>ລ້ຽງປາໃນໜອງ :</u> ແມ່ນການລ້ຽງປາທີ່ຮັກສາໄວ້ໃນໜອງ ແລະມີກຳນົດເວລາສຳຫຼັບການເກັບກ່ຽວຜົນຜະລິດ ຫຼື ເພື່ອ ເພາະພັນປາ.
<u>ລ້ຽງປາໃສ່ກະຊັງ</u> ແມ່ນລ້ຽງປາໃສ່ ກະຊັງ ວາງໄວ້ ໃນອ່າງນ້ຳ, ຫ້ວຍນ້ຳລຳເຊທຳມະຊາດ...
<u>ລ້ຽງປາແບບປະສົມປະສານ :</u> ແມ່ນການລ້ຽງປາຮ່ວມກັບການລ້ຽງສັດປະເພດອື່ນນຳ ເຊັ່ນ : ໄກ່, ເປັດ...
<u>ຜະລິດລູກພັນປາ</u> ແມ່ນການຂະຫຍາຍພັນປາ

ໃນຄຳຖາມ 86, ໃຫ້ບັນທຶກ ເນື້ອທີ່ຂອງການລ້ຽງປາທຸກຊະນິດ. ໃຫ້ຂຽນໃນຫົວໜ່ວຍທ້ອງຖິ່ນ ຫຼື ເຮັກຕາ, ນຳໃຊ້ວິທີຄິດໄລ່ໃນຂໍ້ 5.8.

**ຄຳຖາມ 87, 88**

**87.** ໃນ 12 ເດືອນຜ່ານມາ,ສະມະຊິກຄົວເຮືອນຂອງທ່ານ ໄດ້ມີການຫາປາບໍ່?

| | | |
|---|---|---|
| ໄດ້ຫາ | ☐ 1 | → *ຜ່ານໄປຫາຄຳຖາມ 88* |
| ບໍ່ໄດ້ຫາ | ☐ 2 | → *ສິ້ນສຸດ ການສອບຖາມ* |

**88.** ການຫາປານັ້ນຢູ່ໃສ?

| | | |
|---|---|---|
| ໃນແມ່ນ້ຳ? | ☐ 1 | |
| ໃນຫວ້ຍນ້ຳ,ອ່າງເກັບນ້ຳ? | ☐ 2 | |
| ໃນບຶງ,ທາມໃນເວລານ້ຳຖ້ວມ? | ☐ 3 | |
| ໃນນາເຂາ? | ☐ 4 | |
| ສະຖານທີ່ອື່ນໆ? | ☐ 5 | *ໃຫ້ບອກແຈ້ງຂ້າງລຸ່ມນີ້* ↓ |

*ໝາຍ(✓) ນຶ່ງຄຳຕອບ ຫລືຫລາຍກວ່າກໍ່ໄດ້*

ຈຸດປະສົງຂອງຄຳຖາມເລົ່ານີ້ ແມ່ນເພື່ອຢາກຮູ້ຈິດຈະກຳ ຂອງການຫາປາຕາມທຳມະຊາດ ຊຶ່ງບໍ່ແມ່ນການຫາປາ ຈາກ ປາລ້ຽງ. ການຫາປາ ແມ່ນ ແຫຼ່ງອັນນຶ່ງຂອງການ ຫາອາຫານເສີມໃຫ້ຄົວເຮືອນ ແລະຂໍ້ມູນດັ່ງກ່າວມີຄວາມສຳຄັນ ຊ່ວຍໃນການສຶກສາ ບັນຫາອາຫານທີ່ມີກັບທີ່.
ໃຫ້ໝາຍ (✓) ໃສ່ຄຳຕອບທີ່ຖືກຕ້ອງໃສ່ຄຳຖາມ 87. ປະຕິບັດຕາມລຳດັບຂອງ ຄຳຖາມ: ຖາມ ຄ.88 ຖ້າວ່າ ມີການຫາປາ; ຖ້າບໍ່ໄດ້ຫາປາໃຫ້ສິ້ນສຸດການສຳພາດ. ໃນຄຳຖາມ 88 ມີ 5 ຄຳຖາມຍ່ອຍ: ໃຫ້ຖາມ ແຕ່ລະຄຳຖາມ ແລ້ວ ໝາຍ (✓) ໃສ່ຫ້ອງທີ່ສອດຄ່ອງກັບຄຳຕອບ. ອາດຈະມີ 1 ຫຼືຫຼາຍປະເພດການຫາປາ. ດັ່ງນັ້ນ, ສາມາດ ໝາຍ (✓) ໃສ່ໄດ້ຫຼາຍຫ້ອງ. ຖ້າ ມີສະຖານທີ່ອື່ນໆ ໃຫ້ໝາຍ (✓) ແລ້ວ ລະບຸບອກແຈ້ງວ່າ ຫາປາຢູ່ໃສ່.

<u>ການຫາປາ :</u> ລວມມີ ການຈັບປາ ແລະສັດນ້ຳທຸກປະເພດ ກົບ, ຂຽດ, ປາຝາ ແລະຫອຍ....

ການລາຍງານການຈັບປາ ແມ່ນເຫດການເກີດຂຶ້ນໃນໄລຍະ 12 ເດືອນຜ່ານມາ

## 7.14 ການນຳໃຊ້ ຕາຕະລາງເພີ້ມ

ໃນ ພາກ (ຄ), (ງ), (ຈ), (ສ) ແລະ(ດ) ຂອງຕາຕະລາງ 5 ຊື່ງ ພວກເຮົາບໍ່ສາມາດບັນທຶກໄດ້ໝົດເນື່ອງຈາກວ່າ ແຖວບໍ່ພໍ ຈື່ງໄດ້ນຳໃຊ້ໃບສອບຖາມເພີ້ມ. ຖ້າກໍລະນີ ຕ້ອງການ ຕາຕະລາງໜ້າໃໝ່ເພີ້ມ ໃຫ້ ໝາຍ (✓) ໃສ່ຫ້ອງ ຂ້າງລູ່ມສຸດ ຂອງ ຄຳຖາມ ເພື່ອ ສະແດງໃຫ້ ເຫັນວ່າ ຍັງມີຕາຕະລາງເພີ້ມຢູ່. ຕາຕະລາງໃໝ່ ເວລາຈົດກ່າຍຕໍ່ໃຫ້ ໃສ່ລຳດັບຕໍ່ຈາກ ສະບັບເກົ່າ.

ສຳລັບ <u>ພາກ (ຄ) ຕາຕະລາງເພີ້ມ (ຕາຕະລາງ 8 )</u> ລຳດັບຂອງຕອນດິນໃນໃບທີ່ 2 ແມ່ນເລີ້ມຕົນດ້ວຍລຳດັບທີ "13" (ຖ້າ ຫາກວ່າໃນໃບທີ່ 1 ຂອງຕາຕະລາງ 5 ລຳດັບ ຂອງ ຕອນດິນສຸດທ້າຍ ຂອງໃບນີ້ແມ່ນ "12"). ສຳລັບ <u>ພາກ (ດ) ຕາຕະລາງເພີ້ມ</u> (ຕາຕະລາງ 12), ລຳດັບຂອງສະມາຊິກຄົວເຮືອນໃນໃບທີ່ 2 ແມ່ນເລີ້ມຕົນດ້ວຍລຳດັບ "17" (ຖ້າຫາກວ່າໃນໃບທີ່ ຂອງຕາຕະລາງ 5 ລຳດັບຂອງສະມາຊິກຄົວເຮືອນຜູ້ສຸດທ້າຍຂອງໃບນີ້ແມ່ນ "16"). ສຳລັບ <u>ພາກ (ງ) ຕາຕະລາງເພີ້ມ</u> (ຕາຕະລາງ 9), ແລະ <u>ພາກ (ຈ) ຕາຕະລາງເພີ້ມ</u> (ຕາຕະລາງ 10), ແລະ ພາກ (ສ) ຕາຕະລາງ ເພີ້ມ (ຕາຕະລາງ 11) ແມ່ນອັນດຽວກັນຂອງພາກດັ່ງກ່າວໃນຕາຕະລາງ 5.

## 7.15 ພາຍຫຼັງສິ້ນສຸດການສຳພາດ

ພາຍຫຼັງສຳເລັດການຈົດກ່າຍ ຕາຕະລາງ 5, ນັກເດີນສຳຫຼວດຕ້ອງກວດເບີ່ງຄືນໝົດ ວ່າຈົດກ່າຍຄົບຖ້ວນແລ້ວບໍ່, ຖືກຕ້ອງແລ້ວບໍ່, ບໍ່ມີຄຳຖາມໃດລືມຖາມ ຫຼື ຍັງສົງໃສຢູ່. ໃຫ້ກວດຕາມ ຄຳແນະນຳໃນ ເອກະສານ ຊ້ອນທ້າຍ 10. ນັກກວດກາຂອງ ທ່ານ ກໍຈະໄດ້ກວດແບບດຽວກັນ ພາຍຫລັງທີ່ ທ່ານ ໄດ້ສົ່ງໃຫ້ ລາວ.

ຈະຕ້ອງໄດ້ເຊັນ ແລະຂຽນຊື່ນາມສະກຸນຂອງຕົນ ໃສ່ເບື້ອງຫຼັງຂອງຕາຕະລາງສອບຖາມ. ຈາກນັ້ນ ໃຫ້ ປະຕິບັດ ການສຳຫຼວດ ວັດແທກເນື້ອທີ່, ຖ້າຈຳເປັນ (ໃຫ້ເບີ່ງ ຂໍ້ 8), ກ່ອນຈະໄປສຳພາດຄົວເຮືອນອື່ນ.

# 8. ການວັດແທກເນື້ອທີ່ ດິນ

## 8.1. ຂັ້ນຕອນປະຕິບັດ ການວັດແທກເນື້ອທີ່:

ບາງຈຳນວນບ້ານຖືກເລືອກເປັນຕົວແທນ ໃນການວັດແທກເນື້ອທີ່. ເວລາຄັດເລືອກເອົາຄົວເຮືອນຕົວແທນໃນແຕ່ລະບ້ານ, ໃນຄົວເຮືອນຕົວແທນທີ່ເລືອກໄດ້ນັ້ນ, ນັກເດີນສຳຫຼວດ ຈະໄດ້ເລືອກເອົາບາງ ຄົວເຮືອນຕົວແທນ ເພື່ອ ສຳຫຼວດວັດແທກເນື້ອທີ່ເຊັ່ນກັນ (ເບິ່ງຂໍ້ 4.9). ປົກກະຕິ, 4 ຄົວເຮືອນຈະຖືກເລືອກ ເພື່ອເຮັດສຳຫຼວດວັດແທກເນື້ອທີ່. ການວັດແທກເນື້ອທີ່ ຈະໄປແທກໝົດທຸກຕອນດິນຂອງ ຄົວເຮືອນ.

ນັກເດີນສຳຫຼວດຕ້ອງວັດແທກເນື້ອທີ່ທັນທີ ພາຍຫຼັງສຳເລັດການສຳພາດຄົວເຮືອນ. ອຸປະກອນນຳໃຊ້ທີ່ຈຳເປັນ ມີດັ່ງນີ້:

1. ເຂັມຊີ້ທິດ/ວັດແທກມູມ
2. ໄມ້ແມັດກໍ້ (ເຊືອກຫຼາວັດແທກ)
3. ຈັກຄິດໄລ່ ສູດເນື້ອທີ່
4. ຫຼັກໄມ້ປ່ອງ/ໄມ້ໄຜ່
5. ເຄື່ອງວັດແທກຄວາມຄ້ອຍຊັນ (ຖ້າຈຳເປັນນຳໃຊ້)

ໄມ້ແມັດກໍ້ ໃຊ້ແທກ ຄວາມຍາວຂອງແຕ່ລະຂ້າງໃນຕອນດິນ, ເຂັມຊີ້ທິດ ໃຊ້ວັດແທກມູມຂອງແຕ່ລະແຈ ແລະເຄື່ອງວັດຄວາມຄ້ອຍຊັນ ໃຫ້ວັດແທກຄວາມຄ້ອຍຊັນ ຂອງຕອນດິນ. ຈັກຄິດໄລ່ທີ່ຂຽນສູດໄວ້ແລ້ວສາມາດຄິດໄລ່ເນື້ອທີ່ຈາກການວັດແທກນັ້ນ. ຜົນຂອງການວັດແທກ ເນືອທີ່ຈະຈົດກ່າຍໃສ່ ຕາຕະລາງ 7.

## 8.2 ຄວນຈະໄປວັດແທກ ຕອນດິນໃດ ແດ່?

ຈຸດປະສົງຫຼັກຂອງການວັດແທກເນື້ອທີ່ ແມ່ນວັດແທກ <u>ທຸກຕອນດິນທັງໝົດຂອງຄົວເຮືອນທີ່ຖືກເລືອກ</u>; ໝາຍວ່າ ຕອນດິນທັງໝົດນັ້ນ ຂຽນແລ້ວໃນພາກ ຄ ຂອງຕາຕະລາງ 5.

ບາງເວລາ ນັກກວດກາຂອງ ທ່ານອາດ ຍົກເວັ້ນກໍລະນີພິເສດໄດ້ ສຳລັບຄົວເຮືອນທີ່ມີຫຼາຍຕອນ ແລະບາງຕອນອາດຢູ່ຫ່າງໄກສອກຫຼີກຈາກ ບ້ານ. ຕໍ່ບັນຫານີ້, ນັກເດີນສຳຫຼວດ ຕ້ອງແຈ້ງໃຫ້ນັກກວດກາ ຮູ້ເຖິງສາຍເຫດຂອງການບໍ່ໄປວັດແທກເນື້ອທີ່ໄດ້ທຸກຕອນດິນ.

ຕອນດິນທີ່ອະນຸຍາດບໍ່ໃຫ້ໄປວັດແທກເນື້ອທີ່ ພຽງແຕ່ກໍລະນີລຸ່ມນີ້:

- ຕອນດິນ ຢູ່ຫ່າງໄກຈາກບ້ານ ແລະໃຊ້ເວລາເດີນທາງໄປຮອດ ທາກ ສູງກ່ວາ 2 ຊົ່ວໂມງ; ຫຼື
- (ໃນເຂດຕົວເມືອງ) ຖ້າຕອນດິນໃດນຶ່ງຫາກມີບັນຫາ ຂັດແຍ້ງຜົນຜະໂຫຍດ ແລະບຸກຄົນໃດນຶ່ງບໍ່ອານຸບາດໃຫ້ໄປວັດແທກເດັດຂາດ.

<u>ຖ້າບໍ່ໄດ້ໄປວັດແທກຕອນດິນຍ້ອນມີເຫດຜົນໃດນຶ່ງກໍ່ຕາມ, ນັກເດີນສຳຫຼວດ ຈະຕ້ອງໄດ້ສົ່ງ ຕາຕະລາງ 7 ຂອງຕອນດິນ ດັ່ງກ່າວນັ້ນ,</u> ພ້ອມທັງຈົດກ່າຍ ລະຫັດ ຕ່າງ ໆ ຂອງຕອນດິນ ແລະໃຫ້ອະທິບາຍ ສາຍເຫດແຈ້ງ ເປັນຫຍັງບໍ່ສາມາດໄປເຮັດການວັດແທກ . <u>ຫຼີກລ້ຽງບໍ່ຄວນຂຽນບົດລາຍງານ ສົ່ງໃຫ້ນັກກວດກາ ຕົວຢ່າງແບບນີ້: ບໍ່ສາ</u>

ມາໄປວັດແທກໄດ້, ບໍ່ເຫັນສາຍເຫດຂອງບັນຫາ. ຜູ້ເປັນນັກເດີນຄວນອະທິບາຍເຫດຜົນຄົບຖ້ວນໃຫ້ນັກກວດກາຂອງ ທ່ານ ຮູ້ນຳ ກ່ຽວກັບ ການຕັດສິນໃຈໃດໆ ທີ່ ປະ ການວັດແທກ ຕອນດິນນັ້ນ.

## 8.3 ການວັດແທກຕອນດິນ ຫຼື ແບ່ງອອກເປັນຫຼາຍຕອນຍ່ອຍ ເພື່ອວັດແທກ

ຈຸດປະສົງ ແມ່ນວັດແທກເນື້ອທີ່ຂອງແຕ່ລະຕອນດິນ. ຖ້າຕອນດິນຫາກໃຫຍ່ກ້ວາງ, ພວກເຮົາຕ້ອງ ແບ່ງມັນເປັນຫຼາຍໆ ຕອນຍ່ອຍ ແລະວັດແທກເນື້ອທີ່ ຂອງ ແຕ່ລະຕອນຍ່ອຍ ຂອງໃຜ ຂອງລາວ. ແຕ່ລ ະຕອນດິນ ຫຼື ແຕ່ລະຕອນຍ່ອຍ ທີ່ໄດ້ວັດແທກ ຕ້ອງໄດ້ບັນທຶກເຂົາໃນຕາຕະລາງ 7 ຂອງແຕ່ລະຕອນດິນ ຫຼື ແບ່ງຕອນດິນຍ່ອຍເປັນຂອງໃຜຂອງລາວ.

## 8.4 ກ່ອນເລີ່ມເຮັດການວັດແທກເນື້ອທີ່

ຕອນດິນທີ່ຈະວັດແທກແມ່ນມີລາຍຊື່ ຢູ່ພາກ ຄ ຂອງໃບສອບຖາມ (ໃບສອບຖາມ 5). ຖ້າຄົວເຮືອນບໍ່ມີດິນ ກໍບໍ່ຈຳເປັນທຳການວັດແທກ.

ກ່ອນເລີ່ມວັດແທກຕອນດິນ/ຕອນດິນຍ່ອຍ, ໃຫ້ຈົດກ່າຍ ຂໍ້ມູນກ່ຽວກັບຄົວເຮືອນ ແລະ ຕອນດິນ/ຕອນດິນຍ່ອຍ ໃສ່ແຈເທິງສຸດ ທາງເບື້ອງຂວາມືຂອງ ໃບສອບຖາມ 7.

- ຈົດກ່າຍລະຫັດແຂວງ, ເມືອງ, ບ້ານ, ແລະ ເລກທີ່ຄົວເຮືອນໃສ່ແຈເທິງສຸດທາງເບື້ອງຂວາມືຂອງໜ້າປົກຕາຕະລາງ 5.
- ຈົດກ່າຍນຳເບີຕອນດິນຈາກຖັນທຳອິດຂອງພາກ ຄ ໜ້າ 4 ຂອງ ຕາຕະລາງ 5.
- (ຖ້າແບ່ງຕອນດິນ ເປັນຫຼາຍຕອນດິນຍ່ອຍ, ໃຫ້ຂຽນລະຫັດຂອງຕອນດິນຍ່ອຍນັ້ນ, ຕົວຢ່າງ " ຕອນດິນຍ່ອຍ ທີ່ " 1 ", "2 ", ແລະ " 3 ".

ໃຫ້ໝັ້ນໃຈວ່າ: ລະຫັດ ຄົວເຮືອນ ແລະ ຕອນດິນ/ຕອນດິນຍ່ອຍ ຖືກຕ້ອງແລ້ວ. ຖ້າບັນທຶກ ເລກທີຕອນດິນ ຜິດພາດ ຫຼື ຕາຕະລາງ 7 ບໍ່ມີຂໍ້ມູນ, ຂໍ້ມູນການວັດແທກເນື້ອທີ່ບໍ່ສາມາດນຳໃຊ້ໄດ້, ຍ້ອນວ່າ ພວກເຮົາ ບໍ່ສາມາດ ສົມທຽບຂໍ້ມູນເນື້ອທີ່ຈາກການລາຍງານຂອງ ຄົວເຮືອນ ກັບ ເນື້ອທີ່ຕົວຈິງຈາກການວັດແທກ

## 8.5 ຂັ້ນຕອນປະຕິບັດການວັດແທກເນື້ອທີ່ ຂອງຕອນດິນ/ຕອນດິນຍ່ອຍ.

ທຳອິດໃຫ້ແຕ້ມແຜນວາດຂອງຕອນດິນ/ຕອນດິນຍ່ອຍ ໃສ່ບ່ອນທີ່ຈັດວາງ ໃນຕາຕະລາງ 7. ເຂດແດນຂອງຕອນດິນຈະບໍ່ເປັນເສັ້ນຊື່ ດັ່ງນັ້ນ, ໃນແຜນວາດຄວນແຕ້ມຮູບຫຼາຍຂ້າງຂອງຕອນດິນ/ຕອນດິນຍ່ອຍ ( ຮູບຫຼາຍຂ້າງ Polygon ແມ່ນ ຮູບທີ່ຕັດ ໃຫ້ ເປັນເສັ້ນຊື່ ). ຂ້າງ ຂອງ ຕອນດິນ ຈະຄວນມີຈຳນວນຈັກຂ້າງ ມັນຄື ຢູ່ກັບ ຮູບຂອງ ຕອນດິນ; ປົກກະຕິ, ຕອນດິນ ມີ ລະຫວ່າງ 6-10 ຂ້າງຖືວ່າເປັນຮູບທີ່ມີຄວາມເໝາະສົມ. ເນື້ອທີ່ຕອນດິນທີ່ເປັນຮູບຫຼາຍຂ້າງຄວນ ກຳນົດ ແລະຈັດວາງຈຳນວນ ຂ້າງໃຫ້ເໝາະສົມ ກັບ ເນື້ອທີ່ຂອງຕອນດິນ/ຕອນດິນຍ່ອຍ. ໃນພາກປະຕິບັດຕົວຈິງ ເສັ້ນຂອບແດນຂອງຕອນດິນ ຈະບໍ່ເປັນເສັ້ນຊື່ ມັນຈະເປັນເສັ້ນໂຄ້ງ, ສະນັ້ນເຮົາຕ້ອງປັບເສັ້ນໂຄ້ງ ໃຫ້ເປັນເສັ້ນຊື່ ໃນແຕ່ລະຂ້າງ, ແລະທ່ານເອງຕ້ອງເຊື່ອໝັ້ນວ່າ ການປັບເສັ້ນໂຄ້ງ ໃຫ້ເປັນເສັ້ນຊື່ ບາງຄັ້ງຈະສັງເກດເຫັນວ່າ ເຂດແດນຂອງຕອນດິນ ອາດ ຢູ່ໃນ ແລະອາດຢູ່ນອກເຂດແດນ. ບັນຫານີ້ບໍ່ຄວນ

ຕົກໃຈ ເພາະວ່າ ເນື້ອທີ່ ນອກເຂດແດນ ແລະເນື້ອທີ່ໃນເຂດແດນຈະເທົ່າກັນ. ດັ່ງນັ້ນ, ມັນຈະສົມດູນກັນໃນ. ແຈມຸມຂອງແຕ່ລະຂ້າງ ໃຫ້ ໝາຍ ດ້ວຍເຄື່ອງໝາຍ A, B, C ແລະ ຕໍ່ໆ ໄປຕາມທິດທາງເດີນຂອງໂມງ. ເບິ່ງຕົວຢ່າງໃນເອກະສານຊ້ອນທ້າຍ 8.

ບັດນີ້ ທ່ານສາມາດເລີ່ມເຮັດການວັດແທກໂດຍປະຕິບັດຕາມຂັ້ນຕອນລຸ່ມນີ້:

- ປັກຫຼັກ ໄມ້ປ່ອງ ໃສ່ຈຸດ A ແລະ B.
- ຢືນຢູ່ຈຸດ A ແລະ ເອົາໄມ້ເລັ່ງມູມໄປປັກໄວ້ທີ່ຈຸດ B ແລ້ວໃຊ້ເຄື່ອງວັດແທກມູມເລັ່ງໃສ່(Bearing) ແມ່ນມຸມ ເຊິ່ງຂ້າງຂອງມັນຖືກວັດແທກຈາກທິດເໜືອຕາມທິດຂອງເຂັມໂມງ, ໝາຍຄວາມວ່າ: ແມ່ນມຸມ ຊຶ່ງຂ້າງ A-B ໄດ້ເລັ່ງມຸມຈາກທິດເໜືອຈາກຈຸດ A. ໃນຕາຕະລາງ 7 ຈົດ “A-B” ໃສ່ ຖັນ “ຂ້າງ” ແລະ ຈຸດຕັ້ງມຸມໃສ່ ຖັນ “ຈຸດຕັ້ງມຸມ”.
- ແທກຄວາມຍາວຂອງຂ້າງ A-B, ໂດຍການໃຊ້ໄມ້ແມັດບັນທຶກຂໍ້ມູນ ດັ່ງກ່າວໃສ່ຕາຕະລາງ 7 ໃນ ຖັນ “ໄລຍະຫ່າງ “.
- ຍ້າຍໄມ້ຈາກຈຸດ A ໄປ ປັກ ໃສ່ຈຸດ C ແລ້ວຢືນຢູ່ທີ່ຈຸດ B ແລະ ເລັ່ງມຸມໃສ່ ຈຸດ C ໂດຍໃຊ້ເຄື່ອງວັດແທກມຸມຈາກນັ້ນ ໃຫ້ວັດແທກຄວາມຍາວຂອງຂ້າງ B-C ໂດຍໃຊ້ໄມ້ແມັດ ບັນທຶກຜົນການວັດແທກທັງສອງໃສ່ ຕາຕະລາງ 7 ປະຕິບັດຄືດັ່ງທີ່ໄດ້ກ່າວຜ່ານມາ.
- ປະຕິບັດຂັ້ນຕອນທີ່ໄດ້ກ່າວໃນຂ້າງເທິງນັ້ນ, ໂດຍຍ້າຍໝູນໄປເລື້ອຍໆ , ຈົນ ກວ່າ ວ່າ ຈຸດຕັ້ງມຸມ ແລະ ຄວາມ ຍາວຂອງທຸກຂ້າງຂອງຕອນດິນ ໄດ້ວັດແທກຄົບໝົດ.

ປ້ອນຜົນການວັດແທກທຸກຂ້າງເຂົາໃນຈັກຄິດໄລ່ ເພື່ອຊອກຫາ <u>ເນື້ອທີ່</u> ແລະ ຄວາມຜິດອານຸຍາດ ບັນທຶກໃສ່ຫ້ອງສີ່ຫຼ່ຽມ ໃນຕາຕະລາງ 7 ຄວາມຜິດອານຸຍາດແມ່ນການຄາດຄະເນຄວາມຜິດພາກຈາກການວັດແທກ. ຖ້າຄວາມຜິດອານຸຍາດນ້ອຍກວ່າ 3% ຖືວ່າ ການວັດແທກສາມາດຮັບໄດ້, ຖ້າຄວາມຜິດອານຸຍາດຫາກຫຼາຍກວ່າ 3% ຕ້ອງໄດ້ທຳການວັດແທກອີກຄັ້ງ.

## 8.6 ວິທີນຳໃຊ້ເຄື່ອງວັດແທກຄວາມຄ້ອຍຊັນ

ການນຳໃຊ້ເຄື່ອງວັດແທກຄວາມຄ້ອຍຊັນ ແມ່ນການວັດແທກຄວາມຄ້ອຍຊັນຂອງຕອນດິນ/ຕອນດິນຍ່ອຍ ຖ້າຄວາມຄ້ອຍຊັນນັ້ນ ຫາກ ຊັນເກີນ 8 ອົງສາ. ຖ້າແມ່ນເນື້ອທີ່ ທົ່ງພຽງ ຫຼື ດິນນາ ບໍ່ຈຳເປັນນຳໃຊ້.

ຖ້າຕອນດິນ/ຕອນດິນຍ່ອຍ ມີຄວາມຄ້ອຍຊັນ, ຕ້ອງໃຊ້ເຄື່ອງວັດຄວາມຄ້ອຍຊັນ. ເລືອກຈຸດ X ທີ່ນອນໃນເຂດແດນ, ບ່ອນທີ່ສາມາດເບິ່ງ ຈຸດ Y ເຫັນທົ່ວຕອນດິນ/ຕອນດິນຍ່ອຍ ໄດ້ໝົດ, ຈຸດນັ້ນ ແມ່ນຈຸດຂອງຄວາມຄ້ອຍຊັນສະເລ່ຍ. ປັກໄມ້ໃສ່ຈຸດ Y . ເຮົາຢືນຢູ່ ຈຸດ X , ວັດແທກຄວາມຄ້ອຍຊັນ ໄປຍັງ ຈຸດ Y ດ້ວຍເຄື່ອງວັດແທກ. ການວັດແທກ ແມ່ນໃຫ້ເບິ່ງ ແຕ່ລຸ່ມຂຶ້ນໄປເທິງ ຫານ ຈຸດ Y, ຕ້ອງໝັ້ນໃຈວ່າ ຄວາມສູງຂອງ ຫຼັກໄມ້ໄຜ່ ຢູ່ ຈຸດ Y ເຕ້ອງມີຄວາມສູງ ຂະໜາດດຽວກັນກັບ ຄວາມສູງຂອງຜູ້ສ່ອງກ້ອງ.ຫາຄວາມຄ້ອຍຊັນ.

ຄວາມຄ້ອຍຊັນ ສະແດງດ້ວຍ ຫົວໜ່ວຍ ເປັນ ອົງສາ ແລະເປີເຊັນ. ວັ<u>ດແທກຄ່າຄວາມຄ້ອຍຊັນ ດ້ວຍ ອົງສາ.</u> ຂີດໝາຍອົງສາ ແມ່ນຂີດຢູ່ເບື້ອງຊ້າຍມື ເວລາເຮົາຊອງເບິ່ງເຄື່ອງ ແລະຈະມີ ຄ່າຕົວເລກ ແຕ່ 0º ( ຮາບພຽງດີ) ແລະ 90º (ເສັ້ນຕັ້ງ). ໃຫ້ບັນທຶຂໍ້ມູນ ອົງສາ ໃນຖັນ ຄວາມຄ້ອຍຊັນ ຂອງ ຕາຕະລາງ 7.

ເຮົາສາມາດ, ເຮັດການວັດແທກດັ່ງລຸ່ມນີ້:

- ຄິດໄລ່ ໂກຊີນູສ ຂອງ ຄວາມຄ້ອຍຊັນ ຊຶ່ງມີເຄື່ອງໝາຍ “COS” ໃນຈັກຄິດໄລ່. ຄ່າອອກມາ ເອີ້ນວ່າ “S”.
- ແລ້ວຄູນ ດ້ວຍ ເນື້ອທີ່ວັດແທກໄດ້ (ຈາກຫ້ອງຄຳນວນ ”ເນື້ອທີ່” ໃນຕາຕະລາງ 7. ເນື້ອທີ່ ປັບໄໝ່ ຕ້ອງ ນ້ອຍກ່ວາເນື້ອທີ່ ເດີມ.

ຖ້າບໍ່ຈຳເປັນຈະຕ້ອງໄດ້ວັດແທກຄວາມຄ້ອນຊັນ, ໃຫ້ ປະຫ້ອງທີ່ກ່ຽວຂ້ອງ ເປົ່າຫວ່າງທັງໝົດ.

## 8.7 ພາຍຫຼັງສຳເລັດການວັດແທກເນື້ອທີ່

ແຕ່ລະຄົວເຮືອນ, ໃຫ້ເອົາ ຕາຕະລາງ 7 ທີ່ບັນທຶກສຳເລັດແລ້ວ ໃສ່ໄວ້ໃນ ຕາຕະລາງ 5. ເມື່ອເວລາທ່ານໄດ້ສຳເລັດ ການວັດແທກເນື້ອທີ່ ໃນເຂດສຳຫຼວດ ໃຫ້ບັນທຶກ ຈຳນວນຕອນດິນ ທີ່ໄດ້ວັດແທກ ໃສ່ໜ້າປົກ ຂອງ ຕາຕະລາງ 2 (ລາຍລະອຽດໃຫ້ເບິ່ງ ຂໍ້ 4.13).

## 8.8 ຈຸດສຳຄັນຄວນເອົາໃຈໃສ່ ຖ້າປຽບທຽບ ເຫັນຂໍ້ມູນເນື້ອທີ່ຈາກການລາຍງານຂອງ ຄົວເຮືອນ ແລະ ຈາກການໄປວັດແທກ

ທ່ານ ເອງ ອາດ ສົນໃຈ ໃນການປຽບທຽບ ເນື້ອທີ່ ຈາກ ການລາຍງານຂ ອງ ຄົວເຮືອນ ກັບ ເນື້ອທີ່ຈາກການວັດແທກ. <u>ບໍ່ຄວນ ດັດແກ້ຂໍ້ມູນທີ່ຄົວເຮືອນໄດ້ລາຍງານເນື້ອທີ່ ດ້ວຍຂໍ້ມູນຈາກການວັດແທກ , ເຖິງແມ່ນວ່າ ທ່ານ ເອງ ຮູ້ວ່າການລາຍງານເນື້ອທີ່ ບໍ່ຖືກ.</u> ຄວນຈົດຈຳວ່າ ການວັດແທກເນື້ອທີ່ ແມ່ນການຕີລາຄາຄວາມຊັດເຈນຂອງການລາຍງານດ້ານເນື້ອທີ່ຂອງຄົວເຮືອນ; ການຕີລາຄາດັ່ງກ່າວ ອາດບໍ່ມີປະໂຫຍດ ຫາກ ທ່ານ ເອງ ໄປດັດແກ້ ຫຼື ປັບປຸງຂໍ້ມູນການລາຍງານກ່ອນ. ສະນັ້ນ, ເຮົາຄວນ ປະໄວ້ຊື່ໆ ຂໍ້ມູນທີ່ບັນທຶກໃນຕາຕະລາງ 5 ແລະຕາຕະລາງ 7 ໂດຍບໍ່ມີຂໍ້ສັງເກດໃດໆ ກ່ຽວກັບ ຄວາມແຕກຕ່າງລະຫວ່າງ ເນື້ອທີ່ ລາຍງານ ແລະເນື້ອທີ່ ຈາກການວັດແທກ.